ດອກເກດ



ອາຖັນ
ແຫ່ງພົງໄພ

ອາຖັນ ແຫ່ງ ພົງໄພ

ໂດຍ ດອກເກດ

1995

ອາຖັນ ແຫ່ງ ພົງໄພ

ຂຽນໂດຍ : ດອກເກດ

ໜ້າປົກ : ອຸດົມພອນ ບຸນຍາວົງ

ຄອມພິວເຕີ : ມະນີວອນ ພິມມະວົງສາ

ຈັດພິມໂດຍ : ບໍລິສັດ ໄຜ່ໜາມການພິມ ແລະ ຄອມພິວເຕີ

ຄະນະທີ່ປຶກສາ : ອຸທິນ ບຸນຍາວົງ, ດາຣາ ກັນລະຍາ

ພິມຄັ້ງທີ 1 : **3 000** ຫົວ

ໂຮງພິມໄຜ່ໜາມ ບ້ານດົງໝ້ຽງ.

ກຳແພງນະຄອນວຽງຈັນ.

ໂທ : 213976

ທະບຽນເລກທີ : **ລອພ 10 / ພທປ 221295**

ລົງພິມເປັນຕອນ ໃນ ວັນນະສິນ 1991

© ສະຫງວນລິຂະສິດ

1995

ອຸທິດແດ່
ຊາວໜຸ່ມຍິງຊາຍທັງຫລາຍ
ທີ່ພວມລອຍໃນກະແສທາບ
ແຫ່ງການຕໍ່ສູ້ເພື່ອອຸດົມການ
ອັນສູງສົ່ງ...

ເພີ່ນມາຢາມ

ໄປ ເອີ້ນອ້າຍຄູນຶງມາໄວ ບັກກິ ໄປ ! ໄປດຽວນີ້ !

- ເພີ່ນຢູ່ໃສລະ ? ເດັກນ້ອຍໄວສິບປີ ຜູ້ຊື່ວ່າກິ ຖາມຄືນສຽງເຕື້ອຍໆ ຕ່າງກັບສຽງຂອງຜູ້ຖາມ ເຊິ່ງຟັງຊື່ໆ ກໍ່ຮູ້ວ່າຮ້ອນຮົນຮີບດ່ວນສົມຄວນ. ບັກນ້ອຍມີໜ້າມຸ່ນເມົ້າ ນຸ່ງສິ້ງຂາສັ້ນຕົວດຽວ ເຜີຍເອິກຈ່ອຍບາງ ແນມເຫັນຮ່າງກະດູກຂ້າງເປັນລັ່ນ ກິເງີຍໜ້າຂຶ້ນ ລະແສງຕາຈາກອຸ່ມ ແລະ ຕອບດ້ວຍທ່າທາງ ບໍ່ຮ້ອນ ບໍ່ຮົນນໍາຄໍາສັ່ງຂອງ "ປ້າພອນ" ທັງໆທີ່ວ່າ ປ້າພອນຜູ້ນີ້ເປັນຜູ້ສໍາຄັນທີ່ສຸດ ໃນບ້ານນີ້ ກໍວ່າໄດ້ເພາະປ້າພອນແມ່ນແມ່ ຂອງ "ອ້າຍຄູນ" ສະມາຊິກຄົນໜຶ່ງ ໃນຄະນະປົກຄອງເມືອງ ທີ່ຫາກໍເລືອກຕັ້ງກັນ ໄດ້ຫວ່າງໜຶ່ງ. ແຕ່ນັ້ນລະສໍາລັບ " ກິ " ແລ້ວ ການທີ່ອ້າຍຄູນ ຊິໄປເປັນອີ່ຫຍັງ ສໍາຄັນທໍ່ໃດແລ້ວບໍ່ໄດ້ຢູ່ເຮືອນກັບແມ່ ເຊິ່ງເປັນໜ້າຍມາຫລາຍປີແລ້ວນັ້ນ ບໍ່ໄດ້ເຮັດໃຫ້ກິຮູ້ສຶກແປກຕ່າງເດືອດຮ້ອນແນວໃດ ເພາະຍາມໃດ "ປ້າພອນ" ກໍຍັງເປັນປ້າພອນ ຜູ້ອາລີອາລອບຕໍ່ລູກຫລານ ລູກເລັກເດັກນ້ອຍໃນບ້ານຄືເກົ່າ. ໂດຍຕໍາແໜ່ງໜ້າທີ່ແລ້ວ ປ້າພອນກໍເປັນຄະນະ ສະຫະພັນແມ່ຍິງບ້ານ ຜູ້ອາວຸໂສທີ່ສຸດອີກ. ຕາມທໍາມະດາ "ປ້າພອນ" ເປັນຄົນໃຈເຢັນ

ທ່າທີສະຫງົບສະຫງ່ຽມ ສົມຖານະສົມໄວລ່ວງ ໔໐ ຂອງເພິ່ນ. ແຕ່ທ່າທາງທີ່ຍ່າງໄວ່ໆ ມາແລ້ວຮ້ອງສັ່ງ "ກິ" ທັງໆທີ່ບໍ່ທັນຜ່ານຮອດຮົ້ວຂອງໂຮງຮຽນ ມາຮອດໂຕເດັກນ້ອຍນັ້ນ ເຮັດໃຫ້ກິຕ່າງໃຈບໍ່ຫນ້ອຍ. ເດັກນ້ອຍ ເງີຍຫນ້າຂຶ້ນ ຈາກຂຸມທີ່ພວມຂຸດຢູ່ແຈເບື້ອງຫນຶ່ງຂອງເດີ່ນໂຮງຮຽນ ເພື່ອເອົາໄວ້ຫລິ້ນ "ໂຍນຂຸມ" ກັບຫມູ່ຍາມເລີກຫລິ້ນ. ຫມູ່ເດັກນ້ອຍອື່ນຍັງບໍ່ທັນມາ ແລະ ກະໂຕອ້າຍຄູຄົນດຽວຂອງໂຮງຮຽນທີ່ສອນ ຄວບທັງສາມຫ້ອງຊັ້ນປະຖົມນັ້ນ ກໍບໍ່ເຫັນຮອດເງົາ ຄືກັນກິຄຶດເອົາເອງວ່າ ໂຮງຮຽນຄົງບໍ່ທັນເຂົ້າງ່າຍດອກ.

ປ້າພອນຍ່າງວັບໆ ມາຢຸດຢູ່ຫາງກິ ປະມານສອງສາມວາ ເກົ້າຜົມເປີຍຂອງລາວ ອ່າວເຕື່ອຍຕົກງ່ອນ. ລາວນຸ່ງເສື້ອຜືນໃຫມ່ລາຍດອກຈົບງາມ ຄືຫາກໍມາແຕ່ໃນເມືອງໃນນາ ແຕ່ທ່າທາງບອກວ່າຮ້ອນຫມົກຮ້ອນໃຈເອົາກະດ້. ຢຸດຍ່າງແລ້ວ ແສງຕາຂອງນາງຊ້ຳແລລວາດໄປຮອບໆເດີ່ນ ຜ່າແປວແດດສີເຫລືອງຄຳຂອງຍາມເຊົ້າອ່າວສວາຍແລ້ວຢຸດຈົ້ງຢູ່ອາຄານໂຮງຮຽນຂອງບ້ານ. ກິ ເຫັນວ່າແສງຕາຂອງປ້າພອນ ເປັນມັນຍິຍັບ ຄືຈະສິ່ງແສງອອກມາ ຕື່ມພະລັງໃຫ້ແສງແດດວາດໃດວາດຫນຶ່ງ. ໂຮງຮຽນເປັນເຮືອນຕູບຕິດພື້ນມຸງຫຍ້າ. ພື້ນດິນແກ່ນຮາບພຽງ ຍ້ອນຖືກຕີນເດັກນ້ອຍຫລາຍສິບຄູ່ຢຽບຍ່ຳ ທັບຖົມມາຫລາຍຟ້າຫລາຍປີ ແລະ ຝາໄມ້ເຮ້ຍ ສານລາຍສອງນັ້ນເກົ່າຜຸ ມີຮູໂຈ່ໂຫວ່ ໂຈ່ເຫວ່ ຍ້ອນຖືກສອກ ແລະ ປາຍຕີນຂອງເດັກນ້ອຍຕຳຕ້ອງແດ່ ແລະ ຍ້ອນຄວາມຊະລາພາບ ຕາມການເວລາຂອງໄມ້ເນື້ອອ່ອນ ທີ່ບໍ່ທົນແດດທົນຝົນ ຄືໄມ້ເນື້ອແຂງ. ເບິ່ງລັກໆກົກເສົາທັງແປດຂອງມັນຄືວ່າ ເຊັວລົງຫລາຍກວ່າປີກາຍຊ້ຳ ຈັກຈະຕັ້ງຢູ່ກຸ້ມປີຊ້າບໍ່ ?

- ສູຢາກໄດ້ໂຮງຮຽນໃຫມ່ບໍ່ລະຣິ ? ປ້າພອນ ຕັ້ງຄຳຖາມ ທີ່ກີບໍ່ຄິດບໍ່ຝັນວ່າຊິໄດ້ຍິນ ທັງບໍ່ເຂົ້າໃຈວ່າ ເປັນຫຍັງ ແມ່ປ້າພອນ ຈຶ່ງມາຖາມຕົນແບບນີ້ ກີບໍ່ທັນໄດ້ວ່າຫຍັງດອກ ປ້າພອນຄືວ່າ ຄິດອອກກ່ອນ ລາວເລັ່ງເດັກນ້ອຍໃຫມ່ວ່າ :

- ໄປຊອກອ້າຍຄູຜັນສູ ມາໃຫ້ປ້າໄວໆ ໄປດຽວນີ້. ຄືຊິຢູ່ແຄມ ຫນອງຟາກທົ່ງພຸ້ນລະຫັ້ນ ທາງກົກຂາມປ້ອມ ພຸ້ນກ໊ ເພິ່ນມັກໄປ ນ໋ະ... ບອກວ່າ ປ້າມີວຽກຟ້າວຊັ້ນເດີ !

- ວຽກຟ້າວອີ່ສັງລະ ? ກີເອີ່ຍປາກຖາມຄືນ ເພາະຫລີກບໍ່ເວັ້ນ ແລ້ວ ປ້າພອນຮູ້ຮອດແກ່ວອ້າຍຄູອີກ. ຖ້າເອົາຊິວ່າບໍ່ຮູ້ແລ້ວບໍ່ໄປກໍ່ບໍ່ໄດ້ ທ້າວນ້ອຍລຸກຂຶ້ນ ນ້ຽນໄມ້ແຫລມ ທີ່ໃຊ້ເປັນແນວຂຸດດິນ. ແສງຕາ ແນມນຳປ້າພອນ ແລະ ເຂົ້າໃຈ ພໍລາງໆແລ້ວວ່າ ຕ້ອງມີແນວສຳຄັນ ເກີດຂຶ້ນ ແລະ ມີອ້າຍຄູຜັນຄົນດຽວທີ່ນັ້ນ ທີ່ຈະຊ່ອຍແກ້ໄຂໄດ້.

- ຊິມີຄະນະຜູ້ແທນ ແຕ່ວຽງມາຢ້ຽມຢາມບ້ານເຮົາ... ມີຄົນຕ່າງປະເທດ ປາກພາສາລັ່ງໆ ກີດໆ ມານຳໃຫ້ອ້າຍຄູສູມາເວົ້າກັບ ເພິ່ນ ຈຶ່ງຊິໄດ້ການຊ່ອຍເຫລືອ. ເອົາລະເວົ້າໄປຫລາຍມຶງບໍ່ຈື່ດອກ. ຮີບໄປບອກອ້າຍຄູມຶງ ໃຫ້ເມືອເຮືອນພຸ້ນໂລດເດີ໊.ເອີ້ ຢ່າລືມຕີກະລໍ ສານເທື່ອໃຫ້ແດ່. ປ້າຕ້ອງເອີ້ນ ປະຊຸມດ່ວນນຳ !

- ອ້າວ ຊັ້ນກະບໍ່ໄດ້ເຂົ້າໂຮງຮຽນລະບໍ້ ! ກີເຕັ້ນດ້ວຍຄວາມດີໃຈ ເພາະຕີກະລໍສານເທື່ອ ຫມາຍເຖິງ ໂຮມຫມົດບ້ານ ແບບດ່ວນ ແລະ ເດັກນ້ອຍກໍ່ມີສິດໄປຟັງນຳ ເພາະອ້າຍຄູກໍ່ໄປຄືກັນ !

- ເອີ້... ເອີ ບໍ່ຕ້ອງເຂົ້າແຫລ້ວ ຊິເອົາອ້າຍຄູສູໄປປະຊຸມນຳເດ້!

ເປັນອັນຈະແຈ້ງດີແລ້ວ ກີຈຶ່ງອອກນຳຫາອ້າຍຄູ. ຄຳວ່າ ໂຮງຮຽນ ໃຫມ່ ຕຳຫົວໃຈເດັກນ້ອຍຢູ່ຫນ້ອຍຫນຶ່ງ ເພາະຫ້ອງຮຽນ ບໍ່ມີຝາກັ້ນຫ້ອງ ຫລັງຄາມຸງຫຍ້າ ຂະຫນາດສອງຫ້ອງ ທີ່ເດັກນ້ອຍ ເກືອບສາມສິບຊີວິດ ອາໄສຫລົບແດດ ຫລົບຝົນຢູ່ນີ້ ເກືອບວ່າບໍ່ບັງກັ້ງ

ຫຍັງໄວ້ເລີຍ. ເວລາມີແດດສ່ອງ ເດັກນ້ອຍກໍອົບອຸ່ນຮ້ອນຮຸ່ມໆ ເກືອບເທົ່າກັບເວລາຫລິ້ນຢູ່ເດີ່ນ ແລະ ເວລາຝົນຕົກພວກເຂົາກໍ່ຊຸ່ມ ອົນໄປເຄິ່ງຄີງ. ເວົ້າງ່າຍໆວ່າ ມັນບັງແດດໄດ້ແດ່ ກໍແມ່ນຕອນໃກ້ໆ ໂຮງຮຽນຊິເລີກຕອນທ່ຽງຕາເວັນຂຶ້ນຊື່ ແລະ ບັງຝົນໄດ້ກໍ່ຕໍ່ເມື່ອຝົນ ບໍ່ຕົກເທົ່ານັ້ນ !

ບ່າວຄູຜັນ ເປັນອ້າຍບ່າວໂສດ ໄວຊາວສີ່-ຊາວຫ້າ ມາຢູ່ບ້ານ "ຫາດໂພ" ໄດ້ສອງປີກວ່າ ຍ່າງເຂົ້າປີທີສາມແລ້ວ. ເຂົາຮຽນສຳເລັດ ໂຮງຮຽນສ້າງຄູຊັ້ນກາງຈາກສະຫວັນນະເຂດ ແລະ ໄດ້ສົບຊ້ອນມາ ສອນຢູ່ບ້ານຫາດໂພ ໃນແຂວງນີ້ຕາມຄວາມປະສົງຂອງເຂົາເອງ !

ຜັນມັກຈະຜົກຫມູ່ ມາຊິດເບັດເອົາປາຢູ່ຫນອງຕີນທົ່ງ ໄປ ແຕ່ງກິນ ເສີມພາເຂົ້າຊ່ອຍແມ່ຮັກຄືປ້າພອນ ເຊິ່ງຜູກຮັບເອົາເຂົາ ເປັນລູກຮັກ ນັບແຕ່ມື້ທຳອິດ ທີ່ເດີນທາງມາຢູ່ຫາດໂພ ດ້ວຍການ ລ່ອງເຮືອນ້ອຍ ລົງມາຕາມນ້ຳຊັນ ຕັ້ງແຕ່ເມືອງເກົ່າພ້ອມກັບ "ອ້າຍຄູນ" ລູກຊາຍ ປ້າພອນ ທີ່ເປັນຄະນະປົກຄອງເມືອງ ທັງເປັນ ຜູ້ເຊັນຮັບເອົາ ໃບນຳສົ່ງຂອງເຂົາ ໃນມື້ທີ່ຜັນໄປສະເຫນີໂຕ ເມື່ອ ທາງບ້ານ ບໍ່ທັນໄດ້ກະກຽມ ບ່ອນພັກອາໄສໃຫ້ "ອ້າຍຄູ" ຜູ້ມາໃຫມ່. ປ້າພອນຜູ້ອາລີ ກໍຟ້າວຮັບເອົາ ເຂົ້າຢູ່ໃນເຮືອນນຳໂລດ. ທຳອິດກໍວ່າ ຢູ່ຊາມຊາ ແຕ່ຢູ່ໄປຢູ່ມາໄດ້ຕັ້ງສອງປີກວ່າແລ້ວ ທາງບ້ານກໍຍັງ ບໍ່ເຕື່ອງວ່າຊິປຸກເຮືອນນ້ອຍໃຫ້ເຂົາ ອ້າຍຄູຫນຸ່ມ ຈຶ່ງໄດ້ຮຽນຮູ້ວ່າ ທີ່ແທ້ແລ້ວ ແມ່ນຮີດຫນຶ່ງຂອງບ້ານນີ້ ທີ່ຜູ້ຫນຸ່ມຜູ້ສາວໂສດ ຈະອອກຈາກຢ້າວອອກເຮືອນຢູ່ຜູ້ດຽວບໍ່ໄດ້, ຄະລຳວ່າຊັ້ນ ! ມື້ໃດໄດ້ລູກໄດ້ເມຍພຸ້ນລະ ຫມົດບ້ານຈຶ່ງຊິພ້ອມໃຈກັນ ປຸກໃຫ້ ຖ້າຜູ້ກ່ຽວຕ້ອງການ ຖ້າໄດ້ກັບລູກສາວຜູ້ອ່າວມີຖານະດີແດ່ ກໍອາດເຂົ້າໄປຢູ່ນຳພໍ່ເຖົ້າແມ່ເຖົ້າ ຕາງຮຽນຮູ້ຊີວິດ ແລະ ວຽກໄຮ່

ກາບນາໄປນຳ. ທີ່ແທ້ແລ້ວ ຜັນບໍ່ໄດ້ເດືອດຮ້ອນຫຍັງເລີຍ ເຂົາເຫັນວ່າ ຢູ່ນຳ "ປ້າພອນ" ສະດວກດີທຸກຢ່າງເຮືອນຊານ ກໍວາງຂວາງ ມີຫ້ອງນອນ ສຳລັບເຂົາຫ້ອງໜຶ່ງ ເພາະອ້າຍຄູນ ລາວມີເມຍແລ້ວ ເມຍລາວກໍຍັງຢູ່ນຳເຮືອນພໍ່ແມ່ພຸ້ນ ປ້າພອນເອົາຫລານຕ່າງໆ ມາລ້ຽງສອງຄົນ ພວມສອນບ່າວສອນສາວ ແລະ ຜູ້ທີ່ຮ້ອນໃຈກວ່າເຂົາ ແມ່ນ ປ້າພອນນັ້ນເອງ!

ໜ້ານ້ຳແຄມໜອງຍາມເຊົ້າ ສະຫງົບງຽບ ໃບໄມ້ແຫ້ງປະດັບ ຜິວນ້ຳ ກະເພືອນຄ່ອຍໆ ເມື່ອມີລົມພັດລູ່ມາຕ່ຳ ຜັນຈົ້ງຂຶງ ເບິ່ງອາການ ເໜັງຍຸດໆຂອງຫອຍເບັດ ທີ່ເຂົາຢອນລົງແຊ່ນ້ຳໄວ້ຕັ້ງດົນ ທັງກັ້ນໃຈດ້ວຍຄວາມຕື່ນເຕັ້ນ " ໃຫ້ມັນສວາບເອົ້າໄປລັກລັກກ່ອນ!" ຜັນຫ້າມໃຈຕົນເອງ. "ໂຕໃຫຍ່ສົມຄວນລະຫນໍ້ຕອດຊື່ໆຍັງແຮງປານນີ້! ຄືຊິແມ່ນປາຄໍ່... ນີ້ແລງໃຫ້ແມ່ຕົ້ມໃສ່ໃບຂາມອ່ອນ ຊົດລັກໆກ່ອນ !" ຜັນຄຶດຮຸ່ມໆ ດ້ວຍຄວາມອອນຊອນໃຈ ແຕ່ໃນທັນໃດນັ້ນ :

- ອ້າຍຄູ.. ອ້າຍຄູ ຜັນ... ຢູ່ໃສ ? ອ້າຍຄູ ! ປ້າພອນໃຫ້ມານຳ ອ້າຍຄູ ! ສຽງທອງໃສ ຂອງກິດັງແຜດຂຶ້ນພໍປານຟ້າຜ່າຍາມແລ້ງ ທຳລາຍຄວາມສະຫງົບເໜືອໜ້ານ້ຳ ແລະ ຟອງ ສຽງອັນແຫລມ ຫອງ ຂອງເດັກນ້ອຍນີ້ ຄົງມຸດຊອດລົງພື້ນນ້ຳນຳປາທີ່ເກືອບໂຊກຮ້າຍ ທີ່ວ່ານັ້ນ ເລີຍລອດພົ້ນຈາກ ດວງເບັດນໍລະນະນັ້ນຊ້ຳ. ສຸດສຽງຮ້ອງ ສຽງບາດຕີນ ຍ່ຳຕາມໃບໄມ້ແຫ້ງ ກໍດັງຄວາກໆ ໃກ້ເຂົ້າມາຍັງຈຸດ ທີ່ອ້າຍຄູເອົາອິດສາເລືອກໄວ້ຢ່າງຄັກ. ກິຄົງສັງເກດເຫັນຮອຍຕີນ ຕາມທາງຫຽວດິນຫນຽວປຽກ ທີ່ລັດລຽບມາຫາຕົ້ນໄຊນ້ອຍ ບ່ອນຜັນເລີຍຫມານມາແລ້ວຫລາຍເທື່ອ.

- ອ້າຍຄູ... ອ້າຍຄູຜັນ... ຮ້ວາຍ ຢູ່ຕາຍທາງໃດເກາະ ? ປ້າພອນໃຫ້ມານຳ ເພິ່ນສັ່ງໃຫ້ເມືອໄວໆ !

ແສງຕາຂອງກິນ້ອຍ ຄະໂນະກັບແສງຕາຂຽວປື້ງ ຂອງອ້າຍຄູ ທີ່ດຶ່ງມາໃສ່ ເມື່ອເຂົາໂປໂລທີວ ພົ້ນພຸ່ມຫຍ້າສຸດທ້າຍກ່ອນຮອດຕົ້ນໄຊ

- ບັກກິ! ມຶງເວົ້າຄ່ອຍກວ່ານີ້ບໍ່ໄດ້ຫວາ? ປາກູເປີດໜົດແລ້ວ! ປາຄໍ່ໃຫຍ່ພວມຊິສວາບບາ ມັນຕອດນຸບໆຢູ່ຕັ້ງດົນ ໂອ້ຍບັ່ງເມື່ອຍດາຍດອກ." ຜັນຂຶ້ນສຽງດ້ວຍຄວາມໂມໂຫແຕ່ຍັງບໍ່ຍອມຍົກລັບເບັດ ເຂົາທັງເວົ້າ ທັງເສືອດຕາ ລົງເບິ່ງທອຍເບັດ ພໍປານພວມເຫັນປາຄໍ່ໂຕນັ້ນລອຍລຸດໆ ຫ່າງຈາກດວງເບັດເຂົາໄປ. ກິອຶກອັກ ເຂົາເສຍໃຈແຮງຄືກັນ ເພາະຮູ້ດີປາໂຕຫລຸດເບັດນັ້ນ ກໍ່ໂຕໃຫຍ່ສົມຄວນແລ້ວ ແຕ່ໂຕພວມຊິສວາບເບັດນີ້ ແຮ່ງຕ້ອງໃຫຍ່ກວ່າໂຕມັນຫລຸດອີກ.ຊັ້ນ ຄວາມເສຍດາຍກໍຕ້ອງທະວີຂຶ້ນຫລາຍຕໍ່ !

- ປ້າພອນວ່າຫຍັງເກາະ ! ຜັນຖາມຊ້ຳ ເມື່ອເຫັນເດັກນ້ອຍມິດຈັງວັງໄປ ເຂົາຄ່ອຍໆຍົກລັບເບັດຂຶ້ນ ດ້ວຍທ່າທາງອາວອນ ແນ່ລະມັນແຈ້ງກວ່າກາງເວັນອີກວ່າບໍ່ ມີຫຍັງຫ້ອຍໂຕ່ງເຕັ່ງຢູ່ປາຍສາຍເອັນ. ດວງເບັດເປົ່າເປົາ ຟັ່ງລອຍຂຶ້ນ ຕາມແຮງຊິດເຫຍື່ອອີ້ດັກແດ້ ຂາດແຫວ່ງໄປແທ້ ຊາຍໜຸ່ມຄວາຈັບມາແຍງ ແລະອ້າງນຳ ກິ ດ້ວຍຄວາມເຫລືອໃຈ.

- ໂຕເບິ່ງແມ້ຫນີ້... ມັນສວາບໄປ ຕັ້ງເຄິ່ງແລ້ວບ່າເອົາລະ ! ຢ່າມັນສາ ວ່າແນວໃດ ? ປ້າພອນໃຫ້ມາຊອກອ້າຍຊັ້ນຫວາ ເພິ່ນມີວຽກຫຍັງ ? "ຄວາມໂມໂຫ ຂອງອ້າຍຄູຜັນນອດນ້ອຍລົງ ຢ່າງໄວວາ ເມື່ອເຫັນສີໜ້າເຫລ່ໆຂອງກິ. ເຂົາເປັນແນວນີ້ເອງ ໂມໂຫງ່າຍເຊົາໄວ ຄືແປວໄຟຖືກລົມລູ່ ລຸກພືບພັບ ແລ້ວອ່ອນແສງລົງ ພ້ອມກັບລົມຣວ້າຍ. ຜັນຮູ້ສຶກວ່າ ນັບມື້ຄວາມໃຈຮ້ອນວື່ໆ ແບບອ້າຍບ່າວ ນັກຮຽນຮູ້ຜູ້ໜຸ່ມນ້ອຍ ນັບຣວ້າຍແຮງລົງ ນັບແຕ່ເຂົ້າມາຢູ່ໃນເຂດຊົນນະບົດຫ່າງໄກເມືອງໃຫຍ່ແບບນີ້. ການເດີນທາງໄປມາຫາຕົວເມືອງກິນເວລາ ອາໄສລ່ອງໄປມານຳສາຍນ້ຳຊັນ. ຖະໜົນໃຫຍ່ດິນແດງ

ຕັດກາຍບ້ານ ຢູ່ຟາກນ້ຳອີກເບື້ອງຫນຶ່ງຮອດສາມຫລັກ. ຊາວບ້ານອາໄສກວຽນ ແລະ ເຮືອ ເປັນພາຫະນະຕົ້ນຕໍ. ມາຢູ່ໃຫມ່ໆ ຜັນຮູ້ສຶກຫມຸດຫມິດ ບໍ່ພໍໃຈຕໍ່ສະພາບການເດີນທາງໄປມາ ເຂົາຄິດຄຽດແຄ້ນໃຫ້ຊີວິດ ຄິດເຫລືອໃຈແທນປະຊາຊົນບ້ານນີ້ ທີ່ຕ້ອງຖືກຕັດຂາດ ຈາກໂລກພາຍນອກ ຍ້ອນບໍ່ມີຖະຫນົນ ຜັນມັກອິດເອື້ອນ ໄປປະຊຸມໃນເມືອງເມື່ອມີວຽກກ່ຽວຂ້ອງ ກັບໂຮງຮຽນ ໂດຍອ້າງວ່າໄປມາລຳບາກ. ຄວາມຈິງແລ້ວ ເຂົານັ່ງເຮືອຂ້າມຟາກກົ້ນບໍ່ທັນອຸ່ນຊ້ຳ ກໍສາມາດຍ່າງອອກສູ່ຖະຫນົນໃຫຍ່ ປະມານຊົ່ວໂມງນຶ່ງ ເພື່ອລັດລົດໂດຍສານຂີ່ເຂົ້າໄປໃນເມືອງ ອີກປະມານ໓໐ ນາທີ ຫລື ບໍ່ກໍຂີ່ເຮືອຈັກຂຶ້ນຕາມນ້ຳຊັນປະມານຊົ່ວໂມງກວ່າ ກໍໄປຮອດ ຫ້ອງການສຶກສາເມືອງບ່ອນມີວຽກງານລໍຖ້າ. ຕະຫລອດເວລາເດີນທາງ ທີ່ເຂົາຄິດວ່າ "ຍາກແທ້ ຍາກວ່າ" ນັ້ນ ຜັນຊ້ຳບໍ່ຮູ້ສຶກເບື່ອຫນ່າຍ ເຂົາຂ້າມນ້ຳຊັນດ້ວຍເຮືອພາຍນ້ອຍ ທີ່ນັ່ງໄດ້ປະມານ ໔-໕ ຄົນ ໂດຍບໍ່ຕ້ອງເສຍຄ່າໂດຍສານ ຄົນຫມົດບ້ານ ຮັກແພງເຂົາ ເອີ້ນເຂົາວ່າອ້າຍຄູ. ທຸກຄົນຢາກໃຫ້ເຂົາຂຶ້ນເຮືອຮ່ວມທາງ. ທິວທັດສອງຟາກຝັ່ງຂຽວຊື່ນສະອອນຕາ ມັນຂຽວຄຶ້ມ ເປັນເງົາໂງ່ນມີຊີວິດຊີວາ. ທາງຝັ່ງບ້ານ ມີຕົ້ນພ້າວຕົ້ນຫມາກຂຶ້ນຊອນລອນ ເຫນືອຫລັງຄາເຮືອນ ທີ່ປຸກຫ່າງກັນ ຢັ່ງຢາຍຕາມແຄມຝັ່ງແມ່ນ້ຳ. ສ່ວນຝັ່ງກົງກັນຂ້າມແມ່ນສວນຢາດູດ ຜັກຊະນິດຕ່າງໆ ແລະ ສາລີ. ໃນລະດູແລ້ງ ນ້ຳແຫ້ງຂອດ ຫາດສີຂາວປົ່ງລານອອກຈາກສອງຝັ່ງເກືອບຈອດກັນຢູ່ກາງນ້ຳ ບາງບ່ອນເປັນດອນສູງ ໄທບ້ານຈຶ່ງມາເຮັດສວນຢາ ແລະ ປູກຜັກໃສ່ ກະແສນ້ຳສີຂຽວໃສບົກເຫືອດລົງ ເຫັນກ້ອນຫີນສີຂາວ ແດງດຳ ນອນແນບງຽບສະຫງົບຢູ່ກັບພື້ນນ້ຳ. ຜູ້ເຖົ້າຜູ້ແກ່ເວົ້າສູ່ຜັນຟັງວ່າ ບໍ່ເຄີຍເຫັນນ້ຳຊັນແຫ້ງໄວປານນີ້ ທຳມະດາໃນເດືອນຈຽງ - ເດືອນຍີ່ ນີ້ ບໍ່ທັນແນມເຫັນກ້ອນຫີນໃນພື້ນນ້ຳດອກ... ຕ້ອງພຸ້ນ ເດືອນຫ້າ ບຸນກຸດສົງການພຸ້ນ

ຈຶ່ງພໍລຸຍນ້ຳອອກໄປຫລົ້ນກາງຫາດໄດ້ ແລະ ອາກາດແຕ່ກ່ອນກໍ່ຊຸ່ມເຢັນຫນາວຈ້ອຍໆກວ່າດຽວນີ້ ຕັ້ງຫໍ່ໃດ. ຜັນຢາກຄິດວ່າເຂົາຮູ້ຈັກສາເຫດ ແຫ່ງການປ່ຽນແປງນີ້ ແລະ ຜູ້ເຖົ້າຜູ້ແກ່ ໄທບ້ານຫາດໂພກໍຮູ້ດີ ແຕ່ໃຜໆ ກໍ່ບໍ່ຍອມເວົ້າຮອດ ໄດ້ແຕ່ຈົ່ມແຕ່ວ່າໃຫ້ຟ້າໃຫ້ດິນພຸ້ນແຫນ.ທຸກໆຄັ້ງທີ່ຜັນຕ້ອງເດີນທາງເຂົ້າໃນເມືອງ ເຂົາບໍ່ທັນອິ່ມຕາອິ່ມໃຈນຳທິວທັດສອງຟາກຝັ່ງເທື່ອດອກ ເຮືອນ້ອຍ ກໍພາເຂົາລອຍມາຮອດອີກຝັ່ງນຶ່ງແລ້ວ ຕໍ່ຈາກນັ້ນກໍຈະມີຜູ້ເອີ້ນຜູ້ຊວນຂຶ້ນນັ່ງກວຽນເດີນທາງຕໍ່ອອກໄປສູ່ຖະຫນົນໃຫຍ່ ຖ້າມີຫມູ່ຜູ້ສາວຫາບຜັກ ຫລື ສິນຄ້າອື່ນໄປສົ່ງຕະຫລາດ ຜັນກໍຈະຍ່າງເປັນຫມູ່ ໄປນຳພວກເຂົາທັງເວົ້າລົມ ລຳຢອກໃຍກັນໄປ. ຜັນຄ່ອຍໆລືມໄປວ່າ "ຄວາມຫຍຸ້ງຍາກ" ໃນການເດີນທາງ ລະຍະເກືອບ ໑໐ ຫລັກ ແຕ່ຫາດໂພໄປຫາຕົວເມືອງເປັນແນວໃດ, ເຂົາບໍ່ຄິດຍາກ ຫລື ຕອບວ່າອິດຄ້ານໄປປະຊຸມອີກແລ້ວ.

- ມີຫຍັງຮ້ອນດ່ວນພິລຶກ ຊັ້ນຫວະແມ່ ? ຜັນຖາມທັນທີເມື່ອກ້າວຂາມົ້ມຫົວຂັ້ນໄດ. ປ້າພອນພວມນັ່ງລົມກັບຜູ້ເຖົ້າ ນ-໔ ຄົນຢູ່ເຊຍເຮືອນ.

- ເອີ້ ມາແລ້ວເບາະ ຜັນ ! ປ້າພອນງວາກມາ ເມື່ອໄດ້ຍິນສຽງຜັນ

- ນີ້ນ່າ ! ແມ່ຟ້າວມາບອກໄທບ້ານເຮົາ ກຽມໂຕ ຊິມີຄະນະຜູ້ແທນມາຢາມບ້ານເຮົາ.

- ຄະນະຜູ້ແທນຊິມາຢາມບ້ານເຮົາຊັ້ນຫວະ ?ຄະນະໃດອີກ ?

ນ້ຳສຽງຂອງຜັນບອກວ່າ ບໍ່ອອນຊອນນຳຊື່ຄະນະຜູ້ແທນທໍ່ໃດ.

- ອຸ້ຍ ຄະນະຜູ້ແທນນີ້ ບໍ່ເຄີຍມາເມືອງເຮົາ ຈັກເທື່ອດອກລູກ... ເພິ່ນຊິມາເຮັດວຽກຢູ່ເຂດເມືອງເຮົາ ນ-໔ ມື້, ຊິລົງຢ້ຽມຢາມ

ປະຊາຊົນ ເພິ່ນວ່າຊິເກີດອີສັງບຸ ແມ່ບໍ່ຈື່ຄັກປານໃດທັງຟ້າວມາແດ່. ປັ້ນເຊົ້ານຳເພິ່ນ ແລ້ວກໍມາໂລດ.

- ເອີ້... ຊັ້ນ ເພິ່ນຊິລົງມາບ້ານເຮົານີ້ໃດລະ ? ຜັນຖາມຊ້ຳ ເມື່ອໂຢ້ຄິງລົງນັ່ງຮ່ວມວົງສົນທະນານຳ ແລະ ເຂົາກໍຍັງບໍ່ທັນເຂົ້າໃຈ ຄັກວ່າ ແມ່ນຫຍັງເປັນຫຍັງແທ້.

- ມື້ອື່ນເຊົ້າ ! ແມ່ເຊີນພວກເພິ່ນກັບປາກເອງ. ໃນລະນະນັ້ນ ເກາະ ຕ່າງຫມູ່ແທ້ໆໃດລູກ ມີແຕ່ຜູ້ຫນຸ່ມໆ ນ້ອຍໆ ຮຸ່ນຮາວຄາວດຽວ ກັບລູກນີ້ລະ ມີນາງອັນນຶ່ງຖືກຕາແມ່ ຂະຫນາດ ເລີຍ ຣິ ໆ ! ປ້າ ພອນເວົ້າ ທ່າທາງສະອອນໃຈ ທັງແນມເບິ່ງຫນ້າລູກຮັກ ດ້ວຍອາດແວວປະຫລາດ.ຕາມທຳມະດາແລ້ວປ້າພອນບໍ່ເປັນຄົນ ມັກເວົ້າຫລາຍຍືດຍາວແຕ່ນີ້ຄືວ່າລາວຢາກຮຽກຮ້ອງ ຄວາມສົນໃຈ ຈາກຜູ້ໃດຜູ້ຫນຶ່ງ ຜັນເຮັດຄືບໍ່ເຂົ້າໃຈ.

- ມີຮອດຄົນຕ່າງປະເທດພຸ້ນໄດ໋ລູກ ຈັກຊາດຫຍັງບຸ...ຕາມອ້າຍ ຄູນລູກເວົ້າລະວ່າແມ່ນພວກອົງການຊິໃຫ້ຄວາມຊ່ວຍເຫລືອ ໃນບ້ານ ນອກບ້ານນາເຮົານີ້ນາ.ຊິມາກວດກາເບິ່ງກ່ອນເພິ່ນວ່າແນວໃດບຸ... ນາງອັນນັ້ນລະ ອະທິບາຍ...ນາງແກ້ວເອີ້ນາງແກ້ວ.ໄດ້ຫລຸດຊື່ນີ້ ອອກມາແລ້ວ ປ້າພອນ ກໍຍິ້ມແປ່ນແວ່ນ ຄືວ່າພໍໃຈຕໍ່ຊື່ສຽງຮຽງນາມ ອັນນີ້ຫລາຍ ແລະ ກໍຄືວ່າ ຕັ້ງຢາກອອກຊື່ນີ້ ເພາະເວົ້າອອກມາແລ້ວ ລາວກໍຢຸດໂລດ.

- ແມ່ເຊີນພວກເພິ່ນມາຢາມບ້ານເຮົາເອງຫວະ ? ຜັນຖາມ ຄືນສີຫນ້າເຄັ່ງຂຶມ.

- ເອີກະເຊີນເອງລະເບາະ ແມ່ເວົ້າກັບນາງແກ້ວຫັ້ນ ລະ ວ່າມື້ອື່ນເຊົ້າ ຊິໃຫ້ລູກເອົາເຮືອຈັກຂຶ້ນໄປຮັບ

- ມີນຳກັນຈັກຄົນ ?

- ຜີ ຄົນ ລູກເອົາເຮືອໃຫຍ່ພໍ່ລຸງລຳດຽວກໍຄືຊິພໍ ແຕ່ແມ່ບໍ່ຮູ້ວ່າ

ທາງເມືອງເພິ່ນຊິແຕ່ງໃຜມາບໍ່າເດີ້ເຮົາຕ້ອງກຽມຄັກໆເພື່ອໄວ້ແມ່ ເນາະລູກ.

- ກຽມຄັກໆ ກຽມອັນໃດແມ່ ? ຜັນຖາມຊ້ຳປາກິດວ່າມື້ນີ້ ເອົາເອົ້າໃຈເລື່ອງລາວນຳປ້າພອນຍາກເຮັດໃຫ້ຜູ້ເຖົ້າອື່ນໆ ທີ່ນັ່ງຮ່ວມ ຟັງຢູ່ດົນຜູ້ນຶ່ງ ຟ້າວສອດຂຶ້ນວ່າ :

- ອ້າວ ກໍ່ຕ້ອງມີພາບາສອກບາສີ ເຫລົ້າໄຫໄກ່ຕົ້ມລະບໍ້ ຜັນ... ແຂກບ້ານແຂກເມືອງມາຢາມນະ !

- ແຕ່... ຄືວ່າຖ້າຊິເຮັດແບວນີ້ ຕ້ອງມີຄຳສັ່ງ ມາແຕ່ເມືອງໄດ໋ ແມ່ປ້າວ່າໃຫ້ພວກເຮົາ ກຽມຮັບແຂກດ້ວຍພາບາສີນີ້ນະ ແຕ່ນີ້ ຄືວ່າ ແມ່ເຊີນເພິ່ນມາເອງ ທາງເມືອງເພິ່ນບໍ່ໄດ້ສັ່ງ ອີກແບວນຶ່ງ ເງິນຄັງ ໜ່ວຍຊາວໜຸ່ມ ພວກລູກກໍ່ຍັງເກັບບໍ່ໄດ້ເທື່ອ ຜັນເວົ້າຍາວເປັນເທື່ອ ທຳອິດ ເພື່ອໃຫ້ທຸກຄົນເຂົ້າໃຈ ສະພາບນຳກັນ.

- ໂອ້ຍ ອັນນີ້ບໍ່ຕ້ອງໃຊ້ເງິນຄັງ ເງິນແລ້ງໃຜໝົດ ບ່າລູກ. ມັນ ເລື່ອງສ່ວນຕົວ ເອກະບໍ່ແມ່ນແທ້. ເພິ່ນຊິມາຢາມໝົດບ້ານ ເອົາການ ຊ່ອຍເຫລືອມາໃຫ້. ພວກເຮົາຊິບໍ່ຕ້ອນຮັບເພິ່ນຫວະ ? ດອກໄມ້ໃບສວນ ເຫລົ້າເຮືອນລະແກ້ວໄກ່ໃນລົກເຮົາຫັ້ນຈັກສອງ-ສາມໂຕ ເອົ້າເຮືອນ ລະແອບ...! ປ້າພອນເອງກໍ່ສູ້ຊິນຄືນບໍ່ຢ່ອນ.

- ແມ່ລະເວົ້າງ່າຍໆ. ຄົນໝົດບ້ານກິນໄກ່ສາມໂຕ ຫັ້ນຫວາ ? ຊິເຫັນຮອດຕີນມັນບໍ່ ? ຜັນເວົ້າຄຳບໍ່ມ່ວນ ດ້ວຍອາລົມຮ້ອນ ທີ່ຖືກ ໜີບໄວ້ດົນ ເອົາຍັງຈື່ເຫດການ ຕອນຕ້ອນຮັບຜູ້ແທນຊຸດກ່ອນ ທີ່ມາ ຈາກວຽງຈັນໄດ້ດີ.

- ເອີ້...ຜັນ ! ຜູ້ອື່ນໆກະຊິມາຜູກຂໍ່ຕໍ່ແຂນຊື່ໆດ້ ! ສຽງປ້າພອນ ອ່ອນຍວບລົງແດ່.

- ຂາຍໜ້າເທື່ອກ່ອນ ແມ່ບໍ່ຈື່ຫວະ ? ຜັນເວົ້າໃຫ້ແຈ່ມແຈ້ງຂຶ້ນ ໂດຍບໍ່ຄຶດເກງໃຈຜູ້ນັ່ງຢູ່ນຳ ດ້ວຍຄວາມເຫລືອໃຈ ໃຜກະເອົາແຕ່ເອົ້າ

ກັບເຫລົ້ານາ ຊື່ນປາໂລດມີແຕ່ເຮືອນເຮົາ ມັນກະບໍ່ພໍແຕ່ງໃສ່ພາເອົາແຂກໂລດໄດ໋ງົມ ຫາວ ຫາຕ່ອນເອົາ.....ຂ້ອຍວ່າ...

- ຊັ້ນ ຊິເຮັດແນວໃດ ? ແມ່ໄດ້ເຊີນເພິ່ນແລ້ວເດ້ ? ຊິແຜ່ກັນຫມົດບ້ານ ຊິເປັນຫວະ ? ຕາຍແລ້ວ ບາດນີ້ ! ປ້າພອນຕັດຄວາມທັງເຮັດສີຫນ້າລ່າໆ ເມື່ອບໍ່ໄດ້ຮັບການສະຫນັບສະຫນູນຈາກລູກຮັກ ແລະ ຜູ້ເຖົ້າສອງສາມຄົນ ທີ່ນັ່ງຢູ່ນຳ ກໍຍັງຄຶດຫຍັງຊ່ອຍບໍ່ທັນຄືກັນ.

- ແມ່ເວົ້າກັບເພິ່ນ ຄັກແທ້ຫວະ ? ເພິ່ນຊິມາແທ້ໆເບາະ ? ຜັນຖາມສຽງອ່ອນລົງ ເພາະເຫັນສີຫນ້າແມ່ຮັກບໍ່ດີ.

- ກະເວົ້າແທ້ເວົ້າວ່າລະເບາະລູກ ! ແມ່ຢາກຕ້ອນຮັບ ຢາກ ບາສີໃຫ້ເພິ່ນມີຂອງຢູ່ຂອງກິນສົມຫນ້າສົມຕາຫັ້ນລະລູກ... ຢາກໃຫ້ເພິ່ນເຫັນວ່າບ້ານເຮົາກໍມີຢູ່ມີກິນພໍຢູ່ໄດ້ຊັ້ນນ່າ.. ແມ່ບອກນາງແກ້ວວ່າ ແມ່ມີລູກຮັກ ເປັນນາຍຄູເປັນຂ່າວຈ້ອຍໆຢູ່ຊ້ຳອີກນ່າ... ແນວໃດໆ ກໍ່ໃຫ້ເພິ່ນມາເຫັນກັບຕານັ້ນລະ !

- ແມ່ຈັກໄປເວົ້າຫຍັງແນວຈັ່ງຊັ້ນ ! ຄົນມີຄວາມຄຶດແດ່ ເອົາຊິຢູ່ໃສມັນບໍ່ແມ່ນວ່າມີແນວຢູ່ແນວກິນແລ້ວເອົາຊິມັກໂລດໄດ ! ຜັນຮ້າຍ ຂຶ້ນອີກເມື່ອພໍຊິເຂົ້າໃຈວ່າແມ່ຮັກເອົາຄຶດແນວໃດແຕ່ປ້າພອນເຮັດສີຫນ້າງົງງວາຢູ່ ເວລານັ້ນປາກົດວ່າຜູ້ເຖົ້າ ສາມຄົນ ທີ່ປ້າພອນເອີ້ນມາ ເປີກສາຫາລືນັ້ນ ຖອຍໄປຫາລືໄຟໃນຄົວແລ້ວ. ຜັນ ຈຶ່ງທັ່ງຄຳເວົ້າ ໃສ່ປ້າພອນອີກວ່າ:

- ເວົ້າຊື່ໆ ແມ່ ຂ້ອຍລະເບື່ອແລ້ວໄດ໋ : ແຕ່ງພາບາສີສູ່ຂວັນຮັບແຂກຜູ້ແທນຫນີ້ເກາະ ສູ່ໄປແລ້ວບໍ່ເຫັນວ່າໄດ້ຫຍັງ ?ຍາມໃດກໍ່ວ່າມາຢ້ຽມຢາມເກັບກຳຂໍ້ມູນ ? ຢູ່ໃສການຊ່ອຍເຫລືອ ? ຢູ່ໃສໂຮງຮຽນຫລັງໃຫມ່ ? ສາມ-ສີ່ປີແລ້ວຕວ່າທີ່ອໍມາຫນີ້ ? ຢູ່ໃສ ແຜດຫມໍທີ່ວ່າຊິສົ່ງມາຢູ່ນຳ... ເຮັດບາສີເທື່ອໃດເງິນຄັງ ຂາຍສາລີ ຖົ່ວຂຽວ ພວກຂ້ອຍກໍຫມົດໄປນຳ ສະມາຊິກ ຜູ້ໃດມັກກິນມັກເມົາແດ່ ກໍເສຍຜູ້ເສຍຄົນໄປນຳ.

ຖືກໄລ່ອອກສອງຄົນແລ້ວເດ້ ຍ້ອນເມົາຕ້ອນຮັບແຂກນີ້ນະ ! ສຽງຂອງຜັນອ່າວແຮງເຮັດໃຫ້ພວກຢູ່ເຮືອນຄົວແນມມາເບິ່ງເປັນ ຕາດຽວກັນ.

- ຜັນ ! ຜັນຢ່າເວົ້າແນວນັ້ນລູກ ! ຜູ້ແທນກໍຕ່າງຜູ້ແທນໄດ໋ ຄົນເຮົາບໍ່ຄືກັນ. ຄະນະນີ້ແມ່ເຊີນເພິ່ນເອງ ! ປ້າພອນພະຍາຍາມອະທິບາຍຕໍ່

- ເຊີນບໍ່ເຊີນ ກະຕາຍດຽວກັນຫັ້ນລະ ! ລູກເບື່ອແລ້ວອັນວິທີການຊ້າງເອົ້ານາ ພະຍາເຂົ້າບ້ານນີ້ນະ ! ເອົາແຕ່ຊິເຮັດເດີ້ ລູກບໍ່ກ່ຽວ ! ຜັນ ວ່າແລ້ວ ກໍລຸກຍ່າງປັດກົ້ນລົງເຮືອນດ້ວຍຫົວໃຈຕີບເຕັ້ນແຮງ ກວ່າຂານາ.

ຄວາມຫລັງຝັງໃຈ

ເດັກ ນ້ອຍເກືອບສາມສິບຄົນ ພວມຫລິ້ນຢູ່ເດີ່ນລໍຖ້າອ້າຍຄູຢູ່ແລ້ວ ດັ່ງນັ້ນເມື່ອຜັນ ຍ່າງກົ້ມໜ້າງຸບໆ ມາດ້ວຍອາລົມຂົ່ມຮ້ອນ ຍ້ອນການຈະມາຢ້ຽມຢາມ ຂອງ ຄະນະຜູ້ແທນ ທີ່ວ່ານັ້ນ ເຂົາຈຶ່ງຈຳໃຈລືບລ້າງ ຄວາມອຸ່ນມືວໄປ. ແນມເບິ່ງ ໜ້າຕາພວກເດັກນ້ອຍໄຮ້ດຽວສາເຫລົ່ານີ້ແລ້ວ ເຂົາກໍຢາກຈະມີ ລິດເດດຂັບດານທຸກສິ່ງທຸກຢ່າງ ທີ່ຈຳເປັນສຳລັບ ການຮຽນ ໃຫ້ພວກເຂົາ.

- ເຂົ້າຫ້ອງຮຽນເວີ້ຍ ! ຜັນຮ້ອງໃສ່ເພື່ອຂົ່ມຄວາມຄຶດຝັນອັນໄຮ້ສາລະຂອງຕົນ. ເດັກນ້ອຍແຕກວົ່ນ ແຍກຍ້າຍກັນໄປເຂົ້າຫ້ອງປະຈຳບ່ອນນັ່ງຂອງໃຜລາວ ທັງຖົກຖຽງກັນໃນເລື່ອງທີ່ໄດ້ຍິນມາ.

- ອ້າຍຄູ ອ້າຍຄູ ຜູ້ແທນຊິມາຢາມໂຮງຮຽນເຮົາບໍ່ ?

- ຕ້ອງອະນາໄມ ເກັບຂີ້ເຫຍື້ອບໍ່ ?

- ຕ້ອງໃສ່ເສື້ອຂາວບໍ່ ?

- ຕ້ອງແອບຮ້ອງເພງຊາດບໍ່ ?

- ມິດ !!! ຜັນຮ້ອງທັງຍົກມືຂຶ້ນຕົບໂຕະໄດ້ຜົນ ! ຄວາມງຽບສະຫງັດ ທີ່ເກີດຈາກຄວາມຕົກຂະມ່າຢ້ານກົວ ຂອງພວກເດັກນ້ອຍເອງ

ເຮັດໃຫ້ບັນຍາກາດ ວັງເວງເສົ້າເຫງົາ ມັນບໍ່ແມ່ນຄວາມສະຫງົບໃນຫ້ອງຮຽນ ທີ່ໜ້າຕ້ອງການສຳລັບຄູທີ່ດີດອກ. ຜັນອືນນ້ຳລາຍລົງຄໍກ່ອນຈະເຮັດສຽງໃຫ້ທຳມະດາທີ່ສຸດວ່າ

- ອ້າຍຄູຍັງບໍ່ຮູ້ແນ່ເທື່ອແຕ່ເພື່ອໃຫ້ຄັກ ພວກເຮົາກໍ່ຕ້ອງ ກຽມພ້ອມເນາະ ເອີ ! ກ່ອນອື່ນຮຽນໜັງສື ຕໍ່ຈາກນັ້ນເກັບຂີ້ເຫຍື້ອອ້ອມເດີ່ນ

ຜັນ ຝືນໃຈປະຕິບັດໜ້າທີ່ "ຄູ" ພໍໃຫ້ແລ້ວນີ້, ເຂົາຫຼັກທັງເວລາຫລັກທັງວິຊາການ.ສອນແຕ່ບົດອ່ານ ແລະ ຈົດບັ້ງເລກໃສ່ກະດານໃຫ້ເດັກນ້ອຍ, ສັ່ງໃຫ້ທຸກຄົນເກັບຂີ້ເຫຍື້ອມາກອງໄວ້ບ່ອນດຽວແລ້ວຕົນເອງກໍ່ຍ່າງງຸບໆ ມຸ່ງໜ້າໄປຍັງຫນອງທົ່ງຕີນບ້ານ. ບ່ອນທີ່ເຂົາຈະສາມາດນັ່ງຄຶດນັ່ງຝັນຫລືຕໍ່ສູ້ກັບຄວາມຄິດ ອັນສັບ ສົນຂອງຕົນ.ມານັ່ງຢູ່ໜ້ານ້ຳອັນຮາບພຽງທ່າມກາງບັນຍາກາດ ອັນ ມືດສະຫງັດຂອງຍາມໃກ້ທ່ຽງອີກຄັ້ງນຶ່ງແລ້ວອາລົມຂອງຜັນກໍ່ຊ້ຳຝັດບຸບໆຂຶ້ນອີກ ຄ້າຍໆກັບວ່າ ມັນມີເຊື້ອໄຟຊະນິດດີ ຄອຍຕື່ມ ເຂົ້າມາເຜົາໄໝ້ ແລະ ບັດນີ້ແປວໄຟແຫ່ງອາລົມກໍ່ລຸກວື້ຂຶ້ນອີກ : "ລອງມາເບິ່ງຜູ້ແທນຊຸດນີ້ບັກຜັນຊິຈັດການເບິ່ງ ! ແມ່ນໍແມ່ຄິດໄປຫົວທີບຜູ້ສາວມາແຕ່ໃນເມືອງໃນບາຫາງໃດ ເຂົາຊິມາສິບໃຈລູກຊາຍນ້ຳໜ້ານາຍຄູສອນປະຖົມ ຄືລູກຊາຍແມ່ ! ເງິນເດືອນຫລື ໄດ້ມາຢາວ່າແຕ່ຈະຊື້ໂສ້ງເສື້ອມາບຸ່ງໃຫ້ມັນສົມໜ້າສົມຕາເທາະເອົາແຕ່ເຄື່ອງໃຊ້ສອຍເລັກໆນ້ອຍໆ ແລະປຶ້ມອ່ານປຶ້ມຮຽນ ສຳລັບຕົນເອງ ແລະເດັກນ້ອຍມັນກໍ່ກ້ຽງໃນມື້ທຳອິດທີ່ເບີກບັ້ນໂລດ !" ຄິດໄປຄຶດມາຜັນກໍ່ຍິ່ງໂມໂຫແຕ່ຈະໂຫດປ້ຳພອນບໍ່ ? ແມ່ຮັກເຂົາບໍ່ຮູ້ວ່າຜັນສັບຊ້ອນມາຢູ່ຫນີ້ດ້ວຍເຫດຜົນອັນໃດ ? ເຂົາຢາກມາຢູ່ມິດໆ ອົດທົນເຝິກຝົນຈິດໃຈ ໃຫ້ເປັນຄົນໃຈເຢັນ ເຂົາສູນເສຍຄວາມຮັກ ຄົນຮັກ ຍ້ອນຄວາມໃຈຮ້ອນມາແລ້ວ ! ຜັນບໍ່ເຄີຍອອກປາກເລົ່າເລື່ອງ ຫົວໃຈ ແລະຄວາມຜິດຫວັງເຊິ່ງຕົນເອງເປັນຝ່າຍກໍ່ນີ້ໃຫ້ໃຜຟັງ ! ມັກຮັກກັນ

ມາຕັ້ງສາມປີສັນຍາວ່າສອບເສັງອອກຈາກຄູຊັ້ນກາງແລ້ວຈະຮຽນຕໍ່ເອົາຊັ້ນສູງຈາກນັ້ນຈຶ່ງແຕ່ງດອງຄອງຮັກກັນ ! ຄວາມໝັ້ນສັນຍາຂອງແມ່ຍິງ ! ຜັນ ເຈັບໃຈໃຫ້ໂຕເອງບໍ່ແລ້ວແຕ່ຈົນເທົ່າດຽວນີ້ເຂົາກໍຍັງບໍ່ຄັກໃຈວ່າແມ່ນໃຜຕັດສິນໃຈຜິດແມ່ນໃຜທໍລະຍົດກັນແທ້ ! ແມ່ຂອງມະນີສະຫວັນບໍ່ສະບາຍຍ້ອນພະຍາດຫົວໃຈນາງເອງໜ້າຫລ່າຕາຕາຍມາປຶກສາກັບເຂົາວ່າ :

- ເຮັດແນວໃດດີຣືຜັນ ? ທ່ານໝໍວ່າແມ່ເປັນຫົວໃຈພໍ່ອາດຊິຊ໊ອກ ຍາມໃດກໍໄດ້,ພີ່ນ້ອງຫລາຍຄົນວ່າຢາກເອົາເພິ່ນໄປປິ່ນປົວຕ່າງປະເທດ !

- ໄປປົວຕ່າງປະເທດຫວະ ? ແລ້ວເພິ່ນຊິໄປແນວໃດ?

- ເອື້ອຍຕຸ້ມຢູ່ຝະລັ່ງຊິສົ່ງປີ້ຍົນມາໃຫ້, ຂ້ອຍຊິຕ້ອງໄປສົ່ງເພິ່ນ! ມະນີສະຫວັນເວົ້າຄ່ອຍໆ ສີໜ້າຂອງນາງບໍ່ເບີກບານ ຜັນເຊື່ອວ່າເຂົາແນມເຫັນ ຄວາມລັງເລປາກົດຂຶ້ນໃນແກ່ນຕາດໍາປີ້ຄູ່ງາມຂອງນາງ.

- ເພິ່ນໄປແລ້ວເພິ່ນຊິມາບໍ່ລະ ! ຜັນຖາມໂງ່ໆ ຕາມພາສາ ຜູ້ຊາຍ ຂີ້ລະແວງທີ່ວໄປໄດ້ຜົນແກ່ນຕາດໍາປີ້ຂອງນາງວາວວັບຂຶ້ນກັບບາດ.

- ຖາມຈັ່ງຊີ້ແປວ່າແນວໃດ ? ຊິໃຫ້ສາບານຫວະ ?

- ກໍາບໍ່ລະ ? ບໍ່ຮູ້ວ່າ ເຂົາຫລຸດປາດອອກໄດ້ແນວໃດ.

- ບໍ່ຄິດວ່າເຈົ້າຊິຫາກິນ ນໍາຄວາມສາບານ ! ເອີ ! ນັກສຶກສາປັນຍາຊົນ ຄົນແຫ່ງສະຕະວັດທີ 21 ! ບໍ່ເຊື່ອໃຈກັນກໍບໍ່ຕ້ອງເວົ້າກັນອີກ ! ນາງລຸກຂຶ້ນປຶບປັບ ປັດກົ້ນໂສ້ງ "ຢີນ" ຣຸ່ນຫລ້າສຸດ ທີ່ໄດ້ມາໃຫມ່ແລ້ວຍ່າງໄປເອົາລົດຖີບທີ່ຈອດໄວ້ກ້ອງຮົ່ມມ່ວງ.

- ອ້າວ ມະນີ ! ໃສ່ເຈົ້າວ່າ ... ຄວາມເວົ້າສອງສາມປະໂຫຍກກໍໃຫ້ເກີດແນວຄິດ ລາມລົ້ວໄປທົ່ວທິບ " ແນ່ນອນວ່າຖ້າໄປພຸ້ນແລ້ວ

ພໍ້ຜູ້ຈີບກວ່າເຮົາສາວມະນີ ມີຫວັງ ບໍ່ກັບຄືນມາ ! ເຮົາມີຫຍັງດີເດັ່ນກວ່າຫມູ່ເປັນຕາຜູກມັດໃຈບາງບໍ່ ? ແຕ່ສາມປີທີ່ຮັກແພງກັນມາແຕ່ອາຍຸ ໑໙ ເທົ່າ ໒໐ ກວ່າ ບໍ່ມີຄຸນຄ່າຫນັກແຫນ້ນ ຜູກມັດນາງແດ່ຫວະ ? " ຜັນຖາມຕົນເອງເປັນເທື່ອທີຮ້ອຍ.ໄດ້ສາມມື້ ເອົາກໍ່ຕັດສິນໃຈໄປຫານາງຢູ່ເຮືອນເພາະເປັນຍາມພັກໂຮງຮຽນ. ແມ່ຂອງ ມະນີສະຫວັນກວັກມືເອົາເອົາ ກ່ອນທີ່ເອົາຈະຫລົບທັນທ່າທາງຂອງ ເພິ່ນຊົງອິດອ່ອນໂຮຍແຮງແຕ່ແສງຕາທີ່ສັກແນນມາເບິ່ງເອົານັ້ນ ອ່ອນໂຍນບອກຄວາມເມດຕາ ອາລີບໍ່ຫນ້ອຍ

- ຜັນ ! ແມ່ມີແນວຢາກລົມນໍາ !

" ລູກຮູ້ວ່າແມ່ບໍ່ສະບາຍແລະພີ່ນ້ອງຜູ້ມີເງື່ອນໄຂດີຊິໃຫ້ ມະນີພາແມ່ໄປປົວ " ຜັນຄິດຢາກຕອບອອກໄປຕາມໃຈແຕ່ມະນີ ທີ່ຟ້າວເອົານ້ຳຫວານເຜືອກມາສູ່ກິນເຮັດຕາຂຶງໃສ່ກ່ອນ.

-ພວກລູກຕົກລົງກັບໄດ້ແລ້ວລະ ! ເນາະຜັນ. ນີພາແມ່ໄປສົ່ງເອື້ອຍຕຸ່ມແລ້ວນີກະມາຮຽນຕໍ່ຕາມແຜນເກົ່າ.ເອົາ!ກິນແມ້ ນ້ຳຫວານຈັກຫນ້ອຍນ້ຳກ້ອນເປື່ອຍ ຊິບໍ່ຫວານໄດ໋! ແມ່ຂອງມະນີສະຫວັນຫົວຂວັນຄ່ອຍໆ ແລະ ເວົ້າເອົາໃຈຜັນວ່າ:

- ປ່ອຍໃຫ້ຜັນເວົ້າເອງແດ່ຕີລູກ ! ທາງນີ້ກະບໍ່ມີໃຜຄືລູກເຫັນຜົງພັນກໍເພິ່ງບໍ່ໄດ້ເທື່ອ, ຈັ່ງຊັ້ນຄິດວ່າລູກຄືຊິເອົ້າໃຈດີ ! ຜັນກິນນ້ຳຫວານຫມົດຖ້ວຍບໍ່ຮູ້ເມື່ອເພາະໃຈລອຍ ຄິດລ່ວງໄປຫາ ຝ ເດືອນທາງຫນ້າ ມື້ທີ່ມະນີສະຫວັນ ຊິຄືນມາ ! ເອົາບໍ່ຮູ້ເມື່ອຮອດວ່າແມ່ຂອງນາງລຸກໄປແຕ່ຍາມໃດ.

- ເອົາອີກບໍ່ ຍັງມີຢູ່ ! ສຽງຖາມ ແບບຢາກເອົາໃຈຂອງນາງເຮັດໃຫ້ເອົາຊວາດຕື່ນ.

- ບໍ່ ອິ່ມແລ້ວ. ມະນີ ເອີ້ ກະວ່າຊິໄປມື້ໃດລະນີ້ !

- ເວົ້າໂພດຫລາຍມື້ໃດໆ ໃຜຊິທັນຮູ້ຫາກໍຕົກລົງກັບຍັງຊິ

ເຮັດຫນັງສືຢູ່ຢ້ານເດືອນຫນຶ່ງຈັກຊິທັນຊ້າບໍ. ຫນັງສືອໍຣຽນຊັ້ນສູງເຈົ້າຣຽນຮ້ອຍແລ້ວຫວະ ? ມະນີສະຫວັນເປັນຜູ້ຊອນລົມຈ້ອຍໆ

- ຍັງ ! ຂ້ອຍຊິບໍ່ຣຽນຊ້າດອກ.

- ອ້າວ ! ນາງເປັນຝ່າຍແປກໃຈ. ບໍ່ຣຽນຕໍ່ແລ້ວຊິເຮັດຫຍັງ? ຊິໄປສອບປະຖົມຊັ້ນຫວະ ?

- ເປັນຫຍັງ ? ສອບປະຖົມບໍ່ສົມເຈົ້າຊັ້ນຫວະ ?

- ໂປ້ວ ! ຜັນ.ມະນີສະຫວັນເປັນຜູ້ຮ້ອງອີກ. ຂ້ອຍຄືບໍ່ທັນ ຄິດເຖິງເລື່ອງ ສົມບໍ່ສົມບ່າ. ເຈົ້າຫາກວ່າເອງຕວ້າເລື່ອງຣຽນຕໍ່ຫັ້ນນະ, ປຽນໃຈກໍ່ບໍ່ບອກກັນ.

- ເຈົ້າຍັງປ່ຽນ ! ຜັນຕອບສັ້ນກຸດດຸດ.

- ປ່ຽນຫຍັງ ? ຂ້ອຍປ່ຽນບ່ອນໃດ ? ນາງຈີ້ຈໍ້ຄືນ.

- ປ່ຽນຊິໄປປະເທດນອກ ປະເທດນາ ນັ້ນແລ້ວ.

- ເອົ້າ ! ນີ້ມັນແມ່ນເລື່ອງໃຫມ່ ມີເຫດມີຜົນ ແມ່ຂ້ອຍເຈັບ... ພີ່ນ້ອງ ເອື້ອຍ ອ້າຍ ຂ້ອຍຢູ່ພຸ້ນຢາກປົວເພິ່ນ

- ປົວຢູ່ນີ້ກະໄດ້ ບໍ່ຈຳເປັນຊິໄປປົວຕ່າງປະເທດ.

- ລົມເຫັນແກ່ໂຕ ! ຜັນ ເຈົ້າບໍ່ຢາກໃຫ້ແມ່ດີຊັ້ນຫວະ ? ຜັນຈື່ວ່າສຽງມະນີສະຫວັນ ເປັນແສັນໆ ອາດໃດອາດຫນຶ່ງ.

- ຂ້ອຍບໍ່ເຊື່ອວ່າເຈົ້າຊິໄປ ៥-៦ ເດືອນໄປຮອດພຸ້ນແລ້ວ ຢ້ານແຕ່ຊິມີແຟນໃຫມ່ ! ກະແສຄວາມໃນໃຈ ແປປ່ຽນເປັນກະແສສຽງ, ຜົນສະທ້ອນມັນກໍຕ້ອງຕ່າງກັນ. ຜັນຄິດວ່າຕົນໄດ້ສະແດງຄວາມຈິງໃຈທີ່ງຫວງນາງອອກຢາງເປີດແປນມະນີສະຫວັນຄົງໃຈອ່ອນ ເຫັນໃຈ ໃນຄວາມຮັກຂອງເອົາ ແຕ່ :

- ໂອ້ຍ ນີ້ແປວ່າ ເຈົ້າບໍ່ໄວ້ເນື້ອເຊື່ອໃຈ ຂ້ອຍເລີຍຫວະ ? ຕາຍແລ້ວ ຜັນເຫລືອແຮງຮູ້ຈັກກັນມາ ៣-៤ ປີ ! ຈື່ໃສ່ຫົວອີ້ເລື່ອຍຂອງເຈົ້າໄວ້ເດີ້ວ່າຖ້າຂ້ອຍຊິມີຊູ້ ມີແຟນໃຫມ່ຂ້ອຍບໍ່ຄອງໄປຮອດປະເທດ

ໃດດອກ...ເອົາຢູ່ເມືອງສະຫວັນນະເຂດນີ້ກໍ່ເຫລືອກິນແລ້ວ ! ເຊົາໆ... ຖ້າເຈົ້າຄິດແບບນີ້ຢູ່ເຊົາເວົ້າກັນ ! ຄຳເວົ້າສຸດທ້າຍຂອງນາງ ປາກົດວ່າດັງກ້ອງໃນຮູຫູຈິນອື້ ຄືກັບວ່າມັນຫາກໍ່ມີດວງຮບໄປດຽວນີ້ ທັງໆທີ່ວ່າແຕ່ມື້ນັ້ນຮອດມື້ນີ້ມັນຫ່າງກັນຮອດພັນກວ່າມື້ແລ້ວ. ເອົາບໍ່ຍອມຢູ່ສະຫວັນນະເຂດຮອດມື້ນາງກັບແມ່ອອກເດີນທາງມາວຽງຈັນ ເພື່ອໄປຕໍ່ທີ່ປະເທດຝະລັ່ງ. ຜັນໄປອໍສັບຊ້ອນເປັນຄູປະຖົມ ແລະ ເລືອກເອົາບ້ານຫ່າງໄກ ສອກຫລີກ ໃນແຂວງໜຶ່ງຂອງບໍລິຄຳໄຊ ຄືບ້ານທາດໂພ ເຊິ່ງຢູ່ໄກກັບສະຫວັນນະເຂດຫລາຍຮ້ອຍກິໂລແມັດແລະຫ່າງກັບປະເທດທີ່ນາງຢູ່ຫລາຍສິບພັນກິໂລແມັດ. ຜັນເກືອບລືມນາງໄປແລ້ວຖ້າແມ່ຮັກບໍ່ສະແດງວ່າ " ພໍໃຈນາງແກ້ວຂອງ ຄະນະຜູ້ແທນ" ທີ່ຈະມາຢ້ຽມຢາມ ໃນມື້ອື່ນເຊົ້ານີ້. ເອົາໄດ້ບຸກບືນຕໍ່ສູ້ພາປະຊາຊົນໃນບ້ານ ຂຶ້ນແຜນການປຸກໂຮງຮຽນເອງ ແທນລໍຖ້າການຊ່ອຍເຫລືອຈາກແຂວງ ຫລື ອົງການຕ່າງປະເທດ. ປີນີ້ເອົາໄດ້ໃບອະນຸມັດຕັດໄມ້ຈຳນວນ ໕໐ ແມັດກ້ອນໃນປ່າຈາກເມືອງແລ້ວ ຍັງແຕ່ຈະເອົາແຮງກັນໄປ ຕັດປ້າລາກແກ່ນມາໄວ້ ເລື່ອຍເຮັດເສົາ ແລະ ໄມ້ແປ້ນ ຜັນວາງແຜນວ່າມື້ໃດໂຮງຮຽນປະຖົມຫລັງໃຫມ່ປຸກແລ້ວ ເອົາຈະຂໍກັບຄືນໄປຮຽນຕໍ່ຊັ້ນສູງທີ່ມະຫາວິທະຍາໄລຊອກຫາຄວາມຮູ້ໃສ່ຫົວຕື່ມ.ຄວາມຄິດຝັນຂອງຜັນຢຸດກຶກລົງເມື່ອຮູ້ສຶກວ່າສາຍເບັດຊິດເຫນັງຍຸດໆ. ຫອຍເບັດສີຂາວຫລຸບວັບໆ. ດ້ວຍສັນຊາດຕະຍານຂອງນັກຊິດເບັດຜູ້ນຶ່ງເອົາຝ້າວຊິດດວງເບັດຂຶ້ນ ປາຄໍ່ໂຕຫໍ່ດ້ານພ້າຫ້ອຍຕ່ອງແຕ່ງຢູ່ປາຍເບັດ. ຜັນຫົວຍ້ານອາລົມສັບສົນໃນໃຈຄືວ່າ ສະຫລາຍຫາຍວັບໄປກັບບາດ. " ຕົ້ມສົ້ມໃສ່ໃບຂາມອ່ອນພໍດີນົວເນາະມຶງ!" ເອົາເວົ້າກັບປາໂຊກຮ້າຍ ຂະນະທີ່ປົດມັນອອກຈາກດວງເບັດ. ທັນໃດເອົາກໍ່ຮູ້ສຶກວ່າ ທ້ອງຮ້ອງຈ້ອກໆແລ້ວ. ແຫງນຫນ້າຂຶ້ນເບິ່ງຕາເວັນກໍປາກົດວ່າມັນລັບປາຍຕານ ລົງບັງກ້ານລຸ່ມແລ້ວ ສະແດງວ່າ

ກາຍທ່ຽງພໍແຮງ ອາດຈະເປັນເວລາບ່າຍໂມງ ຫລື ສອງໂມງແລ້ວ. ສຳພໍທ້ອງມັນຮ້ອງ ! ຜັນຕົບທ້ອງຕົນເອງ ແລະ ຟ້າວລຸກຂຶ້ນ " ກິນເຂົ້າແລ້ວ ຈຶ່ງໄປສອນຫນັງສື ". ເຂົາບອກຕົນເອງ ຄືຈະໃຫ້ຄຳຫມັ້ນສັນຍາ ກັບພວກເດັກນ້ອຍເຊິ່ງອາດຈະໄປຖ້າອ້າຍຄູແລ້ວ ຜັນຍ່າງກາຍໂຮງຮຽນອີກເພື່ອໃຫ້ແນ່ໃຈວ່າທັນເດັກນ້ອຍ ມາໂຮງຮຽນບໍ່ແຕ່ບໍລິເວນເດີ່ນໂຮງຮຽນມິດສະຫງັດປາດສະຈາກຜູ້ຄົນ. ບ່າວຄູຍ່າງເມືອເຮືອນ ທັງຜິວປາກ ດ້ວຍອາລົມເບີກບານ.

ມີເດັກນ້ອຍຫລິ້ນຢູ່ກ້ອງໃຕ້ລ່າງເຮືອນປ້າພອນ ເປັນ ສິບໆ ນັບວ່າເປັນແນວແປກປະຫລາດຢ່າງຫນຶ່ງ.

- ຄະນະຜູ້ແທນມາແລ້ວຄະນະຜູ້ແທນມາແລ້ວ ! ເຮືອຈັກຕັ້ງ ໔ ລຳ ! ກິນາບເຫັນອ້າຍຄູຜັນກ່ອນຫມູ່ຟ້າວແລ່ນມາບອກທັງເດ່ມືມາຮັບຮວາດປາ. ຜັນຢຸດຢ່າງ.

- ໃສວ່າມື້ອື່ນເຊົ້າພຸ້ນຈັ່ງຊິມາເປັນສັງຈຶ່ງມາແລ້ວ ບໍ່ະຜູ້ແທນຄະນະນີ້ຄືວ່າບໍ່ນັບຖືໂມງຖືຍາມແທ້ ! ຜັນເວົ້າອຸ່ມໆ ຜູດຽວ ດ້ວຍຄວາມບໍ່ພໍໃຈແລະ ຄວາມຮູ້ສຶກຮ້ອນຮຸ່ມສຸມໃນໃຈຢ່າງຫນຶ່ງລຸກວື້ຂຶ້ນ. ຜັນກ້າວຂາຍາວຂຶ້ນຂັ້ນໄດເຮືອນແມ່ຮັກໂດຍບໍ່ຖ້າໃຫ້ໃຜບອກຊ້ຳ.

ພົບເພື່ອຈາກ

ປະຊາຊົນໄທບ້ານ ທັງເຖົ້າແກ່ ຍິງຊາຍ ຄະນະສະຫະກອນ ເກືອບ ໔໐ ຄົນ ນັ່ງຢູ່ເທິງສາດທີ່ປູລາມເກືອບທົ່ວເຮືອນ ທັງໝົດ ຫັນໜ້າເຂົ້າໃສ່ຝາເຮືອນດ້ານນອກ ບ່ອນມີຄົນ ອີກຈຳນວນນຶ່ງ ນັ່ງຫັນໜ້າອອກມາ ຕໍ່ໜ້າເຂົາເຈົ້າມີໝາກພ້າວອ່ອນ ປອກຈອຍ ແລະ ຈອກແກ້ວ. ຜົນອາດແສງຕານັບຈຳນວນຢູ່ໃນໃຈ ນຶ່ງ ສອງ ສາມ ສີ່...ຍິງສາມ ຊາຍນຶ່ງ ບໍ່ເຫັນມີຄົນຕ່າງປະເທດຈັກຄົນ ແມ່ຖືກຕົ້ມຕາມເຄີຍ !

- ແນະອ້າຍຄູ ເຮົາມາແລ້ວ... ມາ ມາ ເຂົ້າມານັ່ງໃນພີ້ ! ເຖົ້າແກ່ຄົນນຶ່ງຫ້ອງ ທັງຟ້າວຫຍັບບ່ອນນັ່ງໃຫ້ຜົນ ເຮັດໃຫ້ເຂົາຕ້ອງຫຍັບເຂົ້າໃກ້ພວກຜູ້ແທນ. ຄວັນໄຟລອຍກົ້ວ ອອກມາແຕ່ລີໄຟ ແລະ ຄວັນຈາກກອກ ພວກຜູ້ເຖົ້າ ເຮັດໃຫ້ບັນຍາກາດໃນເຊຽເຮືອນທີ່ແອ້ມຕັບ ປາສະຈາກປ່ອງຢ້ຽມແບບເຮືອນບູຮານນັ້ນ ມືດອຶມຄຶມ. ແກ່ນຕາຜູ້ເຂົ້າມາໃໝ່ ຕ້ອງໃຊ້ເວລາໜ້ອຍນຶ່ງ ເພື່ອໃຫ້ລຶ້ງກັບແສງສະຫວ່າງພາຍໃນ ກ່ອນຈະຈຳແນກໜ້າຕາຜູ້ຄົນໄດ້.

ປ້າພອນ ຍ່າງມາແຕ່ລີໄຟ ເມື່ອໄດ້ຍິນວ່າ ລູກຮັກຂອງລາວມາແລ້ວ. ລາວມານັ່ງລົງອ້າງທິດຕັບ ຫົວໜ້າສະຫະກອນ ທີ່ພວມລົມກັບພວກຜູ້ແທນ.

- ນາງແກ້ວ ! ນາງແກ້ວ ! ນີ້ເດ້ລູກຊາຍແມ່ ຜູ້ເປັນຄູສອນຢູ່ຫນີ້ນ່າ. ປ້າພອນເວົ້າຕັດຄວາມລົມພວກເພິ່ນ. ນາງຜູ້ຖືກເອີ້ນເຊື່ອງພອມຟັງ ທີດຕັນຢ່າງຕັ້ງໃຈ ທັງຈິດເອົາຕົວເລກ ຂໍ້ມູນລົງໃສ່ປຶ້ມນ້ອຍໆ ງວາກມາຕາມສຽງເອີ້ນ.

- ເຈົ້າສຳບາຍດີ ອາວ ! ສຽງຂອງນາງແກ້ວຂາດຈຸດປຸດ ສ່ວນຜັນກໍປາກປູ້ຄືກັນ. "ມະນີແທ້ໆ...ມະນີສະຫວັນ ອະດີດຄົນຮັກຫວ່າງສາມປີກ່ອນແທ້ໆ. ນາງພອມນັ່ງຢູ່ຕໍ່ຫນ້າເອົາຫ່າມກາງສາຍຕາຫລາຍສິບຄູ່..."

- ຜັນ...ເຈົ້າເອງດອກຫວະ ? ມະນີສະຫວັນ ຫລືນາງແກ້ວຂອງປ້າພອນເວົ້າຕໍ່ ນ້ຳສຽງແຈ່ມໃສ ບົ່ງບອກວ່າ ດີໃຈບໍ່ຫນ້ອຍ.

- ອ້າວ ພວກລູກຮູ້ຈັກກັນຫວະ ? ປ້າພອນ ເຮັດຫນ້າເປີເຕື່ຈະວ່າດີໃຈກໍບໍ່ແມ່ນ ເສຽໃຈກໍບໍ່ຖືກ.

- ພວກລູກ ເຄີຍຮຽນຢູ່ໂຮງຮຽນສ້າງຄູນຳກັນ ! ບໍ່ເຫັນກັນສາມສີ່ປີແລ້ວເດ້ ! ມະນີສະຫວັນ ເວົ້າຕໍ່ຈ້ອຍໆ ເມື່ອຄວາມຕື່ນເຕັ້ນຫລຸດຜ່ອນລົງ ຕໍ່ຈາກນັ້ນ ນາງກໍຫັນມາລົມຈ້ອຍໆກັບຜູ້ເຖົ້າຜູ້ແກ່ ຈົດລາຍງານຂອງພວກສະຫະກອນ ຜັນບໍ່ຈື່ວ່າຜູ້ໃດເວົ້າອັນໃດ ເອົາທັງຫົວເຂົ້າທັງດີໃຈ ຕື່ນເຕັ້ນ ແລະບໍ່ຮູ້ສຶກຢາກຮ້າຍເລີຍ ເມື່ອແມ່ໃຫ້ພວກລູກຫລານ ຍໍພາເຂົ້າອອກມາສູ່ແຂກກິນ. ຜູ້ຊາຍທີ່ເບິ່ງຊື່ງ ເປັນຫົວຫນ້າຄະນະພາມາພະຍາຍາມ ປະຕິເສດພາເຂົ້າ ໂດຍອ້າງວ່າ ພາກັນກິນມາແລ້ວ ແລະທັງບອກວ່າ ພຽງແຕ່ມາຢ້ຽມຢາມ ແບບກັນເອງ ຈະບໍ່ຢູ່ນອນຄ້າງແຮມນຳ.

- ມັນຢູ່ນອກແຜນນ່າ ! ນາງແກ້ວ ບໍ່ຮູ້ວ່າ ພວກເຮົາມີແຜນການຊິໄປບ້ານດອນ, ຫົວຫນ້າຄົນຕ່າງປະເທດ ລາວບໍ່ຍອມ ເພາະຈະມີປະຊຸມກັບຄະນະປົກຄອງແຂວງມື້ອື່ນເຊົ້າ. ຂໍໂທດນຳ ພໍ່ແມ່

ພີ່ນ້ອງຫລາຍໆເດີ້ ! ຫລາຍຄືນຈິ່ມເສຽດາຍ ທີ່ ຄະນະຜູ້ແທນມີເວລາໜ້ອຍ ບໍ່ໄດ້ນອນຢາມ.

- ໄດ້ມາແລ້ວ ກໍຢູ່ຢາມຈັກຄືນກ່ອນລະບໍ້ ! ສຽງຜູ້ອາວຸໂສຄົນນຶ່ງຢ້ຳອຶ້ນຕື່ມ.

- ຢູ່ບໍ່ໄດ້ແທ້ໄດ ພໍ່, ພວກເຮົາມີເວລາຈຳກັດອີ່ຫລີ ເຮັດວຽກນຳຕ່າງປະເທດນີ້ ໂມງເປັນໂມງຍາມເປັນຍາມ ແລະ ອີກແນວນຶ່ງພວກເຮົາກໍ່ບໍ່ຕ້ອງການ ຣົບກວນພໍ່ແມ່ປະຊາຊົນ ເລື່ອງຢູ່ເລື່ອງກິນ. ກອງສີ ຜູ້ເປັນຫົວໜ້າຄະນະເວົ້າທັງຫົວຢ່າງໃຈເຢັນ.

- ບໍ່ຣົບກວນສັງບາຕາມຣິດຕາມຄອງຊື່ໆນີ້ແລ້ວ ແຂກໄປໄທນາກໍ່ຜູກອໍ່ຕໍ່ແຂນກັນລະບໍ້ ! ສຽງຜູ້ອາວຸໂສອີກຜູ້ນຶ່ງເວົ້າຕື່ມ. ຜົນໄດ້ຍິນສຽງມະນີສະຫວັນຕອບພວກຜູ້ເຖົ້າ ແບບກົງໄປກົງມາວ່າ :

- ລູງເອີ້ຍ ຍ້ອນໄທເຮົາ ເອົາແຕ່ຣິດແຕ່ຄອງເປັນໃຫຍ່ ນີ້ແລ້ວຈຶ່ງຫລ້າຫລັງເພິ່ນຮອດ ໔໐໐-໕໐໐ ປີ ອັນນີ້ ເວົ້າຕາມຂັ້ນເຫິງເພິ່ນຕີລາຄາດອກເນີ ! ຄວາມເວົ້າລະວ່າ ຢາກກ້າວໜ້າທັນສະໄໝເພິ່ນຂີ່ຍົນ ກໍຢາກຂີ່ ເພິ່ນໃຊ້ລູກສອນໄຟແລ້ວໄດ໋ ບາດນີ້ໄທເຮົາຊ້ຳຊິຜູກແຂນ ໃຫ້ແຂກໄປໄທນາ ຢູ່ທຸກອາທິດ ປີນຶ່ງໆ ໂລດເຮັດບຸນກັນຢູ່ ໓-໔ເດືອນ ແລ້ວເຮັດແນວໃດຈັ່ງໄປທັນເພິ່ນ !

ຜົນເອງກໍຂະນ່າ ນຳຄຳເວົ້າຂອງມະນີສະຫວັນ ເອົາບໍ່ຄຶດຈັກໜ້ອຍວ່າ ນາງຊິເວົ້າມາແນວນີ້ ພວກຜູ້ເຖົ້າພາກັນມິດຈົ່ງງັ່ງໄປທິດຕົນເປັນຜູ້ກອບກູ້ສະພາບໄວ້ ໂດຍຫົວຣະງອຶ້ນ.

- ໂອ້ຍກະຈັ່ງແມ່ນເວົ້າຖືກເດ້ ນາງເອີ້ຍ, ຖືກແລ້ວຖືກແລ້ວອາວວ່າຖືກ ໃຜຊິວ່າແນວໃດກະຢ່າເນາະຜົນ ເຈົ້າວ່າບໍ່ ? ຜົນບໍ່ທັນຕອບຊ້ຳມີຜູ້ແກ້ຕໍ່ໃຫ້ວ່າ :

- ກໍ່ແມ່ນຄວາມເພິ່ນແລ້ວລະ ບາງບ້ານເຮັດແຕ່ບຸນ ປີ້ງໄກ່ຕົ້ມເຫລົ້າຂາຍ ແຕ່ "ໄທຫາດໂພ" ເຮົານີ້ກະບໍ່ປານໃດດອກເນາະ

ຣິງ... ປີນຶ່ງກະສອງສາມເທື່ອ ປານນັ້ນແລ້ວ !

- ຫລານຂໍໂທດຖ້າເວົ້າຜິດ ແຕ່ບໍ່ຢາກໃຫ້ພໍ່ແມ່ພີ່ນ້ອງເຂົ້າໃຈຜິດຄຶດວ່າພວກເຮົາບໍ່ຢາກຢູ່ປັຣມປານ ຮັບບາສີຕາມຮີດຕາມຄອງ. ອີກແນວນຶ່ງພວກເຮົາກໍ່ບໍ່ສາມາດໃຫ້ຄວາມຫມັ້ນສັນຍາ ນຳພໍ່ແມ່ພີ່ນ້ອງໄດ້ວ່າ ໄທເຮົາຈະຍາດແຍ່ງ ເອົາການຊ່ອຍເຫລືອຫຍັງມາໃຫ້. ພໍແຕ່ມາປັຣມປານ ເບິ່ງສະພາບຊື່ໆ.

ມະນີສະຫວັນ ເວົ້າ ສຽງອ່ອນລົງ ເມື່ອສັງເກດເຫັນຂັນຍາກາດອາວເຄັ່ງຂຶມ. ໄດ້ຜົນ ຫລາຍຄົນສິ້ນໃຈ ແລະ ເຂົ້າໃຈຄວາມເວົ້າຊື່ໆຂອງນາງ.

- ຊັ້ນຊິເຮັດແນວໃດເນາະ ກໍຢາກໃຫ້ເຫັນສະພາບໂຕຈິງ ນຳກັນ ຕັ້ນແລ້ວ ຈັ່ງວ່າຢາກໃຫ້ນອນຄ້າງຄືນເບິ່ງ ປ້າພອນ ຟ້າວອະລຸ້ມອະລ່ວຍນຳ ເມື່ອເຫັນສີຫນ້າອາວອຶງບຶ້ງຂອງຜົນ.

- ພວກລູກຈະຍ່າງເລາະອ້ອມບ້ານ ເບິ່ງໂຮງຮຽນ,ວັດນ້ຳສ້າງໃຫ້ທົ່ວໆ ແລະ ຈະຂໍຕົວເລກບາງອັນນຳອາວປະທານ ເພື່ອຂຽນລາຍງານໃຫ້ຖືກຕ້ອງ. ເຮັດແນວນີ້ໄດ້ບໍ່ ? ກອງສີຫົວຫນ້າຄະນະສະເຫນີດ້ວຍທ່າທີສຸພາບຄືຜູ້ໃຫຍ່ ທັງໆທີ່ວ່າ ເບິ່ງແລ້ວ ເຂົາອາດຈະຮຸ່ນດຽວກັບຜົນ.

- ໄດ້ແທ້ໄດ້ວ່າລະບໍ້... ເອົ້າ ເຊີນໆ ກິນເຂົ້າໃຫ້ອິ່ມກ່ອນແລ້ວຈຶ່ງໄປ, ເຊີນກິນນ້ຳຫມາກພ້າວຕື່ມ ! ເອົາແມ້ ນາງແກ້ວ ໃສ່ວ່າມັກນ້ຳຫມາກພ້າວຫລາຍ ກິນຫມົດບໍ່ສອງຫນ່ວຍນີ້ ! ປ້າພອນເວົ້າຢອກໃຍໃຫ້ບັນຍາກາດດີຂຶ້ນ.

- ຂໍຍອມແລ້ວ ປ້າພອນ, ຫມາກພ້າວບ້ານນີ້ ທັງຫນ່ວຍໃຫຍ່ທັງຫວານ ທັງຫອມ ຫນ່ວຍດຽວກໍກິນບໍ່ຫມົດແລ້ວ ! ມະນີສະຫວັນຕອບສຽງອໍເຊາະຄືນ ເຮັດໃຫ້ບ່າວຄູຜົນ ລັບແຂ້ວ "ຊັງຄົນກະແດະ !" ແຕ່ບໍ່ທັນວ່າຊິລຸກໄປໃສ ປ້າພອນ ກໍອອກຄຳສັ່ງໃຫມ່ວ່າ :

- ຜັນ ນະ ລູກໄປບອກເຂົາເອົາຫມາກພ້າວລົງອີກແຊງບຶ່ງແດ່ ເອົາໃສ່ເຮືອໄວ້ເລີຍ ໃຫ້ພວກເພິ່ນເອົາເມືອກິນນຳທາງ

- ໃຫ້ເພິ່ນພາໄປເບິ່ງໂຮງຮຽນກ່ອນ ປ້າພອນ. ມະນີສະຫວັນ ຟ້າວທ້ວງ ເມື່ອເຫັນວ່າ ຜັນຈະລຸກໄປປະຕິບັດຄຳສັ່ງ.

- ຕ້ອງຟ້າວແດ່ເດີ້ແກ້ວ...ຊິເມືອບໍ່ທັນລົດໄດ໋ ! ກອງສີຮ້ອງບໍາ ເມື່ອມະນີສະຫວັນກັບນາງແສງອໍາໄພ, ຜັນ ແລະໄທບ້ານອີກສອງຄົນ ຈະລົງອັ້ນໄດໄປຍ່າງເລາະຊົມທົ່ວໆບ້ານ.

"ຫາດໂພຕັ້ງຢູ່ເທິງຝັ່ງນ້ຳຊັນ ຢັ່ງຢາຍ ຍາວເກືອບສອງກິໂລແມັດ ເປັນບ້ານເກົ່າ ອາຍຸຮ້ອຍກວ່າປີ, ໄທບ້ານສ່ວນໃຫຍ່ ອົບພະຍົບມາແຕ່ ວຽງຈັນ ແຕ່ເປັງແຕກເສິກເຈົ້າອະນຸ. ເນື້ອທີ່ນາ ບໍ່ພຽງພໍກັບຈໍານວນ ປະຊາຊົນ ທີ່ຫລາຍຂຶ້ນນໍາທຸກມື້ ແຕ່ອາໄສດິນງາມຕາມສອງຝັ່ງ ນ້ຳຊັນ ປູກຢາ ແລະ ສາລີ ຊາວບ້ານຈຶ່ງພໍມີລາຍໄດ້ຕື່ມ ພໍຊື້ເຂົ້າ ມາກິນຕື່ມ". ມະນີສະຫວັນ ຟັງຮອງປະທານບ້ານ ເລົ່າປະຫວັດ ແລະ ບັນຫາຕົ້ນຕໍ ທີ່ຊາວບ້ານພວມປະສົບຢູ່ດ້ວຍຄວາມສົນໃຈ. ສາວນາງ ຮອດບໍ່ເສືອດແສງຕານາເບິ່ງອ້າຍຄູ ຊູ້ເກົ່າ ເຊິ່ງບັດນີ້ ເປັນຮ້ອນໆ ຫນາວໆ ຢາກຮູ້ຂ່າວ ຮູ້ຄາວ ຢາກສ້ຖາມສາລະພັດ ຕົ້ນຕໍແມ່ນ ຢາກຮູ້ວ່າ ນາງກັບຄືນມາໄດ້ຈັກປີ ເຮັດແນວໃດຈັ່ງວ່າມາເຮັດວຽກ ແປກປະຫລາດ ອັນນີ້ແລະ ຜູ້ມານໍາກັນ ເຊິ່ງເບິ່ງຄືວ່າ "ເອົາໃຈ" ກັນດີສົມຄວນນັ້ນເດ້ ມີຫຍັງກັນບໍ່. ຜັນບໍ່ອາດຢັ່ງຮູ້ ຈິດໃຈ ຂອງແມ່ຍິງໄດ້ຄືເກົ່າ ! ແລະ ເປັນຫຍັງ ພວກຫມູ່ ຈຶ່ງເອີ້ນນາງວ່າ "ແກ້ວ" ? ຄໍາຖາມເຫລົ່ານີ້ ດັງກ້ອງຢູ່ໃນສະຫມອງຂອງຜັນ ຈົນເຂົາ ບໍ່ຮູ້ເມື່ອວ່າ ຕີນໄດ້ພາເຂົາຍ່າງລ່ວງ ມາຮອດເຂດໂຮງຮຽນຫລັງເຕ້ເຮ້ ຂອງເຂົາແຕ່ຫວ່າງໃດ ໃນຂະນະທີ່ຜູ້ອື່ນໆ ຍັງຢຸດຊົມໂຮງສີ ແລະ ສ່ອງເບິ່ງນ້ຳສ້າງກິນຂອງບ້ານ.

- ປີນີ້ໄດ້ຍິນວ່າ ທາງເມືອງຊິໃຫ້ແພດຊັ້ນກາງມາປະຈໍາບ້ານຄົນນຶ່ງ ! ສຽງຮອງປະທານບ້ານດັງວ່ອນໆມາເຂົ້າຫູ-ສ່ວນເລື່ອງໂຮງຮຽນນັ້ນ ຫລານຖາມລາຍລະອຽດນໍາຄູຜັນສາ ຄືໄດ້ຍິນວ່າມີຂ່າວດີແລ້ວ ! ມະນີສະຫວັນ ຍ່າງວັບໆ ນໍາມາທັນເຂົາຢູ່ກ້ອງຮົ່ມຫມາກທັນ ຕໍ່ຫນ້າເຮືອນຫລັງເຊື້ອ. ເວົ້າແລ້ວ ກໍເປັນຕາອາຍ. ບ້ານຫາດໂພ ເປັນບ້ານໃຫຍ່ ເກືອບຮ້ອຍຫລັງຄາເຮືອນ, ທັງເປັນບ້ານເກົ່າ ອາຍຸຮ້ອຍກວ່າປີ ແຕ່ບໍ່ມີຄວາມສາມາດປຸກໂຮງຮຽນ ໃຫ້ລູກຫລານໂຕເອງ ມີບ່ອນນັ່ງຮໍ່າຮຽນຢ່າງເຫມາະສົມ ! ຜັນບໍ່ຢາກຄິດວ່າ ສິ່ງທີ່ເຂົາຢາກເຮັດນີ້ເປັນເລື່ອງຍິ່ງໃຫຍ່ພິລຶກທຶກຫນາ ທຸກຄົນຄວນຖືວ່າ ມັນເປັນສິ່ງທໍາມະດາທີ່ສຸດ ! ປ່າໄມ້ ອ້ອມຮອບບ້ານຫາດໂພມີຢ່າງຫນາແຫນ້ນມີທັງໄມ້ເນື້ອແຂງ ແລະ ເນື້ອອ່ອນ. ຈໍານວນນຶ່ງຄວນປຽນສະພາບມາເປັນແປ້ນແອ້ມ ແລະ ໄມ້ມຸງຫລັງຄາເຮືອນຂະຫນາດ ມີ ຫ້ອງໃຫຍ່ ໃຫ້ເດັກນ້ອຍລູກຫລານຂອງພໍ່ແມ່ປະຊາຊົນໄດ້ຊຸ້ນແດດຊຸ້ນຝົນ ນັ່ງຮຽນຫນັງສື ຢ່າງສະດວກສະບາຍ.

" ຄວາມສາມັກຄີຢູ່ໃສ ຄວາມສໍາເລັດ ຢູ່ຫັ້ນ !" ຜັນຄິດຢາກເລົ່າເຖິງຄວາມສໍາເລັດ ຂັ້ນຕົ້ນອັນນີ້ໃຫ້ສາວ "ແກ້ວ" ຟັງ ເພື່ອເບິ່ງວ່າ "ສາວແກ້ວ" ຊິມີປັນຍາ ຫາຫຍັງມາຊ່ອຍແດ່ອາດຊິເປັນຊີມັງຈັກ ມີ-4 ໂຕນ ກັບຕະປູ ຫລື ໂຕ໊ະຕັ່ງ ອຸປະກອນການສິດສອນ ແນວອື່ນໆກໍ່ໄດ້.

- ຮ້ວາຍຜັນ ເຈົ້າຄືຍ່າງຫນີ ປານວ່າຂ້ອຍເຫມັນແທ້ ! ໃສເວົ້າສູ່ຟັງແດ່ດູ ວ່າປານໃດຊິປຸກໂຮງຮຽນໃຫມ່ ! ມະນີສະຫວັນເວົ້າຢອກທັນທີ ເມື່ອນໍາມາຮອດ. ສາຍລົມຍາມຄ້າຍແລງພັດຜົມບາງຫຍຸ້ງພີ ເຮັດໃຫ້ຍິງສາວພະຍາຍາມລູບເສີຍມັນຂຶ້ນ.

- ຫນັງສືອະນຸມັດຕັດໄມ້ ກໍໄດ້ຫມົດແລ້ວ ຍັງແຕ່ຊິລະດົມໄທບ້ານໄປຕັດກັບເລື່ອຍ ! ຜັນເວົ້າ ແສງຕາແນມໄປທາງປ່າ.

- ອັນອື່ນເດ້ ມີຄົບຫມົດແລ້ວຫວະ ? ພື້ນຊິປູໄມ້ຫວະ ?

- ຖ້າມີຊິມັງ ກໍຈະປູຊິມັງ... ປູໄມ້ບໍ່ໄຫວດອກ ! ຜັນເວົ້າ ບໍ່ແນມເບິ່ງຫນ້າຄູ່ສົນທະນາ ຈຶ່ງເຫັນວ່າ ມະນີສະຫວັນ ກົ້ມຫົວ ພໍ່ແຮງແລ້ວ.

- ມາຢູ່ນີ້ ເປັນອ້າຍບ່າວບ້ານນອກ ຈັກປີແລ້ວ ? ນາງຖາມ ປຽນເລື່ອງລົມ ຜັນງວາກມາທັນທີ.

- ພ້ອມກັບເຈົ້າໄປເປັນສາວເມືອງນອກນັ້ນລະ !

- ສ່ຳພໍ ບໍ່ເຫັນຕອບ ຈ.ມ.ໃຫ້ຫມູ່ຂຽນຫາຝ່າຍດຽວ ! ນາງເວົ້າ ອອກມາ ຄືຢາກຕໍ່ວ່າ ແຕ່ຜັນຜັດບໍ່ເຂົ້າໃຈແນວນັ້ນ.

- ແກ້ວ...ແກ້ວ ພໍເມືອແລ້ວລະ ຊິຄ່ຳທາງໂພດ ! ແສງອຳໄພ ຍ່າງນຳມາບອກຄ່ອຍໆ ນາງມີທ່າທີສິງໄສ ຕໍ່ກິລິຍາ ຂອງສອງຄົນ ທີ່ວ່າເປັນຫມູ່ເກົ່າກັນ.

-ອ້າຍຜັນ ເມືອສິ່ງພວກເຮົາແດ່ຕີ ຊິໄດ້ລົມກັນຕໍ່ !ແສງອຳໄພ ຕີທ່າສະຫນິດສະຫນົມໃສ່ ເຮັດໃຫ້ອ້າຍບ່າວຄູຜັນປະຕິເສດບໍ່ໄດ້ ພາກັນອວ່າຍບາດຕີນມານຳກັນ.

- ຍາມນີ້ຄ່ຳໄວ ທັງຫນາວອີກ... ຂີ່ເຮືອໄປນີ້ ຫນາວເກາະ ! ຜັນເວົ້າຄືຈົ່ມກັບໂຕເອງ ເມື່ອສັງເກດວ່າ ມະນີສະຫວັນ ບໍ່ມີເສື້ອຜ້າ ແນວອື່ນຕິດຖົງມາ ນອກຈາກເສື້ອແຂນຍາວທີ່ນຸ່ງຢູ່ໂຕດຽວ "ເຮີ ສາວເມືອງນອກບໍ່ຈັກ ສະພາບດິນຟ້າອາກາດຢູ່ບ້ານໂຕເອງ. ນາງ ຄົງບໍ່ຮູ້ວ່າ ອາກາດແຖວບ້ານປ່າຕີນພູແນວນີ້ ມັນເຢັນຈ້ອຍສ່ຳໃດ ໃນຕອນຄ້ອຍຄ່ຳ ທັງຈະນັ່ງເຮືອຈັກໄປອີກຕັ້ງຊົ່ວໂມງ ".

- ຖ້າກ່ອນບຶດຫນຶ່ງ ! ໄປຮອດທ່ານ້ຳ ມີຄົນມາລໍຖ້າສິ່ງ ຫລາຍແລ້ວ, ຜັນປ່ອຍໃຫ້ຄະນະຜູ້ແທນສັ່ງລາກັບໄທບ້ານ ສ່ວນຕົວເອງ ແລ່ນກັບຄືນມາເຮືອນ. ຄາວດຽວເຂົາກໍກັບມາລົງ ນຳເຮືອລຳດຽວ ກັບນາງ ທັງມີເສື້ອແລບ ສີນ້ຳອ້ອຍໄຫມ້ ກ້ານດອກເຫລືອງໆຕົວຫນຶ່ງ ພາດຫລັງມາພ້ອມ.

- ຊຸ້ນ ແລ້ວມີຫຍັງໆ ນາງລູກກໍຄິດນຳແດ່. ຢາກໃຫ້ໂຮງຮຽນ ແລ້ວຮຽບຮ້ອຍ ພໍໃຫ້ລູກຫລານໄດ້ນັ່ງຮຽນສະບາຍ...ປະທານບ້ານ ສັ່ງຄວາມສຸດທ້າຍ ໄປນຳຄະນະຜູ້ແທນພິເສດ.

- ຈ້າວ ໆ ແລ້ວພວກລູກຊິພະຍາຍາມດອກ ! ຂອບໃຈ ຫລາຍໆເດີ ! ກອງສີ ຮັບຄຳດ້ວຍສີຫນ້າຍິ້ມແຍ້ມ, ຄະນະຜູ້ແທນ ຍົກມືແກວ່ງອຳລາ ພ້ອມໆກັບສຽງເຮືອຈັກ ດັງກ້ອງຂຶ້ນກັບສຽງ ປາກເວົ້າ.

ເປັນເວລາເກືອບຫ້າໂມງແລ້ວ ເມື່ອເຮືອຈັກນ້ອຍ ສອງລຳ ແລ່ນທວນກະແສນ້ຳໃສ ໄຫລແຮງຂຶ້ນມາ, ດວງຕາເວັນ ສີແດງຊ້ຳ ພວມເຄື່ອນຕົວລົງລັບປາຍໄມ້ເທິງສັນພູ ພາໃຫ້ຂອບຟ້າ ເບື້ອງຕາເວັນ ຕົກບາງບ່ອນ ແດງຈ່ານ ກ່ານສະຫລັບກັບສີເຫຼືອງເຫຼືອງ ທາບໃສ່ໂງ່ນ ເຝືອສີຂາວ ເຊິ່ງລອຍຕ່ຳ ດາດກັບຈອມພູ ສາຍລົມຫນາວເຢັນ ພັດເປັນ ຮູດແຮງໆ ຕາມຮ່ອມພູ ຕົກລົງໃສ່ຫນ້ານ້ຳຮຸນແຮງ ຈົນຜູ້ນັ່ງໃນ ເຮືອນ້ອຍສະທ້ານຄີງ. ຜັນຍື່ນເສື້ອແລັນ ທີ່ພາດບ່າໃຫ້ ມະນີສະຫວັນ.

- ເອົ້າ ເສື້ອນີ້ນຸ່ງແມ້ ! ເຂົາເວົ້າແຮງໆ ຖ້ອນກັບສຽງຈັກ ທັງຄວັກແຂນ ມະນີສະຫວັນງວາກມາ ແລະ ຮັບເອົາເສື້ອ ຈາກມືເຂົາ, ແສງຕາຂອງຄົນທັງສອງປະສານກັນ, ຕ່າງຄົນ ພະຍາຍາມ ອ່ານ ແສງຕາກັນ ແລະ ກັນ ແຕ່ຟ້າດິນບໍ່ເປັນໃຈເລີຍ ຈະເວົ້າຫຍັງ ກໍບໍ່ໄດ້ຍິນ... ເວລາຈາກກໍຊ້ຳຈ້ເອົ້າມາ..

- ອຸ້ຍຫນາວ ! ແສງອຳໄພ ຮ້ອງຂຶ້ນ ເມື່ອຟອງນ້ຳສາດຂຶ້ນໃສ່ ນາງງວາກມາລື່ອຕາໃສ່ຫມູ່ ເພາະເຫັນແລ້ວວ່າຝ່າຍນີ້ມີເສື້ອ ກັບ ຫນາວແລັນຢ່າງດີ ຈາກອີ່ຕານາຍຄູບ້ານບອກທ່າທາງເຫງີກຫງາກ ຫາກຫນ້າຕາຊ້ຳເຈົ້າຊູ້ ໂດຍສະເພາະຕາຫັ້ນ ປານວ່າຢອດນ້ຳມັນ ໃສ່ໄວ້ ຜູ້ນີ້ !

- ພູແຖວນີ້ງາມເນາະອ້າຍຜັນ ! ເສຽດາຍບໍ່ໄດ້ຖືກ້ອງຖ່າຍຮູບ

ມານຳ... ເພິ່ນເອີ້ນວ່າ ພູຫຍັງລະຫນີ້ ! ແສງອຳໄພຮ້ອງຖາມ ເມື່ອເຫັນທ່າທາງເກີເອີນ ຂອງຄົນທັງສອງ.

- ບໍ່ແມ່ນພູ ເຂົາເອີ້ນຜາ ບ່ອນຫນີ້ ໄທບ້ານ ເອີ້ນວ່າວັງຍາ ພໍ່ຜາລ້ານ ! ຜັນຮ້ອງຕອບ ສຽງຂຶງຂັງຟັງຫນ້າຢ້ານ.

- ຍາພໍ່ຜາລ້ານແມ່ນໃຜ ? ແສງອຳໄພ ສືບໃຈຂຶ້ນມາ ແຫ້ໆ.

- ພະຍາເງືອກຮັກສານ້ຳຊັບ ! ຜັນອະທິບາຍ ເຮັດສຽງເຄັ່ງຂຶມກວ່າເກົ່າ.

- ພະຍາເງືອກ ! ສອງສາວ ອຸທານເກືອບພ້ອມກັນ

- ຈຸ້...ຈຸ້...ໄປປ່າຢ່າວອນຫາເສືອ ໄປທາງເຮືອ ຢ່າວອນຫາເງືອກ ! ຜັນຍົກສຸພາສິດມາຫ້າມ. ຖາມແມ່ດີກວ່າເພິ່ນຮູ້ນິທານພື້ນເມືອງດີ.

- ນິທານພື້ນເມືອງຊັ້ນຫວະ ? ມະນີສະຫວັນ ງວາກມາຫາຖາມສຽງໃສ.

- ເຮີ້ ! ນິທານ. ເຈົ້າວ່າມີແທ້ຊັ້ນເບາະຊິ້ນ ? ບ່າວນາຍຄູເຮັດສີຫນ້າຫມິ່ນປະຫມາດ.

- ໂຢ້ວ ໃຜຊິຮູ້ ! ນາງເຮັດສຽງງອນໆ ແລ້ວງວາກຫນ້າຫນີທັນທີ ຜັນຄິດເສຽດາຍໂອກາດ... ເບິ່ງໄປແລ້ວ ມະນີສະຫວັນບໍ່ຕ່າງເກົ່າເລີຍ ກິລິຍາ ຄຳເວົ້າແບບກົງໄປກົງມາຂອງນາງ ເປັນທັງສະເຫນ ເປັນທັງຈຸດອ່ອນ. ເບິ່ງແຕ່ນາງເວົ້າກັບຜູ້ເຖົ້າຜູ້ແກ່ຢູ່ບ້ານຫວ່າງນີ່ງນີ້ເທາະ ຜູ້ຢາກຄອຽດກໍມີແຕ່ແມ່ຮັກເຂົາຊ້ຳຜິດຖືກໃຈເອົາແທ້ເອົາວ່າ. ນີ້ບໍ່ເພິ່ນວ່າ ຊາຕາຕ້ອງກັນ ຄາດຊິ...ຣິ ! ຜັນບໍ່ຢາກຄິດຕໍ່ ເຂົາຮອດບໍ່ທັນຮູ້ຊ້ຳວ່າ ມະນີ ຍັງມີຫົວໃຈຄືເກົ່າບໍ່ ? ເປັນໄປບໍ່ໄດ້ດອກ ຈາກກັນຕັ້ງສາມປີ ບໍ່ໄດ້ຂ່າວໄດ້ຄາວ. ຈາກກັນແບບບໍ່ເຂົ້າໃຈຊ້ຳ ເລື່ອງຫຍັງຜູ້ສາວງາມຂະຫນາດນີ້ ຈັ່ງຊິມາຄອງຖ້າ ? ເຂົາເອງກໍຍັງລືມຄິດຮອດນາງຊ້ຳ ໃນບາງເວລາ ມາເຫັນຄືນມື້ນີ້

ຈຶ່ງຄຶດເສຽດາຍຂຶ້ນມາ ຄືໃຈຊິຂາດ. ຄຶດເຫັນຄາວຖືບລົດຮຽງກັບທຽວ ໄປໂຮງຮຽນ ທຸກເຊົ້າທຸກແລງຢູ່ສາມປີ, ຕອນຊ່ອຍກັນແກ້ບົດເຝິກຫັດ, ຊ່ອຍກັນຂຸດໜານຜັກໃສ່ເດີ່ນໂຮງຮຽນ ກັບ ຢູ່ເຮືອນຂອງນາງ ແລະ ຄຶດເຫັນຄວາມອ່ອນນິ່ມ ຂອງຝ່າມືນ້ອຍໆ ຂອງນາງ ທີ່ເຂົາມີໂອກາດ ໄດ້ບາຍເທື່ອດຽວ ຕອນຜູກແຂນບາສີຍາມປີໃໝ່.

- ອ້າຍຜັນລົງກ່ອນ ດຶງຫົວເຮືອເຂົ້າໃຫ້ແດ່ ! ສຽງນາຍທ້າຍ ເຮືອຮ້ອງໃສ່ ເຮັດໃຫ້ຜັນສະດຸ້ງໜົດແຮງ. ເຂົານົວຄຶດຫາຄວາມຫລັງ ຫລາຍ ຈົນບໍ່ຮູ້ສຶກໂຕວ່າ ເຮືອເຂົ້າຈອດທຽບທ່າແຕ່ຍາມໃດ. ຊາຍ ໜຸ່ມຟ້າວໂດດລົງນ້ຳ ຈົນຂາສົ້ງປຽກຮອດແອ່ງ. ນ້ຳເຢັນຈ້ອຍໆ ປານນີ້ ພວກແມ່ຍິງໃສ່ເກີບສຸບຜ້າ ລົງບໍ່ສະດວກປານໃດ ຍິ່ງຍັງຈະຕ້ອງ ເດີນທາງຕໍ່ໄປອີກ. ຜັນຍົກມືຫ້າມ ບໍ່ໃຫ້ລົງແລ້ວ ຕົນເອງຟ້າວຊອກຫາ ໄມ້ ມາກາດແຄມເຮືອເພື່ອໃຫ້ສອງນາງໄຕ່ລົງ.

- ຊົມເຊີຍອ້າຍຄູ ! ແສງອຳໄພ ເວົ້າທັງຫົວອິກໆເມື່ອເຫັນ ໜຸ່ມເຫງີກຫງາກ ຮູ້ຈັກຄຶດເຫັນໃຈຜູ້ອື່ນ.

ບໍ່ຮູ້ວ່າ ມະນີສະຫວັນພາໂລເຂົາຫລືໃດ ເມື່ອນາງຈະໄຕ່ລຳ ໄມ້ປ່ອງ ອອກຈາກເຮືອ ນາງກໍເດ່ມືມາໃຫ້ເຂົາຈັບ ເພື່ອຊ່ອຍເອົານາງ ຍ່າງລົງມາຢ່າງປອດໄພ.

- ຂອບໃຈ ! ນາງວ່າ ທັງປັດມືຄືວ່າມິດຫຍັງຕິດຢູ່ ເຮັດໃຫ້ຜັນ ໂມໂຫ ຄຶດຢາກບິບໄອ້ດົນໆ.

- ບາດແລ້ວ ຊິສົ່ງຂ່າວຫາ ອ້າຍຄູບດອກເລື່ອງເຄື່ອງຊ່ອຍ ໂຮງຮຽນຫັ້ນນະ ! ມີເວລາເຂົ້າໄປຫລິ້ນນຳແດ່ ຫ້ອງການຂ້ອຍຢູ່...″ ຜັນຈື່ຈຳຄຳເວົ້າ ປະໂຫຍກສຸດທ້າຍຂອງນາງ ໄດ້ໝົດທຸກຄວາມ. ກ່ອນຈະຈາກກັນໄປຖ້າມກາງຄວາມມືດມິດຂອງຍາມຄ້ອຍຄ່ຳ. ນາງ ຖອດເສື້ອແລັບຕົວແພງ ສົ່ງເຂົາຄືນ. ເສື້ອໂຕນີ້ ກໍແມ່ນນາງນັ້ນລະ ທີ່ຖັກໃຫ້ຕອນມັກກັນໃໝ່ໆ.

- ຜັນເອົາໄອ້ນຸ່ງສາ ພໍ່ເຕືອນໃຫ້ຄຶດຮອດເຈົ້າຂອງ ມັນແດ່ ! ຂອງເຂົາກໍເອົາມາຢູ່ໃນລົດພຸ້ນ ! ວ່າແລ້ວນາງກໍຂຶ້ນນັ່ງລົດ ອັດປະຕູປັ້ງໃສ່ໜ້າເຂົາໂລດ.

ສ່ຽງໄພຢູ່ວຽງຈັນ

ຜັນ ເລື່ອງຕັດໄມ້ຢູ່ໂຮງຮຽນ ຂອງນ້ອງເປັນໄປບໍ່ໄດ້ແລ້ວລະ ! ອ້າຍຄູນ ອິດສາເດີນທາງມາແຕ່ສໍານັກເມືອງ ມາບອກນ້ອງຮັກ ດ້ວຍສີຫນ້າເມື່ອຍອ່ອນຜິດຫວັງ ໃນສອງອາທິດຕໍ່ມາ ຫລັງຈາກການມາຢັ້ງຢາມ ຂອງພວກຜູ້ແທນຊຸດພິເສດ.

- ຮອ້າຍ ເປັນຫຍັງຈຶ່ງວ່າແນວນັ້ນ !

- ມີບໍລິສັດນຶ່ງ ເຂົາມາແຈ້ງທາງເມືອງວ່າ ປ່າເຂດນີ້ແຕ່ບ້ານເຮົາລົງໄປຮອດ ບ້ານຫນອງແຮ່ ເປັນເຂດສໍາປະທານຂອງເຂົາໃຜຊິຕັດຊິຖາງບໍ່ໄດ້ ມີແຕ່ບໍລິສັດເຂົາຜູ້ດຽວມີສິດ.

- ໂຢ້ວ...ຊັ້ນທາງເມືອງເຮົາບໍ່ຮູ້ຫວະ ວ່າມີບໍລິສັດຂໍສໍາປະທານ!

- ບໍ່ຮູ້... ທາງເຮົາບໍ່ມີໃຜຮູ້ ແຕ່ເຂົາເອົາຫນັງສືຮຽບຫນັງສືມາຢັ້ງຢືນ ລາຍເຊັນອັນເທິງ ໃຫ້ອະນຸຍາດຜູກຂາດສໍາປະທານ !

- ເປັນໄປບໍ່ໄດ້ຕີ້ເປັນແນວນີ້, ອ້າຍຄູນ ! ປ່າໄມ້ ໃນແຂວງເຮົາເມືອງເຮົາແທ້ໆ ແລ້ວພວກ້ອາຍບໍ່ມີສິດຄຸ້ມຄອງ ມັນຖືກຫວະ ?

- ຊິວ່າເຮົາບໍ່ມີສິດກໍ່ບໍ່ຖືກ ມີຢູ່ ແຕ່ບໍ່ແມ່ນເຂດທີ່ ບໍລິສັດໄດ້ຮັບສໍາປະທານ ແລ້ວ...ອ້າຍວ່າ ເລື່ອງນີ້ມັນສັບສົນ ອ້າຍກໍ່ບໍ່ເຂົ້າໃຈປານໃດ ! ຄູນແກວ່ງຫົວສະແດງວ່າ ອັບປັນຍາແທ້ໆ.

- ແລ້ວບໍລິສັດ ຜີທ່ານັນນີ້ ໂປໂລມາແຕ່ໃສ ຈຶ່ງມີສິດແທ້ ! ຜົນເວົ້າດ້ວຍຄວາມເຈັບແຄ້ນ ເຂົາບໍ່ເຂົ້າໃຈແທ້ໆວ່າເກີດຫຍັງຂຶ້ນ.

- ເຂົາກໍຫາກມີຂໍ້ຜູກພັນ ກັບທາງແຂວງເຮົາຢູ່ ຄືເຂົາຕ້ອງເອົາເງິນມາລົງທຶນກໍ່ສ້າງ ບາງກິດຈະການ ທີ່ແຂວງເຮົາຕ້ອງການ.

- ຮື ! ແລ້ວຂ້ອຍຊິເຮັດແນວໃດ ? ຜົນກັດແຂ້ວ ດ້ວຍຄວາມເຫລືອໃຈ. ຄວາມຫວັງຕ່າງໆນາໆ ທີ່ເລີ່ມແຕກຫນໍ່ຈໍ່ຈາວ ແຫ້ງແຫ່ວລົງກັບບາດ.

- ໃສວ່ານ້ອງເປັນຫມູ່ກັບນາງແກ້ວ... ທີ່ມາກັບຜູ້ແທນຊຸດແລ້ວອ້າຍໄດ້ຍິນວ່າ ອົງການຂອງປະເທດນີ້ ມີບົດບາດສຳຄັນຫລາຍໃດຕໍ່ຂັ້ນເທິງນະ ນ້ອງບໍ່ລອງໄປເປີກສາລາວເບິ່ງບາດເທື່ອມີວິທີ "

- ເອີ ເອີ ! ຜົນອຶກອັກ ອ້າຍຮັກແນມຈິ້ງ ເບິ່ງຕາເຂົາຄືຢັ່ງໃຈ. ອ້າຍຄູນເປັນລູກບ້ານຫາດໂພ ລາວໄດ້ຕໍ່ສູ້ປະກອບສ່ວນໃນການກູ້ຊາດເກືອບເອົາຊີວິດບໍ່ລອດມາ ຫລາຍເທື່ອແລ້ວ ແລະ ລາວກໍຍັງມີເລືອດນັກສູ້ຟົດຟືນໆ ຢູ່ໃນຄີງ. ການຕໍ່ສູ້ເທື່ອນີ້ ແມ່ນເພື່ອລູກຫລານຕົນເອງ ຜົນຈະຮ່ວມມືກັບລາວໄດ້ຂັ້ນໃດ ?

- ດຽວນີ້ ມີຫຍັງໆເຂົາກໍແລ່ນຫາຂັ້ນເທິງຫມົດ ! ພວກເຮົາຊິມານັ່ງກອດເຂົ່າຖ້າໃຫ້ໃຜມາແກ້ໃຫ້ບໍ່ໄດ້ແລ້ວ... ມັນຕ້ອງໂດດເຂົ້າໄປເອງ ! ອ້າຍຄູນເວົ້າຊ້ຳ ກ່ອນຈະລົງເຮືອນໄປ ປ່ອຍຄວາມເວົ້າແຝງຄວາມຫມາຍໄວ້ ໃຫ້ນ້ອງຮັກຄຶດເອົາ.

ແລ້ວຜົນກໍຕັດສິນໃຈມາວຽງຈັນ ເພື່ອຫາທາງແກ້ໄຂບັນຫາໄມ້ປູກໂຮງຮຽນ ຂະຫນາດສາມຫ້ອງ ສຳລັບເດັກນ້ອຍ ຕາດຳໆຈຳນວນສາມສິບກວ່າຊີວິດ !

ຜົນຄຶດຫາວິທີໄປຫ້ອງການ ຂອງ ມະນີສະຫວັນ ຕາມທີ່ ອ້າຍຄູນຈົດໃຫ້. ຫາທາງເຫວີກຫວາງກຂອງເຂົາ ຍິ່ງຄືວ່າ ເປັນຮ້າຍກວ່າເກົ່າເມື່ອຕົກເຂົ້າມາໃນນະຄອນຫລວງວຽງຈັນ ທີ່ສັບສົນ ໄປດ້ວຍລົດລາ

ພາຫະນະ ແລະ ຜູ້ຄົນ ເຂົາຢູ່ໃນເມືອງສະຫວັນ ແຕ່ນ້ອຍຈົນໃຫຍ່ ບໍ່ເຄີຍຂຶ້ນມາວຽງຈັນຈັກເທື່ອ ຈັ່ງຊັ້ນການເດີນທາງເຂົ້າມາຄັ້ງນີ້ ຈຶ່ງເປັນການສຽງໄພ ຄັ້ງຍິ່ງໃຫຍ່ຄັ້ງນຶ່ງໃນຊີວິດຂອງເຂົາ.

ຢູ່ທີ່ຄິວລົດຕະຫລາດເຊົ້າ ຜັນຖາມເພື່ອນເດີນທາງ ຮ່ວມລົດ ເຖິງຫ້ອງການ ຂອງຄົນທີ່ເຂົາຢາກພົບ ແຕ່ບໍ່ມີໃຜບອກຖືກວ່າ ມັນຢູ່ໃສ. ອ້າຍບ່າວຄູບ້ານນອກຮູ້ສຶກຫິວເຂົ້າຈົນແສບທ້ອງ ຈຶ່ງສອດສາຍຕາ ຫາ ບ່ອນທີ່ ເອີ້ນວ່າ " ຮ້ານຂາຍຂອງກິນ " ! ກວຽນລໍ້ຄົນຊຸກ ບັນຈຸເຂົ້າຈີ່ ກ້ອນສີເຫລືອງໆ ຫລາຍຂະໜາດກອງເຈັ້ນເທີ້ນ ຕາມສອງຟາກທາງ ບາງລໍ້ມີໝາກໄມ້ສີແດງຊ້ຳເຫລື້ອມ ກອງຈູ່ມພູ່ມ ເຊິ່ງຜັນບໍ່ເຄີຍເຫັນ ມາແຕ່ກ່ອນ ຄາວຢູ່ສະຫວັນ ຫວ່າງໆສາມປີກ່ອນ...ເບິ່ງຄັກໆ ຜັນກໍພໍ ຄິດອອກວ່າ ມັນແມ່ນໝາກຫຍັງ. ເຄີຍເຫັນໃນປຶ້ມໜັງສື ພາສາຕ່າງ ປະເທດ ແລະ ປຶ້ມຮຽນ...ໂອ ! ນີ້ເອງທີ່ເພິ່ນວ່າ ໝາກແອບເປີ້ນ. ຢາກຊີມເບິ່ງຈັກໜ່ວຍເດ້ ຈະເປັນແນວໃດ. ຜັນຕິດສິນໃຈກ້າວຂາ ເຂົ້າໄປຫາລໍ້ຂາຍໝາກໄມ້ ເຊິ່ງຜູ້ຂາຍ ເປັນຍິງໃນໄວໜຸ່ມໜ້າຕາ ຈົບງາມ ແຕ່ອາວບໍ່ງອຶງ ເມື່ອເຫັນຄົນນຸ່ງເຄື່ອງກໍ່ຊໍ່ຍັບຍໍ່ຊົງບ້ານນອກ ຫຍັບເຂົ້າໃກ້.

- ຊິຊື້ຫຍັງ ? ນາງຟ້າວຮ້ອງຖາມ ບໍ່ທັນທີ່ຜັນຈະເຂົ້າຮອດ ລໍ້ກວຽນ... ນ້ຳສຽງຂອງນາງບອກບໍ່ຖືກວ່າ ເປັນຄົນພາກໃດ ຜັນ ບໍ່ແນ່ໃຈວ່າ ນາງແມ່ນຄົນລາວບໍ່, ແຕ່ເຂົາປັດຄວາມຄິດນັ້ນຖິ້ມຊີ້ມື ໃສ່ກອງໝາກໄມ້ ສີແດງ.

- ໝາກອັນນີ້...ໜ່ວຍທໍ່ໃດ? ເຂົາຖາມອອກໄປເຮັດໜ້າຊື່ໆ

- ໜ່ວຍລະ ໘໐໐ ກີບ...ມີເງິນບໍ່ ?

ນ້ຳສຽງຖາມ ບອກແຈ້ງວ່າໝິ່ນປະໝາດ ເຮັດໃຫ້ບ່າວຄູ ກົກຫູ ຮ້ອນວາບ. ຫົວສະໝອງຄິດໄລ່ຢ່າງໄວວາ : ໘໐໐ ກີບຕາຍຫ່າ

ໝາກແຕງທາຍໜຶ່ງຢູ່ບ້ານ ຍັງຂາຍແຕ່ ໔໐໐ ກີບໜຶ່ງ ອັນນີ້ໜ່ວຍດຽວຕັ້ງ ໘໐໐ !

- ຖອຍໜີໄປ...ບໍ່ມີເງິນຢ່າມາໃກ້ ! ຄຳເວົ້າໝິ່ນປະໝາດຂອງແມ່ຄ້າໝາກໄມ້ ເຮັດໃຫ້ຜັນ ຮີບຈົກເອົາເງິນເປັນຕັບ ໃນຖົງໂສ້ງອອກມາ. ເອົາມີເງິນສຳລັບເດີນທາງ ມາຫລາຍສົມຄວນ ແລະບໍ່ຄຶດເສຍດາຍ ເງິນ ໘໐໐ ເພື່ອຊື້ກຽດສັກສີໄວ້ !

- ເອົ້ານີ້...໘໐໐ ນະ ! ເອົາມາ ! ແມ່ຄ້າສາວ ຟ້າວຈັບໝາກແອັບເປີ້ນໜ່ວຍນຶ່ງ ສົ່ງໃຫ້ຄົນຊົງບ້ານນອກ ແຕ່ທ່າທາງຂຶງອັງເດັດດ່ຽວແບບແປກໆ ດ້ວຍຄວາມເກງໃຈ ແລະ ເງິນທີ່ຈົກອອກມານັ້ນເປັນຕັບໃຫຍ່ ເປັນຕາສົນໃຈ.

- ເອົາໜ່ວຍດຽວຫວະອ້າຍ ? ນ້ຳສຽງຂອງສາວຂາຍເຄື່ອງປ່ຽນໄປທັນທີ ເຮັດໃຫ້ຜັນກົກຫູຮ້ອນວາບ... ໂອ້ ທາດແທ້ ຂອງແມ່ຄ້າເປັນແບວນີ້ບໍ່ ?

- ເອີ...ຊື້ຊີມເບິ່ງຊື່ໆ ເອົາຕອບທັງຄືນດ້ວຍຄວາມເຫຼືອໃຈ. ຮັບເອົາໝາກໄມ້ ສີແດງຊ້ຳປະຫລາດໜ່ວຍນັ້ນ ແລ້ວທັນຫລັງຍ່າງອອກໄປຕາມເສັ້ນທາງ ທີ່ນຳໄປສູ່ສີ່ແຍກໄຟແດງ. ເອົາແນມຫາບ່ອນພໍຊີນັ່ງພັກຜ່ອນ ເພື່ອຊີມໝາກໄມ້ລາຄາແພງ ພິລຶກໜ່ວຍນີ້. ໄດ້ແລ້ວ ຢູ່ຕໍ່ໜ້າເຮືອນກໍ່ຫລັງຍາວໆ ຊຶ່ງມີປ້າຍຕິດບັກໃຫຍ່ວ່າ "ມະຫາວິທະຍາໄລແພດສາດ" ມີຮົ່ມຟາງແດງເປັນຕານັ່ງຫລິ້ນ. ຜັນສັງເກດວ່າ ມີຜູ້ຄົນຂີ່ລົດຖີບລົດຈັກ ຫຽວອອກຫຽວເຂົ້າ ປະຕູໃຫຍ່ລຸ່ມປ້າຍ "ມະຫາວິທະຍາໄລ..." ບາງຄົນຊົງຟ້າວຟັງ ຂີ່ລົດຈັກເລັ່ງທັງແຮງໆ ແຊງຂຶ້ນໜ້າໝູ່ໄປ ເຮັດໃຫ້ມີການຮ້ອງໄລ່ຫລັງ. ພວກຂີ່ລົດຖີບຊົງບໍ່ຟ້າວປານໃດ ເຂົາເຈົ້າໄປກັນເປັນພົງເປັນໝູ່ ຂີ່ຮຽງກັນທັງລົມກັນໄປ ສະອິກສະອ້ອຍ ເບິ່ງພວກເຂົາມີຄວາມສຸກສະບາຍດີ...ເອີ້ຖ້າເດັກນ້ອຍນັກຮຽນຂອງເຂົາໃຫຍ່ແລ້ວ ຊິມີຜູ້ໄດ້ມາເຂົ້າຮຽນ

ໃບມະຫາ ວິທະຍາໄລນີ້ບໍ່ ? ຖ້າມີລິງຈະດີ ບ້ານທາດໂພຈະມີແພດໜໍ່ຊັ້ນສູງ...ເວລານັ້ນຍັງອີກດົນປານໃດບໍ່ ? ຈາກປະຖົມ ຍັງມັດທະຍົມອຸດົມ ແລ້ວຈຶ່ງມາເຂົ້າມະຫາວິທະຍາໄລ ໄດ້ຍິນວ່າ ຕ້ອງຮຽນຢູ່ໜີ້ຕັ້ງ ຜ-ກ ປີ ຈຶ່ງເປັນທ່ານໝໍໄດ້.

- ຕ້າຍ ໝູ່...ອີ່ຕານັ້ນເປັນຫຍັງ ? ເບິ່ງລາວແດ່ ! ສຽງແມ່ຍິງຮ້ອງທ້ອງ ດັງຂຶ້ນໃກ້ໆໂຕ ແລ້ວຜັນກໍຮູ້ສຶກວ່າ ມີໃບໜ້າຫລາຍຄົນກົ້ມລົງມາ ເຂົາຮູ້ສຶກຕາລາຍ ອິນທົວ ຕົ້ນຝາງແດງ ທີ່ເຂົານັ່ງຊຸ້ນຣິ້ມຊຶມເງົາຂອງມັນຫວ່າງກິ້ ປາກົດວ່າ ປີ້ນຄວ້າງໆ.

- ລາວເປັນລົມ...ບໍ່ຈັກ ຕ້າຍ ກິນໝາກໂປ້ມ ຍັງບໍ່ໝົດໜ່ວຍຊ້ຳ. ຕ້າຍ ເຮັດແນວໃດ ຮືໝູ່ !

- ເອົາລາວໄປໂຮງໝໍຕິ... ໃກ້ໆໜີ້ນຶ່ງ ເອົາອັດລົດໄວ. ຫັ້ນສາມລໍ້ຫັ້ນ. ດູຕົນລາວ ເບິ່ງຊິງຊິມາ ແຕ່ບ້ານບອກອ້າຍໆເຈົ້າເຈັບໃສ ?

- ້ ທ້ອງ... ໂອ້ຍ ເຈັບທ້ອງ ພາຂ້ອຍໄປໂຮງໝໍແດ່...້ຜັນພະຍາຍາມເປັ່ງສຽງອອກ ເມື່ອຮູ້ສຶກວ່າ ຕົນເອງເປັນຫຍັງຄວາມຮູ້ສຶກຢ້ານ ເຮັດໃຫ້ເຂົາອອກປາກຂໍຄວາມຊ່ອຍເຫລືອ ນຳກຸ່ມບ່າວສາວ ທີ່ຍ່າງມາເຫັນ ນັບວ່າໂຊກຂອງເຂົາຍັງດີ ທີ່ພວກມາພໍ້ແມ່ນນັກຮຽນແພດ ທີ່ພວມເລີກຊົ່ວໂມງຮຽນ ແລະ ພາກັນຍ່າງມຸ່ງໜ້າຈະໄປ ຍັງໂຮງພະຍາຍາມໃຫຍ່ບ່ອນພວກເຂົາໄປເຝິກແອບເຮັດວຽກ.

ຜັນບໍ່ຮູ້ວ່າ ເວລາຜ່ານໄປດົນເທົ່າໃດ ມາຮູ້ເມື່ອລິງອີກ ກໍພົບວ່າຕົນເອງ ນອນຢູ່ເທິງຕຽງ ພາຍໃນຫ້ອງກວ້າງ. ຝາທາສີຂາວ ແຕ່ມີກິ່ນແປກປະຫລາດ. ຜັນບອກໂຕເອງວ່າ ເຂົາບໍ່ມັກກິ່ນແບບນີ້ ເລີຍ !ເຂົາບໍ່ໄດ້ນອນຢູ່ຜູ້ດຽວດອກ... ມີຕຽງອື່ນໆ ວາງຢັ່ງຢາຍກັນ ເຕັມຫ້ອງ. ສຽງໂອ້ລົມກັນ ດັງແຮງຂຶ້ນໆ... ຈົນຟັງໄດ້ຖ້ອຍຄວາມ. ຜັນຈຶ່ງເຂົ້າໃຈ

ເອົາເອງວ່າ ເຂົາໄດ້ເຂົ້າມານອນ ຢູ່ໃນໂຮງຫມໍແຫ່ງນີ້ ແລ້ວ. ເຂົາພະຍາຍາມຄຶດທົບທວນຫາເຫດການຕ່າງໆ ເຂົາອອກເດີນທາງແຕ່ເຊົ້າມືດຈາກເມືອງເກົ່າ ມາລັດຂຶ້ນລົດເມຢູ່ປາກຊັນ ພອນວ່າຈະກິນ ເຂົ້າປັ້ນເຊົ້າ ຄົນຂັບກໍເລັ່ງຂຶ້ນລົດ ເຂົາເລີຍບໍ່ທັນໄດ້ຊື້ ຫຍັງກິນຮອງທ້ອງ... ລົດແລ່ນມາເປັນລະຍະໆ ຢຸດຈອດຫລາຍເທື່ອ ບາງຄັ້ງກໍ່ຈອດຢູ່ຕະຫລາດ ມີຄົນເອົາເຂົ້າຫນຽວ ປີ້ງໄກ່ ໄຂ່ຕົ້ມ ເຜືອກມັນຫນຶ້ງສຸກໃສ່ພາມາເລາະຂາຍອ້ອມລົດ ແຕ່ຜັນບໍ່ຮູ້ສຶກຫິວ ຫລືຄຶດຢາກອັນໃດ...ຫົວສະຫມອງ ອາດແຜນທິດທາງໄປຫາບ່ອນຢູ່ທ້ອງການຂອງມະນີສະຫວັນ ຄຶດຫາ ຄຶດແຕ່ງຄວາມເວົ້າຊິວ່ານຳນາງ. ຄຶດຢ້ານໂຕເວົ້າຜິດຫູນາງ ແລ້ວຄວາມບໍ່ເຂົ້າໃຈ ກໍ່ຈະເກີດຂຶ້ນ ຜັນໄດ້ແຕ່ຄຶດ ແລະ ຄຶດຈັ່ງຊັ້ນມາຕະຫລອດເວລາເດີນທາງ ກວ່າສອງຮ້ອຍກິໂລແມັດ. ຕັ້ງແຕ່ດວງຕາເວັນ ພົ້ນໂຜ່ຂຶ້ນປະດັບຂອບຟ້າ ເປັນສີແດງເຣື່ອ ຈົນມັນຄ້ອຍ ອວ່າຍອ່ອນແສງກຣົມອຳລາຈາກໂລກໄປອີກແລ້ວ ແຕ່ເຂົາບໍ່ໄດ້ເອົາວັດຖຸອາຫານແນວໃດ ປ່ອນລົງສູ່ຖົງຫນັງພາຍໃນເລີຍ ນອກຈາກຫມາກໄມ້ປະຫລາດ ລາຄາທໍ່ຫນ່ອຍຫມາກແຕງ ເປັນຫມື່ນຫນ່ວຍນັ້ນ... ເຂົາຈື່ວ່າໄດ້ກັດກິນມັນດ້ວຍຄວາມຄຽດແຄ້ນ... ຄຽດໃຫ້ຜູ້ຂາຍ ທີ່ສະແດງທ່າທີຫມິ່ນປະຫມາດ ຄົນມາແຕ່ບ້ານນອກຂອກນາ ຄືເຂົາ ເຫລືອໃຈທີ່ມີຜູ້ນຳຫມາກໄມ້ລາຄາຈົບທາຍອັນນີ້ມາຂາຍຍົວະ... ແລະ ຜັນຄຶດແນ່ໃຈວ່າ ເຂົາເຈັບທ້ອງສຽດແຫນ້ນຈົນເປັນລົມຫມົດສະຕິ ໃຫ້ພວກນ້ອງນຸ່ງນັກສຶກສາແພດ ເອົາມາໂຮງຫມໍນີ້ແມ່ນຍ້ອນຫມາກໄມ້ ຫນ່ວຍວ່ານີ້ແທ້. ຫູເຂົາແວ່ວໄດ້ຍິນຜູ້ຄົນລົມກັນວ່າ:

- ບໍ່ເຄີຍເຫັນຄົນເບື່ອຫມາກແອັບເປີ້ນ ! ຂອງບໍ່ເຄີຍກິນມາກິນ!

-ເຫັນພວກນັກສຶກສາແພດວ່າພໍ້ລາວຊັກແດ່ວໆ ຫມາກແອັບເປີ້ນຄາປາກຢູ່ໃກ້ໆປະຕູເຂົ້າໂຮງຮຽນແພດ!ຮ້ອງໂອ້ຍໆວ່າເຈັບທ້ອງໆ!

- ສິ່ງໄສຊຶ້ມາແລ້ວກິນໂລດ ບໍ່ປອກ ບໍ່ລ້າງ ເອົາວ່າມັນມີຝຸ່ນ ຢາພິດ ຕິດເປືອກໄດ ໜມາກອັນນີ້ !

ຜັນຫວ່ຽງຫູຟັງສຽງໂອ້ລົມເຫລົ່ານັ້ນ ທັງຫລີ່ຕາລົງ ເຮັດຄືວ່າ ຍັງຫລັບຢູ່ ເມື່ອໄດ້ຍິນສຽງບາດຕີນລົບຍ່າງໃກ້ເຂົ້າມາ.

- ອ້າຍໆ...ຮູ້ເມື່ອລືງແລ້ວບໍ້ ! ສຽງຖາມລຸ້ນຫູດັງຂຶ້ນຜັນມືນຕາຂຶ້ນ ເພາະຄວາມຮູ້ສຶກ ແສບທ້ອງ ຮ້ອງເຕືອນເຂົາວ່າ ຄວນຈະມີຫຍັງ ປ່ອນລົງໄປບັນເທົາຈັກໜ້ອຍ.

- ແນ້... ຕື່ນແລ້ວເດ້ ເປັນແນວໃດອ້າຍ ? ຍິງສາວໜ້າຕາ ແຈ່ມໃສ ອາດເວົ້າເປັນກັນເອງ ຊຶ່ງຄຸ້ນໆ ຕາແປ້ບໃດແບບບຶ່ງ ທ້ວງດ້ວຍຄວາມດີໃຈ... ນາງແມ່ນຜູ້ຊອບໜູ່ ຊ່ອຍເອົາເອົາມາສົ່ງ ໂຮງໜໍນັ້ນເອງ.

- ໄຄແດ່ບໍ່? ຍັງເຈັບທ້ອງແຮງຢູ່ເບາະ? ນາງວ່າ ຢ່າງຫ່ວງໃຍ.

ພວກນ້ອງຕົ້ມເຂົ້າປຽກຊຸມກັບເລີຍແບ່ງມາໃຫ້ອ້າຍ ທານໜໍ ບອກວ່າ ອ້າຍຄວນກິນຫຍັງຮອງທ້ອງແດ່...! ຜັນສັງເກດເຫັນວ່າ ຜູ້ອື່ນໆ ທີ່ຍ່າງເຂົ້າມາຢືນຫຸ້ມອ້ອມຕຽງເຂົາຢູ່ນັ້ນ ລ້ວນແຕ່ນຸ່ງເສື້ອຍານ ຄຸມຂອງແພດທັງໝົດ. ເຂົາເຈົ້າຢູ່ໃນໄວດຽວກັນ ມີທັງຊາຍ ແລະ ຍິງ, ຜູ້ໜຶ່ງຖືພາຖາດ ມີຖ້ວຍເຂົ້າອອກອາຍຮ້ອນໆ...

- ອ້າຍລຸກຂຶ້ນກິນເຂົ້າຈັກໜ່ອຍໃຫ້ມີແຮງກ່ອນ ແລ້ວພວກນ້ອງ ຊິໄດ້ ສໍາພາດວ່າ ເປັນແນວໃດ ມາຈັ່ງໃດ ອ້າຍຈັ່ງເປັນແນວນີ້ ? ສຽງຜູ້ໜຶ່ງວ່າຂຶ້ນ ແລ້ວກໍມີສຽງຫົວໂຄບໆ ຜັນຟ້າວດຶ້ນລືງລຸກນັ່ງ ໂດຍມີພວກຜູ້ຊາຍຊ່ອຍ. ເຂົາບໍ່ເຄີຍຮູ້ສຶກວ່າເມື່ອຍອ່ອນເທົ່ານີ້ມາກ່ອນ.

- ເອົາລະ ! ໄດ້ແລ້ວ ເຊີນກິນເຂົ້າປຽກຖ້ວຍນີ້ ໃຫ້ໝົດ ! ພວກນ້ອງໄປເອົາອາການລົບເຈັບອື່ນໆກ່ອນ ! ຜັນ ແນມເບິ່ງໜ້າ ພວກເຂົາດ້ວຍຄວາມຮູ້ສຶກຂອບໃຈ ເມື່ອທັງໝົດ ຖືກບາດກ້າວ ຖອຍອອກຫ່າງ...

- ນາງ...! ນາງ ! ຜັນເອີ້ນນຳນາງ ຜູ້ເປັນເຈົ້າການ ຫາເອົ້າປຣກ ມາຕ້ອນ ເມື່ອນາງຈະຍ່າງຕິດຕາມໜູ່ອອກໄປ

- ອ້ອຍຊື່ ວິໄລວັນ ! ນາງຜູ້ຖືກເອີ້ນຢຸດ ແລະ ຫຍັບເອົ້າມາຫາ

- ອ້ອຍ...ຊື່ຜັນ...ເອີ້...ຂອບໃຈພວກເຈົ້າຫລາຍໆ

- ເປັນໜ້າທີ່ຂອງພວກເຮົາຢູ່ແລ້ວ... ເອີ້ ອ້າຍ ຊື່ຜັນ ມາແຕ່ໃສເນາະ ! ນາງສວຍໂອກາດທີ່ເຂົາໂອ້ລົມໄດ້ ດຶງເອົາ ແຜ່ນເຈ້ຍປ້າຍປະຈຳຄົນເຈັບຂຶ້ນມາເພື່ອຂຽນປະຫວັດຂໍ້ມູນ ຂອງ ຄົນເຈັບໃສ່.

- ມາແຕ່ບ້ານຫາດໂພ...ເມືອງເກົ່າ ແຂວງ

- ບ້ານຫາດໂພ ເມືອງເກົ່າ ? ຕ້າຍແທ້ໆຫວະ ? ນາງຖາມ ຊ້ຳຄືນ ທັງຫົວອິກໆ ເຮັດໃຫ້ພວກໜູ່ທີ່ຍ່າງໄປຫາຕຽງອື່ນ ງວາກ ມາເບິ່ງ...

- ທິດສອງທິດມານີ້ ໄດ້ຍິນແຕ່ເລື່ອງ ບ້ານຫາດໂພ...ບັງເອີນ ບັງເອີນເນາະ. ອ້າຍເປັນຫຍັງ ? ເອີ້... ອາຊີບນະ !

- ຄູ...! ຜັນຕອບ ທັງຄຶດຢາກຮ້າຍ ທີ່ເຫັນສາວນ້ອຍຜູ້ອາລິຫົວ ພໍປານວ່າ ຊື່ບ້ານຊື່ເມືອງ ທີ່ເຂົາຢູ່ເປັນຕາຫົວ ຍັງອາຊີບຄູ ຂອງ ເຂົາອີກ. ພໍແຕ່ເຂົາຕອບອອກໄປ ນາງກໍຍິ່ງຫົວຂຶ້ນທັງເວົ້າວ່າ

- ໂອ້ຍ...ແມ່ນອີ່ສັງ ມາບັງເອີນແນວນີ້

- ບັງເອີນຫຍັງ ? ຜັນຖາມນ້ຳສຽງເຄັ່ງຂຶມກັ້ນຄວາມໂມໂຫ ສຸດຂີດ.

- ອ້າຍຢ່າຟ້າວຢາກຮ້າຍແມ້...ມັນບໍ່ດີ ສຳລັບຫ້ອງໃສ່ເຈົ້າໄດ...! ບໍ່ແມ່ນອ້ອຍຫົວຫຍັງນ່າ ຄືວ່າໄດ້ອາທິດໜຶ່ງມານີ້ ອ້ອຍໄດ້ຍິນ ເອື້ອຍອ້ອຍ ເວົ້າຮອດແຕ່ບ້ານຫາດໂພ ແລະ ອ້າຍຄູຜູ້ໜຶ່ງ ຢູ່ຫັ້ນ. ອ້ອຍກໍເລີຍຢາກຫົວວ່າ ມັນບັງເອີນສັງແທ້ໄດ້ຮູ້ຈັກຄົນຫາດໂພແທ້ໆ

- ເອື້ອຍເຈົ້າ ? ແມ່ນໃຜ ຊື່ຫຍັງ ? ຜັນຖາມດ້ວຍ ຄວາມຕື່ນເຕັ້ນ ມືທີ່ຈັບບ່ວງເຂົ້າປຽກສະເຫມັ່ນ.

- ເອື້ອຍແສງອຳໄພ... ລາວເຮັດການ ຢູ່ນຳອົງການຕ່າງປະເທດ. ອາທິດກ່ອນ ລາວລົງໄປເຮັດວຽກຢູ່ພົ້ນຖານ ກັບມາໄດ້ແຕ່ໂສກັບເອື້ອຍ ແກ້ວວ່າ ຢາກລົງໄປອີກ. ເວົ້າຫລາຍຈົນວ່າຂ້ອຍກໍຢາກໄປນຳ "

- ໂອ້ ! ຊັ້ນດອກຫວາ ! ຜັນຮູ້ສຶກວ່າ ເຂົາຫລົງຍິ້ມ ອອກມາຢ່າງ ປອດໂປ່ງຫົວໃຈ ທັງແນມເບິ່ງໜ້າສາວນ້ອຍ ດ້ວຍຄວາມຮູ້ສຶກຂອບໃຈ.

- ເອີ້...ອ້າຍຍິ້ມຫົວໄດ້ແລ້ວ ຂ້ອຍຈັ່ງແມ່ນດີໃຈ. ເອົາລະ ອ້າຍກິນເຂົ້າປຽກໃຫ້ຫມົດສາ ບາດນີ້

- ເຈົ້າ...ເຈົ້າ...ແລ້ວ ນ້ອງກັບມາລົມ ກັບອ້າຍອີກແດ່ເນີ້ ! ຜັນສັ່ງ ເມື່ອນາງຈັດບັນທຶກຮຽບຮ້ອຍ ແລະ ຈະອອກໄປ.

- ເຈົ້າ ຕອນເດິກ ພວກນ້ອງຍັງຈະເຂົ້າມາ ແທກບາຫລອດ ທຸກຄືນຢູ່

ຜັນຮູ້ສຶກວ່າ ເຂົ້າປຽກຖ້ວຍນັ້ນນ້ອຍ ແລະແຊບ ແບບ ທີ່ບໍ່ເຄີຍ ໄດ້ກິນມາກ່ອນໃນຊີວິດ ! ເຂົາຈັດການກັບເຂົ້າ ແລະ ຢາ ທີ່ນາງ ພະຍາບານເອົາມາວາງໄວ້ໃຫ້ຢ່າງບໍ່ລໍຊ້າ ! ໂອ້ ເວລາເອີ້ຍ ເຈົ້າມາ ຊ້າແທ້ ເຂັມໂມງເອີ້ຍ ປິ່ນໄວແດ່ທ້ອນ. ຢາກໃຫ້ມັນເປັນມື້ອື່ນ ຢາກ ອອກຈາກໂຮງຫມໍ ຢາກໄປພົບນາງ !

ຜັນຫລັບໄປ ດ້ວຍຄວາມເມື່ອຍອ່ອນ ແລະ ເປັນສຸກໃຈດ້ວຍ ຄວາມຫວັງ.

ປະສານໄມຕີ

ແສງ ແດດຂອງມື້ໃໝ່ ສາດສ່ອງລອດເຂົ້າມາ ຕາມຮູປ່ອງ ເໜືອຫ້ອງນອນຄົນເຈັບ ຜ້າກັ້ງຫລາຍຜືນ ຖືກຮື້ຂຶ້ນພາດໄວ້ຕາມຮາວ ເພື່ອຮັບເອົາແສງແດດ ຄົນເຈັບຫລາຍຄົນ ລຸກຈາກບ່ອນຜູ້ມາເຝົ້າໄຂ້ ຊ່ອຍໂຈມລຸກໂຈມນັ່ງ ບາງລ້າງໜ້າໃຫ້ກັນ ບາງໂຈມໂຊມກັນ ໄປລ້າງສ່ວຍໃນຫ້ອງນ້ຳ ສຽງຖາມຂ່າວຄາວກັນດັງອຸ່ນໆ ອຶ່ນໆ ຂຶ້ນຕາມອັດທະຍາໄສ ໂດຍສະເພາະ ບ່າວຄູຜັນ ເຊິ່ງເປັນຄົນເຈັບມາໃໝ່ ເຂົ້ານອນຢ່າງກະທັນຫັນ ຫວ່າງຕອນຫົວຄ່ຳແລງວານ.

- ແມ່ນແທ້ຫວະ ວ່າເຈົ້າເບື່ອໝາກແຂັບເປັ້ນ ? ພໍ່ລຸງ ມານອນເຝົ້າລູກຊາຍປາດໄສ້ ຖາມ ເມື່ອເຫັນຜັນລຸກນັ່ງໄດ້ສະບາຍ ທ່າທາງເປັນປົກກະຕິ.

- ຄືຊິແມ່ນຫັ້ນລະລຸງ ຂອງວ່າຂ້ອຍບໍ່ເຄີຍກິນ ແລ້ວກະທ້ອງເປົ່າ ແດ່ ຂ້ອຍບໍ່ໄດ້ກິນຫຍັງໝົດມື້ ! ຜັນວ່າຢາງອາລົມດີ ເອົາຈັດແຈງ ລ້າງໜ້າສວ່າຍຕາຄືໝູ່ ມ້ຽນບ່ອນນອນ ສາຍຕາເສືອດແນມໄປ ແຕ່ທາງປະຕູເຂົ້າ ສວາຍປານນີ້ແລ້ວ ບໍ່ເຫັນນາງວິໄລວັນ. ຄືນນີ້

ເຂົາເຊືອບຫລັບໄປກ່ອນ ເລີຍບໍ່ໄດ້ສັ່ງຄວາມນຳນາງ ທາແສງອຳໄພ.

- ເອີ້ລຸງ... ພວກນັກຮຽນແພດ ມື້ຄືນນີ້ ຂະເຈົ້າຢູ່ໃສນໍ້ ?

- ໂອ໊ຍ ປານນີ້ ພວກເຂົາອອກຍາມ ເມືອບ້ານ ຫລືບໍ່ກໍ່ໄປໂຮງຮຽນຫມົດແລ້ວ ! ພໍ່ລຸງຜູ້ຮູ້ເລື່ອງດີ ເພາະມາປະຈຳຢູ່ໂຮງຫມໍດົນຕອນ ເຮັດໃຫ້ຜົນຫົວໃຈຫັກຫວ່ຳ... " ຕາຍແລ້ວ ! ເຮັດແນວໃດຊິໄດ້ພໍ້ ?" ຜົນນັ່ງຊຶງຄືຄົນຫມົດຄວາມຄິດ ເຂົາຄິດວ່າຕົນເອງທີ່ເຫງີກຫງາກຊຸກຊ້ຳ ປາກຫນັກ ເປັນຫຍັງບໍ່ສັ່ງ ຄວາມນຳ ວິໄລວັນໂລດ ມື້ລະນັ້ເພິ່ນວ່າ ຄາດຊິໄດ້ ບິນມາຄືນີກເຈົ່າ ຄາດຊິບໍ່ໄດ້ ບິນເຈັ້ຍເຈີດຫນີ !

- ແລ້ວ...ແລ້ວຂະເຈົ້າ ເອີ້ ມື້ໃດ ຊິມາຍາມອີກລະ? ສຽງຖາມຄ່ອຍເບົາລົງ.

- ໂອ໊ຍ.. .ຕັ້ງອາທິດຫນຶ່ງພຸ້ນແລ້ວ ເຂົາເຈົ້າບໍ່ໄດ້ເປັນຫມໍເທື່ອດ໋ ! ພໍ່ລຸງ ຜູ້ຮູ້ເລື່ອງພາຍໃນໂຮງຫມໍຕອບ ທັງແນມເບິ່ງຫນ້າບ່າວບ້ານນອກ ແຕ່ຄົມຄາຍ ເວົ້າຈາສຸພາບດ້ວຍຄວາມສົນໃຈ ເບິ່ງຄັກໆຄືຄົນມີຄວາມຮູ້ ຄວາມຫລັກຢູ່ ແຕ່ເປັນຫຍັງຄືວ່າ ທ່າທາງອ່ອນເພຍຫມົດຫວັງ.

- ອີກອາທິດຫນຶ່ງ... ໂອ໊ຍ ! ຜົນຄາງອຸ່ມໆ ໃນຮູຄໍ ດ້ວຍຄວາມຜິດຫວັງ ! ເຂົາຈະເຮັດແນວໃດ ຢູ່ຕັ້ງອາທິດ ຢ່າງໃດອາການຂອງເຂົາກໍດີຂຶ້ນຫຼາຍ ທ່ານຫມໍມາກວດເບິ່ງແລ້ວ ຄົງຈະພໍຂໍອອກໄປໄດ້. ເປັນຄືຄິດແທ້ ທ່ານຫມໍມາກວດເບິ່ງອາການທັງບອກວ່າ ການເຈັບປ່ວຍຂອງເຂົາ ແມ່ນອາການເລີ່ມຕົ້ນຂອງກະເພາະອັກເສບ ຄວນລະວັງເລື່ອງຂອງກິນ ສຳຄັນທີ່ສຸດ ກິນໃຫ້ເປັນເວລາ ຢ່າໃຫ້ກະເພາະຫວ່າງເປົ່າ ເພາະນ້ຳຍ່ອຍອາຫານອອກມາແລ້ວ ບໍ່ມີອາຫານຍ່ອຍ ກໍກັດເອົາຝາກະເພາະ ເຮັດໃຫ້ມີອາການເຈັບແສບ. ທ່ານຫມໍ ສາທະຍາຍຍືດຍາວ ເພາະຜົນມີທ່າທີວ່າ ສົນໃຈ ຢາກຮູ້ຈັກວິທີປ້ອງກັນ ປິ່ນປົວຕົວເອງແທ້ໆ ເຮັດໃຫ້ພວກນັກຮຽນແພດ ທີ່ຕິດຕາມທ່ານຫມໍໃຫຍ່

ມາກອດກາຄົບເຈັບ ຈິດບັນທຶກ ການຕີລາຄາພະຍາດຂອງຜົນ ຈົບ ປອດແຂນທັງພາກັບເຮັດໜ້າກັ້ນຫົວ. ທ່ານໝໍຍ້າຍໄປຕຽງໃໝ່ແລ້ວ ແຕ່ນັກສຶກສາແພດສາວອີກສອງສາມຄົນ ຍັງສົນລະວົນ ນຳການອ່ານ ເອກະສານຕິດຕາມຄົນເຈັບ ທັງເວົ້າກັນອຸ່ນໆ.

- ແມ່ນອ້າຍນີ້ຫວະ ທີ່ເບື່ອໝາກແອັບເປີ້ນນະ ! ສາວນາງໜຶ່ງ ຖາມຂຶ້ນ ບ້າສຽງຊຶ່ງເກງໃຈ ຜົນຄິດບໍ່ອອກວ່າ ເປັນຫຍັງຂ່າວຄາວ ສາເຫດການເຈັບຂອງເຂົາ ຄືແຜ່ພືອອກໄວໄດ້ໄວດີແບວນີ້.

- ແລ້ວ...ເຈົ້າຮູ້ໄດ້ແນວໃດ ? ເຂົາຕັດສິນໃຈຖາມຄືນ ເຮັດເປັນ ຄົນຊ່າງເວົ້າເບິ່ງ.

-ໂອ້ຍ...ອ້າຍມີຫຍັງແດ່ ທີ່ເກີດຂຶ້ນຢູ່ ຕໍ່ໜ້າໂຮງຮຽນແພດ ແລ້ວພວກນ້ອງບໍ່ຮູ້ນະ ? ວິໄລວັນ ແມ່ນສະມາຊິກໜ່ວຍຂ່າວ ຂອງ ພວກເຮົາຊ້ຳບ່າ ມີຫຍັງດີໆ ຕ້ອງບອກກັນໂລດລະຂີ້ ! ອີກນາງໜຶ່ງ ຊຶ່ງເບິ່ງກ້າຫານກວ່າ ໃຫ້ຄຳຕອບແຈ່ມແຈ້ງ.

- ເອີ້...ຊັ້ນຫວາ ! ເຮັດແນວໃດເນາະ ຂ້ອຍຊິພໍ້ ວິໄລວັນອີກ ທ່ານໝໍວ່າ ໃຫ້ຂ້ອຍຮັບຢາແລ້ວອອກໄດ້ ຂ້ອຍຢາກຂອບໃຈເລົາ ທີ່ ຊ່ອຍຂ້ອຍໄວ້ວານນີ້ ! ຜົນ ຊ່າງເວົ້າຂຶ້ນກວ່າເກົ່າ ເມື່ອສະໝອງເລີ່ມ ເຮັດວຽກໄດ້ຕາມປົກກະຕິ ເຂົາກໍ່ຄິດ ຫາປ່ອງທາງ.

- ຊິຍາກຫຍັງ ຈັກໜ້ອຍ ລາວກະມາອີກຫັ້ນລະ ຂອງວານນີ້ ເພິ່ນມີຜົນງານ ອັ້ນກອບກູ້ຊີວິດນາຍຄູ ວິສະວະກອນແຫ່ງດວງວິນຍານ ໄວ້ທັງຄົນປານນີ້ ! ຮັບຮອງຂ່າວນີ້ ຊ່າໄກກວ່າອອກໜັງສືພິມອີກ ອ້າຍໄປເອົາຢາແລ້ວນັ່ງຖ້າຢູ່ຫັ້ນລະ ຢາລືມຫາກິນຫຍັງຮອງທ້ອງ ຄືທ່ານໝໍບອກແດ່ລະ ! ສາວນັກສຶກສາແພດສັ່ງຕື່ມ ດ້ວຍຄວາມຫວັງດີ ກ່ອນຈະຟ້າວຕິດຕາມ ຂະບວນຢ້ຽມກວດຄົນເຈັບ ນຳທ່ານໝໍໃຈດີ.

ອີກເທື່ອໜຶ່ງ ທີ່ຜົນຢາກໃຫ້ເຂັມໂມງແລ່ນໄວໆ ໃຫ້ຮອດທ່ຽງ... ເຂົາຈະໄດ້ບອກນາງວິໄລວັນ ຈະບໍ່ອຳ ບໍ່ປາກໜັກ.ຜົນນ້ຽນເຄືອງ

ຂອງໃສ່ຖົງນ້ອຍ ແລະ ຈົກເອົາໂສ້ງເສື້ອຊຸດໃຫມ່ມາປຽນ. ເຖິງຈະຍັບຍໍ່ແດ່ ແຕ່ສີສັນຮູບຊົງມັນກໍ່ເຂົ້າທ່າກວ່າຊຸດເອົາບຸ່ງເດີນທາງມາຫມົດມື້ວານນີ້ຊາຍຫນຸ່ມຄອບບອກລຸງອ້າງຕຽງວ່າ ຈະລົງມາຮັບຢາ ແລະຂໍໃຫ້ລຸງບອກແກ່ທຸກຄົນມາຖາມຫາເຂົາດ້ວຍ ຊາຍຮຸ່ນກາງຄົນແນມເບິ່ງອ້າຍບ່າວ ຮຸ່ນລູກດ້ວຍສາຍຕາຊື່ນຊົມ... ມື້ວານນີ້ ຖືກຫາມມາແທ້ໆ ຮອດມື້ນີ້ຊ້ຳລຸກຍ່າງໂຢ້ງໆ ທ່າທາງອັນແຂງ ຊ້ຳຍັງໄດ້ຍິນວ່າຈະອອກໂຮງຫມໍເລີຍ ເພາະມີວຽກງານຫລາຍແນວລໍຖ້າຢູ່.

- ເອີ...ໄປໂລດລູກ !

ຜັນຊື້ກາເຟນົມຮ້ອນ ແລະເຂົ້າຈີ່ກິນຮອງທ້ອງແລ້ວຈຶ່ງກັບມານັ່ງລໍຖ້າຮັບຢາ ຫລັງຈາກຍື່ນເຈ້ຍ ໃຫ້ພະນັກງານ ໄວ້ຄົນເຕີບເອົາຈຶ່ງໄດ້ຍິນຊື່ຕົນເອງ... ຊາຍຫນຸ່ມຮັບເອົາຢາມາມ້ຽນ ແລ້ວກໍມານັ່ງຄືນຫມ້ອງເກົ່າ ສາຍຕາແນມອອກໄປທາງປະຕູໃຫຍ່ບ່ອນ ຄົນຍ່າງເຂົ້າຍ່າງອອກ. ຄົນຖ້າຮັບຢາບາງຕາໄປຫລາຍແລ້ວ ! ເວລາຜ່ານໄປດົນເທົ່າໃດເຂົາບໍ່ຮູ້ສຶກ ໂມງຢູ່ແຂນກໍມີ ແຕ່ຜັນລືມເບິ່ງເວລາບໍາໂມງສອງຕາຂອງເຂົາ ແນມຊື່ໆໄປ ແຕ່ປະຕູບ່ອນມີຄົນຍ່າງສົນໄປສົນມາ.

ຕາເຂົາບໍ່ຝາດແທ້ໆ ! ແມ່ຍິງສາມຄົນຍ່າງຮຽງກັນເຂົ້າມາຜ່ານປະຕູໃຫຍ່ແລ້ວ ພວມຫຍັບໃກ້ເຂົ້າມານັ້ນ ແມ່ນຜູ້ເຂົາຮູ້ຈັກທັງຫມົດມະນີສະຫວັນ ແສງອຳໄພ ແລະ ວິໄລວັນ ! ມະນີສະຫວັນ ທື້ວຖົງເຄື່ອງສ່ວນວິໄລວັນລົມຈ້ອຍໆ ບາງອາດພວມເລົ່າເລື່ອງ ຫນ້າຫົວຂອງເຂົາສູ່ມະນີສະຫວັນ ແລະ ແສງອຳໄພຟັງຢູ່ ເບິ່ງຫນ້າຄືວ່າ ພວມຫົວກັນໂດຍບໍ່ຮູ້ສຶກໂຕ ຜັນຖອຍຄີງເຂົ້າບັງກົກເສົາ ສາມສາວຍ່າງສຽດໄປແຍງຫນ້າຂຶ້ນສູ່ຕຶກຊັ້ນເທິງ.

- ມະນີ...! ຜັນຮ້ອງ ແຕ່ສຽງຂອງເຂົາ ຄືຈະລ່ອຍໂພດ ຫລືວ່າມະນີສະຫວັນ ລືມສຳນຽງສຽງຮ້ອງ ແນວນີ້ແລ້ວເຂົາເຈົ້າ ພາກັນຍ່າງລ້ອງໆ ຂຶ້ນທາງຄ້ອຍໄປສູ່ຊັ້ນສູງ ຂອງເຮືອນຕຶກ. ພວກບາງ ອາດຈະ

ໄປຫາເຂົາ ຢູ່ຫ້ອງນອນ ໄປຢ້ຽມຢາມຖາມຂ່າວ ຕາມພາສາຄົນຮູ້ກັນ ຖ້າໄປແລ້ວບໍ່ພໍ້ ກໍ່ຄົງພາກັນລົງມາແລ້ວ... ແລ້ວ ອອກເນືອເລີຍ ຖ້າເປັນແນວນັ້ນກໍຫມາຍຄວາມວ່າ... ເຂົາອາດຈະຫມົດ ໂອກາດ ! ໄວເທົ່າກັບ ຄວາມຄິດ ຜັນຕຸ້ມເທື່ອແຮງ ກໍາລັງໃຈທັງຫມົດ ລຸກຂຶ້ນ ສາວບາດຕີນອ່າວກວ້າງແລ່ນຂຶ້ນຕາມທາງຄ້ອຍເນີນ. ຟ້າເອີຍ ! ທັນເດ້ ພວກນາງ ພວມໄຂປະຕູອອກມາ.

- ເນ້ ! ອ້າຍນະ ໄດ້ຢາແລ້ວຫວະ ? ເບິ່ງນີ້ ໃຜມາຢາມ ມາໆ ມານອນພັກ ໃຫ້ເອື້ອຍເພິ່ນຢ້ຽມກ່ອນ ! ນາງນ້ອຍອີໄລວັນຈັດ ແຈງ ໃຫ້ເຫດການທີ່ຜັນຄຶດຢ້ານພໍແຮງນັ້ນ ຜ່ານໄປໂດຍດີຢ່າງບໍ່ຄິດ ບໍ່ຝັນ ຜັນເຮັດຕາມຄໍາແນະນໍາຢ່າງວ່າງ່າຍ ຄືຂຶ້ນນັ່ງເທິງຕຽງຄົນເຈັບໃນ ທັນທີ

- ເອົາລະ ຮຽບຮ້ອຍແລ້ວ ! ເອື້ອຍແກ້ວສໍາພາດເອົາບາດນີ້ ວ່າເປັນແນວໃດ...ໄປຈັ່ງໃດມາຈັ່ງໃດ ! ອີໄລວັນອີກນັ້ນລະທີ່ຊີ້ປ່ອງ ທາງໃຫ້ ! ນ້ອງຊິໄປຂຶ້ນຫ້ອງຊົ່ວໂມງ ສຸດທ້າຍກ່ອນ ໄປລະອ້າຍ !..

- ນ້ອງ...ນ້ອງສາວ ເອີ້ ຂອບໃຈຫລາຍໆເດີ້ ! ຜັນທັນໄດ້ອອກ ປາກເປັນເທື່ອທໍາອິດ, ຄວາມຮູ້ສຶກຫລາຍແນວ ອັ່ງລົ້ນຂຶ້ນມາຈໍ່ຢູ່ຄໍຫອຍ ເຂົາຢາກເວົ້າຫລາຍກວ່າທັ້ນ ອີໄລວັນທັນ ມາຍິ້ມຢ່າງ ອ່ອນຫວານ ແນມເບິ່ງຫນ້າເອື້ອຍແກ້ວ ແລະ ຜູ້ຊາຍຊື່ຜັນ ແລ້ວຫຍັບເຂົ້າມາໃກ້ໆ ກ່ອນຈະເວົ້າວ່າ :

- ນ້ອງບໍ່ແນ່ໃຈວ່າ ຕົນເອງເຮັດຖືກບໍ່ ທີ່ຟ້າວໄປບອກຂ່າວອ້າຍ ໃຫ້ເອື້ອຍແກ້ວຮູ້ ແຕ່ ຮື ໆ...ຄືວ່າ ໃຜກໍ່ດີໃຈຫມົດເນາະເອື້ອຍແສງ.

- ທັງຖືກທັງດີແລ້ວລະວັນ ເອົາເຫາະຊິເອົາຮາງວັນຫຍັງ ເອື້ອຍ ຊິໄປບາງກອກມື້ອື່ນນີ້ຢູ່ແລ້ວ ຈັ່ງວ່າ ຖ້າບໍ່ມາມື້ນີ້ກະຊິບໍ່ພໍ້ເພິ່ນ ! ມະນີສະຫວັນເວົ້າອອກມາເປັນເທື່ອທໍາອິດ ນໍ້າສຽງສະເຫມີ ຟັງບໍ່ ອອກວ່ານາງດີໃຈ ຫລື ຮູ້ສຶກແນວໃດ.

- ເອົາ...ເອົາ ເສື້ອງາມໆ ຈັກໂຕ ໂອະບໍ່ ! ກະເປົາ, ຜ້າຕັດເສື້ອ.

- ວັນ...ຢ່າໂລບຫລາຍ ! ແສງອຳໄພ ເຕືອນນ້ອງສາວທັງຫົວ.

- ວັນຫມາຍຄວາມວ່າ ເປັນອັນໃດ ອັນຫນຶ່ງ ກະໄດ້ຊື່ໆດອກ ! ວິໄລວັນ ແກ້ໂຕທັນທີ ກ່ອນຈະຈາກໄປ ນາງຍັງຫັນມາລິ່ວຕາໃສ່ຜົນ ເຊິ່ງກາຍເປັນຄົນປາກປູ້ອີກ ເມື່ອໄດ້ຍິນວ່າ ມະນີຊິໄປຕ່າງປະເທດ ໃນມື້ອື່ນ...ໂອກາດຂອງເຂົາ ຄືວ່າມີຫນ້ອຍແທ້ !

ແສງອຳໄພ ອາສາເອົາເອກະສານໂຮງຫມໍ ໄປແຈ້ງນຳພະແນກຮັບຄົນເຈັບ ເພື່ອໃຫ້ຜົນອອກໂຮງຫມໍໃນທັນທີ ມະນີສະຫວັນ ບອກໃຫ້ເຂົາກິນອາຫານ ທີ່ນາງເອົາມາຕ້ອນ ແຕ່ຜົນບອກວ່າ ເຂົາຍັງອີ່ມຢູ່ ແລະ ຕັດສິນໃຈບອກນາງທັນທີວ່າ :

- ຂ້ອຍຢາກປຶກສາວຽກບາງແນວ ກັບເຈົ້າຫລາຍກວ່າ !

- ເຂົ້າມາວຽງນີ້ ແມ່ນມີວຽກກັບຂ້ອຍຫວະ ! ມະນີສະຫວັນສໍ້ຖາມຄືນ ເມື່ອທັງສອງຍ່າງອອກມາບອກຫ້ອງ ແລະ ຢຸດລໍຖ້າແສງອຳໄພ.

- ເອີ້...ມີວຽກແດ່ ກ່ຽວກັບໄມ້ປຸກໂຮງຮຽນ ອ້າຍຄູນວ່າ ໃຫ້ມາປຶກສາກັບເຈົ້າ ຂ້ອຍບໍ່ຮູ້ຊິເຮັດແນວໃດ " ຜົນເວົ້າຄ່ອຍໆ.

- ຊັ້ນ...ເອີ້ ເຮັດແນວໃດດີເນາະ ! ເຈົ້າພັກຢູ່ໃສລະຫນີ້ ໂລດບໍ່ໄດ້ຖາມ "

- ພັກໃສ ? ມາຮອດ ກໍມານອນໂຮງຫມໍໂລດ ! ຜົນບອກນ້ຳສຽງເຂັ້ມຂຸ້ນຂື້ນ.

- ເອີ້ຊັ້ນນະ " ມະນີສະຫວັນອົດຫົວບໍ່ໄດ້ ເລີຍຫົວອິກໆ ຂື້ນ ເຮັດໃຫ້ຜົນຢາກຮ້າຍ ນາງຫົວຂ້ວນໂຊກຊາຕາເຂົາລືໃດ.

- ແສງ...ແສງ ຂ່ອຍຄຶດດູວ່າ ຊິເຊີນແຂກເຮົາໄປພັກຢູ່ໃສ ເພິ່ນມາວຽກ ເລື່ອງໂຮງຮຽນໄດຫນີ້ ! ມະນີສະຫວັນປຶກສາຫມູ່ ແຮງໆ ເມື່ອແສງອຳໄພ ຍ່າງເຂົ້າມາສົມທົບ ນ້ຳສຽງ ຂອງນາງເຄັ່ງຂຶມຂື້ນ.

- ມາຫາງການ ກໍ່ຕ້ອງໄປພັກທາງການລະບໍ... ອຸ້ຍ ອ້ອຍໂລດ ຄິດວ່າ ຕັ້ງມາຫາດ້ວຍຄວາມຄິດຮອດ " ແສງອຳໄພເວົ້າກຶງໆ ທັງຍິ້ມຢອກໃຍ ຜັນອຶກອັກ ! ຜູ້ສາວສະໄຫມນີ້ ເວົ້າຫຍັງອອກມາກຶງໆ ໂລດຫວະ ຖ້າແມ່ນຜູ້ປາກຫວານແດ່ ກໍ່ຕ້ອງບອກໄປໂລດວ່າ ມາດ້ວຍ ຄວາມຄິດຮອດ ແຕ່ສຳລັບບ່າວຜັນແລ້ວປອກບໍ່ເປັນ ແຕ່ຄວາມຈິງກໍ່ຄື ເອົາຄຶດຮອດນາງສະເຫມີ ແຕ່ຈະບໍ່ຍອມມາເດັດຂາດ ຖ້າບໍ່ມີເລື່ອງໄມ້ ຂອງໂຮງຮຽນ !

- ຢ່າເວົ້າເທາະແສງ ! ວ່າແນວໃດຊິຢູ່ຈັກມື້ ? ມະນີສະຫວັນ ຖາມຈັບຈໍ້ ຜັນບໍ່ເຂົ້າໃຈວ່າ ນາງຢາກໃຫ້ຢູ່ຫລາຍມື້ເຮັດຫຍັງ ໃນເມື່ອ ໂຕເອງກໍບໍ່ຢູ່ແລ້ວ ຈຶ່ງຕອບອອກໄປວ່າ :

- ແລ້ວວຽກ ແລ້ວກະເມືອ

- ແລ້ວເຮັດໃດ ຈຶ່ງຊິຮູ້ວ່າ ວຽກເພິ່ນຊິແລ້ວມື້ໃດລະ ! ສຽງ ຂອງນາງ ເປັນກະຟັດກະຟັດຂຶ້ນ.

- " ບັ້ນຕໍ້ ຊັ້ນໄປຫ້ອງການກັນກ່ອນເນາະ ເບິ່ງວ່າ ວຽກຂອງເຈົ້າ ມັນຊິກິນເວລາຫລາຍປານໃດ ແລ້ວຈຶ່ງວ່າກັນໃຫມ່! "ແສງອຳໄພ ຕັດສິນໃຫ້ ສອງສາວນຳເອົາບ່າວຄູ ຈາກທາດໂພ ໄປຍັງຫ້ອງການ ເຊິ່ງເຮັດໃຫ້ຜັນປະຫລາດໃຈບໍ່ຫນ້ອຍ ເພາະຫ້ອງການຂະເຈົ້າ ເປັນພຽງຫ້ອງເຮືອນສອງຫ້ອງ ຕິດປ້າຍນ້ອຍນ້ອຍ ຢູ່ເທິງປະຕູ ເປັນ ພາສາອັງກິດ ແລະ ລາວ ຫມາຍຄວາມວ່າ ຖ້າບໍ່ຍ່າງມາຮອດເຮືອນ ກໍຈະບໍ່ເຫັນປ້າຍນັ້ນດອກ ສຳພໍວ່າຖາມໃຜກໍບໍ່ຮູ້.

- ສຳນັກງານຕັ້ງໃຫມ່ ຍັງບໍ່ຮຽບຮ້ອຍປານໃດ ເຊີນນັ່ງ ອ້າຍຜັນ ! ແສງອຳໄພບອກ ຢ່າງເປັນກັນເອງ ທັງພາຍ່າງລ່ວງເຂົ້າ ໄປນັ່ງຢູ່ຕໍ່ຫນ້າໂຕ໊ະເຮັດວຽກ ຂອງນາງພາຍໃນຫ້ອງການນ້ອຍໆ ຜັນໄດ້ເຫັນ ອຸປະກອນທັນສະໄຫມຫລາຍແນວ ຕັ້ງວາງ ຢ່າງເປັນ ລະບຽບ ຜູ້ຄົນນັ່ງເຮັດວຽກມິດໆ ກັບເຄື່ອງພິມດີດໄຟຟ້າຂອງໃຜລາວ

ມະນີສະຫວັນ ດຶງຕັ່ງອີ້ມານັ່ງຮ່ວມໂຕະແລ້ວສອງສາວ ກໍນັ່ງຟັງ ຜັນອະທິບາຍບັນຫາ ອ່ານເບິ່ງໃບອະນຸຍາດເອກະສານຄຳຮ້ອງຕ່າງໆ ແລ້ວສອງສາວກໍມິດຈົ່ງງັ່ງ ແນມເບິ່ງຫນ້າກັນໄປດົນເຕີບ.

- ແບບນີ້ ມັນຕ້ອງເອົ້າຮອດ ບໍລິສັດເອງ ອະນຸມັດ ເຮົາໄດ້ກ່ອນເວລາເອົາໄດ້ສຳປະທານ ມັນບໍ່ຫນ້າຊິມີບັນຫານ່າເບາະແກ້ວ !

ແສງອຳໄພໃຫ້ຄວາມເຫັນ.

- ເຮົາກໍວ່າແນວນັ້ນ ແຕ່ຖ້າເອົາບໍ່ຢາກໃຫ້ ເອົາກໍມີສິດເພາະວ່າ ເຮົາບໍ່ໄປເອົາໄມ້ອອກ ກ່ອນເອົາໄດ້ອະນຸຍາດ.

- ແລ້ວເຈົ້າເຮັດຫຍັງຢູ່ ໄດ້ອະນຸຍາດແລ້ວ ເປັນຫຍັງບໍ່ຟ້າວໄປຕັດໂລດ ! ມະນີສະຫວັນ ຖາມຜັນຄືນ ຄືວ່າຢາກຕຳນິທີ່ເອົາຊັກຊ້າ.

- ຍາມຝົນຕັດບໍ່ສະດວກ ທັງປະຊາຊົນກໍສົນລະວົນນຳໄຮ່ ນຳນາຂະເຈົ້າຕັດໄມ້ແບບຊາວບ້ານ ຕັດໄດ້ແຕ່ຍາມແລ້ງ ພວກເຮົາ ບໍ່ມີເຄື່ອງໄມ້ເຄື່ອງມືທັນສະໄຫມ ຊິໄປປ້າ ໄປໂຄ່ນ ມື້ຫນຶ່ງຍາມດຽວແລ້ວເຖິງວ່າເລີ່ມໄປຕັດໄປເລື່ອຍແຕ່ຕອນໄດ້ໃບອະນຸຍາດໃຫມ່ໆ ຮອດດຽວນີ້ພວກເຮົາກໍອາດຊິບໍ່ທັນໄດ້ເອົາໄມ້ອອກຈາກປ່າຊ້ຳນ່າ " ຜັນ ອະທິບາຍຍາວໆ ນ້ຳສຽງບອກວ່າ ບໍ່ພໍໃຈທີ່ຖືກສາວແກ້ວຖາມຄືນແນວນັ້ນ.

- ເອົ້າໃຈ ເອົ້າໃຈ ! ຊຸ້ນແສງ ໂຕພົມຄຳຮ້ອງ ຂອງຜັນໃຫ້ເລີຍດຽວນີ້ໂລດ. ອະທິບາຍເຫດຜົນ ຄືລາວວ່ານັ້ນມາເຮົາຄິດວ່າຊິຕ້ອງ ອາໄສມືແຂງແດ່ ແລ້ວລະ ແຕ່ເຮົາມີເຫດ ມີຜົນ ນໍເນີໂຕອີງໃສ່ເອກະສານ ທັງຫມົດນີ້ ແລະ ເຫດຜົນສຸດທ້າຍທີ່ວ່າ ທາງບ້ານ ບໍ່ໄດ້ເອົາໄມ້ອອກ ຍ້ອນສາເຫດພາວະວິໄສ ບໍ່ຄວາມເປັນທຳໃນເລື່ອງນີ້ !

ຜັນເຫັນແສງອຳໄພ ເກັບເອົາເອກະສານ ທັງຫມົດແລ້ວ ເອົ້າໄປນັ່ງຕໍ່ຫນ້າ ເຄື່ອງຈັກ ຄ້າຍໆພິມດີດ ແຕ່ມີກະດານຄືໂທລະທັດ ເວລາພິມແລ້ວ ມີຕົວຫນັງສື ປາກົດເທິງກະດານນັ້ນ ບາງທັງພິມທັງອ່ານ

ເອີ້ນມະນີໄປເບິ່ງ ເວົ້າກັບແລ້ວແປງໄປນຳຄາວດຽວ ຜັນກໍເຫັນ ເຈ້ຍພິມດີດແລ້ວເປັນແຜ່ນໆ ປ່ອນອອກມາ ມະນີສະຫວັນດຶງອອກມາອ່ານແລ້ວເອົາລົງມາວາງຕໍ່ໜ້າຜັນ.

- ອ່ານເບິ່ງດູ...ແລ້ວເຊັນຊື່ໄວ້ໜີ້ " ຜັນຮັບໃບເຈ້ຍເຊິ່ງບັນຈຸເລື່ອງລາວຕ່າງໆ ທີ່ເອົາເລົ່າໄປ ຫວ່າງ ໔໐ ນາທີ ກ່ອນ ພ້ອມດ້ວຍໝາຍເລກຂອງເອກະສານອ້າງອີງ ເປັນຈຸດ ໆ ສຸດທ້າຍຂໍ້ສະເໜີຂໍແກ້ໄຂ ເພື່ອຄວາມເປັນທຳ ເອກະສານຂອງເຂົາຍາວຕັ້ງ ໓ ໜ້າປ່ອນສຸດມືບ່ອນໃຫ້ຄວາມເຫັນ ຂອງ ອົງການຕ່າງປະເທດ ທີ່ລົງໄປສຳຫລວດສະພາບບ້ານ.

- ຂ້ອຍຊິໃຫ້ຫົວໜ້າ ຂຽນຄວາມເຫັນຕ່າງຫາກ ແລ້ວຈຶ່ງເອົາເອກະສານນີ້ ໄປຫາຫົວໜ້າບໍລິສັດແດ່ ໄປຫາຫົວໜ້າກົມຢູ່ກະຊວງຂ້ອຍຄິດວ່າ ຫົວໜ້າຂ້ອຍຊິໄປເຈລະຈາໄດ້. ມື້ນີ້ລາວກໍໄປປະຊຸມລາຍງານຫຍັ້ໃຫ້ກະຊວງຮູ້ຢູ່.

- ຊັ້ນ...ເອັມໃດຈັ່ງຊິຮູ້ ?

- ໃຈຮ້ອນຕາມເຄີຍເນາະ ! ມະນີສະຫວັນ ວ່າຫົວໆ ຟັງບໍ່ອອກວ່າຕິຫລືຊົມ ຜັນແນມເບິ່ງໜ້ານາງຄັກໆ ເຫັນແກ່ນຕາດຳປີ້ ເປັນມັນຍິຍັບດ້ວຍອາລົມ ເບິ່ງນາງເບີກບານ ພໍໃຈ ໃນວຽກງານທີ່ພວມເຮັດ.

- ນີ້ນ່າ. ຜັນ ມື້ອື່ນ ຂ້ອຍຊິຕ້ອງເດີນທາງໄປສຳມະນາ ກ່ຽວກັບວຽກງານ ການພັດທະນາ ແມ່ຍິງຊົນນະບົດ ຢູ່ບາງກອກ ອາທິດໜຶ່ງ...ເລື່ອງເອກະສານໝູ່ນີ້ ແສງອຳໄພອາດຈະຊ່ອຍແລ່ນ ໄປສະເໜີແຕ່ລະຂັ້ນໄດ້ຢູ່ ແຕ່ຂ້ອຍ ກະຢາກເຂົ້າຫາອະທິບາຍເອງ. ຂ້ອຍຄິດວ່າ...

- ເຈົ້າໝາຍຄວາມວ່າ ໃຫ້ຂ້ອຍເມືອນອນຖ້າຢູ່ພຸ້ນ ຈັກທິດສອງທິດກ່ອນຊັ້ນບໍ່ ? ຜັນ ຟ້າວຖາມຄືນ.

- ກະຊັ້ນແຫລ້ວ ຊິວ່າຂ້ອຍຊິກັບມາ... ແລ່ນພຸ້ນ ແລ່ນພີ້ແດ່ ! ຜັນເຈົ້າຢ່າໃຈຮ້ອນຫລາຍຕິ ເຫັນບໍ່ວ່າ ບາງແນວມັນບໍ່ງ່າຍ

ຄືເຮົາຄຶດໃດ ນາງສັ່ງສອນກົງໆ ປານອາຈານກັບນັກຮຽນ.

- ຣື ! ຜັນຕອບໃນຮູຄໍ ຢາກເວົ້າຫຍັງ ຍາວໆກັບນາງ ແຕ່ພາຍໃນ ຫ້ອງການເຊັ່ນນີ້ ບໍ່ເໝາະສົມປານໃດ.

ຜັນຮູ້ສຶກວ່າຊີວິດໄວໜຸ່ມມີຄວາມໝາຍຂຶ້ນ ຮູ້ສຶກມີຄວາມເບີກບານໃນໃຈ ຈົນຢາກຮ້ອງເພງຜິວປາກ ເມື່ອໄດ້ຍ່າງຮຽງມະນີສະຫວັນ ເລາະລຽບຕາມຖະໜົນ ແຄມຂອງ ພາຍຫລັງທີ່ສອງສາວ ແລ້ວວຽກນຳຫ້ອງການ ພາເອົາອອກມາກິນເຂົ້າ ຢູ່ຮ້ານແຄມຝັ່ງຂອງ ແລະ ແສງອຳໄພແຍກເມືອເຮືອນຂອງນາງ.

- ມະນີ ຂ້ອຍບໍ່ຄິດວ່າ ຊີມີມື້ນີ້ອີກ ສຳລັບຂ້ອຍ ! ຜັນ ຄິດວ່າຕົນເອງເລືອກສັນຄຳເວົ້າ ທີ່ໝາຍບອກຄວາມໃນໃຈໄດ້ເລິກແລບນິ່ມນວນທີ່ສຸດແລ້ວ ແຕ່ມະນີສະຫວັນ ຄືວ່າ ບໍ່ເຂົ້າໃຈໃນ ຄວາມໝາຍຂອງມັນ ນາງຖາມສຽງຊື່ໆວ່າ :

- ມັນມີຄວາມໝາຍອີ່ຫຍັງ ສຳລັບເຈົ້າ ຢູ່ຊັ້ນຫວະ ?

- ນີ ! ຂ້ອຍຖາມແດ່ ເຈົ້າຍັງ...ຄືເກົ່າບໍ່ ? ຜັນ ກັ້ນໃຈຖາມສິ່ງທີ່ເຂົາບໍ່ແນ່ໃຈ ມະນີສະຫວັນຢຸດຍ່າງຈິກ ນາງແນມເບິ່ງໜ້າເຂົາຄືເຫລືອໃຈ ແລ້ນໃຈແນວໃດແນວໜຶ່ງ.

- ຄືເກົ່າ ? ເຈົ້າໝາຍຄວາມວ່າແນວໃດ ? ເຈົ້າຫຍັງບໍ່ຖາມແດ່ວ່າ ແມ່ຂ້ອຍເປັນແນວໃດ ? ເພິ່ນຢູ່ໃສ ຂ້ອຍຢູ່ຈັ່ງໃດ ? ເຈົ້າບໍ່ສົນເຈົ້າ...ເຈົ້າ. ສຽງຂອງນາງ ສຸດລົງແຕ່ບາດຕີນເລັ່ງຈັ້ນຂຶ້ນ ຄືວ່າບໍ່ຢາກເຫັນໜ້າຄູ່ສົນທະນາ. ຜັນຕົກໃຈ ເຂົາເລັ່ງບາດຕີນນຳນາງທັງຄວາຈັບເອົາມືກ້ານິ່ງຂອງນາງໄວ້.

- ມະນີ. ນີ...ຂ້ອຍ ! ຜັນບີບມືຂອງນາງ ທັງຮູ້ສຶກວ່າຝ່າມືຂອງນາງ ຮ້ອນອຸ່ນຮຸ່ມໆຂຶ້ນ ຄືກັບວ່າ ຄວາມຮ້ອນຮຸ່ມໃນອາລົມ ໃນຫົວໃຈຫລັ່ງໄຫລອອກມາ ຢູ່ຝ່າມື ຂອງພວກເຂົາທັງພີ້ໝົດ. ຜັນຮູ້ສຶກປອດໂປ່ງໃຈເຢັນຂຶ້ນ ໂອ ນີ້ໝາຍຄວາມວ່າ ມະນີສະຫວັນເອງ

ກໍຄິດນ້ອຍໃຈໃຫ້ເຂົາຢູ່ຄືກັນ ເຂົາບໍ່ວາງມືຮ້ອນຣຸ່ມໆ ຂອງນາງ ແລະ ນາງກໍບໍ່ຟິດມືອອກ. ບ່າວຄູບ້ານບອກ ສວຍໂອກາດຈູງມືສາວມາແຕ່ ປະເທດນອກ ເຂົ້າໄປນັ່ງຮ້ານນ້ອຍ ຂາຍນ້ຳໝາກພ້າວ ມະນີສະຫວັນ ຟ້າວຖົກມືອອກ ໜ້າແດງຮືນເມື່ອຮູ້ສຶກວ່າ ມີຄົນແນມເບິ່ງ.

- ກິນນ້ຳໝາກພ້າວເນາະ ! ຜັນຖາມ ທັງໆທີ່ ຮູ້ວ່າ ເມື່ອນັ່ງລົງ ຕັ່ງນ້ອຍນີ້ແລ້ວ ຕ້ອງສັ່ງນ້ຳໝາກໄມ້ອັນນີ້.

- ກະໄດ້ ! ນາງຕອບສຽງງອນໆ ຄ້າຍໆ ຕອນຮູ້ຈັກກັນໃໝ່ໆ ຜັນຍິ້ມໃຫ້ຕົນເອງ ແລະ ແນມເບິ່ງສາວຄົນງາມ ດ້ອຍອາລົມເບີກບານ ຍິ່ງກວ່າເທື່ອໃດໆ

- ຫົວຫຍັງ ? ຖາມຢ່າງຊິເອົາເລື່ອງເອົາລາວ ແສງຕາ ຂຽວຂຶ້ນ.

- ກິນນ້ຳໝາກພ້າວກ່ອນມະນີ ! ຜັນອາລົມດີ ຈົນຢາກເວົ້າ ຢອກໃຍນາງ ປານວ່າບໍ່ເສີຍມີແນວຂັດໃຈກັນມາກ່ອນ.

- ຂ້ອຍມີແນວຖາມເຈົ້າ ຈົນບໍ່ຮູ້ວ່າ ຊິຂຶ້ນຕົ້ນແນວໃດ ຢ້ານເຈົ້າ ບໍ່ມີເວລາຕອບ ພໍ້ຍາມໃດກໍມີແຕ່ຟ້າວກັບຟ້າວ.

- ເຈົ້າເວົ້າປານວ່າ ຊິຖາມຍືດຍາວ ໃຊ້ເວລາເປັນມື້ເປັນເວັນ ! ສາວນາງຕອບທັງຫລົບແສງຕາຂອງຝ່າຍຊາຍ ທີ່ຈໍ້ງແນມເບິ່ງ ຢ່າງບໍ່ບິດເບືອນໄປທາງອື່ນ.

- ແຕ່ໄດ້ເຫັນໜ້າເຈົ້າແລ້ວ ຂ້ອຍຊໍ້າບໍ່ກ້າ ບໍ່ຢາກຮູ້ຢ້ານ... ເອີ... ແມ່ເປັນແນວໃດ ນີ ? ເພິ່ນຢູ່ນຳໃຜຄຣອນີ້ ? ຜັນປ່ຽນ ຫົວຂໍ້ເວົ້າຢ່າງປຸບປັບ ຄືຢ້ານວ່າ ຄວາມເວົ້າຕາມ ຫົວໃຈຂັບຊານັ້ນ ຈະເປັນການຂາຍໜ້າເກີນໄປ. ມະນີສະຫວັນ ເບີກຂຶ້ນຕາ ອ່າວໜາ ຂອງນາງຂຶ້ນ ປະສານແສງຕາ ອັນອາວທວານຂອງນາງ ກັບຜັນ ຢ່າງເຊື່ອໝັ້ນຕົນເອງ.

- ແມ່ຍັງພັກຢູ່ກັບເອື້ອຍຕຸ້ມ... ອາການຂອງເພິ່ນທໍາມະດາ ຖ້າບໍ່ມີແນວເປັນຫ່ວງເປັນໃຍ.

- ແລ້ວ...ມີມາແຕ່ຫວ່າງໃດ ດົນປານໃດແລ້ວ ? ຜັນ ຕັ້ງຄໍາຖາມຕໍ່ທັນທີ.

- ມາໄດ້ຕັ້ງ ໔ ປີແລ້ວ...ເມືອສະຫວັນ ຖາມໃຜກະບໍ່ຮູ້ວ່າເພິ່ນໄປຢູ່ໃສ ພໍດີ ບ້າສາວບອກມາຢູ່ນໍາ ພວກຫມູ່ເພິ່ນ ມາຕັ້ງ ອົງການພັດທະນາ. ທັງເຮັດວຽກ ທັງໄປຮຽນພາສາກັບຄອມພິວເຕີພ້ອມເກືອບຕາຍ ນີ້ ກໍ່ຫາເສັງໄດ້ໃບປະກາດ ພາສາອັງກິດກັບຄອມພິວເຕີ ຈຶ່ງພໍເວົ້າໄດ້ໄອດັງແດ່. ເພິ່ນວ່າຊິໃຫ້ໄປທັດສະນະສຶກສາ ຫລືວ່າອົບຮົມລະຍະຍາວອີກ ຖ້າວ່າ ຂ້ອຍມັກວຽກງານປະເພດນີ້ຢູ່ ! ມະນີສະຫວັນ ເວົ້າຍືດຍາວເປັນເທື່ອທໍາອິດ ທັງແນມເບິ່ງຫນ້າຜັນດ້ວຍສາຍຕາແປກຕ່າງ.

- ມາຕັ້ງວ່າສອງປີແລ້ວນໍ້ ! ຈັ່ງແມ່ນຂ້ອຍ ເອີ້ ຄັນຂ້ອຍຮູ້ຂ້ອຍຄືຊິບໍ່...

- ຢ່າ...ຢ່າຜັນ ຢ່າເວົ້າແນວນັ້ນ ! ຮູ້ບໍ່ວ່າ ຂ້ອຍດີໃຈທີ່ໃດທີ່ໄດ້ພໍ້ເຈົ້າຢູ່ຫາດໂພ ບ້ານປາຂາດອນ ບ່ອນພໍ່ແມ່ປະຊາຊົນ ຕ້ອງການຂ້ອຍດີໃຈແທ້ໆ ໄດ ເຈົ້າເຊື່ອບໍ່ ! ນ້າສຽງຂອງນາງຈິງຈັງ ເດັດດ່ຽວ. ຜັນບໍ່ຢາກເຊື່ອຫູຕົນເອງເລີຍ ຊັ້ນແສງຕາແປກປະຫລາດ ຂອງນາງນັ້ນມັນແປວ່າແນວໃດ ເອົາອ່ານແສງຕານາງບໍ່ຖືກເລີຍ ແວວຫວານໃນແກ່ນຕາ ຂອງນາງບໍ່ໄລ່ປາກົດໃຫ້ເຫັນງ່າຍໆດອກ ເພາະມະນີສະຫວັນ ບໍ່ແມ່ນຄົນເຈົ້າຊູ້ ປາກຫວານເອົາໃຈຄົນບໍ່ເປັນດອກ ຖ້າບໍ່ຖືກໃຈ ພໍໃຈແທ້ແທ້.

- ມະນີ...ຊັ້ນເຮົາຍັງເປັນ. ເອີ້ເປັນຫມູ່ກັນ ຄືເກົ່າແມ່ນບໍ່ ? ຜັນຕັ້ງຄໍາຖາມໂງ່ໆ ອອກໄປອີກ.

- ເຈົ້າເປັນພໍ່ລະ ? ເປັນໝູ່ ໝາຍຄວາມວ່າ ແຕ່ລະຄົນຕ້ອງຈິງໃຈຕໍ່ກັນ ຊື່ສັດຕໍ່ກັນ ຫວັງດີຕໍ່ກັນ. ມະນີສະໝອນ ຖາມຄົນທັນທີທັງຈົ້ງແນມເບິ່ງໜ້າຜັນ ກ່ອນຈະເນັ້ນປະໂຫຍກຕໍ່ມາວ່າ " ໂດຍສະເພາະແລ້ວ ຕ້ອງນັບຖື ແລະ ໄວ້ເນື້ອເຊື່ອໃຈກັນນໍາ !

- ອື...ອື...ນິຫລາຍແບວເບາະຊັ້ນ ເອົາເປັນເອື້ ແຟນສານິຫລາຍອີ້ບໍ່ ?

- ບ້າ ! ກ່ອນຊິເປັນແຟນໄດ້ ຕ້ອງເປັນໝູ່ທີ່ດີ ກັນກ່ອນ !

- ຊັ້ນພວກເຮົາເປັນໝູ່ກັນ...ເອີ້ ໄດ້ຈັກປີແລ້ວ ?

- ສອງອາທິດ... ນັບແຕ່ມື້ອ້ອຍໄປເຫັນເຈົ້າຢູ່ເຮືອນປ້າພອນມາເຫັນເຈົ້າວິນກັບໄມ້ປຸກໂຮງຮຽນ.

- ຊັ້ນ ສາມປີກ່ອນພັ້ນເດ້ ບໍ່ນັບຫວະ ?

- ບໍ່...ຈາວກັບສາມປີ ທີ່ເຈົ້າເຮັດໃຫ້ອ້ອຍຖາມຫາທໍ່ອທີບ !

- ເອີ້... ບໍ່ໜ້າເຊື່ອ ປະເທດລາວເຮົາກວ້າງໃຫຍ່ໄພສານ ຈົນຄົນຊອກຫາກັນບໍ່ພໍ້ ປານນີ້ຫວະ ?

- ມີແຕ່ອ້ອຍຫວງຫາວຖາມຫາເຈົ້າ ແລ້ວເຈົ້າລະ ເຄີຍສົ່ງຂ່າວເຄີຍຖາມຫາອ້ອຍບໍ່ ? ບໍ່ເຄີຍເລີຍແມ່ນບໍ່ລະ !

- ມະນີ...ອ້ອຍ ອ້ອຍ ຂໍໂທດແທ້ໆໄດ ອ້ອຍຕັ້ງເຫງົາ ອີ່ຫລີໄດ...ອ້ອຍຢາກເຂກຫົວໂຕເອງພຸ້ນບ່າ !

- ພໍລະ ໆ ...ເອົາໄວ້ຈັກສອງອາທິດ ອ້ອຍຊິນໍາໄປເຂກດອກ !

ລາງຮ້າຍໃນຍາມຄອຍ

ສອງ ອາທິດຜ່ານໄປ ຢ່າງໄວວາ ສຳລັບຂ່າວຄູຜົນຜູ້ເຕັມປຽມດ້ວຍ ຄວາມຫວັງ. ເມື່ອປີກສາຫາລືກັບອ້າຍຄູນແລ້ວ ຜັນກໍຈັດຫນ່ວຍຕັດໄມ້ກຽມໄວ້ ເພາະໄມ້ ໔໐ ຄິວນີ້ຄິດໄລ່ເບິ່ງແລ້ວ ເປັນຕົ້ນໄມ້ຮອດເກືອບ ໒໐ ຕົ້ນ ກວຽນ ຂວານເລື່ອຍຖືກຈັດເອົາບັນຊີ ຂອງແຕ່ລະຫນ່ວຍອອກແຮງງານມີການຄາດຫມາຍວ່າ ທຸກໆວັນສິນໃດ ຈະມີແຮງງານປະມານ ໒໐ ຄົນອອກໄປຖາງປ່າ ຖາງທາງ ສຳລັບລາກໄມ້ມາເລື່ອຍ ຢູ່ແຄມປ່າຕີນບ້ານ ເພາະຖ້າໄປເລື່ອຍປະໄວ້ກາງດົງ ຢ້ານມີຄົນບ້ານອື່ນມາລັກໄປ. ວຽກງານກະກຽມ ໄດ້ລົກແນ່ປານນີ້ແລ້ວ ຜັນກໍຊຸ່ວງໃຈແຕ່ໃນຕອນບ່າຍມື້ຫນຶ່ງ ກໍມີແຂກແປກຫນ້າ ລ່ອງເຮືອແຕ່ເມືອງມາຫາປ້າພອນຢູ່ເຮືອນ ເວົ້າລືມກັນບໍ່ດົນ ປ້າພອນ ກໍບອກ ລູກຫຼານເດັກນ້ອຍ ໃຫ້ໄປເອີ້ນຄູຜັນ ຢູ່ໂຮງຮຽນມາທັນທີ.

- ເພິ່ນມາແຕ່ເມືອງ... ແມ່ປ້າວ່າ ໃຫ້ອ້າຍຄູ ເມືອລົມນຳເພິ່ນດຽວນີ້ ! ຜັນບໍ່ຊັກຊ້າ ຂຽນບົດໂຈດເລກ ໃຫ້ເດັກນ້ອຍ ແລ້ວກໍຟ້າວຍ່າງກຸ່ນໆ ມາເຮືອນ ທັງຄິດເດົາວ່າຄົງມີຂ່າວດີ "ຈາກມະນີສະຫວັນ". ຊາຍແປກຫນ້າ ຜູ້ມາເປັນແຂກຍາມບ່າຍ ມີທ່າທາງບໍ່ຫນ້າໄວ້ໃຈເລີຍ ແສງຕາໄວ ລັອກແລັກ ເຫລືອດພຸ່ນເຫລືອດພໍ ຄືຢາກສຳຫລວດກວດກາ

ທຸກແບວ. ເຂົາບຸ່ງເຄື່ອງເກົ່າຫມາງ ຜິວດຳກ່ຳ ທັງຈິ່ງຫນວດ ປົກຣິມສົບດ້ານເທິງ ຜົມແຊມດອກເລົາອ່າວຍາວ ຄືຄົນຢູ່ປ່າຢູ່ດົງ.

- ສຳບາຍດີອາວ ! ຜົນຫ້ວງຂຶ້ນກ່ອນ ເມື່ອປ້າຍກົ້ນນັ່ງ ເທິງຕຽງສະແນບ ກ້ອງໃຕ້ລ່າງ ບ່ອນປ້າພອນໃຊ້ເປັນບ່ອນຮັບແຂກ ຂະນະທີ່ລາວຖອຍລົງໄປນັ່ງເຂັນຝ້າຍຕໍ່ ແຕ່ຫູກໍ່ຫາກຫວ່ຽງຟັງການສົນທະນາຂອງລູກຮັກ ກັບແຂກແປກຫນ້າ ທີ່ບໍ່ລໍຖ້າໃຫ້ ເສຍເວລາ ພໍຮູ້ວ່າ ເດັກນ້ອຍຮຸ່ນລູກຜູ້ນີ້ ແມ່ນຜູ້ທີ່ຕ້ອງການພົບຈິ່ງເວົ້າຂຶ້ນໂລດວ່າ :

- ຂ້ອຍມາແຕ່ບໍລິສັດຂຸດຄົ້ນໄມ້ "ສີສອນແກ້ວ" ໄດ້ຂ່າວວ່າ ເຈົ້າມີໃບອະນຸຍາດຕັດໄມ້ໃນເຂດສຳປະທານເຮົາ ຈິ່ງຢາກຕົກລົງນຳ.

- ຕົກລົງແນວໃດອາວ ? ຜົນເຮັດບໍ່ເຂົ້າໃຈ ສະຫມອງຂອງເຂົາເລີ່ມຄິດເດົາເລື່ອງລາວ ທີ່ຄົນຂອງບໍລິສັດ ຈະນຳມາ ສະເຫນີ.

- ເວົ້າກັນງ່າຍໆສາເນາະ ຄືວ່າເຮັດແນວໃດ ໄທບ້ານ ນີ້ກໍບໍ່ມີສິດແຕະຕ້ອງໄມ້ ໃນເຂດສຳປະທານໄທເຮົາແລ້ວ ແຕ່ຍ້ອນວ່າ ທາງບໍລິສັດຄິດເຫັນໃຈວ່າ ທາງພີ້ໄດ້ມີແຜນລ້າ ແຜນການໄວ້ແລ້ວ ກໍບໍ່ຢາກໃຫ້ເສຍຜົນປະໂຫຍດ !

- ບໍ່ມີໃຜໄດ້ ຫລືເສຍຜົນປະໂຫຍດດອກອາວ... ໄທບ້ານເຮົາຢາກໄດ້ໄມ້ ມາປຸກໂຮງຮຽນ ໃຫ້ລູກຫລານມີບ່ອນນັ່ງຮຽນ.

- ເຂົ້າໃຈແລ້ວ ເຂົ້າໃຈແລ້ວ ກະຫັ້ນລະ ຜົນປະໂຫຍດນະ ! ພວກເຮົາເລີຍຢາກເວົ້າແນວນີ້ ແຈ້ງໆ ໂລດລະໄປ ຫລານເອົາໃບອະນຸມັດຕັດໄມ້ ໔໐ ຄິວ ນັ້ນໃຫ້ພວກເຮົາ ແລ້ວພວກເຮົາຊິເອົາໄມ້ເລື່ອຍແລ້ວ ໃຫ້ ໑໐ ຄິວ ມາໃຫ້ ປຸກໂຮງຮຽນ !

- ໑໐ ຄິວ ! ຜົນກັດແຂ້ວ ມຶດຈັງງັງໄປ... ປ້າພອນ ແນມເບິ່ງຫນ້າລູກຮັກ ຂອງລາວດ້ວຍຄວາມເປັນຫ່ວງ ລາວຫັນໃຈຊ່ວງເມື່ອເຫັນວ່າ ອ້າຍຄູລູກຮັກ ທັວໃສ່ຫນ້າແຂກຢ່າງອ່ອນນ້ອມ.

- ໂທ້ ອາວເອີຍ ເລື່ອງນີ້ ບໍ່ແມ່ນຫລານຜູ້ດຽວ ຕັດສິນໄດ້ ເພາະແມ່ນໂຮງຮຽນຂອງຫມົດບ້ານ ທັງຫລານກໍ່ບໍ່ຊ່າງຊິຄິດໄລ່ຖືກ ວ່າໄມ້ ໑໐ ຄິວ ຊິເອົາປຸກໂຮງຮຽນໄດ້ຈັກຫ້ອງ ! ເຫັນໄດ້ລັກວ່າ ຄຳຕອບຂອງຜັນ ເຮັດໃຫ້ແຂກປູ້ຄຳເວົ້າ ຜັນເຫັນໄດ້ທ່າ ຈຶ່ງສໍ້ຄືນ ວ່າ :

- ຂໍໂທດພໍ່ອາວ... ຜູ້ຈັດການບໍລິສັດ ຂອງອາວນັ້ ເປັນຜູ້ສົ່ງ ອາວມາເລື່ອງນີ້ນະ !

- ບໍ່...ບໍ່ ! ເວົ້າຫນີ້ຢຽບຖືມຫນີ້ເດີ້ ! ພວກເຮົານີ້ລະ ຄິດເຫັນໃຈ ໄທບ້ານເຮົາເອງ ຢ້ານບໍ່ໄດ້ໄມ້ຈັກຄິວຊ້ຳບ່າລັບເລື່ອງນີ້ ຂຶ້ນຮອດ ຜູ້ຈັດການ ເຖົ້າແກ່ໃຫຍ່ບັກນີ້ ມັນບໍ່ມີທາງຊິເຫັນໃຈໄທເຮົາດອກ ແຕ່ຖ້າຫລານຕົກລົງ ພວກເຮົາຊິຫາວິທີໃຫ້ຊັ້ນບ່າ. ໑໐ ຄິວ ຍັງດີກວ່າບໍ່ໄດ້ຫຍັງເລີຍ ! ຜັນຕ້ອງອິ່ມໃຈ ກັບອາລົມໂທໂສໄວ້ ຄຶດເຫັນ ຄຳເວົ້າຕຳນິແກມຕໍ່ວ່າ ຂອງ ມະນີສະຫວັນ " ໃຈຮ້ອນຕາມເຄີຍ ເນາະ ! "

- ເອົາຊີສາພໍ່ອາວ... ເລື່ອງນີ້ ເປັນເລື່ອງຂອງຫມົດບ້ານ ຄື ຫລານວ່ານັ້ນລະ ຫລານເປັນພຽງຄູສອນມາຢູ່ຫນີ້ຊື່ໆ ບໍ່ມີສິດຕັດສິນ. ແນວຢາກໄດ້ ກໍຢາກໄດ້ຄືກັບທຸກຄົນທັ້ນລະ ຄືຮູ້ນຳກັບນັ້ນແລ້ວ... ຫລານຊິຂໍປຶກສາຫາລື ນຳຄະນະປົກຄອງບ້ານກ່ອນ ຂໍໂທດອາວຊື່ ຫຍັງເນາະ ?

ແຂກແປກຫນ້າສະແດງທ່າທີບໍ່ເຕັມໃຈ ວາດໃດວາດຫນຶ່ງ ແຕ່ເມື່ອເຫັນທ່າທີຊື່ໆ ຂອງບ່າວຮຸ່ນລູກ ກໍຈຳຕ້ອງບອກໄປ

- ອາວຊື່ຜາ...ຄຳຜາ ຖາມຄົນຢູ່ບໍລິສັດ ເຂົາຮູ້ຫມົດດອກ ! ຫາງສຽງຄຳເວົ້າຕອບສຸດປະໂຫຍກແຂງຂຶ້ນ.

- ຜະແຫນກໃດລະອາວ ? ຜັນສໍ້ຖາມຕື່ມ ນ້ຳສຽງ ແລະ ສີຫນ້າ ເສີຍຊື່ ຄືບໍ່ເອົ້າໃຈ ໃນເຈດຕະນາແຫ່ງຜູ້ມາຢ້ຽມຢາມ.

- ພະແນກບັນຊີ ຖາມໃຜກະຮູ້ບ່າ ! ຄຳຜາເວົ້າຢ້ຳ ຄື ຢາກບອກ ເຕືອນຄູ່ສົນທະນາ.

- ອາວຄຳຜາ ຢູ່ພະແໜກບັນຊີເນາະ ດີແລ້ວຊັ້ນມີຫຍັງ ຫລານຊິເອົ້າໄປຫາເດີ້ ! ຜັນເວົ້າຄືວ່າເລື່ອງລາວທຸກຢ່າງ ທີ່ຈະລົມກັນ ຫມົດເທົ່ານັ້ນ ແຕ່ແຂກແປກໜ້າ ຊ້ຳຍັງອິດເອື້ອນ ໃນທີ່ສຸດກໍ່ຕັ້ງ ຄຳຖາມ ທີ່ເຮັດໃຫ້ບ່າວຄູຜັນ ສະດຸ້ງວ່າ :

- ເອີ້...ອາວຢາກຂໍເບິ່ງໃບອະນຸມັດຕັດໄມ້ ຂອງພວກຫລານ ແມ່ນເຊັນມາແຕ່ຂັ້ນໃດແທ້!

- ໂອ້ຍອາວຜາກະດາຍ ໃຜຊິໃຫ້ຫລານຮັກສາ ໜັງສືສຳຄັນ ແນວນັ້ນໄວ້ ! ແລ້ວຜັນກໍຫົວ ແລະ ເອີ້ນດັ່ງໃສ່ ປ້າພອນ ຜູ້ຫົວໃຈເຕັ້ນ ຕຶກໆ ຫວ່ຽງຫູຟັງນຳທຸກຄວາມວ່າ " ເນາະແມ່ເນາະ ".

- ເອີ້...ເອີ້ ກະຊ່າງວ່າ " ປ້າພອນ ເອີໄປນຳທັງຄິດບໍ່ມັກຊາຍ ຮຸ່ນກາງ ຜູ້ຊື່ວ່າຄຳຜາ ແສງຕາເປັນມັນຍິບຍັບ ສະແດງຄວາມ ຕ້ອງການຮຸນແຮງປາກົດອອກມາເປັນຄັ້ງຄາວ.

- ເອົາຊັ້ນສາບໍ່ອາວ ແລ້ວຫລານຊິໄປສິ່ງຂ່າວ " ຜັນເວົ້າເນັ້ນ ທຸກຖ້ອຍຄຳແລ້ວລຸກຂຶ້ນຢືນ " ຊິໄດ້ກັບໄປໂຮງຮຽນ ເບິ່ງເດັກນ້ອຍ ກ່ອນເດີແມ່ ເມື່ອດີເດີ້ອາວ ! " ຜັນຍ່າງນຳມາສົ່ງແຂກ ຮອດແຄມຮົ້ວ ແລ້ວເອົາກໍຍ່າງລຸດໆ ໄປທາງເກົ່າ ແຕ່ບໍ່ທັນຮອດໂຮງຮຽນດອກ ຊາຍຫນຸ່ມແວ່ເອົ້າກ້ອງໃຕ້ລ່າງເຮືອນໃຫຍ່ ບ່ອນມີກີ່ຕ່ຳຫູກ ແລະ ແມ່ຍິງສອງສາມຄົນ ນັ່ງປັ່ນຝ້າຍລົມກັນທັງຫົວອິກໆ ຢູ່.

- ຈັນ ພໍ່ຢູ່ບໍ່ ? ຜັນຖາມຈັນເພັງ ລູກສາວອະດີດປະທານບ້ານ ທັງເປັນຄະນະຊາວຫນຸ່ມ. ຈັນເພັງ ແນມເບິ່ງໜ້າບ່າວຄູ ເຊິ່ງເປັນ ຕື່ນໆ ວາດໃດວາດໜຶ່ງ ນາງເປັນສາວງາມ ປະຈຳບ້ານ ທັງເປັນທີ່ ໝາຍປອງ ຂອງອ້າຍບ່າວຫລາຍຄົນ ແຕ່ສອງປີກວ່າມານີ້ ຄື ນັບແຕ່ ບ່າວຄູຜັນມາປະຈຳຢູ່ບ້ານ ສາວຈັນເພັງ ບໍ່ຍອມລົມໃຜ ເຮັດໃຫ້

ອ້າຍບ່າວ ໄທບ້ານຫລາຍຄົນ ຄິດອິດສາຜັນ ແຕ່ຜັນ ບໍ່ຍອມຮັບຮູ້ເລື່ອງນີ້ ເອົາຈະບໍ່ເວົ້ານຳຈັນເພັງເລີຍ ຖ້າບໍ່ແມ່ນເລື່ອງວຽກຂອງບ້ານ ແຕ່ເທື່ອນີ້ ຜັນບັກຫນ້າມາຖາມ ທ່າທາງຟ້າວຟັ່ງ.

- ບໍ່ຢູ່ບ່າອ້າຍຜັນ ເພິ່ນໄປເມືອງພຸ້ນເດ້ ມີຫຍັງຫວະ ? ເບິ່ງ ຊຸ ່ງອ້າຍຟ້າວໆ.

- ມີຄົນມາຫາອ້າຍ ທ່າທາງແປກໆ ບໍ່ເປັນຕາໄວ້ໃຈ ຢາກໃຫ້ເພິ່ນເຫັນວ່າ ບໍ່ຮູ້ວ່າມາແຕ່ບໍລິສັດໂຮງເລື່ອຍໃດແທ້.

- ຢູ່ໃສ...ຂ້ອຍເບິ່ງກະໄດ້...ຄົນອື່ພໍ່ຮູ້ຂ້ອຍກະຮູ້. ຜັນພາຈັນເພັງແລ່ນເລາະມາຫາທ່ານ້ຳ ຫມົ້ນເຂົ້າພົງຫຍ້າ ບັງພຸ່ມໄມ້ຫນາມ ທັນເຫັນເຮືອຫາງຍາວຕິດຈັກ ພາຜູ້ຊາຍຊື່ຄຳຜາທ່າງສາຍຕາອອກໄປ.

- ຊື່ຄຳຜາ ເນາະ ເອີ້ ຄືຄຸ້ນໆຫູຢູ່ ! ຈັນເພັງ ແນມນຳຟອງນ້ຳແຕກຈ່ານ ຕາມແຮງຈັກ ດ້ວຍແສງຕາລັ່ງເລ ແຕ່ຄິດຫຍັງບໍ່ອອກ ນາງຕື່ນເຕັ້ນ ແລະ ດີໃຈທີ່ມີໂອກາດຢູ່ໃກ້ ອ້າຍຄູຜັນ ເລືອດສາວໄວ ຊຸ າວ ແລ່ນຂຶ້ນຫນ້າ ຈົນພວງແກ້ມແດງອ່ອງຕ່ອງ ເມື່ອປະສານຕາກັບບ່າວຜັນ ເຊິ່ງຍ້ອນຄວາມຟ້າວ ຫວ່າງ ສອງ ສາມ ນາທີກ່ອນ ພາກັບຫມົ້ນເຂົ້າພຸ່ມຫຍ້າຂີວ ແລະ ຫຍ້າຫນາມ ບາດຊິອອກເມືອ ໂລດບໍ່ມີໃຜກ້າຫມົ້ນກ່ອນ.

- ໃບໄມ້ຕິດເຕັມຜົມ... ຕາຍລະ ຄົນຊິວ່າ ເຮົາຫມົ້ນເຂົ້າມາຫຍັງໄປອອກໄປ" ຈັນເພັງທັງເວົ້າ ທັງຫົວ ເຮັດໃຫ້ຜັນຊວາດຮູ້ເມື່ອຕາຍແລ້ວ ຖ້າມີຄົນມາພໍ້ ເອົາຊິຄິດແນວໃດທັງສອງຫມົ້ນພຸ່ມຫຍ້າອອກມາຫວິດ ກໍພໍດີ ຄະໂນະກັບ ທິດແກ່ນ ອ້າຍບ່າວເທີ່ມຄົນຫນຶ່ງຂອງບ້ານ.

- ອ້າວ ສອງຄົນນີ້ຫມົ້ນເຂົ້າປ່າເຮັດຫຍັງ ? ທິດແກ່ນ ຖາມຢ່າງເອົາເລື່ອງ ເພາະຈັນເພັງແມ່ນຍິງສາວ ທີ່ລາວເຝົ້າແຍງມາຕັ້ງແຕ່ນາງຊອນສາວ ເອົາຈັ່ງທັນຈັ່ງເພນໄປວັດ ອ້າຍທິດ

ຮ້ອນຜ້າເຫລືອງ ຈຶ່ງຂໍລາສິກ ພະຍາຍາມສ້າງຖານະ ສ້າງຊື່ສຽງ ດ້ວຍການຮັບພາລະຫນ້າທີ່ຂອງບ້ານທຸກແບວ ເຮັດວຽກທຸກຢ່າງ ຢ່າງເອົາເປັນເອົາຕາຍ ແຕ່ຈັບເພັງຄົນງານ ຊ້ຳບໍ່ສົນໃຈໃຍດີ ເຮັດໃຫ້ ທິດແກ່ນຊ້ຳໃນ... ໄຂແຕ່ວ່າ ອັບທ້າວຄູຜັນນີ້ແຕ່ໃດໆມາ ບໍ່ເຄີຍວ່າ ຊິເວົ້າຊິລົມສາວໃດ ແຕ່ມື້ນີ້ ດຽວນີ້ ທິດແກ່ນ ເຫັນກັບຕາວ່າ ບ່າວສາວ ທັງສອງ ຫນີ້ບອອກມາແຕ່ພຸ່ມໄມ້ ແຄມນ້ຳກາງເວັນແສກໆ.

- ບ້າແທ້ ອ້າຍທິດ ພວກຂ້ອຍເຂົ້າໄປ ເບິ່ງເຮືອລຳນັ້ນບ່າ... ອອກໄປຫວ່າງຫນຶ່ງ ເຈົ້າບໍ່ໄດ້ຍິນສຽງຈັກຫວະ ອ້າຍຜັນ ໄປເອີ້ນ ໃຫ້ຂ້ອຍມາເບິ່ງວ່າ ຮູ້ຈັກບໍ່ ? ຈັບເພັງ ຟ້າວອະທິບາຍຄວາມຈິງທັນທີ ເພາະແນ່ໃຈວ່າ ເລື່ອງທີ່ເກີດຂຶ້ນຫວ່າງກີ້ ຈະບໍ່ເປັນຄວາມລັບອີກຕໍ່ໄປ. ສີຫນ້າຂອງທິດແກ່ນ ເປັນເຄິ່ງໆກາງໆ ຈະບໍ່ເຊື່ອ ຫລື ຕົນເອງ ກໍໄດ້ຍິນສຽງເຮືອຈັກແລ່ນທ່າງອອກໄປກັບຫູຄືກັນ.

- ລາວຊື່ວ່າ ຄຳຜາ ອາຍຸຊິຫມົງ ໔໐ ກວ່າ-໔໐ ນີ້ລະ ວ່າ ຢູ່ບໍລິສັດໂຮງເລື່ອຍ..." ຜັນອະທິບາຍຕໍ່ ທັງອອກຢ່າງເປັນການຊວນ ທິດແກ່ນຍ່າງໄປນຳ ມັກບໍ່ມັກ ທິດແກ່ນກໍແມ່ນແຮງສຳລັບຜູ້ຫນຶ່ງ ລາວເປັນຫົວຫນ້າຫນ່ວຍເລື່ອຍໄມ້ຫນ່ວຍຫນຶ່ງ.

- ຄຳຜາ ? ຄົນແຫລ້ ໆ ຈຶ່ງຫນວດນັ້ນບໍ້ ? ທິດແກ່ນຖາມຄືນ.

- ເອີ້...ເອີ ແມ່ນລະບໍ້ອ້າຍທິດ ເຈົ້າຮູ້ຫວະ ? ຜັນຖາມ ດ້ວຍ ຄວາມດີໃຈ.

- ຮູ້ແທ້ຮູ້ວ່າ. ໃສໆ ລາວມາວ່າຫຍັງແດ່ ! ຜັນເລົ່າເລື່ອງ ທຸກຢ່າງ ໃຫ້ທິດແກ່ນຟັງ ຍົກເວັ້ນ ການຂໍເບິ່ງໃບອະນຸມັດຕັດໄມ້ ຂອງ ຊາຍແປກຫນ້າ.

- ໂອ້ຍ ອີ່ຕານີ້ ລາວຖືກບໍລິສັດໄລ່ອອກຕັ້ງ ໔-໕ ເດືອນແລ້ວ ລະ ລາວເປັນນາຍບັບຊີແທ້ ແຕ່ປາກົດວ່າມີບັນຫາໄດ ! ລາວຄືຊິມີ ແຜນ ! ທິດແກ່ນໃຫ້ຄວາມເຫັນຢ່າງກົງໄປກົງມາ ເຮັດໃຫ້ ຜັນຫມັ້ນໃຈ

ວ່າ ອະນາຄົດໄນ້ ໔໐ ຄືວ ຂອງເຮົາ ບັບນີ້ນັບຈະສັບສົນເອົ້າ.

- ອ້ອຍວ່າ ນີ້ແລງນີ້ ເຮົາລືມກັບຈັກໜ່ອຍນັ້ ອ້າຍແກ່ນ ສົງໄສວ່າ ພວກເຮົາຊິມີວຽກດ່ວນແລ້ວລະ! ຜົນສັ່ງຄວາມນຳທິດແກ່ນ ແລ້ວຢ່າງກັບທາງເກົ່າ ປ່ອຍໃຫ້ທິດແກ່ນ ຍ່າງເມືອນຳຈັບເຜີງ. ທິດແກ່ນ ພໍໃຈ ທີ່ຜົນຫລີກທາງໃຫ້ຢ່າງປິດແປນ.

- ຈັນ... ມື້ແລງປະຊຸມເຮືອນອ້າຍເດີ້ ໄປເປັນມືອ່ອນໃຫ້ແດ່ ທິດແກ່ນບໍ່ຍອມໃຫ້ເສຍເວລາ.

- ເຮີ... ອ້ອຍເປັນຮອດຫົວໜ້າໜ່ວຍຊາວໜຸ່ມແລ້ວເດີ້ ອ້າຍທິດ ບໍ່ມີໜ້າທີ່ເຮັດ ມືອ່ອນມີແຂງນຳໃຜແລ້ວ ໜ້າທີ່ອ້ອຍ ແມ່ນ ໄປປະຊຸມຄືກັນ. ຮັບຮອງວ່າໄປແນ່ນອນ ! ຈັນເຜີງທັ່ງດັງໃສ່ ທັງເວົ້າ ສວນທັນທີ. ດຽວນີ້ ນາງບໍ່ຄິດເກງໃຈ ຫລື ຢ້ານພວກຜູ້ຊາຍ ວ່າໃຫ້ ອີກແລ້ວ. ຄະນະຜູ້ແທນ ແມ່ຍິງຊຸດແລ້ວ ທີ່ມີເອື້ອຍແກ້ວ ກັບເອື້ອຍ ແສງ ມານຳນັ້ນ ໄດ້ເຮັດແບບຢ່າງອັນດີຂອງການຊົມໃຊ້ສິດ ສະເໝີພາບ ລະຫວ່າງຊາຍຍິງຮຸ່ນໃໝ່ ໃຫ້ເບິ່ງອັນໜຶ່ງ ເຊິ່ງ ຈັນເຜີງກໍ່ຢາກເຮັດນຳຄືກັນ ນັ້ນຄື "ບໍ່ເປັນ ສາວເຫຍັ້ນເຫລົ້າ ແລະ ດື່ມເຫລົ້າ ຢ່າງບໍ່ມີອັດຕາອີກ".

- ໃຫ້ ເສຍກຽດຫລາຍຫວະ ເປັນມືອ່ອນທັ້ນ ! ທິດແກ່ນບໍ່ຍອມ ລາວຍ່າງນຳເມືອສົ່ງຈັນເຜີງຮອດບ້ານ ທັງເວົ້າ ຕໍ່ແຍບໍ່ເລີກ.

- ອ້ອຍຊິໄປປະຊຸມ ອ້າຍທິດ ບໍ່ແມ່ນໄປເຫຍັ້ນເຫລົ້າ ແລະ ອັນແນ່ນອນແນວໜຶ່ງ ກໍແມ່ນ ອ້າຍຜົນ ຊິບໍ່ໃຫ້ມີການກິນເຫລົ້າ ໂອ້ເອ້ກັນ ! ຈັນເຜີງເວົ້າເນັ້ນຄວາມ ທັງໂກ້ຍເອົ້ານັ່ງແປ້ນກີ່ ຕໍ່າຫູກ ຂອງນາງ ຄືບໍ່ຢາກເວົ້າຫຍັງຕໍ່ ທິດແກ່ນບໍ່ປ່ອຍໃຫ້ຈັນເຜີງ ຄຶດຫລາຍ ລາວບຸກແນວຄິດແບບສາຍຟ້າແມບວ່າ :

- ຈັນ ! ຕໍ່າຜ້າສະໂຫລ່ງໄຫມ ໃຫ້ອ້າຍຈັກຜືນແດ່ຕີ ! ທິດແກ່ນ ປ່ຽນທ່າທີ ໃຊ້ສຽງອໍເຊາະ ອ່ອນຫວານ ແສງຕາໝາຍໝັ້ນ ເມື່ອ

ແນມນຳ ເຄືອຫູກທີ່ຍັງຍາວ ຈົນໄດ້ຜູກໄວ້ເປັນຂອດ ທ່າທີຂອງລາວ ບໍ່ສະແດງວ່າ ຊິຍອມເລີກເຊົາເນື່ອງ່າຍໆ ລາວປ້າຍຂາລົງນັ່ງເທິງກີ່ ແນມເບິ່ງໜ້າສາວຈັນ ຢ່າງເອົາຈິງເອົາຈັງ.

- ໂຢ້ວອ້າຍທິດ ຊິຕ່ຳໄດ້ງ່າຍໆ ຊັ້ນບໍ່ ຜ້າສະໄຫລ່ງໄຫມຫັ້ນ ເບິ່ງເຄືອຫູກສັ້ນອ້ອຍກ່ອນແມ້. ອີກຕັ້ງເດືອນ ຈັກຊິແລ້ວບໍ່ ອີກແນວໜຶ່ງ ໄຫມບ້ານເຮົາບໍ່ມີ ຖ້າຊິເຮັດ ຕ້ອງໄດ້ຫາໄຫມມາແຕ່ບ່ອນອື່ນ ອີ່ແມ່ວ່າ ບໍ່ໃຫ້ເຮັດຊ້ຳ ຊິຍາກນາ ບໍ່ມີຄົນຊ່ອຍ !

- ເລື່ອງນາອ້າຍຂໍລົງຊ່ອຍ ທັງໄຫມ ກະຊິຫາມາໃຫ້ ! ຈັນເພັງ ຖືກແຫຍ້ຫຸກຫາງ ເຮັດໃຫ້ນາງໝຸດໝົດຫົນຫວຍ ແຕ່ນາງກໍທົນອົດກັ້ນ ເຮັດໃຈເຢັນໄວ້ກ່ອນ ຖ້າທິດແກ່ນ ປາກໂຜ່ ຄວາມຄ່ຳສອກອອກຄ່ຳວາ ແລ້ວເລື່ອງນີ້ນີ້ ກໍ່ຈະກາຍເປັນຄວາມຊ່ຳເສຍຫາຍ ຖ້າບໍ່ຢ້ານແນວນີ້ ຈັນເພັງຊິເຊີນອ້າຍ ທິດແກ່ນ ເມືອແຫລ່ງງົວ ແຫລ່ງຄວາຍເພິ່ນທັນທີ ອີກແນວໜຶ່ງ ກໍຄິດເຫັນອ້າຍຜັນ ລາວຢາກອາໄສອ້າຍທິດແກ່ນ ໃນ ບາງອັນ ເພາະອ້າຍທິດມີຫູມີຕາຢູ່ໃນເມືອງ ທັງເປັນລູກກັບບ້ານ ຫວ້ານກັບສວນເອງ ຈັນເພັງ ອອນຊອນອ້າຍຜັນທີ່ສຸດ ນີ້ຂະໜາດວ່າ ລາວເປັນໄທບ້ານອື່ນ ເມືອງອື່ນ ມາຢູ່ນຳ ຍັງມີຄວາມຫ່ວງໃຍ ຄິດນຳ ອະນາຄົດເດັກເລັກເດັກນ້ອຍ ໃນພາຍລຸ່ງໜ້າ ດ້ວຍການເປັນເຈົ້າກໍ້ເຈົ້າ ການ ພາພໍ່ແມ່ປະຊາຊົນ ສ້ອມແປງ ແລະ ກໍ່ວຣອດ ຂັ້ນຊິປຸກ ໂຮງຮຽນເອົາເອງ ແນວນີ້ແລ້ວຊິບໍ່ໃຫ້ຈັນເພັງ ເຊິ່ງກໍມັກເລື່ອງຮຽນ ຢູ່ແລ້ວ ອອນຊອນຊົມຊື່ນ ໃນໂຕອ້າຍຄູຜັນແນວໃດ ເອົາເທາະ ເພື່ອ ອ້າຍຜັນ ເພື່ອຄວາມສຳເລັດຂອງທຸກຄົນ.

- ລັບອ້າຍທິດຫາມາໄດ້ກະຕ່ຳໄດ້ ! ຈັນເພັງ ຄຶດວ່າຕົນເອງ ເຮັດຖືກ ທີ່ຕອບອອກໄປແນວນັ້ນ ແລະ ແລ້ວ ນາງກໍພໍຢາກກັດລີ້ນ ຫລື ກືນຄຳເວົ້ານັ້ນຄືນ ເພາະຄຳຮັບປາກວ່າ ຈະຕ່ຳຜ້າສະໄຫລ່ງໄຫມ ໃຫ້ທິດແກ່ນ ຊ່ຳລືໄປທົ່ວບ້ານຢ່າງໄວວາ ແລະ ມີການຕີຄວາມໝາຍ

ໄປຕ່າງໆບາງໆ ໃນຕອນຄ່ຳ ພໍແຕ່ຈັນເພັງ ກ້າວຂາຂຶ້ນຫວິດຫົວຂັ້ນໄດ ເຮືອນ ທິດແກ່ນ ເຊິ່ງຜັນເຕົ້າໂຮມເອົາສະມາຊິກໜ່ວຍແຮງງານ ເກືອບ ໔໐ ຄົນໄປຮ່ວມ ຫລັງຈາກແລ້ວແລງ ກໍມີສຽງຮ້ອງຢອກໃຍ ວ່າ :

- ເຮັດຍາວໆແດ່ເດີ້ ເສື້ອຜ້າສະໂຫລ່ງໄຫມຫັ້ນ ຂໍນຸ່ງນຳ ຈັກຜືນແດ່ !

- ໂຢ້ວ...ບໍ່ແມ່ນແບວແຈກຢາຍເນີ ຂອງແບວນີ້ໃຫ້ໄດ້ ແຕ່ຜູ້ໃຫ້ ເກາະ !

ຈັນເພັງ ເຂົ້າໃຈຄຳເວົ້າຢອກໃຍ ຂອງໝູ່ ແລ້ວນາງກໍພໍ ຢາກແລ່ນລົງເຮືອນໜີ ຖ້າອ້າຍຄູຜັນບໍ່ຟ້າວຊວນຂຶ້ນວ່າ :

- ເອົາລະ ມາກັນຫມົດແລ້ວ ພວກເຮົາ ເວົ້າວຽກກັນເລີຍ ເນາະ ! ຈັນເພັງ ຢາກຂອບໃຈ ຜັນແຮງທີ່ຊ່ອຍບໍ່ໃຫ້ນາງອາຍໝູ່ ຫລາຍກວ່ານີ້ ສ່ວນປາກກໍລັບຍິບໆ ຢາກດ່າທິດແກ່ນຄັກໆຈັກບາດ ແຕ່ຜັນໄດ້ກວັກມືເອີ້ນເອົາທຸກຄົນ ມານັ່ງອ້ອມ ເປັນວົງ ແລ້ວເວົ້າຂຶ້ນ ດ້ວຍນ້ຳສຽງໜັກແໜ້ນວ່າ.

- ອ້າຍນ້ອງພວກເຮົາຄືຊິຮູ້ນຳກັນແລ້ວວ່າ ບ້ານເຮົາໄດ້ຮັບ ໃບອະນຸມັດ ນຳປົກຄອງເມືອງ ໃຫ້ຕັດເອົາໄມ້ ໃນເຂດດົງ "ປ່າເປືອຍ" ໕໐ ມ³ ມາເຮັດໂຮງຮຽນປະຖົມບ້ານເຮົາ. ແຕ່ຍ້ອນວ່າໄທເຮົາ ຊັກ ຊ້າ ບໍ່ທັນໄດ້ເອົາໄມ້ອອກ ບໍລິສັດທີ່ໄດ້ສຳປະທານ ແປວ່າ ໄດ້ສິດ ມາຂຸດຄົ້ນໄມ້ເຂດນີ້ ຊ້ຳຢາກມາຄຸ້ມຄອງແລ້ວ ພວກເຮົາ ກໍມີສັນຍາ ພັນທະກັບແຂວງຕ່າງຫາກ. ເລື່ອງນີ້ເຮົາໄດ້ ນຳເຈົ້າ ສະເໜີຫາບໍລິສັດ ຂໍຄວາມເປັນທຳນຳເຂົາ ຄິດວ່າ ອີກຈັກອາທິດ ກໍຈະໄດ້ຂ່າວ ແຕ່ຕອນນີ້ ມີຜູ້ມາສະເໜີແນວໃຫມ່ເຊິ່ງ ເຮົາກໍ່ຈະ ຂໍລາຍງານ ໃຫ້ພວກໝູ່ຟັງ ລະອຽດທຸກຢ່າງ."

ກອງປະຊຸມຊາວຫນຸ່ມ ຂອງບ້ານ ດຳເນີນໄປຢ່າງມິດໆ ສ່ວນໃຫຍ່ຕິດຕາມທ່າທີ ຫວ່ຽງຫູຟັງຄຳເວົ້າຂອງຜັນ ດ້ວຍຄວາມເອົາໃຈໃສ່ ພໍຜັນເວົ້າຮອດຂໍ້ສະເຫນີ ຂອງຈານຄຳຜາ ກໍມີສຽງໂສ້ເຫລັກັນຂຶ້ນ.

- ຮວ້າຍ ! ມັນຊິເປັນເອົາເບາະ ຈັກປີໂຮງຮຽນເຮົາຈຶ່ງຊິແລ້ວຊັ້ນ !

- ບ໊ະ ເອົາສາໃຫ້ມັນແລ້ວກໍດີໄດ ບໍ່ຊັ້ນ ບໍ່ໄດ້ຈັກຄືວຊ້ຳດອກ.

- ບໍ່ເອົາຫົວຊານຳມັນກໍໄດ້ຕອາ ບໍລິສົດ ບໍລິສັດຫັ້ນ... ດຽວນີ້ພວກເຮົາກໍຈັດຕັ້ງກັນແລ້ວ ພວມຫວ່າງວຽກ ລົງມືໂລດເປັນຫຍັງ ! ທິດແກ່ນ ເຊິ່ງພວມຢາກເຮັດໃຫ້ສາວຈັນເພັງເຫັນຄວາມຫ້າວຫັນຈິງຈັງ ເວົ້າຂຶ້ນ ທ່າທີຂຶງຂັງ ສ້າງໃຫ້ສະມາຊິກອື່ນໆ ຂຶ້ນໃຈນຳ ມີສຽງສະຫນັບສະຫນູນກາຍເຄິ່ງວ່າ ຄວນໄປລົງມືຕັດໄມ້ ຢາງບໍ່ຕ້ອງຢ້ານກົວອຶດທີ່ພົນໃຜ ຜັນພະຍາຍາມອະທິບາຍວ່າ ເອົາໄດ້ຕັ້ງບັນຫາ ແລະສິ່ງຫນັງສືຜ່ານກົມກອງກ່ຽວຂ້ອງ ເພື່ອຂໍຄວາມເປັນທຳ.

- ຄວາມເປັນທຳ ຊິມາຫາເຮົາເອງຫວ໋ະ ? ບໍ່ເຊື່ອ ! ຄວາມເປັນທຳ ມັນຢູ່ນຳເຮົາເອງ ຖ້າເຮົາແຂງແຮງ ເຂັ້ມແຂງ ມັນຈຶ່ງມີຄວາມເປັນທຳ ! ທິດແກ່ນໃຊ້ຄຳເວົ້າຮ້ອນແຮງ ແຝງປັດຊະຍາແຫ່ງສັດຈະທຳ ມັນເປັນການປຸກລະດົມນ້ຳໃຈຊາວຫນຸ່ມບ້ານ ເປັນເຫື່ອທຳອິດ ໃນການຕໍ່ສູ້ເພື່ອບ້ານຕົນເອງ.

ມັນກາຍເປັນເລື່ອງທີ່ຜັນ ບໍ່ສາມາດຂັບຊາ ຫ້າມປາມໄດ້ແລ້ວ ເມື່ອທຸກຄົນເຫັນຄວາມສຳຄັນຂອງໂຮງຮຽນຫລັງນ້ອຍໆຂຶ້ນມາ... ບ່າວຄູກໍມີແຕ່ຄວາມຫຶກເຫີມໃຈຂຶ້ນຄືກັນ ຈຶ່ງເປັນອັນຕົກລົງກັນວ່າ :

- ຊັ້ນກໍລົງມືເລີຍ. ໃຜໆ ກໍເອົາເຂົ້າຂຶ້ນເລົ້າແລ້ວ ຈັກຫນ້ອຍຊ້ຳຊິຟັນໄຮ່ ລົງສວນຢາ ລົງມືອາທິດນີ້ລະ ບໍ່ຕ້ອງຖ້າໃຜອີກແລ້ວ !

ອາຖັນ ແຫ່ງພົງໄພ

ຂະບວນຊາວໜຸ່ມບຸກເຂົ້າປ່າ ເພື່ອເລືອກໄມ້ ລຳເໝາະສົມ ສຳລັບປຸກສ້າງໂຮງຮຽນຂອງບ້ານ ດຳເນີນມາໄດ້ສອງມື້ຕິດຕິດກັນ ແຕ່ບໍ່ທັນ ລົງມືປ້າຣານຕົ້ນໃດ ຕາມຫລັກການແລ້ວພະນັກງານປ່າໄມ້ ຂອງເມືອງຕ້ອງລົງມາປ້າກາຕີໝາຍເລກໃສ່ລຳຕົ້ນທີ່ຈະຕັດໃຫ້ກ່ອນ ຈຶ່ງລົງມືຕັດໄດ້. ເລື່ອງນີ້ ຊາວບ້ານຮູ້ດີແຕ່ບໍ່ມີໃຜເອົາຣອດໃຫ້ຄວາມສຳຄັນອີກ ແນວຄິດດຽວທີ່ທຸກຄົນມີຮ່ວມກັນ ແມ່ນຟ້າວຕັດເອົາໄມ້ອອກກ່ອນ ທີ່ທາງບໍລິສັດຈະສົ່ງໜ່ວຍຕັດປ້າຂອງເຂົາລົງມາປະຈຳ ໃນເຂດສຳປະທານ.

ໜ່ວຍອາສາສະໝັກ ມີນຳກັນ ๆ ຄົນ ຍ່າງມາໄດ້ເມື່ອຍໜຶ່ງຈຶ່ງຢຸດເຊົາ ເພາະປ່າເລີ່ມຣົກ ດິນລາດຊັນຂຶ້ນເພາະແມ່ນປ່າລຽບຕີນພູ. ແນມຂຶ້ນໄປເຫັນລຳໄມ້ຊອນລອນ ສູງສະເໜີກັນ ເຮືອນໃບດົກຕຶບຈົນເກືອບບໍ່ມີແສງສະຫວ່າງ ຂອງຕາເວັນລອດຜ່ານ. ເຄືອໄມ້ຂະໜາດແຂນເດັກນ້ອຍ ພັນກ້ຽວຕາມລຳໄມ້ລາງຕົ້ນລາງແນວ ອາກາດເຢັນຊຸ່ມ ຈົນຮູ້ສຶກສະທ້ານຄີງ ກິ່ນຫອມແຮງຂອງປ່າດົງພົງໄພລອຍກົ້ວບັນຍາກາດ ບໍ່ຮູ້ວ່າມັນເຫີຍອອກຈາກພຶດພັນຊະນິດໃດແທ້, ຍັງຫາແຕ່ແມ່ນຕົ້ນເດືອນຍີ່ດອກໄມ້ປ່າ ຍັງບໍ່ບານ ພຶດບາງແນວ

ກຽມຫລິ່ນປ່ຽນໃບ ບາງແນວຂຽວຄື້ມຕະຫລອດ ບາງຢ່າງເລີ່ມມີສີແດງແຫ້ມຫາແຕ້ມເປັນບ່ອນດ່າງດາວ.

- ເອົ້າໄປແຖວນີ້ລະ ພໍ່ເຖົ້າຫມໍ່ຢາລາວມາຂຸດເອົາເຄືອເຂົາໄກ້ເປັນປະຈຳ ! ອ້າຍທິດແກ່ນຊີ້ບອກ ທັງເດ່ມີເອົ້າໄປ ບ່ອນມີພຸ່ມເຄືອໄມ້ຂຶ້ນແຮະຕາມຕົ້ນໄມ້ໃຫຍ່.

- ເຄືອເຂົາໄກ້ ເປັນແນວໃດ? ມັນລັກຈັ່ງໃດ? ຫລາຍສຽງສໍ້ສືບຂຶ້ນ ທັງພາກັນ ໂຢ້ກົ້ນລົງນັ່ງຕາມຂອບໄມ້ ບ່ອນບໍ່ຮົກຕາມແຕ່ໃຈມັກທຸກຄົນມີສີຫນ້າອິ່ມບານເມື່ອສູດດົມເອົາກິ່ນຂອງປ່າ ສາຍຕາຊື່ນຊົມນຳຄວາມຂຽວຄື້ມແຫ່ງພົງໄພ.

- ໂຫ້ ເຄືອເຂົາໄກ້ນີ້ຫວະ ຫາຍາກເດ໊ ບາງບ່ອນບໍ່ມີດອກເລີ່ມຂຶ້ນພູໄປນີ້ລະຈຶ່ງມີ. ມັນຫວານຫອມ ກິນແລ້ວກິນເອົ້າແຊບນອນຫລັບລະບໍ້ ! ອ້າຍທິດສາທະຍາຍສັບພະຄຸນ ຂອງຮາກເອົາໄກ້ຢ່າງລ່ຽນໄຫລ ພາໃຫ້ທຸກຄົນສົນໃຈ ຈຶ່ງພ້ອມກັນດາຫນ້າຂຶ້ນພູໃຫ້ອ້າຍທິດພາຊອກ ຂຸດຮາກໄມ້ວິເສດດັ່ງກ່າວ.

ຜົນເລືອກບ່ອນນັ່ງຢູ່ກ້ອງຮົ່ມໄມ້ ຕໍ່ຫນ້າຍາງໃຫຍ່ຂະຫນາດຫ້າຄົນອູ້ມ ສາຍຕາຄູ່ຄົມວາວ ແລເຫລືອດຂຶ້ນຕາມລຳໄມ້ທີ່ໂອບຫຸ້ມດ້ວຍເກີບໄມ້ແຫ້ງ ແລະ ຮອຍບັກທີ່ສູງເລື່ອນຂຶ້ນຕາມລຳໄມ້. ໄທບ້ານເອີ້ນຍາງໃຫຍ່ຕົ້ນນີ້ວ່າ "ຍາງແມ່ດ່ຽວ" ເພາະມັນຢູ່ໂດດດ່ຽວສູງພົ້ນຫມູ່. ເອົາເຈົ້າຕົກລົງກັນວ່າ ຈະບໍ່ຕັດປ້ຳຮານຮອນຍາງຕົ້ນນີ້ໃຫ້ມັນແພ່ແນວພັນ ເຖິງວ່າຈະບໍ່ແມ່ນໄມ້ເນື້ອດີມີຄ່າ ສຳລັບການປຸກສ້າງ ແຕ່ປ່າຫນຶ່ງໆກໍ່ຕ້ອງມີໄມ້ຫລາກຫລາຍຊະນິດ ຢູ່ນຳກັນຕາມກົດເກນທຳມະຊາດຂອງມັນ. ຕົ້ນໄມ້ ແຕ່ລະຊະນິດກໍ່ຫາກມີປະໂຫຍດຂອງມັນ ຄືຕົ້ນຍາງນີ້ ຊາວບ້ານກໍ່ ມາບັກເອົານ້ຳມັນໄປປົນຂີ້ອອນໂດກ ເຮັດກະບອງໄຕ້ ແທນຕະກຽງ ກິນນ້ຳມັນເຊື້ອຕ້ອງໄປຊື້ມາແຕ່ໃນເມືອງດ້ວຍລາຄາແພງ. ຕົ້ນຍາງຕົ້ນນີ້ ຮັບໃຊ້ ໃຫ້

ປະໂຫຍດແກ່ຊາວບ້ານມາກວ່າ ໕໐ ປີແລ້ວ ແລະ ມັນກໍອາດອະນຸເຄາະປະໂຫຍດ ເລົ່ານັ້ນຕໍ່ໄປ ຖ້າມັນຍັງໄດ້ຢືນຢູ່ຕໍ່ໄປ. ຈາກຕົ້ນຍາງຊາຍຫນຸ່ມ ແນມກວາດເຂົ້າໃນແລວປ່າຂ້າງຫນ້າ ເລິກລົງໄປແລ້ວເຂົາກໍຮ້ອງເອີ້ນ ອ້າຍທິດແກ່ນ ເຊິ່ງພວມນ້ອມນໍາ ການແນະນໍາວິທີຂຸດຢາຮາກໄມ້ "ອ້າຍທິດ ອ້າຍທິດ ມາທາງນີ້ແດ່" ຜັນເອີ້ນໃສ່ສ່ວນຕົນເອງລຸກຍ່າງດັກຫນ້າໃສ່ແລວປ່າດ້ານຫນຶ່ງ ຊຶ່ງສັງເກດເຫັນມີຕົ້ນໄມ້ຂະຫນາດລໍາທໍ່ແຂ່ງຂາ ຖືກຟັນຂະ ເປັນທ່ອນເດຍລະດາດເປັນຕໍ່ຕິດຕົ້ນກໍມີເນື້ອໄມ້ສີຂາວເຫລືອງ ຈີກຈາກລໍາຕົ້ນເປັນສ້ຽນ ຊຸ່ນຊອງຊິບລິບ.

- ບໍ່ແມ່ນຕົ້ນເກດສະຫນາຫວະອ້າຍທິດ? ຜັນຖາມທັນທີ ເມື່ອທິດແກ່ນມາ ເຂົາຍັງບໍ່ມີຄວາມຮູ້ເລື່ອງປ່າເທົ່າໃດ ເພາະບໍ່ໄດ້ເຂົ້າຊອກຢູ່ຫາກິນ ໃນປ່າເລິກຄືຫມູ່ ຈຶ່ງບໍ່ຮູ້ແທ້ເຫັນຈິງ ໃນສິ່ງທີ່ເອີ້ນວ່າຊັບໃນດິນ ສິນໃນປ່າ.

- ໂຢ້ວ ມັນກໍຟາກແຕ່ແມ່ນພຸ້ນແຫລ້ວ! ນີ້ແປວ່າ ມີຄົນຮູ້ວ່າປ່າເຂດນີ້ມີໄມ້ເກດສະຫນາແລ້ວ ! ທິດແກ່ນໃຫ້ຂໍ້ສັງເກດ ເມື່ອນັ່ງຢ່ອງຢໍ້ລົງຕໍ່ຫນ້າຕໍ່ໄມ້ ນໍ້າສຽງຂອງລາວ ມີແວວກັງວົນອາດໃດອາດຫນຶ່ງ.

- ຊັ້ນ ຂ້ອຍພໍຊິເດົາໄດ້ລະວ່າ ເປັນຫຍັງເຖົ້າຜານັ້ນ ຈຶ່ງຢາກເຂົ້າມາຕັດໄມ້ໃຫ້ໄທເຮົາ ມັນຊິສວຍໂອກາດຫາໄມ້ ເກດສະຫນາໄປນໍາໄດ້ຈັກ ໔ - ໓ ກິໂລ ກໍເປັນເສດຖີນ້ອຍແລ້ວເດ້. ໂທ້ ມັນຄືມາຫວັງລວຍຜູ້ດຽວແທ້ ເຖົ້ານີ້ !

- ມັນມີຄ່າປານນັ້ນພຸ້ນຫວະ ອ້າຍທິດ ? ຜັນຖາມ ດ້ວຍຄວາມງົງງວາ ເຂົາຍັງບໍ່ເຂົ້າໃຈເລື່ອງແນວນີ້ເທື່ອ.

- ກະນີ້ແລ້ວ ຜັນ ອັນເຂົາຂ້າກັນຕາຍ ຢູ່ດຽວນີ້ນະ ອ້າຍໄດ້ຍິນວ່າ ຢູ່ທາງພູເຂົາຄວາຍພຸ້ນ ກໍມີຫລາຍສິບແລ້ວ !

ห้ามจำหน่าย

- ຂອງກໍໂລຫນຶ່ງ ມັນລະໄດ້ຄວາຍໂຕຫນຶ່ງແລ້ວເດ້ ! ທິດແກ່ນດຶງຜ້າອອກມາຖາກເປືອກໄມ້ ຫຍິບຍື່ນໃຫ້ຜັນເບິ່ງເປືອກໄມ້ປະຫລາດເຊິ່ງມີຮອຍດໍາໆ ຄ້າຍຮອຍແມງກິນເນື້ອໄມ້ເປັນຈຸດດໍາດໍາ.

- ດົມເບິ່ງແມ້ ຫອມດີໄດ ! ນີ້ແມ່ນຂີ້ສູດ ແມງໄມ້ທີ່ມາກິນເນື້ອໄມ້ນີ້ແລ້ວຂີ້ອອກໃສ່ໂກນໄມ້ ຢາງອັນນີ້ລະ ກິໂລລະຫລາຍແສນນະ !

- ອ້າຍທິດ ເຈົ້າຮູ້ປ່າ ຮູ້ທັງວ່າມີໄມ້ນີ້ ຢູ່ໃສ ຄືບໍ່ເຮັດຈັກບາດໃຫ້ມັນຮັ່ງໂລດ ! ຜັນຖາມແຫ້ ແກມຢອກ.

- ນີ້ລະ ນີ້ລະ ຄົນບໍ່ຮູ້ອາຖັນຂອງປ່າ " ທິດແກ່ນເວົ້າເປັນປິດສະຫນາ ເຮັດໃຫ້ຜັນສົນໃຈແຮງ. ທິດແກ່ນເວົ້າຕໍ່ ສຽງເນີບໆ ວ່າ :

- ອ້າຍເຊື່ອໂຊກວາສະຫນາ ບາບບຸນຄຸນໂທດ ໂຕເບິ່ງເອົາຕີ້ຜັນໄມ້ເກດສະຫນາ ໃນດົງນີ້ ມີຫລາຍຫນ້ອຍສໍ່າໃດ... ມີມາຈັກຮ້ອຍຈັກພັນປີແລ້ວ. ຕາມອ້າຍອ່ານໃນພະເທດ ຫລື ສິນໄຊ ເພິ່ນກໍ່ພັນລະນາໄວ້ ມັນເປັນໄມ້ມີຄ່າ ເປັນຢາສໍາລັບປິ່ນປົວ ແຕ່ດຽວນີ້ເບິ່ງດູ້ຄົນເຮົາເຂົ້າມາ ຟັນຣະຟັນຣາມ ເພື່ອຢາງໄມ້ຢອດດຽວ ເຂົາກໍ່ຟັນໄມ້ເປັນຕົ້ນຖິ້ມ ອ້າຍນີ້ເຊື່ອວ່າ ຖ້າເທວະດາ ເຈົ້າປ່າເຈົ້າດົງ ເພິ່ນເປັນໃຈເຮົາບໍ່ຕ້ອງຕັດໄມ້ເປັນຕົ້ນຖິ້ມດອກ ອ້າຍຄິດວ່າຕົນເອງ ບໍ່ທັນມີໂຊກວາສະຫນາປານນັ້ນ.

- ຊັ້ນພວກເຂົາມາເອົາຫລາຍໆ ໄປຂາຍໄດ້ເງິນເປັນ ແສນໆທັ້ນເດ້ ? ເທວະດາເປັນໃຈເຂົາຫວະ ?. ຜັນສໍ້ຢາງບໍ່ເຊື່ອນໍາແນວຄິດຂອງອ້າຍທິດແກ່ນ.

- ລາງຄົນທີ່ນັ້ນຜັນ ເຈົ້າຮູ້ບໍ່ວ່າ ໃນສິບຄົນຈຶ່ງມີດອກຜູ້ຫນຶ່ງ ແຕ່ເງິນທີ່ເຂົາໄດ້ຍ້ອນການຕັດຮານຕົ້ນໄມ້ຖິ້ມນັ້ນ ມັນບໍ່ສາມາດສ້າງຄວາມສຸກໃຫ້ເຂົາ ພວກຄົນຫມູ່ນີ້ ມັກມີແນວເດືອດຮ້ອນເລີຍໆ ເຊື່ອໂລດ. ອ້າຍເຊື່ອເລື່ອງບາບກໍາ. ມີການທັກຫລັງຍິງກັນຂ້າກັນຕາຍ ບໍ່ຮູ້ວ່າທີ່ໃດຕໍ່ທີ່ໃດແລ້ວ. ອ້າຍຄິດວ່າ ໄທເຮົາຕັ້ງເຮັດດີຄືແນວນີ້ດີກວ່າ !.

- ເຮັດດີ ແຕ່ອາດຜິດກັບກົດໝາຍບ້ານເມືອງ ! ຜັນຕອບຄ່ອຍໆ ຄືຢາກເວົ້າກັບຕົນເອງ.ຄວາມຮູ້ໃໝ່ ທີ່ໄດ້ຮຽນນຳທິດແກ່ນ ພາໃຫ້ ຜັນຄຶດຝັນໄປໄກ. ໂຊກວາສະໜາ ຂອງເຮົາເປັນແນວໃດ ? ຖ້າເກີດ ໄປພໍ້ໄມ້ເກດສະໜາດຳປີ້ ມີຢາງເຕັມຈັກ ໑໐ ຕົ້ນ ຊິເປັນແນວໃດ? ເອົາຊິຂາຍຢາງໄມ້ ເອົາເງິນມາຊື້ໂຕະຕັ່ງໃສ່ໂຮງຮຽນ ໃຫ້ເຕັມ ອຶ່ງຕຶ່ງໂລດລະ !

- ປັ້ງ...ປັ້ງ...! ສຽງປືນ ໔ ນັດດັງສະທ້ານປ່າ ເຮັດໃຫ້ຜັນສະດຸ້ງ ຕື່ນຈາກຄວາມຄຶດຝັນ ໂດຍສັນຊາດຕະຍານ ຂອງການເອົາໂຕລອດ ເອົາໝູບລົງກັບພື້ນດິນ. ອ້າຍທິດແກ່ນເຊື່ອງຢູ່ບໍ່ໄກ ກໍ່ໝູບລົງຄືກັນ ທັງສອງແນມເບິ່ງໜ້າກັນ ດ້ວຍແສງຕາຕັ້ງຄຳຖາມ.

- ອ້າຍທິດ... ອ້າຍທິດຢູ່ໃສ ? ສຽງຂອງພວກອ້າຍບ່າວ ທີ່ຢູ່ ອ່າວຫ່າງຮ້ອງຖາມ ນ້ຳສຽງບອກວ່າ ຕື່ນຢ້ານນຳສຽງປືນ ຜັນເອີ້ນ ໃຫ້ທຸກຄົນມາຢູ່ໂຮມກັນ. ສຽງປືນດັງຢູ່ໃກ້ໆຂະໜາດນີ້ ສະແດງວ່າ ຄົນຜູ້ຍິງກໍຢູ່ໃກ້ໆ ຄືກັນ.

- ທຸກຄົນບໍ່ຕ້ອງເວົ້າ ຕ້ອງຕອບຫຍັງ. ອ້າຍແກ່ນກັບຂ້ອຍ ເວົ້ານຳພວກເຂົາກໍ່ພໍແລ້ວ. ຜັນບອກເຕືອນທຸກຄົນ ເມື່ອສັງເກດ ທິດທາງ ທີ່ມາຂອງສຽງບາດຕີນ ທີ່ດັງສວາບສາບເຂົ້າມາ ທຸກຄົນ ມີສີໜ້າຕື່ນຢ້ານຢ່າງເຫັນໄດ້ລັກ ເພາະສ່ວນໃຫຍ່ ເປັນຊາວໜຸ່ມ ເລືອດຮ້ອນເວລາຢ້ານກໍ່ຢ້ານແຮງ ທັງບໍ່ມີບົດຮຽນ ໃນການເຂົ້າປ່າ ເລິກແນວນີ້. ບໍ່ດົນ ຊາຍຕ່າງໄວສາມຄົນ ປືນຍາວພາຍໃສ່ບ່າ ທ່າທາງ ເປັນຜູ້ຊຳນານການເດີນໄພ ກໍ່ຍ່າງມຸ່ງໜ້າເຂົ້າມາຫາ ກຸ່ມຂອງຜັນ ຄ້າຍກັບວ່າ ຮູ້ແລ້ວວ່າ ມີພວກເຂົາຢູ່ໜ້ອງນີ້. ໃນນັ້ນ ຜັນຮູ້ໜ້າຈຳຕາ ໄດ້ດີຄົນໜຶ່ງ ເຂົາຄືຊາຍຜູ້ຊື່ຄຳຜາ ນັ້ນເອງ.

- ຈັ່ງໃດຫລານຊາຍ ພາກັນມາທ່ຽວປ່າຫວະ ? ຄຳຜາ ຮ້ອງທັກຜັນຂຶ້ນກ່ອນ ເມື່ອເຫັນທ່າທາງຕົກຂະນ່າ ຂອງຄົນຮຸ່ນລູກ.

- ເອີ້...ພໍ່ອາວຄຳຜາ ! ຜັນຕັ້ງເວົ້າຊື່ຂອງຊາຍແປກໜ້າ ທີ່ພົບເຫັນເປັນເທື່ອທີສອງເພື່ອໃຫ້ອ້າຍທິດແກ່ນຮູ້ວ່າ ຄົນພວກນັ້ນແມ່ນໃຜ ໄດ້ຜົນ ທິດແກ່ນຄືວ່າວ່ອງໄວ ສະໜອງໃສສົມຄວນ ລາວຫົວຍ້ານໃສ່ທັງເວົ້າແບບຊົງບໍ່ຮູ້ເລື່ອງຮູ້ລາວ ມາກ່ອນວ່າ:

- ເອີ້...ພວກອາວມາລ່າເນື້ອຫວະ ? ມື້ນີ້ວັນສິນ ໄທບ້ານເຮົາບໍ່ເຂົ້າປ່າລ່າສັດດອກ ! ໄທເຮົາຊິມາເອົາໄມ້ປ່ອງ. ຫລືງເກັບຫົວຢາຮາກໄມ້ ລາມມາທາງພີ້ ໄກປ່າໄມ້ປ່ອງຊຸກໄຊ້ຊິໄດ້ພາກັນຄືນທາງລະຫນີ້.

- ໃສ ໄດ້ຢາຫຍັງແດ່ ? ຈານຄຳຜາ ສະແດງໃຫ້ເຫັນ ເລີຍວ່າບໍ່ຢາກເຊື່ອ ຖາມຫາຫົວຫວ້ານຫົວຢາ ຄືຊິພິສູດຄຳເວົ້າ ຂອງທິດແກ່ນ. ໂຊກດີ ເວລານັ້ນໃຜກໍມີເຄືອໄມ້ໃບຢາ ແລະ ຫົວຮາກເຂົາໄກ້ ສີເຫລືອງແສດຢູ່ພົກໃນຖົງແດ່ ຈານຄຳຜາເຮັດໜ້າເກັ້ງໄປ ແລະ ເມື່ອສຳຫລວດ ເບິ່ງທຸກຄົນກໍເຫັນວ່າ ບໍ່ມີອາວຸດຕິດຕົວ ຈຶ່ງຫົວຍ້ານ ແລ້ວເວົ້າຕໍ່ຢ່າງອວດອ້າງວ່າ :

- ຈັ່ງໃດ ຫລານຊາຍ ? ໄມ້ແຖວນີ້ງາມດີໄດ ເນາະຣົມ ! ທາງບໍລິສັດເຮົາ ຊິລົງມາໄວໆນີ້ ເພິ່ນໃຫ້ພວກອາວມາ ສຳຫລວດເບິ່ງທິດທາງ ວ່າຊິຕັດທາງແກ່ໄມ້ອອກທາງໃດ ເລື່ອງນັ້ນວ່າແນວໃດ ຊິເອົາບໍ່ ອັນອາວສະເຫນີໃຫ້ຫັ້ນ ຟ້າວແດ່ໃດ ຈັກຫນ້ອຍບໍ່ໄດ້ຈັກຄືວຊໍ້າຊິວ່າໄທດຽວກັນບໍ່ຊ່ອຍບໍ່ເປັນເດີ!

- ເວົ້າໃຫ້ແລ້ວວຽກສາ ອ້າຍຜາ ! ຊາຍຜູ້ພາຍປືນອີກຄົນຫນຶ່ງເວົ້າຂຶ້ນເປັນເທື່ອທຳອິດເມື່ອເຫັນຄຳຜາເວົ້າຍາວ.

- ນີ້ນ່າພວກຫລານ ໄທເຮົານີ້ຢາກມາຕົກລົງເລື່ອງນີ້ໃຫ້ແລ້ວ.

- ຖ້າພວກເຮົາຕົກລົງ ອາວຊິເຮັດແນວໃດ? ຜັນຕັດສິນໃຈລອງເບິ່ງເລ່ຊ່ຽມ.

- ຣະ ຣະ ຊິມີຫຍັງຍາກ ! ນີ້ ກາຕີໄມ້ເລືອກເບິ່ງເລີຍ ເອົາ

ບັກພອນເອົາເຄື່ອງມືມຶງອອກມາ ! ດ້ວຍຄວາມລະໂມບ ຫລື ໃຈຮ້ອນແນວໃດບໍ່ຮູ້ ຈານຜາສົງໃຫ້ຊາຍຜູ້ຊື່ພອນວາງຖົງ ຊຶ່ງມີທັງຄ້ອນເຫລັກເຄື່ອງມືຕີກາໄມ້ແມັດສະເພາະແຫກອະຫນາດຕົ້ນໄມ້ ແລະ ປຶ້ມບັນທຶກເລກລຳດັບ.

- ເຄື່ອງມື ເອກະສານເຮົາພ້ອມແລ້ວ ອາວຕີກາໃສ່ໄມ້ ໃຫ້ຕົ້ນໃດແດ່ ເບິ່ງນຳກັນ ແລ້ວພວກຫລານກໍ່ມາຕັດມາເລື່ອຍເອົາຕາມໃຈ ຮ ຮະ ອ່າວໄວແດ່ກະດີ ! ຜົນລື່ວຕາໃສ່ກັບທິດແກ່ນ ເປັນສັນຍາເອົາໃຈກັນ ແລ້ວປ່ອຍຄຳຜາສົງລູກນ້ອງອອກສຳຫລວດ ເຈົ້າ ເນື້ອແຂວງບາງຕົ້ນທີ່ຢູ່ໃກ້ໆ.

- ໑໐ ແມັດກ້ອນ ຫລື ໑໐ ຄິວນີ້ ເວົ້າແທ້ກະບໍ່ຫລາຍດອກ ແຕ່ດີກວ່າບໍ່ໄດ້ເບາະຫລານເອົ້າຫນີ້ ! ຫມາຍເລກເອົາຕີກາໃຫ້ແລ້ວເປັນໄມ້ ໔ ຕົ້ນ ! ຄຳຜາຈີກເຈ້ຍທີ່ຂຽນຕົວເລກໃສ່ແລ້ວເດ່ໃຫ້ຜົນ ແຕ່ຊາຍຫນຸ່ມນັ້ງເສີຍເຮັດແສງຕາຊື່ໆ ຈົ້ງຂຶງເບິ່ງຈານຜາ ແລ້ວບອກສຽງທຳມະດາວ່າ :

- ອາວເອົາໄວ້ກ່ອນ... ມື້ນີ້ ຫລານບໍ່ມີຮອດໃບອະນຸມັດ ຕັດໄມ້ໃຫ້ອາວ. ທາງຄະນະປົກຄອງບ້ານເພິ່ນວ່າ ຍື່ນໄປຫາຜະແຫນກ ປ່າໄມ້ເມືອງແລ້ວ ບາງທີກະຊິໄດ້ນະໂຍບາຍຢູ່ ເພາະພວກເຮົາຂໍປູກໂຮງຮຽນບໍ່ແມ່ນຊິເອົາໄປປຸກເຮືອນສ່ວນຕົວ.

- ຮ້ວາຍ ! ແຕ່ກໍ່ເຈົ້າຫຍັງບໍ່ເວົ້າ ປ່ອຍໃຫ້ເສຍເວລາສຳຫລວດ! ທ່າທີຂອງຄຳຜາ ໂມໂຫ ຂຶງອັ່ງອຶ້ນ ສາຍຕາແຂງກະດ້າງຊີງໂຫດຫ້ຽມແລະ ສຳຫລວດໄປເບິ່ງ ພວກຊາວຫນຸ່ມ ຜົ-ຖ ຄົນ ອາຍຸ ຣຸ່ນລູກ ດ້ວຍຄວາມຊັ່ງຊາວາດໃດວາດຫນຶ່ງ.

- ອ້າຍ...ຜາ ທ້າວຄູຜົນເລົາບໍ່ຮູ້ເລື່ອງດີປານໃດດອກເລື່ອງນີ້ມັນຂຶ້ນນຳທາງປົກຄອງບ້ານປົກຄອງເມືອງພຸ້ນ ຢ່າຖືຊາມັນເທາະ ມັນຢາກເຫັນວ່າ ການລົງເຮັດວຽກໂຕຈິງ ຂອງພະນັກງານ ເອີ້ພວກອ້າຍ

ເປັນແນວໃດຊື່ໆດອກ ! ຊັ້ນລະພວກເຮົາຊິ ຕ່າວຄືນກ່ອນໃຫ້ພວກອ້າຍ ເຮັດວຽກເພິ່ນສາ ໄປ ! ພວກເຮົາ ! ທິດແກ່ນຟ້າວຫາແນວແກ້ໃຫ້ທັນ ທ່າທາງໃຈເຢັນ ເວົ້າເປັນຫລັກເປັນການຂອງທິດແກ່ນ ປະກອບຄວາມ ເປັນທິດເປັນຈານ ເປັນທີ່ຮູ້ຈັກຂອງບ້ານໃຕ້ບ້ານເຫນືອ ພາໃຫ້ຄຳຜາ ຢຸດຢັ້ງແນວຄິດປ່ວງບ້າໄດ້ລະຍະຫນຶ່ງ ແຕ່ສາຍຕາຂຶງເຂັ້ມຂອງເຂົາ ຍັງບໍ່ມາຍຄວາມຫວັງຮ້າຍ. ດ້ວຍນ້ຳສຽງຂຶງຂັງ ຢາກສະແດງ ອຳນາດ ຄຳຜາເວົ້າຕື່ມວ່າ :

- ຮຶມ ! ນີ້ວ່າຂ້ອຍເຫັນແກ່ໄທເຈົ້າເດີ. ນັບແຕ່ມື້ນີ້ໄປ ຫ້າມລ່ວງ ເຂົ້າມາໃນເຂດນີ້ ແຕ່ຟາກຫ້ວຍນ້ຳຄຳມາ ຫ້າມເດັດຂາດ. ຢ່າໃຫ້ ຂ້ອຍຮູ້ວ່າ ມີຜູ້ລະເມີດກໍແລ້ວກັນ ! ມີສຽງອຶກໆອັກໆ ໃນຮູຄໍ ຄືຈະ ຫມາດດໍ ແຕ່ບໍ່ມີໃຜຕໍ່ຄວາມເວົ້າຂອງຄຳຜາ ພວກຊາວຫນຸ່ມ ແນມເບິ່ງຫນ້າກັນ ດ້ວຍຄວາມບໍ່ພໍໃຈ.

- ມີປືນແລ້ວ ຢາກຂູ່ໃຜກໍຂູ່ຊັ້ນຫວະນີ້ ! ສະມາຊິກຄົນຫນຶ່ງ ກັດ ແຂ້ວເວົ້າຂຶ້ນ ຫລັງຈາກຍ່າງພົ້ນຈາກຄ້ອຍພູມາມິດໆ ໄດ້ລາວຫນຶ່ງ.

- ເຈົ້າຄິດແນວໃດອ້າຍທິດ? ມັນແມ່ນຄົນຂອງບໍລິສັດບໍ່ ?

- ຂ້ອຍວ່າບໍ່ແມ່ນຈັກດີ້ ເຖົ້ານີ້ຖືກໄລ່ອອກແລ້ວແຕ່ ມີ ເດືອນ ກ່ອນ ຍ້ອນຍັກຍອກບັນຊີ ແຕ່ເທື່ອນີ້ ຂ້ອຍຄິດວ່າ ມັນໄປຍົວະພວກທີ່ຍັງ ເຮັດວຽກຢູ່ ໃຫ້ຮ່ວມມືກັບມັນ ຈຶ່ງເອົາເຄື່ອງມື ທັງປືນຂັບຊີອອກມາໄດ້! ທິດແກ່ນຕັ້ງຂໍ້ສັງເກດ.

- ຂ້ອຍວ່າມັນຢາກຫວງເຂດນີ້ໄວ້ ເພື່ອຊອກລົ້ນເອົາໄມ້ ດຳຫລາຍກວ່າ ! ຜັນຕື່ມໃຫ້ຕາມການຕີລາຄາຂອງເຂົາ.

- ຮື...ມັ້ນກໍອາດຊິມີສ່ວນ ຊາໄມ້ດ້າມ ໕໐ ຄິວ ມັນຄືຊິບໍ່ສ່ຽງຕາຍ ປານນີ້ດອກ. ມັນກັບດານແຕ່ວ່າ ຊິຫ້າມບໍ່ໃຫ້ໄທບ້ານ ລ່ວງເຂົ້າປ່າ ເຂດນີ້ໄດ້ແນວໃດ ? ໄທບ້ານເຮົາໂລດເຂົ້າມາຫາກິນເປັນປະຈຳຢູ່ ເຮັດແນວໃດຊິຫ້າມໄດ້ ? ພວກແມ່ຍ່າແມ່ຍິງກໍມັກມາແຫ້ໆ ຂອງວ່າມີ

ຫນໍ່ສ້ານ ຫນໍ່ຫວາຍຫລາຍ ! ທິດແກ່ນສະແດງຄວາມວິຕົກກັງວົນຕໍ່.

- ເອົາຊີ້ສາ ໄຫເຮົາຫມົດທຸກຄົນ ເປັນໃຈກັນ ຕົວະໄຫບ້ານ ກ່ອນວ່າ ຢ່າໄປທາງຫ້ວຍຄໍາພວກເຮົາເຫັນຮອຍເສືອ. ຖ້າໃຜຊິໄປ ຂໍໃຫ້ແຈ້ງກອງຫລອນ ໄປນໍາກັນເປັນຫມູ່ໃຫຍ່ໆ ແນວນີ້ດີບໍ່ອ້າຍທິດ ! ຜົນຫົວໄວຄຶດອອກ ແນ່ລະຂ່າວວ່າ ພໍ້ຮອຍເສືອ ຈະເຮັດໃຫ້ທຸກຄົນ ຢ້ານ ກົວ ບໍ່ກ້າໄປເປັນແນ່ ໂດຍສະເພາະພວກແມ່ຍິງ.

- ເອີ້...ຄັກໆ ດີຄືກັນ ກັນເອົາໄວ້ກ່ອນໃຫ້ເລື່ອງມັນແຈ້ງຂາວ ແລ້ວເຮົາຈຶ່ງວ່າກັນໃຫມ່ເນາະ ! ທຸກຄົນເຫັນພ້ອມຕາມຄວາມຄຶດນີ້.

- ທຸກຄົນ ປິດເລື່ອງມື້ນີ້ເປັນຄວາມລັບກ່ອນ ແຕ່ເລື່ອງວຽກ ແມ່ນເຮັດຄືເກົ່າ ຂໍກອງຫລອນຕື່ມ ໕ ຄົນ ພວກອອກແຮງງານຄືເກົ່າ! ມື້ອື່ນອອກແຕ່ເຊົ້າກວ່ານີ້ ! ທິດແກ່ນບອກທຸກຄົນໃຫ້ຮູ້ແຜນການ ກ່ອນຈະແຍກຍ້າຍກັນເມືອເຮືອນໃຜເຮືອນລາວ. ໄດ້ຜົນທັນໃຈດີ ໃນຕອນແລງມື້ນັ້ນ ຂ່າວຊ່າລືວ່າ ພວກເຂົ້າປ່າພໍ້ຮອຍເສືອ ກໍແຜ່ພື ໄປທົ່ວບ້ານ ໄວຍິ່ງກວ່າຂ່າວວິທະຍຸອີກ. ປ້າພອນຕາລີຕາເຫລືອກ ມາແຕ່ທ່ານໍ້າເພາະໄດ້ຍິນຄົນໂຈດກັນ. ສະມາຊິກ ຫນ່ວຍເຂົ້າປ່າ ຄົນຫນຶ່ງລົງອາບນໍ້າ ເວົ້າສູ່ພວກແມ່ຍິງຟັງ ຄວາມມັນກໍເລີຍ ຕໍ່ມາ ຮອດຫູປ້າພອນ...

- ແມ່ນແທ້ຫວະ ແມ່ປ້າ ວ່າປ່າບ້ານເຮົາມີເສືອ ?

- ເສືອ ເອີ ກະຊິມີລະບໍ້ ຢູ່ເທິງພູພຸ້ນ.

- ບໍ່ນ່າ...ນີ້ ລົງມາຮອດຫ້ວຍຄໍານີ້ແລ້ວ!

- ຫ້ວຍຄໍາ ! ໂອ້...ເສືອແມວຕິ ມັນມາຈອບກິນປາ "ປ້າພອນວ່າ.

- ບໍ່ໄດ... ເຂົາເວົ້າວ່າ ຮອຍຕີນມັນທໍ່ຝາມືເດັກນ້ອຍພຸ້ນ!

- ທໍ່ຝາມືເດັກນ້ອຍວ່າຕິ ? ປ້າພອນຫນ້າລໍ່າຕາຕາຍລົງກັບບາດ ຟ້າວຂຶ້ນມາແຕ່ທ່ານໍ້າ ກໍພໍດີຈອບກັບ ບ່າວຄູຜັນ ທີ່ພວມກົ້ມໆ ເງີຍໆ ຢູ່ໃກ້ລົກໄກ່ ປ້າພອນຫຍັບເຂົ້າໄປຫາລູກຮັກ ຖາມສຽງສັ່ນໆ ວ່າ:

- ຜັນໆ ແມ່ນແທ້ຫວະ ວ່າພວກລູກ ເອີ້ ເຫັນຮອຍເສືອຫັ້ນນະ? ທ່າທີຜັນ ກໍສະຫງົບສະຫງ່ຽມເຊັ່ງອືມຈົນປ້າພອນໃຈຝໍລົງນຳ.

- ແມ່ໄດ້ຍິນນຳໃຜ ?

- ກະ ກະ ພວກໝູ່ໄທເຈົ້າໄປນຳກັນມື້ນີ້ ບັກສອນນັ້ ມັນເວົ້າຢູ່ທ່ານ້ຳພຸ້ນ.

- ແມ່ເຊື່ອບໍ່ລະ ? ຜັນຖາມຢ່າງບໍ່ງວາກຫນ້າມາເບິ່ງປ້າພອນ.

- ໂຢ້ວ ກະ...ກະ ຈັ່ງວ່າ ມາຖາມລູກນີ້ແລ້ວ ໄປນຳກັນ ຫລາຍຄົນປານນີ້...ຕົວະ ບໍ່ເປັນຕື້ !

- ແມ່ວ່າ ເອີ້ ຕາມແຕ່ເກົ່າມາຫລັງເຄີຍມີຜູ້ພົ້ບໍ່ ?

- ແຕ່ຫວ່າງ ໑໐ ປີກ່ອນຫັ້ນ ກໍມີ ຜູ້ເຫັນຮອຍມັນຢູ່ໄດລະ, ຄາວແມ່ຍັງນ້ອຍໆແທ້ ແຮ່ງຄັກແຫລ້ວ. ແມ່ຈັກ ໕-໖ ປີນີ້ລະ ພໍຈື່ຄວາມພໍ່ເຖົ້າເວົ້າສູ່ຟັງວ່າ ໄທບ້ານເຮົານີ້ ຈົນໄດ້ໄປເຊີນ ເຈົ້າ ເພັດຊະລາດ ພຸ້ນຕ່ວາ ມາປາບເສືອໃຫ້... ມັນມາຜິກກິນງົວໄທບ້ານຫມົດຕັ້ງ ໔໐ ກວ່າຕົວ " ປ້າພອນເວົ້າລືນເຖິງຄວາມຫລັງ ສຽງສະທ້ານຟັງບໍ່ອອກວ່າ ລາວເສຍດາຍອະດີດ ຫລືເປັນຫ່ວງນຳອະນາຄົດ.

- ເຊີນເຈົ້າເພັດຊະລາດ ມາຍິງເສືອໃຫ້. ໂທ້...ນັ້ນ ແມ່ນປີໃດແມ່ ? ຈັກປີມາແລ້ວ ? ຜັນຖາມຄືນດ້ວຍຄວາມສົນໃຈ ເອົາບໍ່ເຄີຍໄດ້ຍິນເລື່ອງແບບນີ້ມາກ່ອນ ແຕ່ຊື່ບຸລຸດໃນຮາຊະຕະກຸນຜູ້ນີ້ ກໍກະຕຸ້ນໃຫ້ເອົາຂຶງຂັງ ມີກຳລັງໃຈເພາະເອົາຮູ້ກ່ຽວກັບຄວາມ ພິລະອາດຫານໃນເບີງຕໍ່ສູ້ກູ້ຊາດ ຕ້ານຝະລັ່ງ ຂອງເພິ່ນແດ່ແລ້ວ. ຜັນ ຫາກໍ່ເຂົ້າໃຈວ່າ ເປັນຫຍັງຫລາຍຄອບຄົວຢູ່ບ້ານນີ້ ຈຶ່ງມີຮູບພະອົງ ຕິດເອ້ນຳຝາເຮືອນຢູ່.

- ຕອນນັ້ນແມ່ອາຍຸ ໕-໖ ປີ ດຽວນີ້ແມ່ ໖໑ ລູກກໍໄລ່ເບິ່ງເອງລະບໍ້ ? ປ້າພອນເວົ້າຕໍ່ດ້ວຍອາລົມດີ. ການລຳລຶກຫາໄວເດັກເຮັດໃຫ້ລາວ ລືມຄວາມຢ້ານກົວໄປແດ່.

- ກໍເປັນ ໔໐ ກວ່າປີ ! ຕົກຫມົ້ງ ໑໙໓໐ ປາຍເນາະ ຜົນ ຄຶດໄລ່ເລກໄວໆ "ຂ້ອຍຍັງເປັນລົມເປັນແລ້ງຢູ່ໃສ ບໍ່ເດ!" ສອງແມ່ລູກ ຫົວຂຶ້ນນຳກັນ.

- ເສືອໂຄ່ງພຸ້ນໄດ ຜົນ ເສືອໂຄ່ງ ໔ ໂຕ ຜົວເມຍມາຜົກກິນງົວຢູ່ແຄມທົ່ງນີ້ນ່າ ຕີນບ້ານເຮົານີ້ນ່າ !

- ສະແດງວ່າ ແຕ່ກ່ອນມີສັດປ່າຊຸມຫລາຍເນາະແມ່ ຊັ້ນ ຮອຍເສືອທີ່ພວກລູກເຫັນ ກໍຄືຊິ...ແມ່ນແທ້ເນາະ ! ຜົນວົກເອົ້າມາຫາບັນຫາທີ່ເວົ້າກັນແຕ່ຫົວທີ.

- ເອີ້...ເອີ...ມັນອາດຊິແຕກຫນີມາແຕ່ທາງທ່າແຂກ ບໍ່ຮູ້ ໄດ້ຍິນວ່າ ທາງພຸ້ນພວມຕັດໄມ້ ບຸກເບີກປ່າຢ່າງຫນັກ ສັດກໍແຕກຕື່ນມາ" ປ້າພອນຫາເຫດຫາຜົນ ມາປະກອບ ເພື່ອຢັ້ງຢືນ "ຮອຍເສືອ" ຂອງຜົນເຮັດໃຫ້ບ່າວຄູ ກັ້ນຫົວໄວ້.

- ຊັ້ນລະແມ່ ບາດອ້າຍຄູນມາ ຂ້ອຍວ່າຢາກຂໍຢືມປືນລາວໄວ້ຕິດໂຕ ຍາມໄປປ່າ ຈຶ່ງຊິອຸ່ນໃຈແດ່ ແມ່ລົມລາວຊ່ອຍຂ້ອຍແດ່ລະ !

- ເອີ້...ເລື່ອງນັ້ນ ອ້າຍເຈົ້າກະຊິບໍ່ຂັດແຫລ້ວ" ປ້າພອນເອີເຫີໄປນຳ.

- ແມ່...ເຄີຍເຫັນໄມ້ເກດສະຫນາ ຫລື ວ່າໄມ້ດຳແດ່ບໍ່ ? ຜົນປ່ຽນຫົວຂໍ້ ສົນທະນາທັນທີ.

- ໄມ້ເກດສະຫນາ ເອີ້ ບູຮານເພິ່ນເອີ້ນໄມ້ວາດສະຫນາໄດ ລູກຄືເພິ່ນວ່າຜູ້ໃດມີບຸນວາດສະຫນາດີ ຈຶ່ງຊິຈອບເຫັນໄດ ! ເປັນແນວໃດເອົາປ່າສອງນີ້ ພໍ້ທັງດົງໄມ້ເກດສະຫນາພໍ້ທັງຮອຍເສືອຊັ້ນຫວະ ? ນາງພອນຖາມຫົວໆ ເມື່ອເຫັນຄວາມສົນໃຈ ໃນຊັບສົນປ່າ ຂອງຊາຍຫນຸ່ມຮຸ່ນລູກ.

- ເຫັນແຕ່ຮອຍເຂົາຕັດໄມ້ຖິ້ມທົ່ວທີບທັ້ນຕີແມ່ ບໍ່ເອົ້າໃຈວ່າເປັນຫຍັງ ຕ້ອງຕັດຕົ້ນໄມ້ທັງຕົ້ນຖິ້ມແນວນີ້ ຈັກຫນ້ອຍມັນຊິບໍ່ດັບແນວ

ຫວະ ?

- ເລື່ອງນີ້ແມ່ກະບໍ່ຮູ້ລະອຽດປານໃດ ຄັນລູກຢາກຮູ້ລັກ ໄປລົມກັບພໍ່ລຸງຄໍາ ຫມໍຢາເຮົາພຸ້ນເດີ້ ລາວຊ່າງເອົາ ຊ່າງຊອກດອກ ແຕ່ໄທບ້ານເຮົານີ້ ຄືບໍ່ມີໃຜໄດ້ຊື້ ໄດ້ຂາຍຍ້ອນ ເອົາພໍແຕ່ມາໄດ້ແຕ່ງຢາ.

- ລູກກໍ່ຢາກຮູ້ໄປຊັ້ນແລ້ວ ຂອງວ່າ ເອົ້າປ່າເດ້ ກໍ່ຕ້ອງຊອກຮູ້ເລື່ອງປ່າແດ່ ! ຜັນອະທິບາຍຫົວໆ.

- ເອີ້... ຮູ້ໄວ້ກໍດີທັ້ນແລ້ວ ຈັກຫນ້ອຍພໍ້ເອົ້າຄັກໆໂລດບໍ່ຮູ້ວ່າ ແມ່ນຂຸມເງິນຂຸມຄໍາຢ່າງກາຍເລີຍ ປານຄົນຕາບອດກໍ່ຊິໂພດໄປເນາະ ! ດັ່ງນັ້ນ ເມື່ອນາງພອນແນ່ໃຈໃນເລື່ອງ ຮອຍເສືອແລ້ວ ຄົນຫມົດບ້ານກໍເຊື່ອໄປນໍາ ຈຶ່ງເປັນການງ່າຍ ທີ່ຈະບອກເຕືອນກັນ ບໍ່ໃຫ້ເອົ້າປ່າ ອື່ນພູ ຜູ້ຫນຶ່ງຜູ້ດຽວ. ຜັນດີໃຈ ທີ່ແຜນການສ້າງຄວາມຕື່ນກົວໃຫ້ໄທບ້ານເປັນຜົນສໍາເລັດ ທັງນີ້ກໍເພື່ອຫລີກເວັ້ນການປະທະກັບພວກ ຂອງລໍາຜາດ້ານຫນຶ່ງ ແລະ ອີກດ້ານຫນຶ່ງກໍເພື່ອການລັກຫລອຍເອົ້າປ່າ ລົ້ມຫາໄມ້ອາດສະຫນາ ຂອງເອົານໍາ. ຜັນອຸ່ນໃຈ ເມື່ອໄດ້ປືນສັ້ນຂະຫນາດພໍເຫມາະມີໄວ້ຕິດຕົວກະບອກຫນຶ່ງ. ອ້າຍຄູນ ເປັນຜູ້ເອົາໃຫ້ຢືມ ທັງຕັກເຕືອນວ່າຄວນໃຊ້ໃນຄາວຈໍາເປັນແທ້ໆ ເທົ່ານັ້ນ ຜັນກໍຄິດວ່າເອົາບໍ່ປາຖະຫນາເຮັດໃຫ້ສັດປ່າ ນົກກາ ທັງຫລາຍແຕກຕື່ນນໍາສຽງໂປ້ງປ້າງ ຫນ້າສະທ້ານຂອງ ອຸປະກອນອັນນີ້ ຊາຍຫນຸ່ມເຝົ້າຄິດບອກໂຕເອງວ່າ ໃນທີ່ສຸດ ວິຊາແອບທະຫານ ເຊິ່ງຮຽນໄວ້ ແຕ່ຄາວເປັນນັກສຶກສາ ກໍສາມາດນໍາມາໃຊ້ໄດ້ໃນໂອກາດນີ້ແລ້ວ. ຫລັງຈາກປະເຊີນຫນ້າກັບພວກລໍາຜາ ເຊິ່ງອ້າງວ່າ ລົງມາສໍາຫລວດທິດທາງ ຕັດຖະຫນົນໄດ້ອາທິດກວ່າ ຫນ່ວຍອອກແຮງງານຂອງຜັນ ກໍສາມາດ ປ້ໍາໄມ້ດູ່ ໄມ້ແດງຂະຫນາດໃຫຍ່ ໄດ້ ໕ ຕົ້ນ ລໍາໄມ້ຊື່ງາມ ເຫມາະທີ່ຈະເອົາມາເລື່ອຍເຮັດເຄື່ອງເຮືອນຊັ້ນເທິງ ເຊັ່ນ ອື່ - ອ້າວ ແລະ ເສົາ. ຜັນ ມັກອອກໄປສົມທົບກັບ ຫນ່ວຍແຮງງານ ໃນຕອນບ່າຍ ຫລັງຈາກ

ເດັກນ້ອຍເຂົ້າຫ້ອງຮຽນໄດ້ຊົ່ວໂມງໜຶ່ງເທົ່ານັ້ນ. ບັດນີ້ຜັນສາມາດຍ່າງເຂົ້າປ່າຄືນດຽວຕາມເສັ້ນທາງທີ່ເອົາເຮັດເຄື່ອງໝາຍ ດ້ວຍການຫັກພຸ່ມໄມ້ໄວ້ ເປັນລະຍະໆ ແລ້ວ ວັນເວລາທີ່ຜ່ານໄປ ຢ່າງບໍ່ມີຂ່າວຄາວ ຈາກມະນີສະຫວັນ ນັ້ນຍິ່ງເຮັດໃຫ້ຜັນມຸມານະ ທີ່ຈະເຮັດວຽກທຸກຢ່າງໃຫ້ແລ້ວໂດຍໄວ. ມາຮອດມື້ນີ້ ໄມ້ຫ້າຕົ້ນລໍຖ້າແຮງງານລະດົມໃນວັນສິນທີ່ຈະມາຮອດ ເພື່ອລາກກົ້ງລົງຈາກເຈ້ຍພູ. ຜັນ ຕ້ອງໄປເບິ່ງທິດທາງທີ່ຈະເອົາໄມ້ລົງ ມັນບໍ່ເປັນເລື່ອງງ່າຍປານໃດສໍາລັບຊາວບ້ານ ທີ່ມີພຽງຂວານເລື່ອຍ ແລະ ພ້າ ເປັນອຸປະກອນ. ເລີ່ມຂຶ້ນເນີນພູແລ້ວ ໂງ່ນຫີນເປັນເງື້ອມ ຂຶ້ນຕາມຫວ່າງຊ້ອນກັບຕົ້ນໄມ້ໃຫຍ່ ບໍ່ໜ້າເຊື່ອວ່າຕົ້ນໄມ້ຈະສາມາດດູດຊຶມເອົາອາຫານຈາກຫລືບໂງ່ນຫີນແຕ່ມັນກໍເປັນໄປແລ້ວ. ເບິ່ງຄືວ່າມັນອາໄສ ເຊິ່ງກັນ ແລະ ກັນ. ໂງ່ນຫີນຊຸ່ມອຶນມີໄຄຂຽວຂຶ້ນຫໍ່ຫຸ້ມຄ້າຍກັບວ່າ ຢາກປົກປ້ອງມັນ ໃຫ້ພົ້ນຈາກແສງຮ້ອນ ຂອງດວງຕາເວັນ ອາໄສເງົາຮົ່ມໄມ້ໃບຕຶບ ໄຄຫີນກໍຍິ່ງມີໂອກາດງອກງາມຂຽວອຸ່ມທຸ່ມ. ໂງ່ນຫີນ ເບິ່ງຄືມີຊີວິດ ຊີວາຂຶ້ນ. ສັດ ແນວຕ່າງໆ ທີ່ກິນໄຄກໍມາຊຸ້ນອາໄສ ເຫັດນ້ອຍສີຂາວເຫລືອງເກີດຕາມລຽບຕີນໂງ່ນຫີນ ເບິ່ງຄ້າຍດອກໄມ້ປະດັບດິນ ຜັນອອນຊອນຄວາມງາມແຫ່ງປ່າ ອາຖັນແຫ່ງພົງໄພພອນແຜ່ອິດທິພົນ ຄອບງໍາຈິດໃຈບ່າວຊູ. ສຽງນົກນ້ອຍຮ້ອງມາຈາກພຸ່ມໄມ້ອ້ອມຂ້າງ ແນມບໍ່ເຫັນວ່າມັນຈັບງອຍຢູ່ງ່າໃດ. ຜັນຄຶດເດົາເອົາວ່າ ພວກມັນຄົງ ມີຄວາມສຸກບໍ່ໜ້ອຍ ທີ່ໄດ້ຢູ່ກັບຕາມພາສາສັດ ປາສະຈາກການຮາວີ ຈາກສິ່ງພາຍນອກ. ຊາຍໜຸ່ມກົ້ມລົງເມື່ອເຫັນມີເຫັດສີຂາວໆ ເກີດເຕັມຂອນໄມ້ຕາຍຂວາງໜ້າ.

- ອື... ເກັບເຫັດເມືອໃຫ້ແມ່ແກງສູ່ກິນກໍດີດອກແລງນີ້ໂຊກດີລະບໍ້ໜີ້ ! ມາທຸກມື້ຄືບໍ່ເຫັນ! ຊາຍໜຸ່ມ ຈົ່ມກັບຕົນເອງທັງຍິ້ມດ້ວຍອາລົມຊື່ນບານ ເອົາມາຍຜ້າຂາວມ້າມັດແອວອອກມາ ປູໃສ່ບ່ອນ

ອ່າວແປ້ນ ແລ້ວນັ່ງຢອງຢໍ້ ກົ້ມໜ້າກົ້ມຕາເກັບ ແຕ່ຫູຂອງຜັນບໍ່ຝາດໄປດອກ. ເຂົາມີສັນຊາດຕະຍານດີສົມຄວນ ສຽງຄົນລົມກັນອຸ່ມໆ ແລະສຽງຢາດຕີນ ຢ່ຳງ່າໄມ້ ແລະໃບໄມ້ແຫ້ງດັງໃກ້ເຂົ້າມາ. ໂຊກດີ ທີ່ເຂົາພວມກົ້ມຢູ່. ຜັນສວຍໂອກາດ ສາຍຕາວ່ອງໄວ ຈຶ່ງຈ້ອງໄປຍັງ ບ່ອນມາຂອງສຽງ. " ເຖົ້າຄຳຜາ ! " ຜັນອຸທານຄ່ອຍໆ ດ້ວຍຄວາມປະຫລາດໃຈ ບໍ່ຄືດວ່າ ຄຳຜາ ຈະດັ້ນດົ້ນບຸກປ່າມາອີກ ພາຍໃນລະຍະຕິດໆກັນ ມີຫຍັງເກີດຂຶ້ນກັບເອກະສານ ທີ່ຍື່ນຂື້ນໄປບໍ?

- ຕາມຂ້ອຍຮູ້ນີ້ກໍ້ອ້າຍ ພວກຂ້ານນີ້ ມັນແລ່ນໄປວຽງພຸ້ນໄດໄປສະເໜີເລື່ອງໜີ້ນະ ! ຜູ້ຕິດຕາມຄຳຜາຄັ້ງນີ້ ເປັນຄົນອ່າວໜຸ່ມທີ່ຜັນບໍ່ເຄີຍເຫັນໜ້າມາກ່ອນ. ເຂົາພວມເລົ່າເລື່ອງ ໃຫ້ຄຳຜາຟັງ. ນັບມື້ນັບມີຄົນແປກໜ້າມາວົນວຽນ ຢູ່ໃນເຂດປ່າຣົກດົງຕົບ ແຕ່ງນີ້ຫລາຍຂຶ້ນ.

- ຫັ້ນຕີ້ ກູຈຶ່ງວ່າລອງມາເວົ້າ ກັບພວກມັນອີກຈັກເທື່ອ ບາດທ່າພວກເຂົາຕົກລົງ ກູວ່າຕື່ມໃຫ້ເຂົາອີກຈັກ ໕ ຄືວ ພວກມັນຄືຊິຄຸບໂລດລະໄປ ! ຊາຍທັງສອງເວົ້າກັບສຽງດັງທຳມະດາ ຜັນໄດ້ຍິນທຸກຖ້ອຍຄວາມ. ເມື່ອຮູ້ເຈດຕະນາຂອງພວກເຂົາ ຈະແຈ້ງດັ່ງນັ້ນ ຜັນຈຶ່ງບໍ່ຟ້າວຟັ່ງ ປີນໃນຖົງນອນສະຫງົບຢ່າງອົບອຸ່ນ ຊາຍໜຸ່ມປ່ອຍໃຫ້ຊາຍທັງສອງ ຍ່າງລ່ວງໜ້າໄປສ່ອນເຂົາເກັບເອົາເຫັດ ທີ່ຂາວຈ່ານຜ່ານນັ້ນໃສ່ພົກຜ້າຂາວມ້າ ແລ້ວຈຶ່ງອອກເດີນທາງນຳຊາຍທັງສອງໄປຫ່າງໆ.

ແຮງອາລາດ

ດ້ວຍ ທ່າທີ ຂອງຜູ້ຊຳນານທາງເດີນ ລຳຜາ ກັບພັກພວກຍ່າງວັບໆບຸປ່າໄປໜ້າ ໂດຍບໍ່ຮູ້ຮອດວ່າມີຜູ້ຕິດຕາມ ຢູ່ເບື້ອງຫລັງ. ພວກເຂົາມຸ່ງໜ້າສູ່ "ສະໜາມໄມ້ນ້ອຍ" ບ່ອນໄທບ້ານ ຊ່ອຍກັນກໍ່ງເກືອບເອົາທ່ອນໄມ້ ທີ່ຮາບງ່າປີກ ງ່ານ້ອຍອອກ ແລ້ວນຳມາກອງໄວ້.

ປ່າດົງຍາມບ່າຍລ້ອຍມືດງຽບ ມັນແມ່ນຍາມພັກຜ່ອນນອນເວັນຂອງສັດນ້ອຍຈຳພວກລັຽງລູກດ້ວຍນົມ ສ່ວນພວກນົກກາ ກໍ່ບໍ່ທັນບິນກັບຕ່າວຮວງຮັງເທື່ອ.

ບໍ່ທັນທີ່ເຖົ້າລຳຜາ ກັບຜູ້ຕິດຕາມ ຈະລ່ວງເຂົ້າຮອດບ່ອນມີຕົ້ນໄມ້ໃຫຍ່ດົບ ລົ້ມຂວາງປ່າເຕັງພຸ່ມໄມ້ປ່ອງກັບພືດນ້ອຍອື່ນໆ ທີ່ລົ້ມຮາບເປັນບໍລິເວນກ້ວາງຫລາຍວາດອກ ຊາວໜຸ່ມກອງຫລອນ ພາຍປືນຍາວ ຮອດສາມຄົນກໍ່ເອີ້ນໃສ່ ແລະ ບອກໃຫ້ຢຸດຍ່າງ.

- ມາຫຍັງຫັ້ນ ? ມາແຕ່ໃສ ? ຄຳຖາມແບບບໍ່ຮູ້ວ່າໃຜເປັນໃຜ ເຮັດໃຫ້ຊາຍຮຸ່ນກາງຄົນ ຜູ້ຄິດວ່າຕົນມີແຕ້ມເໜືອກວ່າສະເໝີ ສະດຸ້ງ ແຕ່ກໍ່ຢຸດຍ່າງທັນທີ ເມື່ອເຫັນປາຍປືນເບິ່ງແນມາຊີ້ເອິກ.

- ໂອ້ວ... ຊິມີ ຫຍັງເກາະ ! ໄຫດຽວກັນຕວ່າ. ລິງລາຍ ຂອງຜູ້ອາວຸໂສ ບໍ່ໜັດ ສຽງງ່າຍ.

- ເຈົ້າມີ ວຽກນຳໃຜ ເລື່ອງໃດ ? ກອງຫລອນໜຸ່ມຜູ້ເກົ່າຖາມຢ້ຳ ບ້ານສຽງບອກກວ່າບໍ່ມີຜ່ອນຜັນນຳໃຜ.

- ກະເອີ້... ຂ້ອຍຊິມາຕົກລົງກັບທ້າວຄູຜັນ ຫລືວ່າ ທິດແກ່ນ ທັ້ນແຫລ້ວ. ຢາກມາບອກໃຫ້ຮູ້ວ່າ ຄວນຈັດການໄວ ຢ້ານທາງເທິງ ເພິ່ນໄດ້ກິນ !

- ຊັ້ນກະບໍ່ຈຳເປັນລະອາວ ພວກເຮົາຈັດການຮຽບຮ້ອຍແລ້ວ ! ຜັນຍ່າງອອກຈາກບ່ອນລີ້ບັງ ທັງຍົກມືເປັນສັນຍານ ໃຫ້ກອງຫລອນ ເອົາປືນລົງ. ຄຳຜາກັບລູກນ້ອງ ງວາກມາທາງສຽງຂອງຜັນ ດ້ວຍ ສີໜ້າຕື່ນກົວກວ່າເກົ່າອີກ.

- ອ້າວ ! ! ຫລານຊາຍມາແຕ່ຫວ່າງໃດ່ລະ ? ຊັ້ນກໍດີແລ້ວ ອາວມີແນວ ເອີ້ ຂໍ້ສະເໜີໃໝ່.

- ພວກເຮົາບໍ່ຮັບຂໍ້ສະເໜີໃດໆ ນຳຄືນບອກການຈັດຕັ້ງດອກ. ອາວຄຳຜາເຊົາຫລອກພວກເຮົາໄດ້ແລ້ວ ພວກເຮົາຮູ້ວ່າອາວ ອອກ ຈາກບໍລິສັດໂຮງເລື່ອຍຕັ້ງດົນແລ້ວ ເປັນຫຍັງອາວຈຶ່ງເຮັດແນວບໍ່ດີ ເປັນແບບຢ່າງ ໃຫ້ພວກຫລານແນວນີ້ ? ຜັນເວົ້າຍິດຍາວ ທັງຍົກມື ເບື້ອງໜຶ່ງຄ້ຳແອວ. ທ່າທີເຊື່ອໝັ້ນຕົນເອງຂອງຜັນ ເຮັດໃຫ້ ຈານຄຳຜາ ຕ່າງໃຈບໍ່ໜ້ອຍ. ເວລາພຽງສິບກວ່ານີ້ ທ້າວນາຍຄູ ໜ້າອ່ອນ ຮຸ່ນລູກຊ່າງວ່າເດັດດ່ຽວ ແຂງກະດ້າງຂຶ້ນແນວນີ້ ມັນຄວນ ຊິຖືກສັ່ງສອນຢ່າງຮຸນແຮງສາແລ້ວ.

- ໂຢ້ວ ! ພວກສູເຈົ້າ ຕັ້ງວ່າບໍ່ເຂົ້າໃຈຄວາມເວົ້າຂ້ອຍເນາະ. ເລື່ອງໄມ້ນີ້ໃຜຊິມາຮູ້ລື່ນຂ້ອຍ ຂ້ອຍຢາກຊ່ອຍຊຸມເຈົ້າ ຢາກໃຫ້ໄດ້ໄມ້ ໄປປຸກໂຮງຮຽນ ເຖິງຈະໜ້ອຍກໍ່ຍັງດີກວ່າບໍ່ໄດ້ເລີຍ ! ຂ້ອຍມີປັນຍາ ຕິກາ ຂຶ້ນທະບຽນໄມ້ປ້າໃຫ້ພວກເຈົ້າມັນກໍດີທີ່ແລ້ວ ຄືພວກເຈົ້າເຮັດນີ້ ຮູ້ບໍ່ວ່າ ອັນຕະລາຍຊ່ຳໃດ.ເຂົ້າຄຸກຍ້ອນໄດ່ ບໍ່ມີກາຕີ... ບໍ່ມີລາຍເຊັນໃຜ ຈັກດີ້ບ່າ !

- ພວກເຮົາຍິນດີໄປເອົາຄຸກນຳກັບຫມົດບ້ານນີ້ລະ ຫລືວ່າ ! ຜັນຢຸດເວົ້າທັງກົ້ງຕາເບິ່ງຈານຄຳຜາກິງໆ.

- ຫລືວ່າຫຍັງ ?

- ຫລືວ່າ ຊິສົ່ງເຈົ້າຫັ້ນໄປແທນ ໃນຖານະວ່າ ເຈດຕະນາ ຕົວະຍົວະຫລອກລວງໄທເຮົາ ! ຜັນເວົ້າອອກໄປກິງໆ.

- ຣະ ຣະ ໆ ! ຕົວະຍົວະ ຫລອກລວງ ! ເຈົ້າເອົາໃສມາເວົ້າ ມີຫລັກຖານພິຍານຢູ່ໃສ ວ່າຂ້ອຍມາຕົວະຍົວະພວກເຈົ້າ, ຢ່າເວົ້າແນວ ເປັນໄປບໍ່ໄດ້ເທາະນ່າ. ມາຕົກລົງກັນດີໆສາ, ດຽວນີ້ ເຄື່ອງຕັດໄມ້ ຂອງໄທເຮົາ ກຽມພ້ອມຊິເດີນທາງມາພີ້ແລ້ວ ພວກເຈົ້າໃຊ້ເວລາ ເປັນສິບໆ ມື້ ເພື່ອປ້ຳໄມ້ ໔ ຕົ້ນນີ້ຫວະ ? ຣະຣະ ! ຕົກລົງ ກັບອາວແລ້ວ ຈັດການໃຫ້ພາຍໃນມື້ດຽວ... ຕັດເປັນທ່ອນ ໃຫ້ພ້ອມ... ເພື່ອເຫັນແກ່ ໄທບ້ານ ອາວປຶກສາກັບພະແນກບັນຊີແລ້ວ. ເຂົາວ່າ ຍິນດີໃຫ້ຕື່ມເປັນ ໑໔ ລິວ. ພວກອາວກໍ່ເກືອບວ່າບໍ່ໄດ້ຫຍັງເດີ້ ຄ່າເຄື່ອງມືມັນແພງແທ້ ໄດ່..." ຄຳຜາທ່ວາບລ້ອມຕໍ່ ນ້ຳສຽງໂອບອ້ອມ.

- ໂຢ້ວ ! ອາວ ເຈົ້າຫນີ້ ກໍ່ເວົ້າເຂົ້າໃຈຍາກລືກັນ ! ຜັນ ໂນໂຫ ເມື່ອເຫັນຄວາມຊູຊີ ຂອງ ຊາຍຜູ້ອາວຸໂສ ແລ້ວ ເວົ້າຕໍ່ສຽງຫນັກໆ ວ່າ :

- ພວກເຮົາຕ້ອງການໄມ້ ໔໐ ລິວ ບໍ່ແມ່ນ ໑໔ ລິວ. ພວກເຮົາ ບໍ່ຕ້ອງການເຄື່ອງຕັດ ເຄື່ອງເລື່ອຍຂອງອາວ ທີ່ຊິມາກິນໄມ້ ໄປກາຍ ກວ່າເຄິ່ງ. ເຫື່ອແຮງຄົນພວກຫລານມີ ບໍ່ຂໍແລກກັບຄ່າແຮງຈັກໃດໆ ຖ້າພວກເຮົາຜິດກໍ່ຈະຜິດນຳກັນຫມົດ... ຍິນດີເຂົ້າຄຸກພ້ອມກັນ. ຂໍໃຫ້ ອາວຫລີກທາງໄທເຮົາສາ. ໄດ້ບໍ່ໄດ້ອາວກໍ່ອອກຈາກບໍລິສັດແລ້ວ ປ່ອຍໃຫ້ທາງບໍລິສັດ ມາເອົາເລື່ອງກັບໄທເຮົາເອງ.

- ເອົາລະ. . . ເອົາລະ ຂ້ອຍເຂົ້າໃຈລະ. ພວກເຈົ້າມັນບໍ່ເຄີຍຮູ້ ລົດຊາດຄວາມຜິດໃນຖານລັກໄມ້ເທື່ອ ! ດີ ! ແລ້ວຊິເຫັນກັນ !

ຄຳຜາກັດແຂ້ວໃສ່ ແສງຕາອຸ່ນເຂັ້ມບົ່ງບອກຄວາມອາຄາດເຈັບໃຈ.

- ນີ້ຊິໃຫ້ຖືວ່າ ເປັນຄວາມຊູ່ຂອງອາວບໍ່ ? ຜັນເຮັດໃຈເຢັນຕໍ່ ທຸກຄົນຢູ່ທີ່ນີ້ ໄດ້ຟັງໝົດແລ້ວ ວ່າເຈົ້າເວົ້າແນວໃດ ? ບ້ານເມືອງ ມີຂື່ມີແປ ເຈົ້າຊິມາວາງອຳນາດບາດໃຫຍ່ໃສ່ໄທເຮົາແນວນີ້ ບໍ່ຖືກ ດອກ. ເຊີນໄປໄດ້ແລ້ວ ! ພວກອ້າຍນ້ອງກອງຫລອນເອົາໃຈຄຳເວົ້າ ຂອງຜັນ ດີ ພວກເຂົາຍ່າງສຸມເຂົ້າມາຫາ ຄຳຜາກັບລູກນ້ອງເຫັນທ່າ ບໍ່ດີ ຈຶ່ງຟົດໜ້າ ງວາກກັບຄືນຍ່າງສວາບໆ ອອກໄປທາງທີ່ຍ່າງ ຜ່ານມາຫວ່າງສິບນາທີກ່ອນ. ຈົນຮ່າງຂອງຊາຍທັງສອງ ລັບແສງຕາ ໄປແລ້ວ ຜັນເອງກໍຈຶ່ງຍ່າງຫມີ້ນປ່າ ເອົາໄປຫາຫນ່ອຍຕັດໄມ້.

- ອີ່ຕາຄຳຜາ ຜີທ່ານີ້ ມັນບໍ່ເຊົາຣາວີເຮົາງ່າຍໄດ ຫນີ້ອ້າຍແກ່ນ ເຈົ້າຄຶດແນວໃດ ? ຜັນເປີກສາກັບທິດແກ່ນ ຫລັງຈາກເລົ່າເຫດການ ຫວ່າງຫນຶ່ງສູ່ຟັງ.

- ໃນເມື່ອພວກເຮົາມີອາວຸດ ມີກຳລັງແນວນີ້ ຖ້າລາວຍັງຄຶດ ຢາກອິ່ມເທັງໄທເຮົາຢູ່ມັນກໍອາດຊິຕ້ອງ ມີການເສຍເລືອດ ເສຍເນື້ອກັນ ພຸ້ນແຫລ້ວ ! ທິດແກ່ນເວົ້າບ້າສຽງສະທ້ານ.

- ບໍ່ປານນັ້ນດອກ ອ້າຍທິດ ຂ້ອຍບໍ່ຄຶດວ່າ ຊິໃຫ້ໃຜມາເສຍສະຫລະ ເພື່ອໄມ້ ໕໐ ຄິວນີ້ນ່າ... ປ່າດົງພົງໄພ ເຮົາກວ້າງໃຫຍ່ເທົ່າໃດເບິ່ງຕີ້ ! ເປັນຫຍັງ ຈັ່ງຊິເຖິງຂັ້ນຫລັ່ງເລືອດໃສ່ກັນ ຂ້ອຍບໍ່ເຊື່ອດອກວ່າ ລາວ ຊິໂຫດຫ້ຽມປານນັ້ນ !

- ຜັນຢ່າລືມວ່າ ເຖົ້ານີ້ ລາວໝົດທາງທຳມາຫາກິນແລ້ວ ລາວ ອາດຊິກາງຕໍ່ໄມ້ ໕໐ ຄິວນີ້ ໂຕຄຶດເບິ່ງ ມັນກໍມີມູນຄ່າ ເປັນຫລາຍລ້ານ ກີບ ສຳລັບລາວ ມັນອາດຊິມີຄວາມຫມາຍຂັ້ນຊີວິດ. ທິດແກ່ນ ພະຍາຍາມຊອກເອົາໃຈສາເຫດ.

- ຣິມ ! ແຕ່ມັນບໍ່ຖືກ ! ລາວເຮັດບໍ່ຖືກ, ຖ້າພວກເຮົາປ່ອຍໃຫ້ ລາວເຮັດຕາມໃຈ ມັນກໍປານວ່າ ພວກເຮົານີ້ລະ ຊຸກຍູ້ໃຫ້ລາວເຮັດຜິດ

ຕໍ່ບ້ານຕໍ່ເມືອງ ! ຜັນຢືນຢັດຢູ່ໃນແນວຄິດແຫ່ງຄວາມຍຸຕິທຳ.

- ຊັ້ນ ອັນທີ່ພວກເຮົາເຮັດຢູ່ຫັ້ນເດ້... ເຈົ້າຄິດວ່າ ມັນຖືກຊັ້ນຫວະ ? ທິດແກ່ນຖາມສຽງລັ່ງເລ.

- ຖືກ ! ໃນນາມວ່າ ພວກເຮົາໄດ້ປຶກສາຫາລືກັນ ໄດ້ຍື່ນໜັງສືຮ້ອງຂໍຄວາມເປັນທຳ ຂ້ອຍບໍ່ຄິດວ່າ ການເຮັດເພື່ອສ່ວນໂຮມ ມີຜົນສະທ້ອນຮ້າຍແຮງດອກ ຂ້ອຍຍິນດີໄປເຂົ້າຄຸກ ແທນອ້າຍນ້ອງເຮົາທຸກຄົນ ! ຜັນຕອບໜັກແໜ້ນ ສະແດງອອກເຖິງຄວາມ ເດັດດ່ຽວຂອງເຂົາ.

- ອື່ມ ! ຂ້ອຍ... ຄິດວ່າ... ຄືຊິບໍ່ມີຫຍັງຮ້າຍແຮງ ! ທິດແກ່ນເອົາໃຈຊ່ອຍ.

ຜັນກວດກາເບິ່ງຄວາມກ້າວໜ້າ ຂອງວຽກງານແລ້ວ ຕົກລົງຈະເຄື່ອນຍ້າຍທ່ອນໄມ້ ຈຳນວນທີ່ຖາກກ້ຽງແລ້ວນັ້ນ ລົງມາໃນວັນສິນທີ່ຈະມາເຖິງ. ເຂົາເດີນທາງກັບອອກມາ ພ້ອມກັບໝູ່ຄູ່ອື່ນໆ ເພາະເປັນເວລາບ່າຍຄ້ອຍຫລາຍແລ້ວ. ພວກຜູ້ເຖົ້າຜູ້ແກ່ຢູ່ບ້ານ ຫ້າມບໍ່ໃຫ້ຢູ່ໃນປ່າ ກາຍຍາມຕີກອງແລງ ໝາຍຄວາມວ່າ ພໍໄດ້ຍິນສຽງກອງແລງ ໃຫ້ຣີບຫ້າງກຽມກັບມາໂລດ.

ມີການຖົກຖຽງກັບພວກຜູ້ອາວຸໂສວ່າ ວັນສິນດັບບໍ່ເໝາະທີ່ຈະເປັນວັນອອກແຮງງານໂຮມໝູ່ ເພື່ອຂົນຍ້າຍທ່ອນໄມ້. ພວກຜູ້ເຖົ້າຢາກໃຫ້ຊາວໜຸ່ມ ໄປອອກແຮງງານຊ່ອຍຢູ່ວັດ ກຽມເຮັດບຸນພະເຫວດ ເພາະວັດບ້ານຮ້າງມາດົນ ມາປີນີ້ຈະມີລູບາໃຫຍ່ ແຕ່ບ້ານອື່ນມາເທດ ແລະ ອາດຈະຢູ່ປະຈຳ ຖ້າເຫັນວ່າຊາວບ້ານ ຍັງມີສັດທາແກ່ກ້າ ໃນສາດສະໜາຢູ່.

- ບ້ານ ບໍ່ມີລູບາ ມັນກະປານເຮືອນບໍ່ມີຂື່ມີແປ ! ອະດີດປະທານບ້ານ ຫລື ພໍ່ຂອງຈັນເພັງ ສາວງາມໃນຫົວໃຈ ທິດແກ່ນອ້າງເຫດຜົນ.

- ຊັ້ນກະແບ່ງເປັນສອງໆ ເນາະຜັນໃຫ້ຈຸຫນຶ່ງເຂົ້າປ່າກ່ອນ. ພໍແລ້ວວຽກທາງວັດຈຶ່ງໃຫ້ນຳອອກໄປ ! ທິດແກ່ນ ຟ້າວຫາທາງ ອະລຸ້ມອະລວ່າຍ ມັກລາວບໍ່ມັກ ລາວກໍ່ຕ້ອງເຮັດໃຫ້ຖືກໃຈພໍ່ ຂອງ ຈັນເພັງແດ່.

- ເອີ້... ວຽກຢູ່ວັດ ບໍ່ແມ່ນຫນ້ອຍໄດ໋ ເດີ້... ປະຮ້າງມາດົນ ບໍ່ຈັກ ຫລັງຄາຫໍແຈກ ບໍ່ຈັກປູສາລາ... ເອົາລະ... ເອົາລະເຮັດຄື ທິດແກ່ນ ວ່າກະໄດ້ ຫມົດເຊົ້າກໍຊິແລ້ວດອກ ແລ້ວຈຶ່ງເຂົ້າໄປຊ່ອຍກັນ ! ຜັນ ຮູ້ສຶກຜິດຫວັງ ທີ່ທິດແກ່ນຟ້າວໄປເອົນຳຄວາມເຫັນຂອງລຸງໃຫຍ່ ເພາະມັນຫມາຍຄວາມວ່າກຳລັງແຮງ ຂອງຊາວຫນຸ່ມຕັ້ງເຄິ່ງຖືກ ແບ່ງໄປ. ເພື່ອກິ້ງຍ້າຍຂອນໄມ້ຫນຶ່ງ ຢ່າງຫນ້ອຍຕ້ອງໃຊ້ຄົນເປັນ ໔໐ ເພາະມີບ່ອນຄ້ອຍ ບ່ອນໂນນທັງຕ້ອງຂ້າມຫ້ວຍນ້ຳ ຜັນ ຄຶດອຸກອັ່ງ ນຳຄວາມຫຍຸ້ງຍາກ ຖ້າສິນນີ້ເຮັດບໍ່ໄດ້ ມັນກໍຕ້ອງລອງຖ້າອີກຕັ້ງ ໆ-໘ ມື້ ແລ້ວຊິ່ວຈະເຖິງເວລານັ້ນ ໃຜຈະຮູ້ແດ່ວ່າຈະມີຫຍັງເກີດຂຶ້ນ.

ແລ້ວມັນກໍມີເລື່ອງແທ້ໆ ! ຜັນ ຄົງຈະບໍ່ສາມາດລືມອັນເວລາ ເຫລົ່ານີ້ໄດ້ຕະລອດຊີວິດຂອງເຂົາ !

ນັບເປັນ ສີ່ອາທິດເຕັມໆ ຫລັງຈາກເຂົາໄປວຽງຈັນ ເພື່ອພົບ ມະນີສະຫວັນ ແລະ ສະເຫນີບັນຫາຂອງໄມ້ປຸກໂຮງຮຽນ. ພ້ອມດຽວກັນ ບັນຫາຫົວໃຈບາງແນວ ກໍແຈ້ງຂາວອອກຫລາຍເຕີບ. ແສງຍິບຍັບ ແຫ່ງຄວາມສົມຫວັງຊຸກດັນ ໃຫ້ຜັນມີກຳລັງໃຈ ຮູ້ວ່າເຂົາຕ້ອງ ເຮັດແນວໃດ... ແຕ່ຊີວິດມັນບໍ່ງ່າຍດາຍ ຄືຄຶດໄວ້ສະເຫນີ ເລື່ອງ ຂອງຄົນອື່ນໆ ສິນກໍຮອເຂົ້າມາຕື່ມ ບັນຫາໃຫ້ຫຍຸ້ງສະຫມອງ ບໍ່ເລີກ ບໍ່ແລ້ວ.

ປາກົດວ່າ ປາດົງພົງໄພ ຮ່າຍເວດມົນອາຖັນສ້າງສະເຫນດຶງດູດ ໃຫ້ຜັນຫວງແຫນຫລົງໄຫລມັນຫລາຍຂຶ້ນ. ຊາຍຫນຸ່ມ ຮູ້ສຶກໂກດແຄ້ນ ທີ່ເຫັນຊາກໄມ້ກິດສະຫນາລຳຫໍ່ແຂນຂາ ລຽນຕົ້ນຖືກຟັນລົ້ມເປັນລ່າວ

ນ້ຳຕາຂອງລູກຜູ້ຊາຍຊຶມເຂົ້າ ໃນມື້ທຳອິດທີ່ເຫັນ ຕົ້ນດູ່ລຳທຳອິດຖືກໂຄ່ນລົ້ມລົງ ດ້ວຍມືຂອງພວກເຂົາເອງ. ສຽງລຳໄມ້ຈັກຂາດເວລາລົ້ມລົງດັງກ້ອງປ່າ ຄ້າຍສຽງສັ່ງລາແກມສະອື້ນ ຂອງເນື້ອໄມ້ສີແດງ ນ້ຳຢາງໄມ້ໄຫລຂຸ້ນ ອາບເຫງົ້າຕົ້ນປຽກ ແລ້ວຊຶມລົງສູ່ພື້ນດິນອ້ອມໆ ເປັນເວລາຫລາຍຊົ່ວໂມງ ຈົນດິນອ້ອມຮອບຕໍ່ໄມ້ປຽກຊຸ່ມຄືຢາກຮຽກຮ້ອງ ໃຫ້ຮາກໄມ້ທີ່ຍັງຝັງໃນດິນດູດຊຶມມັນໄວ້. ແຕ່ຮາກໄມ້ຕິດຕໍ່ ປາສະຈາກອົງຄະອິນຊີອື່ນໆ ບໍ່ອາດມີແຮງດູດຊຶມວັດຖຸອິນຊີໃດໄດ້ອີກ. ພະລັງຂອງມັນສາບສູນໄປພ້ອມໆ ກັບລຳຕົ້ນແຂງແຮງຂອງມັນ ຖືກຄົມໂລຫະແຂງກວ່າ ແຊກຊຶມ ຕັດແຍກທຸກອະນູເນື້ອມັນ.

ຈາກວັນນັ້ນ ຜັນພະຍາຍາມ ເອົາໂຕເວັ້ນຈາກບໍລິເວນຕັດໄມ້ຕອນຕົ້ນໄມ້ພວມຈະລົ້ມ ເຂົາຮູ້ສຶກວ່າ ຫົວໃຈຂອງເຂົາຕີບຕັນເຂົ້າຄ້າຍໆ ບໍ່ມີອາກາດຈະຫາຍໃຈ ຫມູ່ນົກນ້ອຍແຕກຝູງບິນເວີ່ນຢູ່ເຫນືອຍອດໄມ້ໃບຂຽວຄຶ້ມແຕ້ມຄວາມວອດວາຍແຫ່ງຊີວິດປ່າ ໃຫ້ນົກຫນ່ວງອື້ນ ຜັນແລ່ນເປີດເຂົ້າດົງເລິກໆ ເພື່ອບໍ່ໃຫ້ໄດ້ຍິນສຽງໂອ່ຍຄາງ ຂອງລຳໄມ້ ເວລາມັນລົ້ມ ແຕ່ກາບໄດ້ຍິນ ໄດ້ຟັງລັກໆເທື່ອຫນຶ່ງເທື່ອດຽວນັ້ນ ມັນຊ້ຳຕິດຫູຕິດຕາບໍ່ເວັ້ນຍາມ ດັ່ງນັ້ນເຖິງວ່າເຂົາຈະແລ່ນຕະເຫລີດເລີຍເຖືອດໄປຮອດໃສ, ສຽງກໍຄືວ່າຕິດຕາມເຂົາໄປຢູ່ ເພາະຜັນສຳນຶກໄດ້ວ່າ ມີຕົ້ນໄມ້ລົ້ມລົງແຫ້ໆໃດແຫ່ງຫນຶ່ງໃນປ່າ !

- ອ້າຍຜັຍ. . .ອ້າຍຜັນ. . . ! ສຽງຮ້ອງຂານຊື່ຂອງເຂົາ ດັງແວ່ວໆແຕ່ໄກ ປຸກໃຫ້ຜັນຕື່ນສະເດີດ ຈາກອາລົມສຳນຶກ ທີ່ບິນເຈີດໄປນຳປ່າຄືນມາ. ຊາຍຫນຸ່ມແປກໃຈ ທີ່ຖືກເອີ້ນຫາ ເພາະເຂົາຫາກໍແຍກໂຕອອກມາ ຍ່າງເລາະລຽບທ່າງຈາກບ່ອນຊຸມວຽກໄດ້ບໍ່ພໍເທົ່າໃດ !

- ຜັນ... ອ້າຍ... ບໍ່ສາມາດ ປົກປ້ອງນ້ອງໄດ້ ! ສຽງອ້າຍຊູນເປັນແຄ້ນໆ ເມື່ອຈັບແຂນນ້ອງຮັກ ສົ່ງໃຫ້ເຈົ້າຫນ້າທີ່ ທີ່ຕິດຕາມມາ.

- ມີລົບໄປຟ້ອງວ່າ ໄທບ້ານເຮົາລັກຕັດໄມ້. ອ້າຍກໍບອກແລ້ວວ່າບໍ່ໄດ້ລັກ ເພາະໄດ້ອະນຸຍາດຈາກເມືອງຕັ້ງ ມື ເດືອນກ່ອນ ແລ້ວແຕ່ອະເຈົ້າວ່າ ເຂດນີ້ ເປັນເຂດສຳປະທານທາງບໍລິສັດ ເອົາອໍໃຫ້ປ່າໄມ້ເມືອງໂຈະການຕັດໄມ້ ຕາມໃບອະນຸຍາດ ທີ່ອອກໃຫ້ກ່ອນທັງໝົດ ! ແສງໄຟຮຸ່ງວາບຂຶ້ນ ພ້ອມທັງສຽງດັງແກ້ກ ຂອງກ້ອງຖ່າຍຮູບ ເຮັດໃຫ້ຜົນງວາກໄປທັນທີ ໂທ ! ມີການກຽມທຸກຢ່າງເພື່ອມັດໂຕເອົາ ຜົນຍິ້ມໃສ່ຊ່າງຖ່າຍຮູບທັງງຶກຫົວໃຫ້ຖ່າຍຕື່ມທັງເຍິງມື ທີ່ຖືກກັບໃສ່ ສູງຂຶ້ນເໜືອຫົວ.

ກາບປ້ອມປາມ

ແກ້ວ . . . ແກ້ວ ! ອ່ານຂ່າວນີ້ໄວ " ຈັບນາຍຄູ ຫົວຫນ້າໂຮງຮຽນພາປະຊາຊົນຕັດຕົ້ນໄມ້. ອ້າງວ່າເພື່ອເອົາມາສ້າງໂຮງຮຽນ ແຕ່ສິ່ງໄສມີເບື້ອງຫລັງ ... " ແສງອຳໄພຮ້ອງເຫລີເຫລີດຂຶ້ນ ເມື່ອອ່ານຂ່າວໃນຫນ້າ ຂອງ ນ . ສ.ພ. ລາຍວັນ ໃນຕອນເຊົ້າວັນຫນຶ່ງ ຂອງຕົ້ນເດືອນມີນາ.

- ອ້າຍຜັນ ... ແທ້ໆ ເບິ່ງແມ້ ລາວຍົ້ມໃສ່ກ້ອງເລີຍ . "

- ໂທ້... ຜັນ ໃຈຮ້ອນຕາມເຄີຍ ! ມະນີສະຫວັນ ຈັບຫນັງສືພິມຂຶ້ນອ່ານ ມີສັ່ນຫົດໆ " ແສງ ໂຕເຮັດໃບເດີນທາງດ່ວນເດີ້ ຕອນບ່າຍມື້ນີ້ ອອກໄປເລີຍ... ເຮົາກໍໂພດໃຈເຢັນ ! " ມະນີສະຫວັນຈົ່ມ ຄືເວົ້າກັບໂຕເອງ ແນ່ລະ ຖ້າຫົວໃຈຂອງນາງ ມີປີກ ມັນຄືຊິບິນລິວໄປຫາເຂົາ ບອກເຕືອນໃຫ້ລໍຖ້າ ຢ່າທໍ້ຖອຍຕໍ່ອຸປະສັກໃດໆ

- ໂຕກະໂພດໄດແກ້ວ ຫນ້າຊິສິ່ງຂ່າວລາວແດ່ ! ໃສ່ວ່າຮູ້ກັນດີມາຫລາຍປີແລ້ວ ! ແສງອຳໄພ ຕໍ່ວ່າຫມູ່ ເມື່ອລົດກະບະຄັນກາງເກົ່າກາງໃຫມ່ ຂອງອົງການພັດທະນາ ພາທັງສອງແລ່ນລິວ ໄປຕາມຖະຫນົນເລກທີ ໑໓ ມຸ່ງສູ່ທາງໃຕ້ ຖິ້ມນະຄອນຫລວງວຽງຈັນໄວ້ທາງຫລັງລິບໆ .

- ຣິ ... ເຮົາຢາກໃຫ້ລາວຮູ້ລົດຊາດວ່າ ການລໍຖ້າເປັນແນວໃດ ຄົນໃຈຮ້ອນ ຕ້ອງສັ່ງສອນໃຫ້ໃຈເຢັນ "

- ອ້າຍຜັນໃຈຮ້ອນຫວະ ? ຕ້າຍເບິ່ງຊິງບໍ່ໄຄ່ຢາກໄຄ່ເວົ້າຫຍັງ ... ເຮັດອີ່ຫຍັງກໍ່ຄືວ່າ ມຸໆ ສິໆ .

- ມຸໆ ສິໆ ຕວ່າຫັ້ນບ່າ ຫນຸ້ຍຫນ້າຍຄຶກໃນ. ລາວຄຶດເອງ ຢ່າງບໍ່ຟັງສຽງໃຜ ບໍ່ຟັງເຫດຟັງຜົນ " ມະນີສະຫວັນ ຄຶດຫາຈຸດອ່ອນ ຂອງຜັນ ມາຈາລະໃນ ດ້ວຍຄວາມຄັບແຂ້ວ.

- ອ້າວ . . . ນັ້ນມັນສະແດງວ່າ ລາວເຊື່ອຫນັ້ນຕົນເອງກ້າເຮັດ ກ້າຕັດສິນບໍ່ແມ່ນຫວະ ? ແສງອຳໄພສະແດງຄວາມຊົມເຊີຍ.

- ໂອ໋ຍ ໂຕຢ່າຟ້າວໄປຄຶດວ່າດີຫມົດເດີ້ ອັນຄົນໃຈດຽວຄຶດຜູ້ດຽວ ນີ້ນາ . . . ມັນຜິດພາດມາແລ້ວ ເປັນແນວໃດ ? ໂຕຄຶດເບິ່ງ ສາວຫາວ່າ ເຮົາເປັນຄົນໃຈໂລເລ ໃຈໄວ . . . ຮູ້ກັນຕັ້ງ ໓ ປີ. ພໍເຮົາບອກວ່າ ຊິໄປ ສິ່ງແມ່ ຢູ່ຝະລັ່ງທີ່ນັ້ນລາວກໍ່ຫນີຈາກສະຫວັນ. ຫາຍໂຕວັບ ! ເຮົາສົ່ງ ຂ່າວມາກໍ່ບໍ່ເຫັນຕອບ.

- ເອ້ . . . ເອ້ ຊັ້ນບ່າ. ແປວ່າໂຕກໍ່ ຄຽດໃຫ້ລາວຄືກັນແມ່ນບໍ່ລະ ຫນີ້. ບະ ເຮົາຢາກຮູ້ແຕ່ວ່າ ພວກໂຕຂາດການຕິດຕໍ່ກັນຕັ້ງ ໓ ປີນີ້ ມີໃຜລືມຫົວໃຈໄວ້ຂອກແຄແຈຮ້ວທາງໃດບໍ່ ?

- ຣິ . . . ເຮົາຍັງບໍ່ ໄດ້ຄຶດຮອດເລື່ອງນີ້ບ່າແສງ ຊັງຫນັງຫນ້າ ລາວ ກໍເລີຍບໍ່ທັນໄດ້ສົນໃຈໃຜ. ມັນຄື ຣິ ໂຕເຄີຍຮູ້ສຶກ ມັນຄືວ່າເຂົາດູຖູກ ເຮົາໂພດບ່າ ແຕ່ພໍມາເຫັນລາວຢູ່ຫາດໂພ. ບຸກບຶນ ຢາກໄດ້ໂຮງຮຽນ ໃຫ້ໄທບ້ານ ເຮົາກໍລືມ ເອີ້ ຍົກໂທດໃຫ້ລາວໄດ້ !

- ສົມມຸດວ່າລາວມີຜູ້ໃຫມ່ແລ້ວເດ້? ຢູ່ພຸ້ນຕັ້ງ ໔-໓ ປີ ມີບໍ້ຊິວ່າ ບໍ່ມີຜູ້ສາວນະ ! ສາວບ້ານນັ້ນບໍ່ໃຊ່ວ່າອຶດເພາະຕາມເຮົາເບິ່ງຫນີ້ !

- ເອົາແຕ່ວາດສະຫນາ ວ່າບໍ່ຈັກໄດແສງ ແຕ່ເລື່ອງຊ່ອຍລາວ ໃນນາມວ່າ ເອີ້ ພວກເຮົາຮູ້ບັນຫາ ແລະ ສະຫນັບສະຫນູນໄທບ້ານ

ທີ່ຢາກຊ່ອຍຕົນເອງແບບນີ້ ແລະ ຜົນ ລາວກໍ່ເປັນຜູ້ຫນຶ່ງໃນກຸ່ມນີ້. ເຮົາວ່າ ເອົາທີ່ນີ້ກໍພໍແລ້ວ ສຳລັບເຫດຜົນ ການລົງມາຢັ້ງຮັ້ງຢາມຄັ້ງນີ້ ຂອງໄທເຮົາ ! ມະນີສະຫວັນ ສະແດງເຫດຜົນ.

- ຮຶມ. . . ແປວ່າ ບໍ່ກຽ້ວກັບເລື່ອງຫົວໃຈເລື່ອງໂຕເລີຍເນາະ ? ເພື່ອນຮ່ວມງານ ຍັງເຈາະຈີ້ມຕໍ່ ດ້ວຍຄວາມຢາກຮູ້ ຕາມພາສາໄອ້ຮັກ.

- ເອີ . . . ແນ່ນອນລະ. ມະນີສະຫວັນ ງຶກຫົວເດັດດ່ຽວ ແສງຕາຄູ່ງາມ ຂອງນາງເປັນມັນຍິຍັບ. ອາລົມຜ່ອງໃສໃຈນ່ວນຈິນຮ້ອງເພງອຸ່ມໆ ເຖິງຮູ້ວ່າ ຜົນມີໂທດໃນຖານະຜູ້ຕ້ອງຫາ ຖືກຄຸມຂັງຢູ່ໃນຄຸກແລ້ວແຕ່ຈະຊ່ອຍປົດປ່ອຍເອົາອ້າຍບ່າວນາຍຄູ ຜູ້ໃຈຮ້ອນຫລຸດພົ້ນອອກຈາກຄວາມທຸກເຂັນ ດັ່ງກ່າວໄດ້. ກວ່າແສງອຳໄພ ແລະ ມະນີສະຫວັນ ຈະສາມາດນຳສະເຫນີເອກະສານຕ່າງໆ ທີ່ຜ່ານການໃຫ້ຄວາມເຫັນ ມາແຕ່ຂັ້ນກ່ຽວຂ້ອງທັງຫລາຍ ທັງສອງນາງກໍ່ຈົນອິດອ່ອນໃຈ ທັງນຳຫາຜູ້ຮັບຜິດຊອບທັງຕ້ອງອະທິບາຍ ເລົ່າເລື່ອງລາວແຕ່ຕົ້ນຈົນສຸດໃຫ້ຟັງ. ເພາະປາກົດວ່າ ສ່ວນໃຫຍ່ ຜູ້ຄົນທີ່ເປັນເຈົ້າຫນ້າທີ່ ຢູ່ກັບຫ້ອງຖິ່ນເອງ ບໍ່ຮູ້ເລື່ອງລາວຫລັກການໃດໆ ບໍ່ຮູ້ວ່າເລື່ອງແບບນີ້ ຈະແກ້ໄຂແນວໃດ. ເມື່ອສົ້ຖາມ ກໍມັກຈະໄດ້ຮັບຄຳຕອບແບບປັດໆ ເຊັ່ຍໆ ວ່າ :

- ຂ້ອຍຫາກໍມາຮັບວຽກໃຫມ່, ຍັງບໍ່ທັນກຳເນື້ອໃນວຽກງານໄດ້! ຫລື ບໍ່ກໍ ການສະແດງສິດ ແລະ ຫນ້າທີ່ວ່າ :

- ແມ່ນແລ້ວໆ ເລື່ອງນີ້ ຂຶ້ນກັບໄທເຮົານີ້ລະ, ຫາກໍໄດ້ຮັບລາຍງານ, ພວມວ່າ ຈະປະຊຸມເປີກສາຫາລືກັນ. ຂໍພວກນ້ອງລໍຖ້າກ່ອນຈັກບຶດ.

ຖ້າໄປຖ້າມາ... ເວລາກໍລ່ວງໄປຈົນຫມົດນີ້ ນີ້ທັງໆ ທີ່ວ່າ ສອງສາວ ຫນ້າຕາ ພໍໄປວັດໄປວານຳເພິ່ນທ່າທາງກິລິຍາຄ່ຽມຄົມ ວາດຊົງເປັນຜູ້ໃຫຍ່ ທັງໃຊ້ລົດຕິດກາຫມາຍອົງການຊ່ອຍເຫລືອ

ຕ່າງປະເທດເພື່ເຈີ້ ກາບໂອ້ລົມສົບທະບາ ສ່ວນໃຫຍ່ຈຶ່ງດຳເນີນໄປ ຢ່າງຮຽບຮ້ອຍເກງໃຈ ແລະ ຢອກໄຍຕາມຄວາມເຄີຍຊິນ.

ໃນທີ່ສຸດຜູ້ຈະພົບເປັນຄົນສຸດທ້າຍ ຈຶ່ງແມ່ນຫົວໜ້າບໍລິສັດ ໂຮງເລື່ອຍ. ສອງນາງຂໍເຂົ້າພົບ ບຸກຄົນທີ່ມີຊື່ວ່າ " ເຖົ້າແກ່ກົງ " ດ້ວຍ ທ່າທີເຊື່ອໝັ້ນແນ່ໃຈ. ເຂົາເປັນຊາຍ ຮຸ່ນກາງຄົນແລ້ວ ເວົ້າຈາຍິ້ມຫົວ ງ່າຍ ເຖິງວ່າສຽງເວົ້າ ຈະບໍ່ຢັ້ງຢືນວ່າ ແມ່ນເຊື້ອຊາດລາວເຕັມຮ້ອຍ ສ່ວນ ແຕ່ກໍປາກົດວ່າ ເຂົາມີເມຍເປັນລູກກັບບ້ານ ຫລານກັບເມືອງ ນີ້ເອງ ແລະ ລູກຈຳນວນ ໕ ຄົນ ຂອງເຂົາກໍເຂົ້າຮໍ່າຮຽນ ຢູ່ທີ່ ວຽງຈັນ ເຖົ້າແກ່ຮັບຟັງ ເລື່ອງລາວຕ່າງໆ ຈາກສອງນາງ ທັງຮັບເອົາ ເອກະ ສານ ທັງໜັງສືມາພິຈາລະນາ ອ່ານດ້ວຍຄວາມສົນໃຈ ແກມແປກໃຈ.

- ຂໍໂທດ ພວກນ້ອງສາວ... ຂ້ອຍອ່ານບໍ່ອອກ ຂໍເພິ່ງບອກວ່າ ເຈ້ຍໃດເປັນເຈ້ຍໃດແນ່ , ຂ້ອຍຊິໃຫ້ເລຂາກັບຜະແໜກກວດການໄມ້ ມາຄົ້ນຄວ້ານຳ. ຊາຍຮ່າງອາວຕຸ້ຍ ລຸກອອກໄປສັ່ງຄວາມເລຂາ ທີ່ນັ່ງຢູ່ໜ້າຫ້ອງການ . ແລ້ວເຂົາຈຶ່ງກັບມາ ສໍ້ຖາມ ເລື່ອງວຽກງານ ຂອງອົງການ :

- ພວກນ້ອງ ... ເອີ້ ໄດ້ລົງມາສຳຫລວດ ຫວ່າງເດືອນແລ້ວ, ເກັບກຳສະຖິຕິຕ່າງໆ ຂອງບາງບ້ານ ບັງເອີນໄດ້ໄປຢາມບ້ານຫາດໂພ ຮູ້ວ່າປະຊາຊົນພ້ອມຈະຕັດໄມ້ ມາປຸກໂຮງຮຽນເອງ ພວກນ້ອງກໍເລີຍ ຊອກຫົນຮອນຊ່ອຍ ເລື້ອງອຸປະກອນເຊັ່ນ ໂຕ໊ະ, ຕັ່ງ, ກະດານໃຫຍ່, ແຕ່ຖ້າ ໂຮງຮຽນບໍ່ເກີດ ເຄື່ອງເຫລົ່ານີ້ ກໍອາດບໍ່ທັນໄດ້ ຫລືວ່າ ໄດ້ກໍອາດ ບໍ່ເຕັມເມັດເຕັມໜ່ວຍ ! ແສງອຳໄພເລົ່າເຫດຜົນຢ່າງຍືດຍາວ ໃຫ້ ເຖົ້າແກ່ໃຫຍ່ຟັງ ໃນຂະນະລໍຖ້າ ຜູ້ຊ່ວຍເຖົ້າແກ່ .

ຄາວໜຶ່ງ ຊາຍໜຸ່ມຜູ້ໜຶ່ງ ກັບສາວເລຂາ ກໍເຂົ້າມາພ້ອມ ດ້ວຍ ແຟ້ມເຈ້ຍເອົາມາໃຫ້ເຖົ້າແກ່ ແລະ ນັ່ງລົງຂ້າງໆ.

ປາກົດວ່າ ມີຄົນມາແຈ້ງ ... ເອີ້ ... ຜູ້ຈັດການວ່າ ມີການລັກລອບ

ຕັດໄມ້ ແລ້ວຜູ້ຈັດການ ກໍ່ເຮັດໜັງສືໄປຫາພະນັກງານປ່າໄມ້ກັບຕຳຫລວດ, ຂໍໃຫ້ຈັບກຸມຜູ້ລະເມີດ ! ຊາຍໜຸ່ມ ຜູ້ມາແຕ່ພະແນກກອດກາບັນຊີ ກ່າວບອກ ເທື່ອຊີ້ໃຫ້ເບິ່ງເຈ້ຍໃບໜຶ່ງ .

- ບະ ! ຂ້ອຍຄືບໍ່ຈື່ຈັກດີ້ ວ່າໄດ້ຮັບຟັງເລື້ອງແນວນີ້ຢູ່ໃສ ? ແມ່ນຫຍັງ ໜັງສືຂ້ອຍ ລາຍເຊັນ ຊັ້ນຫວະ ! ວັນທີ ໑໕ ຂ້ອຍຍັງຢູ່ບາງກອກພຸ້ນ ເຮັດແນວໃດຊິມາເຊັນໃຫ້ພວກເຈົ້າໄດ້ ! .

ເຖົ້າແກ່ກົງ ໜ້າແດງຍິ່ງຂຶ້ນ ເມື່ອຄິດພໍ້ ແລະ ເຂົ້າໃຈຄວາມເລິກແລບ ຂອງບັນຫາ .

- ຂອບໃຈ ນ້ອງສາວທັງສອງ ທີ່ມາອະທິບາຍ ເຮັດໃຫ້ຂ້ອຍຫູແຈ້ງຕາແຈ້ງໃສຂຶ້ນ ! ເປັນເລື່ອງພາຍໃນ ຂອງບໍລິສັດເຮົາເອງ. ເອົາລະຢຸດໄວ້ກ່ອນ ມາຊ່ອຍເບິ່ງເອກະສານຂອງອົງການນີ້ດູ ! ແລ້ວບອກມາວ່າ ຄວນແກ້ໄຂໃຫ້ເພິ່ນແນວໃດ ? ເຖົ້າແກ່ຈຳໃຫ້ຊາຍໜຸ່ມຜູ້ຊ່ອຍອ່ານ ແລະ ສາວເລຂາ ນຳໄປຕິກາຈ້ຳລົງບັນທຶກ ຕາມລະບຽບການຮັບຜ່ານເອກະສານ .

- ອ້າ ... ກະເຫັນວ່າ ຂະເຈົ້າ ມີເຫດຜົນໄດ້ອ້າຍອີກຢ່າງໜຶ່ງເຖິງວ່າໄດ້ສຳປະທານແລ້ວ ແຕ່ພວກເຮົາກໍ່ຍັງບໍ່ມີແຜນຕັດທາງໄປເທື່ອ ຄືຊິຍັງດົນ .

- ໄມ້ ໕໐ ຄິວ ເຮົາບໍ່ລືຈາກ ສິມທົບເຂົ້າສ້າງໂຮງຮຽນເລີຍໄປ່, ເອົ້າ... ໄປຂຽນເຈ້ຍມາໂລດ ຂ້ອຍຊິເຊັນໃຫ້ຂະເຈົ້າເລີຍ ແລ້ວແຕ່ງໜ່ວຍລົງກວດກາຕົວຈິງນຳ " ຊາຍໜຸ່ມຜູ້ຮັບຜິດຊອບພະແນກ ສຳຫລວດ ເຮັດໜ້າເກີຽ ທັງເສືອດແສງຕາເບິ່ງສອງສາວ ດ້ວຍຄວາມເກງໃຈ ເຂົາຮັບເອົາເອກະສານນຳຜູ້ເປັນຫົວໜ້າ ແລ້ວອອກຈາກຫ້ອງໄປ .

- ຊິລະ ແນວບໍ່ຢູ່ໜູເຕັ້ນ, ຂ້ອຍໄປເຈລະຈາຫາຕະຫລາດເອງເພາະບໍ່ຢາກຜ່ານຫລາຍມື ທາງພີ່ ຊ້ຳເອົາແລ້ວເດ້ສ້າງບັນຫາໄວ້ຖ້າ

ມີແຕ່ຜູ້ຊິສວຍໂອກາດ. ເອົາລະ ໃສວ່ານາຊິເຮັດແນວໃດຕື່ມ ? ເຖົ້າແກ່ຫັນມາເອົ້າບັນຫາ ດ້ວຍຄວາມເຫັນໃຈ. ເບິ່ງທ່າທີຂອງເອົາ ເກງໃຈບໍ່ຫນ້ອຍ .

- ຢາກໃຫ້ ເອື້ ທາງບໍລິສັດ ລົງຄວາມເຫັນໃສ່ໃບສະເຫນີ ໄຫເຮົາວ່າ ບໍ່ຂັດຂ້ອງ. ອະນຸຍາດໃຫ້ປະຊາຊົນບ້ານບໍາໃຊ້ໄມ້ດັ່ງກ່າວ ໂດຍການຄຸ້ມຄອງຂອງເມືອງ ແລະ ນອກນີ້ກໍຢາກໃຫ້ອ້າຍ ໄປຖອນ ຄໍາຮ້ອງນໍາຕໍາຫລວດ ພວກນ້ອງຈຶ່ງຊິໄດ້ຄືນອອກພ້ອມ ! ແສງອໍາໄພ ຜູ້ຄ່ອງໄວ ຮູ້ເວົ້າລັດໄວ້ທຸກແນວເຮັດໃຫ້ເຖົ້າແກ່ ໄອກາງຄືນຄຶດຊຶມ.

- ຖ້າມີລູກຊາຍໃຫຍ່ທໍ່ເຈົ້າ... ຊິເອົາເປັນລູກໄພ້ເລີຍບາງນີ້ ! ເຖົ້າແກ່ເວົ້າຢອກ ແລະ ນໍາສອງສາວອອກມາຮັບເອກະສານ ທີ່ຈໍາເປັນ ສໍາລັບການຖອນຄໍາຟ້ອງຂອງບໍລິສັດ .

- ສູກວດກາແລ້ວໆ ສືບໃຫ້ຮູ້ເດີ້ວ່າ ໃຜສ້າງເລື່ອງນີ້ ! ເຖົ້າແກ່ ສັ່ງລູກນ້ອງຢ່າງເຂັ້ມງວດ ແລ້ວນໍາສອງສາວ ມາຍັງປ້ອມຕໍາຫລວດ ບ່ອນຝາກກັກຂັງຜັນ .

ອ້າຍຄູ ຍິ້ມຕອບຮັບສອງສາວ ຈົນເຫັນແຂ້ວສາມສິບສອງເຫລັ້ມ ຂອງລາວ ແລະ ສີຫນ້າສະແດງຄວາມປະຫລາດໃຈ ເມື່ອເຫັນລົດ ຂອງ ບໍລິສັດໂຮງເລື່ອຍ ແລ່ນເຂົ້າມາໃນບໍລິເວນປ້ອມຕໍາຫລວດ.

- ເຖົ້າແກ່ ເພິ່ນຊິມາຖອນຄໍາຟ້ອງ ! ມະນີສະຫວັນບອກ

- ອະຄູນ ເປັນຫຍັງບໍ່ໄປບອກອ້ອຍກ່ອນຣື ? ເຖົ້າແກ່ຈັບມື ຖາມສະບາຍດີອ້າຍຄູນ ແລ້ວຖາມຂຶ້ນ .

- ອ້ອຍຄຶດວ່າ ເຖົ້າແກ່ເປັນຜູ້ສັ່ງການມາເອງ ແລ້ວເດ້ເລີຍບໍ່ກ້າ ໄປຫາ ! ອ້າຍຄູນຕອບບໍ່ເຕັມສຽງດ້ວຍຫນ້າທີ່ຕໍາແຫນ່ງແລ້ວ ຄູນ ບໍ່ອາດໄປສະເຫນີ ຂໍຄວາມຊ່ອຍຈາກບຸກຄົນເອກະຊົນ ເອົານັບຖື ແລະ ຊື່ສັດຕໍ່ອຸດົມການ ບໍ່ຍອມຫລູດກຣູດເຮັດໃນສິ່ງທີ່ຄຶດວ່າ ເປັນການ ອິ່ມອູ່ໃຊ້ສິດອໍານາດ ນອກເຫນືອຂອບເຂດ.

- ເປັນແບວນີ້ລະ ຖ້າຂ້ອຍບໍ່ຢູ່ນ່ະ ຂໍໂທດເດີ . ບັດນີ້ ມີຫຍັງ ອະລູນ ໄປຫາຂ້ອຍໂລດບໍ່ໆ !

ຫລັງຈາກລົງລາຍເຊັນໃສ່ປຶ້ມບັນທຶກ ແລະ ໃບປະກັນເອົາຜົນແລ້ວ ກໍ່ບໍ່ມີຫຍັງຍືດຍາວ. ຜົນຖືກນຳໂຕອອກມາໃນ ເວລາປະມານ ໔໐ ນາທີຕໍ່ມາ. ຊາຍຫນຸ່ມມີທ່າທີ ສະຫງົບເຢືອກເຢັນ ຫນ້າຕາກ້ຽງສະອາດ ບໍ່ຄືຄົນໂທດນອນຢູ່ຄຸກຕັ້ງ ນີ - ໔ ມື້ . ມະນີສະຫວັນ ຄິດເດົາເອົາວ່າ ຄົງແມ່ນອ້າຍຄູນ ນັ້ນແລ້ວ ທີ່ເບິ່ງແຍງ ບໍ່ໃຫ້ຜົນຕົກຢູ່ໃນສະພາບ ຄືຄົນຕິດຄຸກແທ້ໆ ເຊັ່ນວ່າ ຫນວດບໍ່ໂກນ ເຄື່ອງນຸ່ງເປິເປື້ອນ ຈ່ອຍແກ້ມໂກນ ແລະ ອື່ນໆ .

- ມະນີ ຂອບໃຈຫລາຍໆ... ແສງອຳໄພນຳ ! ຜົນກ່າວອອກນ້ຳສຽງຂອງເຂົາ ເຖິງວ່າ ຫນັກແຫນ້ນ ແຕ່ຜູ້ຢູ່ໃກ້ກໍ່ຟັງອອກວ່າ ມັນສັ່ນຫນ້ອຍຫນຶ່ງ... ແສງຕາຂອງເຂົາແຈ່ມໃສ ແຕ່ຮອຍຍິ້ມອ້ອນໄປ ຊິເບະຫລາຍກວ່າ. ຍິງສາວທັງສອງເອງກໍ່ຕື້ນຕັນໃຈ ຈົນປາກບໍ່ອອກຄືກັນ ຄົງມີແຕ່ແວວຕາເທົ່ານັ້ນທີ່ສື່ບອກຄວາມໃນໃຈ .

- ພວກນ້ອງ ເມືອນອນທາດໂພຈັກຄືນສາ ນີ້ກໍ່ຈະຄ່ຳແລ້ວ ເຮັດແນວໃດກໍ່ກັບເມືອບໍ່ທັນແລ້ວລະ ! ເມືອຢາມແມ່ແດ່ ເພິ່ນຈົ່ມຄິດຮອດພວກນ້ອງຄືຫຍັງນີ້ !

ອ້າຍຄູນກ່າວເຊີນຊວນ ຢ່າງຮູ້ໃຈນ້ອງຮັກ ແລະ ມະນີສະຫວັນກັບແສງອຳໄພ ກໍ່ບໍ່ໃຫ້ຊວນເປັນເທື່ອທີສອງຍາກ. ບໍ່ດົນຄົນທັງຫມົດກໍ່ພາກັນຫິ້ວຫອບເອົາຖົງເຄື່ອງໃຊ້ປະຈຳໂຕລົງເຮືອຈັກຫາງຍາວທີ່ທ່າເຮືອ ເພື່ອລ່ອງລົງໄປທາດໂພ.

ມັນເປັນເວລາບ່າຍຄ້ອຍແລ້ວ ແລະ ໃນບ້ານປ່າຕີນພູແນວນີ້ ດວງອາທິດຕົກໄວກວ່າຢູ່ບ່ອນຮາບພຽງ ປາຍໄມ້ໃຫຍ່ສູງຊັນຊອນລອນຕາມສັນພູ ບົດບັງຄວາມສະຫວ່າງ ແລະ ລັງສີອັນອົບອຸ່ນ ຂອງດວງຕາເວັນໄວ້ຫມົດ ຫນ້ານ້ຳຕາມລ່ອງພູ ຈຶ່ງຂຽວຄື້ມເຢັນສະຫງົບ

ການຖາມຂ່າວຄາວ ເລົ່າເລື່ອງລະຫ່ວາງຜູ້ມາພົບກັບໃຫມ່ ດັງແຂ່ງກັບ ສຽງເຮືອຈັກບາງເທື່ອກໍມິດໄປ ເມື່ອຜູ້ໂດຍສານມົວຊົມທຳມະຊາດ ຕາມສອງຝາກຝັ່ງຍານອັດສະດົງ.

- ຕາມເລີຍ ແກ້ວເອີ້ຍ ! ເຮົາລືມກ້ອງຖ່າຍຮູບອີກແລ້ວ ! ກະຂອງບໍ່ຄິດວ່າ ຊິໄດ້ລົງມາຮອດພີ້ອີກ ! ແສງອຳໄພຈິ່ມແຮງໆທັງຖອນຫັນໃຈໃຫຍ່ ສະແດງຄວາມເສຍດາຍຢ່າງເປີດເຜີຍ.

- ເອົາໄວ້ເທື່ອຫນ້າກໍໄດ້ ຮັບຮອງທຳມະຊາດແຖວນີ້ ບໍ່ປ່ຽນແປງງ່າຍດອກ ! ຜັນຕອບແທນມະນີສະຫວັນ.

- ບໍ່ມີເທື່ອຫນ້າແລ້ວ... ເທື່ອນີ້ເທື່ອສຸດທ້າຍ ມະນີສະຫວັນຖອຽງ.

- ເທື່ອສຸດທ້າຍຊັ້ນຫວະ ? ຜັນເຮັດຫນ້າບໍ່ເຂົ້າໃຈ.

- " ເອີ້ເທື່ອສຸດທ້າຍແທ້ໆລະບໍ້ ຫມົດວຽກແລ້ວໃຜຊິຫຽວລົງມາຫາຖ່າຍຮູບຫລິ້ນໄດ້ ວຽກຫລາຍຊິຕາຍ" ສາວນາງອະທິບາຍຕື່ມຍາວໆ

- ເອີ້ ... ເຈົ້າບໍ່ມາ. ພວກເຈົ້າບໍ່ລົງມາ ຂ້ອຍກໍຊິຫຽວໄປເອົາກ້ອງຢູ່ວຽງຈັນ ມາຖ່າຍໃຫ້ເອງ ! ຜັນບອກສຽງນຸ່ມນວນ .

- ຊິຫຽວໄປເອົາກ້ອງ ! ບ້າແທ້ຜັນ ຖ່າຍເທື່ອດຽວກໍພໍແລ້ວຮູບນີ້ນະ ບໍ່ຈຳເປັນຊິຫຽວໄປຫຽວມາດອກ !

- ຫຽວໄປຍ້ອນຄິດຮອດນັ້ນເດ້ ບໍ່ໄດ້ຫວະ ? ເປັນເທື່ອທຳອິດທີ່ຜັນຖາມຕາມຄຳສັ່ງຂອງຫົວໃຈ ບອກຄວາມຮູ້ສຶກອອກມາຊື່ໆ. ມະນີສະຫວັນ ປະສານແສງຕາກັບເຂົາ ແລ້ວຍິ້ມໃຫ້ຫນ້ອຍຫນຶ່ງແກ້ຄວາມເຂີນອາຍ. ສາຍລົມເຢັນຊຶ່ນທີ່ເຊີຍລູບຫນ້ານ້ຳ ສະທ້ອນຂຶ້ນກະທົບຜິວຫນ້າ ແລະ ຕີຜົມຍາວດົກດຳຂອງນາງ ໃຫ້ພີປິວອອກ ເປັນບາດ. ຜັນແຍງເບິ່ງພາບຕໍ່ຫນ້າ ດ້ວຍຄວາມຊື່ນໃຈ ເຫັນຄວາມງາມບໍລິສຸດ ຂອງຄົນຖ້າມກາງຄວາມສະຫງົບງຽບ ຂອງ ທຳມະຊາດ ແລະສາຍນ້ຳ, ຫົວໃຈຂອງເຂົາສະທ້ານຂຶ້ນ ເມື່ອຄິດວ່າ ຖ້າຕົບປ່ວງບ້າ

ເຮັດຜິດພາດ ຮ້າຍແຮງ ໄປກວ່ານີ້ ຄົງບໍ່ມີໂອກາດໄດ້ນັ່ງແຍງ ໃບໜ້າຂາວນວນ ຊົ່ນຮອຍຍິ້ມ ສົດໃສແວວຕາມີຊີວິດຊີວາ ແລະ ໄດ້ຍິນສຽງຫົວ ເບີກບານ ຂອງ ສາວງາມແຫ່ງເມືອງສະຫວັນ ຄົນນີ້ອີກແລ້ວ .

ພໍແຕ່ຫົວ ເຮືອອວ່າຍເຂົ້າຝັ່ງ ທ່າຂຶ້ນບ້ານ ພວກເດັກນ້ອຍທີ່ພວມອາບນ້ຳ ກໍແຕກຫວື່ນ ໂຫ້ເຂົ້າມາຫາເຮືອທັງຮ້ອງບອກກັນແຊວໆດ້ວຍດີໃຈຕື່ນເຕັ້ນວ່າ :

- ອ້າຍຄູຜັນມາແລ້ວ ! ອ້າຍຜັນແລ້ວ !

- ຄະນະຜູ້ແທນມາ ! ຄະນະຜູ້ແທນມາ !

ໃນເວລາທ່ຽງ ກັບຢ່າງໄປຫາບນ້ຳ ມາແຕ່ສ້າງດົງຕີນບ້ານຖ້ຽວໜຶ່ງເທົ່ານັ້ນ ຂ່າວຄາວ ການກັບມາຂອງບ່າວຄູຜັນ ກັບການມາຢ້ຽມຢາມ ສອງສາວຄະນະຜູ້ແທນຊຸດກ່ອນ ກໍຊ່າລືຮອດທຸກຫລັງຄາເຮືອນໃນບ້ານ ພ້ອມໆ ກັບຄວາມມືດດຳ ແຫ່ງລາຕີການ ກໍແຜ່ລົດອອກຄຸມໂອບຫຸ້ມຜືນແຜ່ນດິນເທິງຝັ່ງນ້ຳ ແຫ່ງນີ້ໄວ້ ! ແຕ່ຄວາມມືດດຳບໍ່ເປັນອຸປະສັກເກືອດຫ້າມບໍ່ໃຫ້ຜູ້ຄົນຫລັ່ງໄຫລ ມາເຕົ້າໂຮມຖາມຂ່າວຄາວກັນ ຢູ່ເຮືອນປ້າພອນ ມີການຕົກລົງຢ່າງໄວວາ ວ່າຕ້ອງສູ່ຂວັນຜູກແຂນຮັບຂວັນອ້າຍຄູຜັນ ແລະ ບາສີສອງສາວ ຄະນະຜູ້ແທນ ! ໂຄມພະຍຸໃຕ້ນ້ຳມັນກາດສອງໜ່ວຍຫ້ອຍຢູ່ກາງເພດານຫ້ອງເຮືອນເຊຍ ແລະ ໃນຫ້ອງຄົວໃຫ້ຄວາມສະຫວ່າງໄປທົ່ວທຸກແຈເຮືອນ. ສຽງຟັກສຽງຕຳ ສຽງເວົ້າລົມຢອກໄຍກັນ ດັງນັນນອງ ພໍປານວ່າມີບຸນໃຫຍ່. ປ້າພອນ ຢ່າງອິນອອກ ອິນເຂົ້າບໍ່ເຊົາ ລາວ ທັງຢາກໃຫ້ພາຂວັນບາສີງາມຄົບເຄື່ອງ ຢາກໃຫ້ອາຫານການກິນ ອຸດົມສົມບຸນແຊບນົວ ຖືກປາກຄະນະຜູ້ແທນພິເສດ ເພາະເທື່ອນີ້ ພວກສາວນາງທັງສອງກໍຈະນອນຢາມ ແຕ່ຄືນດຽວ ຈຳເປັນຕ້ອງ ຍາດເອົາໂອກາດນີ້ສະແດງຄວາມຮັກແພງຕໍ່ກັນ ໃຫ້ວ່າປືນລູກດຽວ ຍິງນົກໄດ້ສອງໂຕກໍວ່າແມ່ນ. ໃບໜ້າຂອງປ້າພອນ ຈຶ່ງສະຫວ່າງສະໄຫວ ດ້ວຍຄວາມ

ອິ່ມໃຈເບີກບານ ໃຜເຫັນກໍຮູ້ໄລດວ່າ ຍິງຮຸ່ນກາງຜູ້ນີ້ ມີຄວາມສຸກພໍພຽງໃດ .

ໝູນ້ອຍຂອງອ້າຍຄູນໂຕໜຶ່ງ ຖືກນຳມາສັງເວີຍ ພາບາສີເພື່ອບູຊາຜີສາງເທວາອາຮັກ ເອັ້ນເອົາຂວັນຄືນໂຊກຮ້າຍ ກັບມາເຂົ້າເນື້ອ ເຂົ້າຄີງ ໄກ່ເປັດຫລາຍໂຕຈຳກລົກ ຂອງ ຫລາຍເຈົ້າສັດທາ ຖືກໂຜດສະຫລະຊີວິດ ເພື່ອປຸງແຕ່ງເປັນລາບ ຕົ້ມຕຶກແຕ້ງ ໃສ່ພາເຂົ້າຢ່າງກະທັນທັນ .

- ໂອ້ຍກະຈົ່ງແມ່ນຊາດ ບ້ານສາວລາວຂ້ຽວລາວຈີ່ນປານຊິໄປເສີກເອົາຊື່ໆ ! ສາວຈັນເພັງອອກປາກຈົ່ມ ແຕ່ສີຫນ້າຍິ້ມແຍ້ມ ພໍໃຈເມື່ອຖືກປ້າພອນ ມາເອັ້ນ ໄປຫຍິບເຫລົ້າຢູ່ນອກ ໃນຂະນະທີ່ບາງກໍພວມຊ່ອຍໝູ່ແຕ່ງກິນຢູ່ເຮືອນຄົວ ເປັນສິບໆ .

- ທາດາໄປ ທາດາໄປຢ່າທຳທ່າເທາະ ຢາກອອກໄປພໍແຮງກໍວ່າແມ່ ! ສາວຮຸ່ນດຽວກັນ ເວົ້າສຽດ .

- " ເຮັດກິນບໍ່ທັນແລ້ວນ່າ ເວົ້າແທ້ໄດ ເຮົາບໍ່ໄຊ່ມັກຫຍິບເຫລົ້າ ຫຍິບຢາໃຫ້ໃຜພໍ່ໃດເກາະ... " ຈັນເພັງເບະສົບທັງວາງມີຈາກການຊອຍຫົວປີ ທີ່ສັ້ນກຸດເຂົ້າຮອດຫົວແກ່ນັນ.

- " ກະໂຕມີອ່ອນກວ່າໝູ່ເດ້ " ສຽງອີກສາວໜຶ່ງສຽດຕໍ່.

- ບໍ່ທໍ່ວ່າແມ່ນເຮືອນນ້າສາວ ຜູກແຂນອ້າຍຜັນ ຈ້າງເຮົາກໍບໍ່ຫຍິບຕວ່າ... ທ້າກັບອ້າຍທິດແກ່ນແລ້ວ ວ່າຊິບໍ່ເຮັດມືອ່ອນ.

- ອ້າວ ແລ້ວເລື່ອງຫຍັງ ໂຕຈຶ່ງໄປທ້າກັບລາວລະ !

- ເຮົາບໍ່ຍອມຢາຍເຫລົ້າ ມື້ໄປປະຊຸມຢູ່ເຮືອນລາວ ນັ້ນເດ້ລາວກໍເລີຍວ່າ ຖ້າເຫັນເຮົາຫຍິ້ບ ອີກລາວຊິຖືວ່າເຮົາ ບໍ່ເວົ້າແທ້ ເຮົາກໍເລີຍທ້າວ່າ ຖ້າເຫັນເຮົາຫຍິບເຫລົ້າອີກເຮົາຊິເອີ... ເອີ ... " ຈັນເພັງອຶດອັດບໍ່ເວົ້າຕໍ່ .

- ເອີ້ ... ເອີຫຍັງ ບອກມາໄວ ຈັນ " ສຽງໝູ່ຈີ້ຈໍ້ເຂົ້າ ດ້ວຍຄວາມ

ສິບໃຈແຮງ ບາງຄົນອາງວອຽກກັບມື ຈຶ່ງເບິ່ງຈັນເພັງເຊິ່ງມີທ່າທີ ຂວາຍອາຍຂຶ້ນກັບໜ້ອງ .

- ກະ... ອຸ້ຍຊິມີຫຍັງ ເຮົາກະພຽງແຕ່ ຕ້ອງຕ່ຳຜ້າສະໄຫລ່ງໄໝ ໃຫ້ລາວຜືນໜຶ່ງ ທີ່ນັ້ນລະ " ສາວນາງຫາທາງແກ້ .

- ຈ້າງກໍບໍ່ທີ່ນັ້ນດອກຫັ້ນ ... ເອົາເທາະ ເອົາເທາະຊິເຊື່ອໄວ້ກ່ອນ ... ໄປ ເຊີນອອກໄປໄດ້ລະ ພຸ້ນປ້າພອນກວັກມືວັບໆຢູ່ພຸ້ນ .

- ເຮົາຊິບໍ່ຈັ້ບໍ່ຈື້ໃຫ້ແຂກກິນນຳດອກ. ໃຜບໍ່ຢາກກິນກໍ່ໄດ້ ແລ້ວກໍຢ່າ... ພວກໂຕວ່າດີບໍ່ ? ຈັນເພັງງວາກມາຖາມໝູ່ອີກ ກ່ອນຈະ ອອກໄປ .

- ແນວນັ້ນກະດີ ຖືກຜູ້ເຂົາເກັ່ງເຂົາຈຳໃຫ້ໂຕກິນກ່ອນຄືມັກເວົ້າ " ທຳມະດາ ກິນເຫລົ້າ ຄົນຢາຍຕ້ອງກິນກ່ອນ ລາງເທື່ອເຫລົ້າໃສ່ຢາ ປາໃສ່ງ້ອນ ອວນອ້ອຍສ່ວນຊິຕາຍ " ແບບນີ້ລະ ໂຕມີຫວັງເມົາແປ້ ກ່ອນແຂກອີກ ຮີໆ ຮີໆ ! ພວກຜູ້ສາວ ຫົວໂຄບໃສ່ຈັນເພັງ ເຊິ່ງເຮັດໜ້າ ຊິຍິ້ມກໍບໍ່ວ່າ ຊິເບະກໍບໍ່ແມ່ນ .

- ເອີ ... ເມົາກໍເມົາຕວ່າ " ນາງວ່າງອນໆ ບໍ່ມີໃຜຮູ້ວ່າ ນາງ ຢາກໝາຍຄວາມວ່າແນວໃດ.

ຈັນເພັງແຈກຢາຍຈອກເຫລົ້າໃຫ້ຜູ້ເຖົ້າຜູ້ແກ່ ທີ່ພວມຜູກຂໍ່ຕໍ່ ແຂນໃຫ້ຜັນ ແລະ ສອງສາວຢ່າງສະຫງົບສະຫງວຽມຮຽບຮ້ອຍ ພໍມາ ຮອດວົງຜູ້ບ່າວເທີ່ມ ເຊິ່ງອ້າຍທິດແກ່ນ ເປັນຫົວໂປ່ ຈັນເພັງ ກໍຖືກແຫຍ້ ໃຫ້ດື່ມຕາມທຳນຽມ.

- ທຳມະດາຢາຍເຫລົ້າ ຄົນຢາຍຕ້ອງກິນກ່ອນ ! ຄຳຜະຫຍາ ຂອງວົງເຫລົ້າ ຊ້ອນຂຶ້ນທັນທີ.

- ໃສວ່າຊິເຊົາມືອ່ອນ ຈັນ ! ທິດແກ່ນໄດ້ທາຕໍ່ວ່າທັນທີ .

- ກະມີນີ້ພິເສດເດ້... ອ້າຍທິດ ບໍ່ແມ່ນຊຸມແຊວທຳມະດາ ! ຂ້ອຍບໍ່ຫຍັ້ນກໍຕ້ອງແມ່ນຜູ້ອື່ນຫັ້ນລະ ເອົາຊີ້ສາ ອ້າຍທິດ ຢາຍແທນ

ຂ້ອຍກໍໄດ້ ຊິເປັນຫຍັງ ! ວ່າແລ້ວ ຈັນເພັງກໍຍັດແກ້ວເຫລົ້າ ໃສ່ມືໃຫ້ອ້າຍທິດ...

- ຫຍັ້ນນໍາກັນສາ... ອ້າຍຊິຊ່ວຍ ຍາມນີ້ຜູ້ວ່າໃຫ້ເຈົ້າກິນ !

- ໂອ້ຍບໍ່ເລີຍ ຫຍັ້ນເຫລົ້າເປັນຄູ່ ! ຈັນເພັງຫລັບຕາຊຸ້ງໃຫ້.

- ບ່າ... ບ່າ... ໄປ ! ໃຫ້ຜົນ ກັບສອງເອື້ອຍນັ້ນກ່ອນ. ຄົບຮອບແລ້ວກໍຢ່າ ອ້າຍບໍ່ວ່າຊິຖຽງເອົາແພ້ຫຍັງ ນໍາເຈົ້າດອກ... ຂໍແຕ່ວ່າຢ່າລືມສັນຍາກໍແລ້ວກັນ !

- ຣັບຮອງນ້ໍາຖ້ວມຫລັງເປັດມື້ໃດ ອ້າຍທິດໄດ້ນຸ່ງໂລດ ! ຈັນເພັງຕອບກວນໆ

- ບໍ່ຢາກ ນ້ໍາຖ້ວມຫລັງເປັດ ງາຍຊິຕາຍດຽວນີ້ ຊິພາໄປເບິ່ງໃຫ້ເຫັນກັບຕາ ! ທິດແກ້ນ ມີເລ່ລຽນບໍ່ຫນ້ອຍ ເຮັດໃຫ້ຈັນເພັງຖອຍຍ່າວ.

- ເວົ້າກັບທິດ ກັບຈານ ພະຫຍາກໍບໍ່ສູ້ເພິ່ນແລ້ວ ! ສາວງາມຈົ່ມງອນໆ ແລ້ວຫລັບຕາຊຸ້ງໃຫ້ອີກບາດຫນຶ່ງ.

- ໂຍ້ວ... ຈັນ ຊິໃຫ້ແຕ່ອ້າຍທິດກິນຜູ້ດຽວຫວະ ເຫຼົ້າແກ້ວນີ້ຄືຫຍັ້ນດົນ ຫຍັ້ນດີແທ້ ! ອ້າຍບ່າວອື່ນຮ້ອງທ້ວງຢອກໃຍ ຈັນເພັງຕອບໂຕ້ທັນທີວ່າ :

- ກະແຫ້ລະຕີ ຖ້າອ້າຍທິດລາວພໍໃຈກິນ ຂ້ອຍຫຍັ້ນ ໃຫ້ຫມົດຄືນກໍຍັງໄດ້ນໍາ .

ສຽງໂຮຊຸ້ງຂຶ້ນ ຍ້ອນການຕີຄວາມຫມາຍໄປແນວໃຫມ່ ຈັນເພັງຫນ້າແດງຮືນ ຮູ້ວ່າຕົນເອງເວົ້າພາດໄປ ຈຶ່ງຖອນຫນີອອກໄປຫາຈຸ້ມຂອງຜົນ ເຊິ່ງນັ່ງລົມກັບພວກຜູ້ເຖົ້າອາວຸໂສຂອງບ້ານ.

ຈັນເພັງສັງເກດເຫັນຄວາມສະຫນິດສະຫນົມ ຄວາມເອົາໃຈໃສ່ທີ່ຜົນມີຕໍ່ສອງ ເອື້ອຍຄະນະຜູ້ແທນ ໂດຍສະເພາະ ກັບເອື້ອຍແກ້ວນັ້ນເຫັນໄດ້ວ່າມີທ່າທີ " ພິເສດ " ຈັນເພັງຄິດ ນ້ອຍໃຈ ທີ່ຜົນບໍ່ສົນໃຈນາງ

ຫລາຍກວ່າຄົນຮູ້ຈັກຮັກແພງ ຄືນ້ອງນຸ່ງ " ສຳພໍ່ອ້າຍຜັນຈຶ່ງບໍ່ສົນໃຈຢາກລົມ ຢາກຫລິ້ນນຳໃຜ ບາດໃດເພິ່ນໂລດມີຜູ້ຄອບຄອງຫົວໃຈແລ້ວ. ນັບແຕ່ມາຢູ່ນີ້ ແຕ່ບໍ່ເຫັນວ່າເພິ່ນຊິພົບພໍ້ກັນ ໂອະ ໄດ້ຍິນອ້າຍຄູນວ່າພວກເພິ່ນເປັນໝູ່ເກົ່າໝູ່ແກ່ ເຄີຍຮຽນໜັງສືຮ່ວມຫ້ອງກັນມາ ແລະບັດນີ້ໂຊກຊາຕາ ໄດ້ຊຸກໃຫ້ເສັ້ນທາງຊີວິດ ຂອງເຂົາເຈົ້າມາຈວບກັນ. ໂຊກຮ້າຍແຕ່ວ່າເສັ້ນທາງນັ້ນມາໄຂວ່ກັນຢູ່ບ້ານຫາດໂພ ບ້ານເກີດຂອງຈັນເພັງພີ້ " ເບ້ຍດອກຮັກ ທີ່ອ່ອນນ້ອຍລົງຈະແຫ່ວແຫ້ງ ກະແດ້ງຕາຍ... ເອົາເຫາະຈັນຮູ້ຢູ່ດອກວ່າ ຍັງມີໃຜຜູ້ໜຶ່ງ ຢູ່ທີ່ຢາກໃສ່ຝຸ່ນຫົດນ້ຳເບ້ຍດອກຮັກຕົ້ນນ້ອຍໆ ຂອງນາງ. ດ້ວຍຄວາມຄິດສັບສົນຈັນເພັງ ເລີຍເຜີຫຍິບເຫລົ້າໃສ່ຈອກຍື່ນໃຫ້ບ່າວຄູຜັນ ຈົນເຕັມລົ້ນ.

- ໂທ້ ໂທ້ນ້ອງສາວອ້ອຍມານີ້ໜັກແທ້ມື້ນີ້ ອ້າກັນທັງເປັນຕີນີ້ ! ຜັນເວົ້າຫົວໆ ເມື່ອຮັບຈອກເຫລົ້າຈາກມືນາງ.

- ໜັກອີ່ສັງ... ອ້າຍຜັນ ໃຜຊິອ້າອ້າຍລົງ ! ສາວງາມຕອບນິເລດໄນ.

- ນ່າ ຜັນ... ຕາຍນຳເຫລົ້າກໍຕາຍສາໃຫ້ເຂົາຊ່າ... ຢ່າຕາຍແຕ່ນຳ... ອັນວ່າ ຫັ້ນແລ້ວ ! ທິດແກ່ນ ຈັກຕອດກົ້ນຕິດຕາມຈັນເພັງມາແຕ່ຍາມໃດ ເວົ້າເຍົ້າຜັນຊ່ອຍຈັນເພັງ.

- ນ້ອງດີໃຈເປັນພິເສດໄດ ເອື້ອຍແກ້ວມື້ນີ້ ! ຖ້າບໍ່ແມ່ນຜູກແຂນອ້າຍຜັນ ກັບພວກເອື້ອຍມາຢັ້ງມແລ້ວນ້ອງກະຊິບໍ່ມ່ວນໃຈປານນີ້ດອກ! ຈັນເພັງເວົ້າກັບມະນີສະຫວັນ ເມື່ອຍື່ນອີກຈອກໜຶ່ງສົ່ງໃຫ້ນາງ.

- " ເຊີນພວກອ້າຍເອື້ອຍ ພ້ອມກັນເລີຍ ! ຊົມເຊີຍຄວາມສາມັກຄີຮັກແພງໄທບ້ານເຮົາກັບອົງການຫວັງວ່າຕໍ່ໄປນີ້ ທາງຫາດໂພວຽງຈັນ ຊິສັ້ນເຂົ້າໆ " ຈັນເພັງ ປ່ອຍຄາລົມຄົມຄາຍໃສ່ເຕັມຢຽດເຫລົ້າເດັດສີຂາວ ທີ່ນາງດື່ມຜ່ານລຳຄໍໄປຫລາຍຈອກແລ້ວນັ້ນ ພາໃຫ້ສາວນາງຊ່າງປາກ ຊ່າງເວົ້າຫລາຍຂຶ້ນ.

- ເອື້ອຍກໍ່ຂໍຊົມເຊີຍຄວາມເດັດດ່ຽວ ໃຈດຽວຂອງສາວຫາດໂພ ອະແຮ້ມ... ຊາວໜຸ່ມບ້ານຫາດໂພນຳ ! ມະນີສະຫວັນ ຍົກຈອກ ແລະ ເວົ້າຕອບຄືນ ດ້ວຍອັດທະຍາໄສເປັນກັນເອງ. ນາງດື່ມນ້ຳສີຂາວ ເກືອບ ເຄິ່ງຈອກ ຜ່ານຮູຄໍລົງ ໄປຢ່າງຍາກຊາ.

- ເວົ້າແລ້ວກໍ່ແລ້ວກໍ່ແລ້ວ ເອື້ອຍແກ້ວນີ້ ປານພະຍານາໂຜດ ໄທເຮົາເອົາຊື່ໆເນາະ... ເປັນແບບນີ້ໂລດຢາກໃຫ້ຢູ່ພີ້ເລີຍເກາະ ຈັບເພັງເວົ້າຢອກໃຍຕໍ່.

- ເພິ່ນຊິຢູ່ໄດ້ແນວໃດ ບ້ານປ່າຂາດົງແບບນີ້ ! ຜັນບອກຫືວໆ.

- ຄິດວ່າໃຈປະສົງແລ້ວ ກາງດົງ ກໍວ່າຫັ່ງດອກບາ. ທິດແກ່ນ ຍົກຄຳຜະຫຍານາຕໍ່ ເຮັດໃຫ້ມີສຽງ ໂຮແຊວຂຶ້ນ. ບັນຍາກາດພູກແອກ ຊຸມແຊວຮ່ວມພາກິນເຂົ້າ ດຳເນີນໄປຮອດເດິກດື່ນ ເພາະຊື່ວ່າຈະເລີ່ມກັນ ກໍຈົບຄູບາຕີກອງເດິກແລ້ວ.

ສັນຍານແຫ່ງຫົວໃຈ

ເຊື່ອນ ຫລັບໄປ ບໍ່ທັນແຈບຈົມດີຊ້ຳ ສຽງກະລໍ ລໍວແຮງໆ ດັງຕິດຕໍ່ກັນມາແຕ່ທາງຫົວບ້ານ ດ້ານຕິດທົ່ງ ມັນແມ່ນສັນຍານບອກຂ່າວຮ້າຍ. ຊາຍໜຸ່ມນອນຢູ່ເຊຍ ເຮືອນ ສ່ວນສາວແຂກ ທັງສອງ ເຂົ້ານອນໃນ ນຳແມ່ເຈົ້າເຮືອນ ຕາມປະເພນີຂອງບ້ານ... ຜັນຜູດລຸກ ພ້ອມໆກັບ ສຽງຮ້ອງຖາມ ຂອງ ປ້າພອນ ດັງອອກມາ ແຕ່ໃນເຮືອນວ່າ :

- ຜັນ ແມ່ນຫຍັງລູກ ?

ຜັນບໍ່ຕອບທັນໃດ ເຂົາແລ່ນລົງມາເດີ່ນບ້ານ ຊັກຖາມຄົນ ເຮືອນໃກ້ ເຊິ່ງກໍຕື່ນລຸກອອກມາ ຖາມກັນເປັນອຸ້ນໆ ຈຳນວນໜຶ່ງ ຮູ້ຂ່າວແລ້ວກໍບອກກັນຕໍ່:

- ໄຟໄໝ້ປ່າເທິງພູ ! ຜັນຮ້ອງບອກແມ່ຮັກ ເຊິ່ງກໍຜູດລຸກ ອອກມາໂລດລີກັນ .

ບໍ່ດົນ ຊາວໜຸ່ມ ກອງຫລອນບ້ານ ແລະ ຜູ້ຊຳນານປ່າ ນັບທັງ ອ້າຍຄູນ ເຊິ່ງມານອນຄ້າງບ້ານ ພໍ່ເຖົ້າ ແມ່ເຖົ້າ ກໍດາໜ້າກັນອອກສູ່ ດົງ ບາງຄົນມີມີດ ບາງຄົນຄວາໄດ້ຈົກ ສຽມກໍຖືຕິດໂຕໄປພ້ອມ ສຳລັບ ໄປຖາງແລວຕັດໄຟ. ເວລານັ້ນທ້ອງຟ້າທາງບູລະພາທິດ ທາກໍ່ເລີ່ມ ມີສີສັນຕັດຄວາມມືດມິດ ແຫ່ງລາຕີກາບ ທີ່ຍັງບໍ່ທັນອຳລາ ຢ່າງ ເດັດຂາດ. ໂງ່ນເມກເຝື້ອສີດຳຄື້ນລອຍກ້ອຍູ່ເໜືອດົງ.

ມະນີສະຫວັນ ປຸກແສງອຳໄພແຕ່ຟ່າຍນີ້ບໍ່ຍອມລຸກ ນາງຈຶ່ງອອກມາ ສ່ອງເບິ່ງທິດທາງທີ່ໄຟປ່າພອມໂຮງແຮງ ອື່ໄຫມ້ຍ້ອນລົມອ້ອນແຈ້ງພັດອຳນວຍ. ແປວໄຟສີແດງແລບເລຍ ເຜົາໄຫມ້ຕົ້ນໄມ້ປາກົດວ່າຢູ່ໃກ້ໆບ້ານ ເພາະມັນຢູ່ເທິງເນີນພູ ເຮັດໃຫ້ແນມເຫັນຄັກ.

- ປ້າພອນ ໄຟຊິບໍ່ລາມມາຮອດບ້ານຫວະ ? ຍິງສາວຖາມເຈົ້າຂອງເຮືອນ ຫົວໃຈສັ່ນທິດໆ .

- ຖ້າລົມມາແຮງ ມັນກໍອາດຊິລາມລົງໃສ່ປ່າໄມ້ປ່ອງ ແຕ່ປ້າວ່າມັນຢູ່ໄກເຕີບ ຕາມຟັງເວົ້ານີ້, ພວກເຂົາຊິໄປຖາງແລວປ້ອງກັນໄມ້ທີ່ປ້າໄວ້ຫັ້ນຊື່ໆ ດອກ ! ເອ້... ເປັນຫຍັງໄຟຈຶ່ງໄຫມ້ປ່າໄດ້ ຢູ່ແຖວນີ້ບໍ່ຊ່າງວ່າມີຄົນຈູດໄຮ່ນ່າ ! ປ້າພອນ ຈົ່ມວ່າດ້ວຍຄວາມແປກໃຈ ສາຍຕາຂຸ່ນມົວ ຂອງຍິງໄວກາງຄົນ ແລໄປຂ້າງຫນ້າຢ່າງໄຮ້ຂອບເຂດ .

- ນາງແກ້ວ ເມື່ອນອນຕໍ່ສາ... ຄືຊິບໍ່ມີຫຍັງດອກ ! ນາງບອກແຂກສາວເມື່ອເຫັນທ່າທີຫ່ວງໄຍຂອງມະນີສະຫວັນ ທີ່ບໍ່ສາມາດຂົ່ມຕາຫລັບຕໍ່ໄດ້ ນາງຄຶດນຳ ເລື່ອງທີ່ຜົວເລົ່າສູ່ຟັງ ສາເຫດຂອງຄວາມ ຂັດແຍ່ງ ລະຫວ່າງບຸກຄົນໃນບໍລິສັດໂຮງເລື່ອຍ ທີ່ລາມກະທົບໃສ່ຊາວບ້ານຄວາມເຫັນແກ່ໂຕຄວາມໂລບມາກໂລພາ ຂອງມະນຸດບາງຈຳພວກພາໃຫ້ເຂົາເຮັດສິ່ງຊົ່ວຮ້າຍ ເສຍຫາຍແກ່ສ່ວນໂຮມ ຜໍພຽງແຕ່ເພື່ອຮັກສາຜົນປະໂຫຍດ ດ້ານເລັກນ້ອຍຂອງເຂົາ !

ໄຟປ່າ ! ແມ່ນອັນຕະລາຍໃຫຍ່ ທີ່ສ້າງຄວາມຈິບຫາຍວາຍວອດໃຫ້ແກ່ຊັບພະຍາກອນທຳມະຊາດຂອງສ່ວນໂຮມ ແຕ່ມັນເກີດຈາກສິມືຄົນຜູ້ໂລບມາກຢ່າງດຽວ ! ເຫດການຊົ່ວຮ້າຍທີ່ຜ່ານມາ ກໍແມ່ນຍ້ອນ ຄຳຜາໄປຍົວະເຍົ້າໃຫ້ລູກຈ້າງບາງຄົນໃນໂຮງເລື່ອຍວ່າໄທບ້ານລັກຕັດໄມ້ເພາະ ພວກເຂົາບໍ່ຕົກລົງແລກປ່ຽນໄມ້ໃນອັດຕາ ໑໐ ຕໍ່ ໕໐ ຕາມຂໍ້ສະເຫນີຂອງພວກເຂົາ. ແຕ່ໃນທີ່ສຸດ ການຟ້ອງແບບສັບຊໍ່ກໍຮ້າຍດັ່ງກ່າວ ກໍບໍ່ມີປະສິດທິຜົນ ເພາະທາງຂັ້ນເທິງ ໄດ້ພິຈາລະນາ

ແກ້ໄຂໃຫ້ຢ່າງຍຸຕິທຳ ພ້ອມດ້ວຍຄວາມເປັນໃຈ ເອົ້າໃຈຂອງຫົວໜ້າ ໂຮງເລື່ອຍເອງ. ດັ່ງນັ້ນ ຄຳພາຈຶ່ງເຫລືອທາງເລືອກອັນສຸດທ້າຍ ຄືສ້າງຄວາມຈິບຫາຍວາຍວອດຍິ່ງ ໃຫຍ່ຄັ້ງໃຫມ່ເພື່ອແກ້ແຄ້ນ !

ມະນີສະຫວັນ ຄຶດຕິດຕໍ່ເລື່ອງລາວ ທັງຫມົດໃສ່ກັນ ແລ້ວກໍ ຫົວໃຈວາບຫວິວຂຶ້ນມາ ດ້ວຍຄວາມເປັນຫ່ວງຜູ້ນຳໜ້າ ພາທາງຫມູ່ ອອກປ່າ.

- ແສງ ແສງ ລຸກເທາະ ! ມະນີສະຫວັນປຸກຫມູ່ ແສງອຳໄພ ບໍ່ເຄີຍກິນນ້ຳສີໃສໆ ຫລາຍເທົ່າມື້ຄືນນີ້ມາກ່ອນ ນາງເລີຍມີອາການ "ເມົາຄ້າງ" ເຈັບຫົວ ຈົນບໍ່ຢາກລຸກຢາກຕື່ນ.

- ເຮົາຢ້ານບ່າ, ລຸກມາລົມກັນດຸ ! ມະນີສະຫວັນຄວັກເຂ່ຍຫມູ່.

- ຢ້ານກະເນື່ອວຽງເລີຍ, ແຕ່ຖ້າຕາເວັນຂຶ້ນໃຫ້ເຫັນຮຸ່ງ ເຫັນ ທາງກ່ອນບໍ ! ແສງອຳໄພ ງົວເງຍຕອບ ເມື່ອມີນຕານ້ອຍເບິ່ງ ເຫັນວ່າ ຍັງມືດຢູ່.

- ບ່າບໍ່ແມ່ນຢ້ານໄພ ບໍ່ແມ່ນຢ້ານແນວນັ້ນ ເຮົາຢ້ານ ຊິມີເອີ້.. ອັນຕະລາຍຮ້າຍແຮງເກີດຂຶ້ນ ກັບພວກໄປມອດໄຟພຸ້ນບ່າ " ສາວນາງ ອະທິບາຍໃຫ້ຫມູ່ຟັງຕາມຄຶດ.

- ຫືະ ? ໂຕຫມາຍຄວາມວ່າແນວໃດ ? ແສງອຳໄພມືນຕາຂຶ້ນ ຟັງມະນີສະຫວັນເລົ່າ ສິ່ງທີ່ນາງຄຶດເດົາສູ່ເພື່ອນຟັງ.

- ຄືນລາວຄືກັນ ເປັນຫຍັງຊິອາຄາດ ມາດຮ້າຍກັນ ຈົນປານນີ້ ! ແສງອຳໄພຈົ່ມຮ້າຍໆ ເມື່ອຟັງເລື່ອງສຸດ ແຕ່ບໍ່ຮູ້ວ່າຮ້າຍໃຫ້ໃຜ.

- ເອົາອ້າກັບຕາຍຍ້ອນໄມ້ ຍ້ອນເງິນ ຍ້ອນຄວາມເຫັນແກ່ໂຕ ! ມະນີສະຫວັນ ເວົ້າຢ້ຳ ນ້ຳສຽງແຄ້ນເຄືອງ.

- ແຕ່ພວກອ້າຍຜົນ ຂະເຈົ້າກໍມີອາວຸດ ທັງຫລາຍ ຄືນອີກຕວ່າ ແກ້ວ... ບໍ່ມີຊິເປັນຫຍັງດອກ ໂຕຢ່າຫ່ວງເລີຍ ເຖິງມັນຊິຊິມີຫຍັງ ເຮົາ ຄຶດວ່າ ເທວະດາເພິ່ນບໍ່ເອົ້າອ້າງຄົນຊົ່ວດອກ !

- ເຮົາບໍ່ແມ່ນຊິ ຄອງຖ້າໃຫ້ເທວະດາມາຊ່ອຍ ! ມະນີສະຫວັນ ນັ່ງຊັນເຂົ່າ ກົ້ມຫົວຫມູບໃສ່ຂາ ທ່າທາງອຶດກັ້ນຄວາມຮູ້ສຶກສຸດຂີດ.

- ເອີ... ແລ້ວໂຕຊິເຮັດຫຍັງໄດ້ລະ ! ແສງອຳໄພໂມໂຫ ນາງທັງ ເຈັບຫົວ ທັງຢາກນອນຕໍ່ .

- ເຮົາຊິໄປບອກໃຫ້ຜັນລະວັງໂຕຕື່ມ ເພື່ອອີ່ຕາຜານັ້ນມັນຊິມາ ເຮັດຫຍັງໃຫ້ .

- ຮູ້ແລ້ວລະ... ທີ່ແທ້ໂຕກະເປັນຫ່ວງຜູ້ດຽວນັ້ນລະ " ແສງອຳໄພ ເວົ້າໃສ່ ທັງພິກໂຕຫນີ .

- ເຮົາເປັນຫ່ວງທຸກຄົນໄດ໋ແສງ ແຕ່ກໍຕ້ອງຫ່ວງຜັນ ຫລາຍກວ່າ ຫມູ່ ເພາະລາວເປັນຫົວຫນ້າພາທາງເດ້ .

- ອ້າຍຄູນກໍໄປ ໂຕຊິຫ່ວງຫຍັງ ?

- ກະດາຍແລ້ວ ອ້າຍຄູນ ລາວບໍ່ໄດ້ເປັນເຈົ້າກາບໂດຍກົງໄດ໋ ໃນເລື້ອງນີ້... ແລ້ວອີ່ຕານັ້ນ ມັນກໍ່ບໍ່ເຄີຍໄດ້ຖຽງ ໄດ້ວ່າກັບລາວ ເທື່ອໃດ ກໍມີແຕ່ຜັນໄດ໋ ! ເອົາເທາະ ໂຕບໍ່ໄປກັບເຮົາກໍຢ່າ... ເຮົາຊິໄປຜູ້ດຽວ ! ວ່າແລ້ວມະນີສະຫວັນ ກໍຜູດລຸກຂຶ້ນ .

- ບ້າແທ້ແກ້ວ ເປັນແມ່ຍ່າແມ່ຍິງຄົນດຽວຊິເຂົ້າປ່າເຂົ້າດົງ ຍັງມືດຢູ່ຊ້ຳ... ໂຕໄປປຶກສາກັບປ້າພອນກ່ອນໄປ ຊິເຮັດຫຍັງກໍດາຍ ເຮົາຂໍວິບອີກຈັກບາດກ່ອນ !

ແສງອຳໄພເວົ້າຖືກ ທີ່ວ່າຕ້ອງປຶກສາກັບປ້າພອນກ່ອນ ! ເພາະ ຝ່າຍນີ້ເອງ ກໍໃຈບໍ່ຢູ່ກັບລິງຄືກັນ ດັ່ງນັ້ນ ພໍແສງສີຄຳເຫລືອງແສດ ອາບທາຂອບຟ້າ ຂະຫຍາຍກວ້າງອອກເປັນສັນຍານວ່າ ດວງສຸລິຍາ ຜູ້ໃຫ້ຄວາມສະຫວ່າງແກ່ໂລກ ພວມຈະຫວນກັບມາ ສ່ອງສະໄຫວ ອີກແລ້ວ ຫວດເຂົ້າຂະຫນາດໃຫຍ່ ກໍອອກອາຍຄວັນກຸ່ນໆ ປາປີ້ງ ທາເກືອ ກະຈາຍກິ່ນຫອມຮ່ອຍລອຍກົ້ວຫ້ອງ ເຮືອນເມື່ອນ້ຳມັນຍ້ອຍລົງ ໃຫມ້ເທິງກ້ອນຖ່ານຟືນສີດຳ ສຽງຕຳແຈ່ວຕຳປົ່ນ ດັງປັອກໆແປັກໆ

ປະສານກັບສຽງກັງວານຂອງຄົກມອງໃຫຍ່ ເຊິ່ງໄທບ້ານສ່ວນໜຶ່ງ ຍັງຊົມໃຊ້ເພື່ອຕຳເຂົ້າກິນປະຈຳວັນ. ລາວດຽວບັນຍາກາດທົ່ວບ້ານ ກໍຍິ່ງອຶບອໍວຟົດບັນຂຶ້ນ ເມື່ອເປັດໄກ່ ໝູ ໝາ ເລີ່ມອອກຈາກຄອກ ມາຊອກຢູ່ຫາກິນເຫຍື່ອ ທີ່ຄົນເອົາວາງໃສ່ຮາງໄວ້ຖ້າ ພ້ອມໆກັບ ສຽງວົວສຽງຄວາຍຍ່ຳຫື້ນດິນ ກ່ອນອອກຈາກແຫລ່ງ ກ້ອງຕະລ່າງ ເຮືອນທັງເຣັດສຽງກະດິງແຂວນຄໍ ດັງທີ່ງໆຂຶ້ນ ... ຊີວິດວັນໃໝ່ ຂອງ ຊົນນະບົດ ພວມເລີ່ມຂຶ້ນອີກແລ້ວ . ມະນີສະຫວັນ ຈົດຈຳເອົາທັງສຽງ ແລະ ພາບຊີວິດຍາມເຊົ້າໃນບ້ານນີ້ໄວ້ ດ້ວຍຄວາມຮູ້ສຶກອາວອນເລິກໆ ບໍ່ດົນນາງກໍຈະຈາກໄປແລ້ວ !

- ຕ້ອງເອົາເຂົ້າເອົານ້ຳ ອອກໄປສົ່ງພວກມອດໄຟປານນີ້ຄືຊິ ຫິວທັງເມື່ອຍ ! ປ້າພອນບອກ ເມື່ອສັ່ງຫລານສາວ ໄປເອີ້ນຈັນເພັງ ມາຫາ ເພື່ອເຕົ້າໂຮມສະມາຊິກຊາວໜຸ່ມແມ່ຍິງ. ຈັນເພັງໄດ້ຊື່ວ່າ ເປັນຜູ້ຊຳນານໃນການເຂົ້າປ່າ ບໍ່ຍອມພວກຜູ້ຊາຍ ເພາະນາງໄດ້ ຕິດຕາມໜ່ວຍຕັດໄມ້ ເຂົ້າດົງໃຫຍ່ ຫລາຍເທື່ອແລ້ວ .

ຂະບວນໄປສົ່ງເຂົ້າ ສົ່ງນ້ຳ ມີນຳກັນ ໕ ຄົນ ແລະ ມະນີສະຫວັນ ກໍຂໍຕິດຕາມໄປນຳ. ທຸກຄົນຫິ້ວກະຕ່າ ມີຕິບເຂົ້າ ບັ້ງນ້ຳ ແລະ ຜ້າໂຕ້ ນ້ອຍຕິດຕົວ. ການເດີນທາງ ບໍ່ລຳບາກເລີຍເພາະມີ ຮອຍຖາງເປັນ ແລວ ຂອງພວກອອກໄປຕອນອ້ອນແຈ້ງ. ເລົາແສງສີຄຳ ຂອງ ດວງ ອາທິດ ເຊິ່ງລອຍດັ່ງຂຶ້ນສູ່ເວຫາລອດຜ່ານຕາມຫວ່າງໄມ້ ກະທົບ ໃສ່ນ້ຳໝອກຄ້າງ ຕາມໃບໄມ້ພືດພັນຕ່າງໆ ສະທ້ອນສີສັນ ຂອງຮຸງ ກິນນ້ຳ ວາວວັບທົ່ວໆໄປ. ໃນມື້ໜຶ່ງພົງໄພຈະປຽນສີ ແປກຕ່າງກັນ ໄປຕາມກາລະເວລາ ໃນຕອນເຊົ້າໆ ເຊັ່ນນີ້ ນອກຈາກສີສັນ ວາວວັບ ຈາກແສງສະທ້ອນ ຂອງອາຍນ້ຳຄວັນໝອກ ເມື່ອຕ້ອງກັບແສງແດດ ແລ້ວ ປ່າຍັງນັບນອງໄປດ້ວຍ ສຽງນົກການາໆຊະນິດ ທີ່ຫາກໍ່ຕື່ນ ຕ້ອນຮັບວັນໜຶ່ງຂອງຊີວິດ. ບາງກຸ່ມ ບາງຝູງ ທັນບິນເວີ່ນເຊີ່ນອອກ

ຈາກຮັງໄປຊອກຫາເຫຍື່ອແລ້ວ ສຽງດັງຄວາກຄາກ ດັງຈາກທຸກ ທິດທາງບອກບໍ່ຖືກວ່າ ແມ່ນສຽງຫຍັງ. ອາດຈະແມ່ນງ່າໄມ້ແຫ້ງ ລົ່ນລົງຮະລໍາຕົ້ນ ແລ້ວຕົກໃສ່ໃບໄມ້ແຫ້ງ ຫລື ສັດປ່າໂຕໃດໂຕໜຶ່ງ ຫລົງທາງແລ່ນອອກມາ ແລ້ວຫັນຫລັງກັບ ເມື່ອມາບເຫັນສັດສອງຂາ ແປກປະຫລາດ ທຸກສິ່ງທຸກຢ່າງໃນປ່າເຫນັງຕຶງ ປຮັບແປງໄປຕາມ ກົດເກນ ທັງສິ່ງມີຊີວິດ ແລະ ບໍ່ມີຊີວິດ ຕ່າງກໍອາໄສເພິ່ງເພິງພາເຊິ່ງ ກັນ ແລະ ກັນ. ມະນີສະຫວັນ ເພີດເພີນນໍາສຽງສີບັນເລງ ຕາມທໍາມະ ຊາດ ຂອງປ່າຕຶບດົງຮົກຈົນລືມຄວາມຢ້ານໂຕສັດນ້ອຍໆ ທີ່ສວຍໂອກາດ ດູດດື່ມເລືອດສົດໆຈາກຄົນ. ດົນໆ ນາງຈຶ່ງໄດ້ ສໍາຜັດກັບບັນຍາກາດ ເຢັນຊຸ່ມຮົກເຮື້ອຂອງປ່າດົງດິບແທ້ໆ ຈັກເທື່ອ ອາລົມຈິດຈຶ່ງຕື່ນສະດຸ້ງ ວຸ່ນວາຍ ແລະ ເບີກບານພ້ອມໆກັນ.

- ປານໃດຊິຮອດ ຈັນ ! ຍ່າງອ້ານຫ້ວຍໜຶ່ງແລ້ວຈຶ່ງມີຜູ້ຖາມຂຶ້ນ.

- ລຽບຕີນພູໄປອີກຈັກໜ້ອຍ ກໍຮອດທາງຂຶ້ນ ເຮົາວ່າພວກເພິ່ນ ຕ້ອງມາໂຮມກັນ ຢູ່ສະໜາມໄມ້. ຈັນເພັງບອກໝູ່. ພວກຜູ້ສາວຊາວ ບ້ານປ່າ ບໍ່ຟ້າວຟັ່ງປານໃດ. ບາງຄົນຢຸດແວ່ເຂົ້າພຸ່ມໄມ້ແຄມທາງເພື່ອ ເກັບເອົາຍອດຜັກ ຫລື ຕັດສ້ອມເອົາໜໍ່ຫວາຍ ໜໍ່ໄມ້ທີ່ພົບເຫັນ. ມະນີ ສະຫວັນ ຢາກໃຫ້ຍ່າງໄວໆແຕ່ນາງກໍສົນໃຈນໍາວິທີເກັບຜັກຫັກໜໍ່ ຂອງ ພວກຜູ້ສາວໄທບ້ານທັງທົດລອງສ້ອມໜໍ່ຫວາຍ ທີ່ຕົນເອງຕັດໄດ້.

- ບໍ່ງ່າຍປານໃດເນາະ ! ເອື້ອຍແກ້ວ ! ນາງນ້ອຍຜູ້ສອນ ມະນີສະຫວັນ ຕັດສ້ອມໜໍ່ ສັງເກດເຫັນທ່າທີບໍ່ຊໍານານ ຂອງຄົນໃນ ເມືອງ ເວົ້າຢອກຫົວໆ .

- ແທ້ຫັ້ນລະ ເບິ່ງເຈົ້າ ໂລດສົນເອົາໆໄວແທ້ໆ ພຸ່ນນະໄດ້ຕັ້ງ ຫລາຍແລ້ວ... ພໍແກງຫລືຍັງໜີ້ ? ມະນີສະຫວັນ ສ່ອງເບິ່ງກະຕ່ານ້ອຍ ຂອງນາງທັງຖາມ .

- ໃກ້ລະຂໍ້ ຍັງຊິຕ້ອງເອົາເຫັດຈັກໜ້ອຍ ! ຜູ້ຊໍານານໃນການຫາ

ຜັກຫັກຫນໍ່ ບອກລາຍການຂອງຊອກ ພາໃຫ້ມະນີສະຫວັນເອົ້າໃຈ ທັງ ມ່ອນໄປນຳ ລືມຄວາມອິດເມື່ອຍ ແລະ ຄວາມກັງວົນໄປຊົ່ວຄາວ.

ເປັນໄປຕາມຄວາມຄາດຫມາຍ ຂອງຈັນເພັງແທ້ໆ ທີ່ວ່າ ພວກມາຕັດທາງໄຟປ່າ ຈະມາເຕົ້າໂຮມກັນຢູ່ບໍລິເວນ ທີ່ໄທບ້ານເອີ້ນ ຢ່າງເກີນຄວາມເປັນຈິງວ່າ " ສະຫນາມໄມ້ " ເພາະພວກເຂົາເຈົ້າ ຫັນໄດ້ກົ້ງ ທ່ອນໄມ້ມາໂຮມກັນໄວ້ ບໍ່ຮອດສິບທ່ອນຊ້ຳ ! ອາໄສວ່າ ລຳໃຫຍ່ ກິ່ງງ່າສາຂາແຜ່ພີງກວ້າງ ບໍລິເວນມີຮູບທ່ອນໄມ້ ຈຶ່ງແປນ ໂປ່ງຂຶ້ນ ເພາະຕ້ອງຖາງພືດພຸ່ມໄມ້ປ່ອງ ອອກໃຫ້ເປັນເດີ່ນກວ້າງ ສຳລັບຕັດເລື່ອຍໄມ້ໃຫ້ສະດວກ . ຂອນໄມ້ວາງສັບສົນ ບາງທ່ອນເຕັ່ງກັນ ບາງທ່ອນຮຽງກັນ ໄຂ່ວກັນກໍມີອ້ອມຮອບບໍລິເວນ ມີແລວປ່າຖືກຖາງ ໃຫມ່ໆ ກວ້າງຂະຫນາດເທົ່າຮອຍກວຽນ.

- ເດ້... ພວກເອົ້າເຈົ້າຢູ່ຫນີ້ແທ້ໆ... ຕ້າຍແລ້ວ ເບິ່ງອ້າຍໃດ ກໍຈັ່ງແມ່ນຜູ້ງາມ ! ພວກຜູ້ສາວຫ້ອງຂຶ້ນແຊວໆ ເຮັດໃຫ້ພວກຜູ້ຊາຍ ທີ່ພວມຢູ່ໃນລັກສະນະອາການຕ່າງໆກັນ ງວາກມາເບິ່ງ ດ້ວຍຄວາມ ດີໃຈ .

- ມະນີ... ເຈົ້າມາຫຍັງ ? ຜັນຍ່າງກົງເອົ້າມາ ຮັບເອົາ ກະຕ່າ ນ້ອຍ ແລະ ພາບາງໄປນັ່ງເທິງຂອນ. ຄຳຖາມແບບບໍ່ພໍໃຈ ເຮັດໃຫ້ ມະນີສະຫວັນນ້ອຍໃຈ .

- ກະເອົາເອົ້າມາສິ່ງ ຢ້ານຫິວ !

- ພວກນັ້ນເອົາມາກະໄດ້ ເຈົ້າຮູ້ບໍ່ວ່າອັນຕະ... ! ຜັນເວົ້າບໍ່ອອກ ເມື່ອເຫັນສີຫນ້າຂອງບາງ. ມະນີສະຫວັນ ຮູ້ທັນທີວ່າຜັນຄິດເດົາ ເລື່ອງ ລາວໄດ້ ບາງຟ້າວບອກວ່າ .

- ຂ້ອຍ... ເອີ້ ເຂົາຄິດວ່າ ຜັນບໍ່ຊອາດຄິດຮອດເລື່ອງນີ້ ກໍເລີຍ ຢາກມາບອກ ເຕືອນໃຫ້ລະວັງ !

- ຂອບໃຈ ! ພວກເຮົາເອົ້າໃຈວ່າ ອາດຊິບໍ່ແມ່ນໄຟປ່າທຳມະດາ

ມະນີ... ຈັ່ງຊັ້ນລະ. ເອົາບໍ່ຢາກໃຫ້ເພິ່ນຢູ່ " ຜັນບອກບາງ ດ້ວຍນ້ຳສຽງທ່ວງໃຍ .

- ກິນເຂົ້າສາ... ຊິງເມື່ອຍ ແນະ ມີທັງນ້ຳຕົ້ມຢາມີແຮງ ປ້າພອນບອກໃຫ້ເອົາມາ " ມະນີສະຫວັນ ດຶງເອົາກະຕິກຢາງໃສ່ນ້ຳຍື່ນໃຫ້ຜັນຊາຍໜຸ່ມຮັບໄວ້ ທັງບອກວ່າ :

- " ເຂົ້າປ່າດົງໃຫຍ່ ບໍ່ອຶດນ້ຳກິນດອກ ນີ້ເດ້ ກິນນ້ຳ ໃບເຄືອໄມ້ນີ້... ທັງສະອາດທັງຫວານຫອມ ຊິມບໍ່ ? ເອົ້າອ້າປາກໄວ້ ອ້ອຍ ຕັດຈຸດຈັບເຍີງຂຶ້ນ ແລ້ວນ້ຳມັນຊິຍ້ອຍອອກມາ " ມະນີສະຫວັນ ເຮັດນຳຄຳບອກ ຂອງຜັນຢ່າງວ່າງ່າຍ ນັບວ່າແມ່ນສິ່ງໜຶ່ງ ທີ່ນາງບໍ່ເຄີຍຮູ້ມາກ່ອນ. ຍິງສາວດື່ມນ້ຳ ທີ່ຍ້ອຍລິນອອກຈາກເຄືອໄມ້ ຂະໜາດເທົ່າແຂນ ເຊິ່ງບ່າວຄູຜັນຈັບໄວ້ຊັນໆຈົນຮູ້ສຶກເຊົາຫິວ.

- ອື...ແຊບເຢັນດີອີ່ຫລີ່! ຜັນເຄືອທຸກແນວໃຫ້ນ້ຳກິນ ແບບນີ້ຫວະ?

- ກະບໍ່ແຫລ້ວ ຕ້ອງຮູ້ຈັກເລືອກລະບໍ ບາງຊະນິດກະເບື່ອບາງຊະນິດຂົມ ບໍ່ແມ່ນຊິຮ່າວໄດ້ຮ່າວຕັດເດີ້ ! ຊາຍໜຸ່ມອະທິບາຍ ທັງຫົວໃສ່ໜ້າມະນີສະຫວັນ .

- ແນ້ ມາຫົວຂວັນເອົາຫຍັງ ລະວັງບາດທີເພິ່ນເຂົ້າວຽງຈັນກ່ອນ ! ມະນີສະຫວັນເວົ້າຂູ່.

- ແນະ ໃຜຊິຫົວຂວັນເພິ່ນ ເອົາດີໃຈຊິຕາຍ ທີ່ຊິໄດ້ເຂົ້າເມືອງວຽງ ອະແຮ້ມ !

ຜັນໜມາດຄໍ ບໍ່ເວົ້າໃຫ້ສຸດປະໂຫຍກ ແຕ່ແສງຕາຄູ່ຄົມສັກໃສ່ໃບໜ້າ ຍິງສາວ ຢ່າງມີຄວາມໝາຍ ຈົນມະນີສະຫວັນອຶດອັດເກີ້ເອີນ

- ເອີ້... ອ້າຍທິດ ບອກທຸກຄົນປັ້ນເຂົ້າເອົາແຮງສາຊິໄດ້ໃຫ້ພວກແມ່ຍິງເມືອ ບາດແລ້ວ ຈິ່ງໄປຈອບເບິ່ງທາງໄຟອີກ ! ຜັນ ຮ້ອງໃສ່ອ້າຍທິດແກ່ນ ເຊິ່ງກໍພວມເວົ້າລົມຕອບຄວາມຖາມ ສາວຈັນເພັງກັບໝູ່ ຢູ່ອີກຟາກຂອນໄມ້ເບື້ອງໜຶ່ງ .

ພວກຊາວຫນຸ່ມ ທີ່ລະດົມກັນອອກມານອດໄຟ ແຕ່ອ້ອນແຈ້ງ ມີນຳກັນເກືອບຮອດ ໔໐ ຄົນ ລົງມືກິນເຂົ້າຮ່ວມກັນຢ່າງແຊບນົວ ເຖິງວ່າຂອງກິນ ຈະມີແຕ່ແນວງ່າຍໆ ເຊັ່ນ ແຈ່ວປາແດກ ປີ້ງປາ ສົ້ມຜັກ ກັບເຂົ້າຫນຽວຮ້ອນໆ ເຂົາເຈົ້າກໍຮູ້ສຶກວ່າພໍໃຈ ແລະ ມີຄວາມສຸກທີ່ໄດ້ກິນນັບ. ພາເຂົ້າຈັດເປັນວົງລະ ໖-໗ ຄົນ ຢັ່ງຢາຍຕາມຫວ່າງຂອນໄມ້ ຜູ້ຢູ່ໄກ ຖ້າບໍ່ສັງເກດດີ ອາດບໍ່ເຫັນ ຫລື ເຂົ້າໃຈວ່າແມ່ນຫົວຄົນ .

ສຽງປືນລູກຊອງນັດຫນຶ່ງ ລະເບີດຂຶ້ນກອງປ່າໃກ້ໆ ບໍລິເວນຂອນໄມ້ ພວກຊາວຫນຸ່ມ ຫມູບຫົວລົງບັງຂອນໄມ້ຈົມຫລົບ ແລ້ວສົ່ງສຽງບອກຊຶ່ມຕໍ່ໆກັນວ່າ

- ຄານຖອຍເຂົ້າປ່າດ້ານຫລັງກ່ອນ !

ຜັນທັນໄດ້ດຶງຄໍ ໃຫ້ມະນີຫວັນຟຸບລົງບັງຂອນ ເພາະນາງບໍ່ຮູ້ແນວຈະເຮັດຄືຫມູ່ .

- ຜັນ ຜັນ ! ແມ່ນຫຍັງ ? ຍິງສາວຊຶ່ມຖາມສຽງສັ່ນເຊັນ.

- ບໍ່ເປັນຫຍັງ ! ມະນີບໍ່ເປັນຫຍັງ. ຊາຍຫນຸ່ມເນັ້ນສຽງ ເຂົາເອງຮູ້ວ່າ ອັນຕະລາຍຮ້າຍແຮງ ອາດລະເບີດຂຶ້ນໄດ້ໃນນາທີໃດນາທີຫນຶ່ງຂ້າງຫນ້າ ເຂົາຈຳເປັນຕ້ອງເຮັດໃຫ້ມະນີເຊື່ອຫມັ້ນ ແລະອຸ່ນໃຈ ຊາຍຫນຸ່ມສວຍບີບມືອ່ອນນິ່ມຂອງນາງ ຄືຈະຖ່າຍທອດ ພະລັງທັງຫມົດ ໃນຕົວໃຫ້ແກ່ນາງ ສີຫນ້າອ່າວຈືດມ້ານ ຂອງນາງຄ່ອຍໆມີສີສັນຂຶ້ນ.

- ຢູ່ກັບເຂົາແລ້ວ ມະນີຍັງຢ້ານຢູ່ຫວະ ? ຜັນຊຶ່ມຖາມຄ່ອຍໆ ເພື່ອກະຕຸ້ນໃຫ້ນາງລືມຄວາມຢ້ານ " ຫມູບຄານໄປຕາມຂອນນີ້ເດີ້ " ຜັນຊຸກໃຫ້ນາງເລືອໄປກ່ອນ ແລ້ວຕົນເອງກໍຕິດຕາມມາ ທັງສອງຄານເຂົ້າໄປສົມທົບກັບຜູ້ອື່ນໆ ຢູ່ເບື້ອງຫລັງຕົ້ນໄມ້ໃຫຍ່ ແລະ ພຸ່ມໄມ້ຫນາທາງດ້ານຂ້າງຂອງສະຫນາມເມື່ອຮູ້ທິດທາງ ທີ່ມາຂອງສຽງປືນ ແລະ

ໄດ້ຍິນສຽງຄວາກລາກ ເກີດຈາກບາດຕີນ ຢຽບຢ່ຳໃສ່ກິ່ງໄມ້ໃບແຫ້ງ.

- ແມ່ນໃຜ ຜົນ ? ມະນີຖາມ ສຽງເຊົາສັ່ນໆແດ່ ເມື່ອປາກົດເຫັນຄົນສາມຄົນ ຍ່າງໃກ້ເຂົ້າມາ ເອີ້ ໄທເຮົາມີເປັນຊາວ ! ມະນີບອກຕົນເອງຢ່າງຊວ່າງໃຈ .

ຊາຍທັງສາມ ນຸ່ງເຄື່ອງສີນເປັນນັກບຸປ່າ ຜ້າຂາວມ້າມັດຫົວ ປ້ອງກັນວ່າໄມ້ແຫງທັ່ງເສື້ອແຂນຍາວສີມືດຄື່ມ ແລະ ສົ້ງຂາຍາວຊົງສີຄ້າຍໆກັນ ສອງໃນສາມມີປືນຍາວ, ຄົນຫນຶ່ງຈັບປືນລານີ ຄືຢູ່ໃນທ່າກຽມພ້ອມຈະຍິງ ສ່ວນອີກຜູ້ຫນຶ່ງພາຍໄວ້ຊື່ໆ .

- ເຖົ້າຄຳຜາ ! ຜົນບອກມະນີທັງກັດແຂ້ວ ຄວາມສິ່ງໄສຕ່າງໆແຈ້ງຂາວອອກທັນທີ .

- ເຖົ້າຕາຍເວນນີ້ລະ ມັນອົບມັນກວນບໍ່ແລ້ວ ມື້ນີ້ ຊິໃຫ້ມັນຫມົດເລື່ອງກ່ອນ !

- ເອົາ... ພວກເຂົາມີປືນໄດ່ຜົນ ໄທເຮົາມີແຕ່ມີດ ແຕ່ພ້າ.

ມະນີດຶງແຂນຊາຍຫນຸ່ມ ທັງບອກເຕືອນ ດ້ວຍຄວາມເປັນຫ່ວງ ຜົນປ່ອນມືເຂົ້າ ຈົກເອົາປືນສັ້ນ ທີ່ເຊື່ອງຢູ່ໃນເອິກເສື້ອໂຕຫນາຂອງເຂົາຂຶ້ນມາ.

- ດີແຕ່ອ້າຍຄູນບໍ່ທັນທວງເອົາຄືນ ! ຊາຍຫນຸ່ມກົ້ມບອກສາວຄົນຮັກ ດ້ວຍຮອຍຍິ້ມອົບອຸ່ນ ເມື່ອເຍິ່ງປືນໃນມືໃຫ້ເບິ່ງ.

- ຜົນ ! ຜົນເຈົ້າຊິໃຊ້ປືນພຸ້ນນ່ະ ! ສຽງມະນີ ຄືຊິເປັນລົມ.

- ບ່າ ມະນີ ຢ່າໃຈເສາະຫລາຍແມ ເອົາບໍ່ໃຫ້ມີໃຜເປັນໃຜຕາຍດອກນ່າ ເຊື່ອສີມີກັບຕີ ຈື່ບໍ່ຕອນແອບທະຫານ ຜົນໄດ້ລະແບບທີ່ໃດ ? ຊາຍຫນຸ່ມຖາມຟື້ນເຖິງຄວາມຫລັງ.

- ອື ... ຮູ້ແລ້ວວ່າ ສີມືເພິ່ນແນ່ ແຕ່ຢ່າແນໃຫ້ຖືກເປົ້າລະ !

- ຮັບຮອງ ບໍ່ເຂົ້າອີກດອກຄຸກທັ້ນ ຢ້ານບໍ່ມີຄົນໄປປະກັນ ! ຊາຍຫນຸ່ມບອກທັງຍິ້ມ ແລ້ວສັ່ງໃຫ້ມະນີ ຖອຍຫມູບຢູ່ທາງຫລັງ ສ່ວນເຂົາ

ລາບໄປຄວັກເອົາທິດແກ່ນ ກັບອ້າຍຄູນ ເວົ້າກັນອຸ່ນໆ ຄາວຫນຶ່ງ ແລ້ວກໍຖອຍອອກຈາກກັນ. ມະນີບໍ່ອາດຮູ້ວ່າຜັນປຶກສາຕົກລົງ ກັບທິດແກ່ນ ແນວໃດ ແຕ່ສິ່ງທີ່ເກີດຂຶ້ນໃນເວລາຕໍ່ມານັ້ນ ມັນໄວວາຈົນນາງ ຄຶດບໍ່ອອກວ່າ ມັນເປັນໄປໄດ້ແນວໃດ.

ພໍແຕ່ຄຳຜາກັບຊາຍທັງສອງ ກ້າວຂຶ້ນຢຽບຂອນໄມ້ ທີ່ຢູ່ອ່າວໃຈກາງຫມູ່ ແລ້ວຍົກມືຂຶ້ນ ຄືນັບທ່ອນໄມ້ ບໍ່ທັນເທັນຮອດກະຕ່າ. ຖ້ອຍ ແລະ ຕຶບເອົ້າ ທີ່ຊ້ອນ ຢູ່ຕາມຫລືບທ່ອນໄມ້ຊໍ້າ ຜັນ ກໍຍົກມືຂຶ້ນໃຫ້ສັນຍານທິດແກ່ນ ຄາວດຽວແລ້ວສຽງອຶກກະທຶກ ແບບແປກປະລາດ ຂອງພົງໄພກໍດັງຂຶ້ນ ພ້ອມກັບສຽງປືນນັດຫນຶ່ງຈາກປາຍປືນສັ້ນ ຂອງຜັນ. ລູກປືນສິວເອົາ ຜ້າມັດຫົວ ຂອງຊາຍຜູ້ຖືປືນ .

ເຫັນໄດ້ຄັກວ່າ ທັງສາມ ສະດຸ້ງ ງວາກຊ້າຍ ງວາກຂວາ ແລະຍົກປືນເລັງແນມາທາງປ່າ.

- ວາງມືລົງ... ໂຍນປືນຖິ້ມ ! ສຽງອ້າຍຄູນ ຮ້ອງສັ່ງເຮັດໃຫ້ຈານຄຳຜາເຊື່ອງຮູ້ດີວ່າ ຄູນແມ່ນໃຜ ຕົກຂະນ່າ ແຕ່ລືນທັງສອງທີ່ມານຳບໍ່ຍອມວາງປືນ. ຜູ້ພາຍປືນຢູ່ກໍຈັບປືນເຍີງຂຶ້ນ ຜັນລັ່ນກະສູນອອກໄປອີກບາດຫນຶ່ງ ສິວເອົາຫົວຄຳຜາ.

- ພວກເຮົາລ້ອມໄວ້ຫມົດແລ້ວ ວາງປືນມອບໂຕໂດຍດີ ! ອ້າຍຄູນບອກຊ້ຳ ບໍ່ຮອດ ໕ ນາທີຕໍ່ມາ ຊາຍທັງສາມກໍຖືກພວກ ຊາວຫນຸ່ມ ມັດສອກໄຂວ່ຫລັງແຫນ້ນຫນາ ແລະ ອອກເດີນທາງອອກຈາກປ່າກັບຄືນບ້ານ ໂດຍມີອ້າຍຄູນ ກັບກອງຫລອນອີກ ໕ ຄົນ ຄຸມກັນ.

- ເປັນຫຍັງລາວຈຶ່ງເຮັດແນວນີ້ເນາະ ? ມະນີສະຫວັນຖາມຂຶ້ນດ້ວຍຄວາມເສົ້າໃຈ ເມື່ອເຫດການຮ້າຍຜ່ານໄປ ແລະ ຜັນ ກໍຊວ່າງໃຈອາລົມເບີກບານ ພານາງຍ່າງຊົມປ່າອ້ອມຮອບບໍລິເວນ "ສະຫນາມໄມ້" ຜັນ ຄຶດຢາກໃຫ້ມະນີສະຫວັນ ຫລົງສະເຫນແຫ່ງພົງໄພຄືເອົານາງຊິໄດ້ຫຽວມາ.

- ລາວໂລບມາກ ຢາກໄດ້ເງິນນັ້ນແລ້ວມະນີ ໄປຕົວະເອົາຜູ້ ຊື້ ມາແຕ່ໃສບໍ່... ເບິ່ງຊີງແມ່ນມາແຕ່ຝາກນັ້ນ ຊິມາຕີລາຄາໄມ້ກັບ ແຜນລາວ ແມ່ນໄປຈູດປ່າຝາກຫ້ວຍໄວ້ ເພື່ອໃຫ້ໄຫເຮົາໂຫ້ໄປພຸ້ນ.

- ຜູ້ຊື້ກໍຊິໂງ່ປານນັ້ນ ໄມ້ຍັງຢູ່ປ່າແທ້ໆ

- ຄວາມໂລບ ພາໃຫ້ຄົນໂງ່ກໍມີມະນີ ! ມາ... ຂ້ອຍຊິພາຊົມປ່າ.

- ບໍ່ໄປໄກໄດ໋ຜົນ ຟ້າວເມືອ ເວົ້າກັບແສງອຳໄພວ່າ ຊິເມືອຕອນບ່າຍນີ້

- ຢູ່ອີກຈັກຄືນກ່ອນບໍ່ໄດ້ຫວະ ? ອ້າຍບ່າວຄູອອດອ້ອນສຽງມ່ວນແບບບໍ່ເຄີຍເວົ້າມາກ່ອນ.

- ແນ້ ! ອໍມາແກ້ວຽກຫນີ້ ມີ ນີ້ ມັນກາຍໄປມື້ຫນຶ່ງແລ້ວໄດ໋ ຍາ! ມະນີສະຫວັນຕາຂຽວໃສ່ ທັງເວົ້າອອກມາຊື່ໆ

- ຕົກລົງ ເພິ່ນມີວຽກຫລາຍ ແຕ່ຢາກໃຫ້ເພິ່ນເຫັນຄວາມງາມຄຸນຄ່າແທ້ ຂອງປ່າຊື່ໆດອກ.. . ເບິ່ງຕົ້ນເປືອຍນີ້ແມ້ ເປືອກມັນມື່ນກ້ຽງງາມ ແຕ່ບໍ່ມີໃຜມັກມັນດອກ ! ຜົນເອົ້າໄປເບິ່ງຕົ້ນໄມ້ສູງ ລຳຕົ້ນກ້ຽງມື່ນ ມີສີເຫລືອງແກມນ້ຳຕານໄຫມ້ເປັນກະດ່າງກະດາວ.

- ເປັນຫຍັງຈຶ່ງບໍ່ມີໃຜມັກລະ ? ຄົນຫລືວ່າ... ມະນີ ຖາມທັງຫົວອີກໆ ຍ່າງເຂົ້າໄປຫາຕົ້ນໄມ້ລຳງາມ.

-ຄົນກະບໍ່ມັກ ເພາະເປັນໄມ້ເນື້ອອ່ອນ ພຶດພັນແນວເປັນເຄືອກໍບໍ່ມັກເພິ່ນ ເບິ່ງນີ້ຕີ ລອກອອກງ່າຍໆ ທັງມື່ນ ພວກເຄືອບໍ່ສາມາດເກາະຕິດໄດ້. ລູບເບິ່ງແມ້ ! ສອງບ່າວສາວ ພາກັນຍ່າງໄປເລື້ອຍໆທ່າມກາງສຽງຮ້ອງວັນ ຂອງແມງໄມ້ ແລະ ນົກ ຄາວຫນຶ່ງຜົນກໍຊີ້ບອກໃຫ້ມະນີສະຫວັນເບິ່ງ.

- ນີ້... ມະນີ ເບິ່ງຕົ້ນໄຮນີ້ແມ້... ມັນກິນຕົ້ນຍາງເກືອບຕາຍແລ້ວ ! ມະນີສະຫວັນຢຸດ ແລະ ເບິ່ງໄປຕາມ ທີ່ຜົນຊີ້ບອກ

- ມັນກິນກັນໄດ້ແນວໃດຮື ? ນາງຖາມດ້ວຍຄວາມສົນໃຈ ເລື່ອງ

ແບບນີ້ ປາກົດວ່າ ບໍ່ມີຮຽນຢູ່ໃນວິຊາພຶກສາດ ທີ່ນາງເຄີຍຮຽນຜ່ານມາ ມະນີບໍ່ແນ່ໃຈວ່າຕົນເອງຈື່ຈຳດີຊ່ຳໃດ ຄວາມຈິງຊາວໜຸ່ມນັກຮຽນ ຄວນຊິຮູ້ ກ່ຽວກັບຕົ້ນໄມ້ພືດພຸ່ມ ທີ່ເປັນປະໂຫຍດ ແລະ ເປັນຢາ ຢູ່ໃນປ່າດົງພົງໄພ ຂອງປະເທດຕົນເອງ.

- ນົກກິນໝາກໄຮ ຫລື ໝາກໂພ ແລ້ວມາຂີ້ໃສ່ເທິງຕົ້ນໄມ້ອື່ນໆ ເວລາມັນມາຈັບງ່ອຍ ເມັດໄຮຄ້າງຕາມກົ່ງງ່າ ສາຂາໄມ້ອື່ນ ຈຶ່ງແຕກງອກເຕີບໃຫຍ່ຂຶ້ນ ອາໄສດູດກິນອາຫານຕາມລຳຕົ້ນແມ່ ທີ່ມັນອາໄສ ຮາກໄຮຍ່ອນໂອບຫຸ້ມລຳຕົ້ນແມ່ ທັງໃບກໍຂຶ້ນປົກບັງ ເພື່ອຍາດເອົາແສງແດດ. ເປັນແບບນີ້ແລ້ວຕົ້ນໄມ້ແມ່ ກໍຈະຄ່ອຍຜຸໂຊກໄປ ຍ້ອນບໍ່ສາມາດ ສັງເຄາະອາຫານມາລ້ຽງຕົນເອງ !

- ໂອ້... ເປັນແບບນີ້ເນາະ ຂອບໃຈອາຈານຫລາຍໆ ! ຍິງສາວກົ້ມຫົວຄຳນັບ ຄືວ່າ ຜັນເປັນອາຈານຜູ້ຍິ່ງໃຫຍ່.

- ຂ້ອຍບໍ່ຮູ້ແນວໜູ່ນີ້ມາກ່ອນເລີຍຜັນ ມື້ນີ້ນັບວ່າໄດ້ຮັບ ຄວາມຮູ້ພິເສດແທ້ໆ ! ຍິງສາວເວົ້າຕໍ່ ເມື່ອຍ່າງອອກມາສູ່ທົ່ງທາງຫຼວງ.

- ເສຍດາຍຍາມນີ້ ດອກໄມ້ປ່າບໍ່ທັນບານ ບໍ່ຊັ້ນຂ້ອຍຊິເດັດມາແຊມຜົມ ໃຫ້ງາມປານນາງງ້ອມ ເມຍທ້າວເຈືອງພຸ້ນລະ ຜັນ ເວົ້າຢອກຫົວໆ.

- ຊັ້ນດອກໄມ້ປ່າບານຍາມໃດ ? ມະນີຖາມຄືນເບິ່ງ ນາງບໍ່ຮູ້ຫຍັງເລີຍ ກ່ຽວກັບປ່າໄມ້ ເມື່ອປຽບໃສ່ຜັນ.

- ກະພຸ່ມແຫລວ ເດືອນສີ່ ເດືອນຫ້າ ໃກ້ໆ ປີໃໝ່ທີ່ດບ້າ ເຮົ້ ! ຮອດຍາມນັ້ນ ຂ້ອຍຄືຊິຄິດຮອດເຈົ້າແຮງໆ.

- ແມ່... ຜັນ ຈັກເວົ້າຫຍັງ ອາຍແດດ !

- ອາຍໃຜອີກ. . . ມີແຕ່ທຳມະຊາດ ທີ່ປອດໂປ່ງບໍລິສຸດ ! ຟ້າເອີຍ! ມະນີ ຮູ້ບໍ່ວ່າ ຜັນມີຄວາມສຸກທໍ່ໃດ ?

- ເອີ ຮູ້ແລ້ວລະ ! ມະນີສະຫວັນປະສານສາຍຕາ ກັບຜັນ

ຢ່າງຄົນເຂົ້າໃຈກັນດີ. ສຳລັບມື້ນີ້ ນາງກໍອີ່ມຫມີກອີ່ມໃຈ ໄປບໍ່ຫນ້ອຍ ກວ່າເອົາ " ພໍອອກເມືອແລ້ວບໍ່ຈັກຜັນ ? ຈັກໂມງແລ້ວ ? "

ໄປອີກຫນ້ອຍຫນຶ່ງມະນີ ເອົາຊິພາໄປເບິ່ງ ສິ່ງທີ່ເອີ້ນວ່າ "ອາພອນແຫ່ງປ່າ"

ຊາຍຫນຸ່ມຍ່າງອອກຫນ້າ ຜ້າໃນມືສີນຮອນງ່າໄມ້ຫນາມ ທີ່ເດ່ຂວາງທາງໃຫ້ຫ່ອນຍ່າງ ປອດໄພສຳລັບນາງ. ຍ່າງມານຳກັນມິດໆ ໄດ້ຄາວຫນຶ່ງ ຜັນກໍຖາມຂຶ້ນວ່າ.

- ມະນີຈື່ບໍ່ ຕອນຮຽນວັນນະຄະດີ ເລື່ອງສຽວສະຫວາດ ມີຕອນຫນຶ່ງ ທ້າວສຽວສະຫວາດຖາມພໍ່ຄ້າສະເພົາວ່າ " ປ່ານີ້ມີໄມ້ບໍ່ ? " ຫັ້ນນາ. ອີ່ຕາພໍ່ຄ້າສະເພົາ ຍັງຄຶດຢາກຮ້າຍວ່າ ທ້າວນີ້ຖາມ ປານຄົນບ້າ ປ່າບໍ່ມີໄມ້ຈະເປັນປ່າແນວໃດ ?

- ເອີ້ ໆ ... ຈື່ ແລ້ວລູກສາວ ຂອງຕາພໍ່ຄ້າສະເພົາອະທິບາຍວ່າ ທ້າວສຽວສະຫວາດ ຫມາຍເຖິງຕົ້ນໄມ້ມີຄ່າ ເຊັ່ນຕົ້ນຈວງຈັນຫອມ ເກສະຫນາ ທຳນອງນີ້ລະແມ່ນບໍ່ ? ສອງບ່າວສາວ ຕ່າງຊ່ອຍກັນລະນຶກຮອດຄວາມຊົງຈຳແຕ່ຄາວກ່ອນ.

- ນ້ານລະ ນ້ານລະ ຜັນຊິພາມະນີໄປເບິ່ງຕົ້ນໄມ້ ມີຄ່າຢ່າງຫນຶ່ງ! ຊາຍຫນຸ່ມເວົ້າ ຢຸດຖ້າໃຫ້ນາງມາຮອດ.

- ເຈົ້າ ຫມາຍຄວາມວ່າ ໃນປ່ານີ້ມີຕົ້ນໄມ້ແບບໃນວັນນະຄະດີແທ້ໆ ຫວະ ? ມະນີສະຫວັນຖາມສຽງຕື່ນເຕັ້ນ ສອງບ່າວສາວຢຸດຍ່າງຢືນປະເຊີນຫນ້າກັນ ທ່າມກາງ ສຽງລະງົມງັນແຫ່ງພົງໄພ. ຜັນສວຍໂອກາດທີ່ມະນີສະຫວັນຍືນເກີ້ ແນມເບິ່ງຕົ້ນໄມ້ ອ້ອມຮອບໂຕດ້ວຍຄວາມຢາກຮູ້ຢາກເຫັນນັ້ນ ຈັບເອົາມືອ່ອນນຸ້ມ ຂອງນາງ ມາຈູງຍ່າງຊ້າໆ ບໍ່ຜິດຫຍັງຜູ້ໃຫຍ່ຈູງ ເດັກນ້ອຍພາທາງ.

- ອ້າຍທິດແກ່ນ ບອກຂ້ອຍວ່າ ໃນດົງນີ້ມີໄມ້ເກສະຫນາຢູ່ຫລາຍໃຜມີບຸນວາສະຫນາ ຫລືວ່າ ໂຊກດີຫັ້ນແຫລະຈຶ່ງພໍ້... ຂ້ອຍວ່າ ຜູ້ພໍ້

ທັ້ນລະໂຊກດີເນາະ ເຈົ້າວ່າບໍ່ ? ຜັນເລົ່າຫົວໆ ແລ້ວຟ້າວເວົ້າຕໍ່ ທັງບໍ່ຍອມວາງມື ຂອງສາວຄົນຮັກ.

- ຂ້ອຍໂຊກດີໄດ້ ມີນາງເທວະດາມາໂຜດແລ້ວບໍ່ພໍ ນາງເທວະດາຜູ້ນັ້ນ ຍັງນຳມາຮັກສາ ຮອດປ່າດົງພົງທຶບອີກ ຊັ້ນຂໍສ່ຽງວາສະໜາ ຍ່າງໄປອີກຈັກໜ້ອຍ..." ອາລົມຂອງຜັນ ບິນເຈີດໄປໄກ. ຄວາມເປັນຈິງເວລານີ້ ໃກ້ຄຽງກັບຄວາມຝັນເກີນໄປ ! ມະນີສະຫວັນກະຕຸກມືອອກຈາກອຸ້ງມືແຂງແຮງເວົ້າສຽງແຈ່ມໃສຕາມປົກກະຕິວ່າ.

- ຜັນ ຢ່າເວົ້າຮອດວາສະໜາຫລາຍ. ມະນີບໍ່ມັກ ທຸກຢ່າງຂໍໃຫ້ມັນເກີດຂຶ້ນ ດ້ວຍຄວາມຕັ້ງໃຈ ຂອງເຮົາດີກວ່າ. ວາສະໜາເໝາະສຳລັບໃຊ້ກັບຄົນອ່ອນແອ ບໍ່ສາມາດຕັດສິນໃຈເອົາເອງໄດ້. ມະນີ ເຊື່ອວ່າດ້ວຍຄວາມຈິງໃຈປາຖະໜາດີ ຕໍ່ເພື່ອນມະນຸດ ທຸກຢ່າງກໍຈະດີຂຶ້ນເອງ ບໍ່ແມ່ນໂຊກຊາຕາວາສະໜາຢູ່ສິ່ງສັງດອກ. ຖ້າ ຜັນຈະພົບພໍ້ໄມ້ເກສະໜາທີ່ວ່າ ກໍຍ້ອນຜັນຕັ້ງໃຈ ຊອກຫາມັນແທ້ໆ ! ແຕ່ມະນີຢາກຮູ້ວ່າ ຖ້າຜັນພົບແລ້ວ ຜັນຈະເຮັດແນວໃດ ? ຍິງສາວຢຸດຍ່າງຫັນມາຖາມ ທັງປະສານແສງຕາ ກັບຊາຍໜຸ່ມຢ່າງຈິງຈັງ.

- ໄມ້ເກສະໜາ ມີລາຄາແພງໄດ້ ມະນີ ເອົາຂາຍກັນກິໂລໜຶ່ງຕັ້ງຫລາຍແສນກີບ. ຂ້ອຍເອ້ ຄຶດວ່າ ຈະຂາຍເອົາເງິນມາສົມທົບປຸກໂຮງຮຽນ ໂຮງໝໍໃນບ້ານແລ້ວ ຂ້ອຍກະອາດຊິມີ ເງິນພໍເປັນຄ່າແຕ່ງດອງນຳອີກ !

- ຣຶ... ຝັນເອົາຕາມເຄີຍ" ມະນີຫລັບຕາຊັ່ວ ທັງຍ່າງມຸ່ງໜ້າໄປຕາມທາງຮ່ອມນ້ອຍ ຜັນຍ່າງນຳຕິດໆ ແລ້ວເອົາກໍຮ້ອງບອກນາງຢຸດ ສ່ວນຕົນເອງ ແວະເຂົ້າຂ້າງທາງໃຊ້ມືລູບຄຳ ລຳຕົ້ນໄມ້ຂະໜາດ ທີ່ກກອດຂາຕົ້ນໜຶ່ງ.

- ມະນີ ນີ້ລະຕົ້ນເກສະໜານະ ! ມະນີສະຫວັນ ຕື່ນເຕັ້ນໄປນຳຜັນບໍ່ໜ້ອຍ ເຖິງອອກປາກວ່າ ບໍ່ເຊື່ອໂຊກວາສະໜາ ໃນໃຈນາງ

ກໍຫາກພາວະນາ ໃຫ້ຜັນພົບພໍ້ຕົ້ນໄມ້ວິເສດອັນນີ້ຢູ່. ສອງບ່າວສາວຄຸກເຂົ່າລົງຂ້າງຕົ້ນໄມ້ ເຊິ່ງເບິ່ງແລ້ວກໍ່ບໍ່ເຫັນມີຫຍັງ ພິສະດານກວ່າໝູ່.

ຜັນຍໍ່ມືນົບ ຈົ່ມພຸມໆ ຂອບໃຈເທວະດາ ແລະ ເຈົ້າຖິ່ນເຈົ້າຖານເຮັດໃຫ້ ມະນີ ຍໍ່ມືຂຶ້ນໄຫວ້ນໍາ.

- ຜູ້ຂ້າບໍ່ຢາກທໍາລາຍ ຕັດຟັນຕົ້ນນີ້ໃຫ້ຕາຍໝົດຕົ້ນໝົດລໍາພໍພຽງແຕ່ຢາກຂໍແບ່ງຢາງ ຂອງເພິ່ນໄປໃຊ້ເປັນຢາ ປາຍມີດນີ້ ຈົ້ມລົງໄປແລ້ວຢ່າໃຫ້ເຈັບປວດ ແລະ ຂໍໃຫ້ຖືກບ່ອນໝານນັ້ນດ້ວຍ ! ຜັນອະທິຖານ ຕາມຄໍາບອກຂອງທິດແກ່ນ ຈາກນັ້ນ ຈຶ່ງພິຈາລະນາຈຸດພິເສດ ກ່ອນຈະເລືອກຟັນຖາກ ມະນີສະຫວັນ ບໍ່ຮູ້ເລື່ອງຮີດຄອງເລົ່ານີ້ ແຕ່ນາງກໍຮູ້ສຶກສະທ້ານໃຈ. ຖ້າຄົນນັບຖືຮີດອັນນີ້ ຄືຜັນບໍ່ທໍາລາຍຕົ້ນໄມ້ຊະຊາຍ ມີຄວາມເຄົາລົບຮູ້ບຸນຄຸນຂອງປ່າ ປ່າກໍຄົງຕອບສະໜອງສິ່ງມີປະໂຫຍດ ໃຫ້ມະນຸດຢ່າງບໍ່ໝົດສ້ຽງເປັນຄືກັນ.

- ມະນີ. . . ມະນີ ໂອ້ ! ຜັນເອີ້ນຊື່ຍິງຄົນຮັກ ດ້ວຍຄວາມຕື່ນເຕັ້ນເມື່ອພົບວ່າຄົນມີດຂອງເຂົາ ຖາກລົງຖືກບ່ອນທີ່ມີຈຸດດໍາ ເປັນເວີ່ງກ້ວາງ ອັນເປັນສັນຍາລັກວ່າ ລໍາເກສະໜາຕົ້ນນີ້ມີຢາງດໍາໆ ເຊິ່ງເປັນຜະລິດຜົນ ທີ່ແມງໄມ້ສະສົມໄວ້ ຜັນ ຄວັດເຈາະຄ່ອຍໆ ຕາມຮອຍສີດໍາໂດຍມີມະນີເປັນຜູ້ເອົາໃຈຊ່ອຍ.

- ໂຊກແລ້ວມະນີ... ໄດ້ຮອດຈັກ ສອງສາມຂີດພຸ້ນໄດຫນີ້. ຜັນບອກນາງເມື່ອຄວັດເອົາຝຸ່ນດໍາໜຽວ ອອກໃສ່ຖົງຢາງທີ່ເຂົາເອົາມານໍາ. ມັດຖົງຢາງດີແລ້ວ ປ່ອນໃສ່ຖົງພາຍ ພາມະນີຍ່າງກັບມາ ຕາມທາງເກົ່າ.

- ຂອບໃຈມະນີ. . . ທີ່ນໍາໂຊກມາໃຫ້ ! ຜັນເວົ້າຢອກ

- ແມ້. . . ໃຜວ່າ, ເຈົ້າຕັ້ງໃຈດີ ມັນແລ່ນມາເອງແຫລະໃຜຊິແບ່ງກັບໄດ້, ຖ້າຂ້ອຍສາມາດຫາໂຊກໃຫ້ຜູ້ອື່ນແລ້ວກ່ອນອື່ນໝົດ ຂ້ອຍ

ຊິຫາໃຫ້ໂຕເອງກ່ອນ. ມະນີສະຫວັນເວົ້າສຽດຄືນ ທັງຫລັບຕາຊົງໃສ່.

- ເພິ່ນຢາກເອີ້ ຢາກໂຊກຫຍັງ ! ຜັນຖາມບໍ່ແນ່ໃຈ.

- ໂຊກດີຢູ່ໃກ້ໆ ໃຜຜູ້ຫນຶ່ງ ໄດ້ເຫັນຫນ້າກັນເລື້ອຍໆ ຈັ່ງໄດລະ ! ຍິງສາວເວົ້າ ທັງເບີດຫນ້າຫນີ ອາຍທີ່ເປີດຫົວໃຈໂຈ່ງແຈ້ງ ແຕ່ຖ້າບໍ່ເວົ້າແຈ້ງ ຄົນເຫງົາກຫງາກຄືຜັນ ກໍບໍ່ມີມື້ເຂົ້າໃຈ.

- ມະນີ ຫນີດປີນີ້ ຜັນຊິໄປຮຽນຕໍ່ຢູ່ວຽງ ! ອ້າຍບ່າວ ຜູ້ເຫງົາກຫງາກ ທັນເຂົ້າໃຈຄວາມຫມາຍຝ່າຍຍິງ.

- ອ່າຊັ້ນແນ່ ຢາກໄດ້ຍິນແຕ່ດົນແລ້ວ " ມະນີສະຫວັນ ຍິ້ມໃຫ້ຢ່າງຈິງໃຈ ແລະ ດີໃຈຢ່າງເຫັນໄດ້ລັກ.

- ແຕ່ຮຽນອີກຕັ້ງ... ເອີ້ສອງປີ ຜັນວ່າມັນດົນນ່າ ! ຊາຍຫນຸ່ມຢ່າງຂຶ້ນມາຮຽງກັບນາງ ທັງໆ ທີ່ວ່າທາງຢ່າງແຄບຮົກໄປດ້ວຍຫນາມ. ທາງກາງດົງ ບໍ່ທ່ອນແມ່ນ ບ່ອນຢ່າງຄູ່ກັນໄດ້.

- ບໍ່ ບໍ່ດົນດອກ ຜັນຊິຟ້າວໄປໃສອີກ ? ຍິງສາວຖາມຊື່ໆ.

- ບໍ່ໄປໃສ ແຕ່ຢາກເອີ້ ຜັນຄຶດວ່າເຮົາຄວນເອົາກັນກ່ອນ ! ຊາຍຫນຸ່ມຕັດສິນໃຈສະເຫນີ ຂໍ້ຮຽກຮ້ອງອັນສຸດທ້າຍແລ້ວກໍຟ້າວເວົ້າຕໍ່ຄືຢ້ານຖືກອັດຄ້ານວ່າ :

- ຄວາມຈິງ ກໍແມ່ນສັນຍາເກົ່າໄດ່ມະນີ ! ສັນຍາເກົ່າ ພວກເຮົາກໍ່ວ່າຮຽນຕໍ່ສີ່ປີແລ້ວ ພວກເຮົາເອົາກັນທັນນ່າ ຈື່ບໍ່ ? ຜັນມາຢູ່ພີ້ ຊິໄດ້ສາມປີພໍດີ ປີຫນ້າເປັນສີ່ ຄົບປີສັນຍາເລີຍ !

- ຄືໄລ່ເລກເກັ່ງແຕ່ເພິ່ນແຫ້ ເອົາກໍໄລ່ເປັນຄືກັນນັ້ນຕວ່າ ແຕ່ຜັນບໍ່ທັນໄດ້ຮຽນສຸດນີ້ນ່າ ສັນຍາຜັນຮຽນແລ້ວໄດ. ມະນີ ທາທາງບ່າຍບ່ຽງ ຕາມວິໄສຍິງສາວທີ່ຮູ້ກາລະເທສະ ເມື່ອມີຄົນຂໍແຕ່ງດອງ ກໍຕ້ອງຖ່ວງເວລາ ຄຶດຫນ້າຄຶດຫລັງກ່ອນ ເຖິງວ່າຄົນຜູ້ນັ້ນ ຈະຮູ້ຈັກກັນມາຫລາຍຟ້າຫລາຍປີກໍຕາມ.

- ກະຜັບມາຮຽນເລື່ອງປ່າໄມ້ ເລື່ອງຊີວິດຊີບນະບິດແລ້ວເດ້ ໃສ່ມະນີວ່າ " ດີຊິມເຊີຍ " ຊາຍຫນຸ່ມອອດອ້ອນຕໍ່ທັງສວຍຈັບມື ຂອງນາງສາວໄວ້ ມະນີສະຫວັນ ທັວອິກໆ ຢຸດຢ່າງ.

- ໃຈຮ້ອນຕາມເຄີຍ ເນາະຜັບ ! ຊິໃຫ້ມະນີເອົ້ເທື່ນຳເພິ່ນຢູ່ກາງປ່າແບວນີ້ຫວະ ? ຢ່າງຫນ້ອຍກໍໃຫ້ເວລາເຂົາຂຽນຫນັງສືໄປບອກແມ່ ໃຫ້ເພິ່ນຮູ້ແດ່ວ່າ ຜັບຍັງຢູ່ ທັງເປັນໂສດຕື່ງໆ ຢູ່... ແມ່ມາໄດ້ຍາມໃດ ມະນີວ່າພວກເຮົາປຶກສາກັນໃຫມ່... ດີບໍ່ ?

- ສຸດຍອດເລີຍ ! ຜັບສວຍໂອກາດ ຍົກມືອ່ອນນົ້ມ ຂອງນາງຂຶ້ນດົມຟອດບາດຫນຶ່ງ ດ້ວຍອິດໃຈບໍ່ຢູ່ ແລ້ວກໍ່ຟ້າວວາງ ເຂົາຣີບຍ່າງຂຶ້ນຫນ້າມະນີ ທັງເອົາພ້າສິນຟັນ ພຸ່ມຫນາມທີ່ຂວາງຫນ້າ ຜິວປາກເປັນເພງດ້ວຍອາລົມເບີກບານ ເຂົາງອາກມາຍິ້ມໃຫ້ຍິງສາວ ເປັນບາງຄັ້ງບາງຄາວ.

- ແລ້ວກໍຢ່າລືມ ຫາໄມ້ເກສະຫນາ ໃຫ້ໄດ້ຄົບກິໂລລະ ! ຊິໄດ້ເປັນເສດຖີເງິນແສນນຳເຂົາ !

ມະນີສະຫວັນ ບອກເຍີ້ຍໆ ແລ້ວສອງບ່າວສາວ ກໍທົວ ປະສານສຽງກັນຂຶ້ນ ດັງກ້ອງພົງໄພ ດ້ວຍອາລົມປອດໂປ່ງສົດໃສຄ້າຍທ້ອງຟ້າຫລັງຈາກພາຍຸຝົນຜ່ານໄປ. ຄວາມສົນຍາຈາກຫົວໃຈ ຄວາມເວົ້າຄວາມລົມຂອງພວກເຂົາເວລານັ້ນ ຖືກຍອດໄມ້ໃບຂຽວ ແຫ່ງປ່າດົງດິບບັນທຶກໄວ້ ເພື່ອວ່າວັນຫນຶ່ງຂ້າງຫນ້າ ແຕ່ລະຄົນ ອາດໄດ້ມາຟື້ນຟູຄວາມຊົງຈໍາ ຖ້າຫາກວ່າເສັ້ນທາງຮັກນີອັນ ຜັນແປໄປໃຜຈະຮູ້ ?

ອະວະສານ

ກ່ຽວກັບຜູ້ຂຽນ

ດອກເກດ ແມ່ນນາມປາກກາ ຂອງ ດວງເດືອນ ບຸນຍາວົງ ເວລາຂຽນນະວະນິຍາຍ ເລີ່ມຂຽນໜັງສືມາແຕ່ຊຸມປີ 70 ລະຍະຫລັງ ເນັ້ນການຄົ້ນຄວ້າຫລາຍກວ່ານິຍາຍ **ອາຖັນແຫ່ງພົງໄພ** ຖືວ່າແມ່ນເລື່ອງຍາວຂະໜາດສັ້ນ ຫລ້າສຸດ ທີ່ຂຽນຂຶ້ນພາຍຫລັງການລົງພື້ນຖານ ເກັບກຳ ຂໍ້ມູນ. ສຳເລັດການສຶກສາ ຂັ້ນປະລິນຍາໂທ ສາຂາ ເຄມີ-ວັດຖຸ ຈາກປະເທດຝະລັ່ງ ປີ 1973. ເປັນອາຈານສອນ ຮອດປີ 1981. ໄດ້ຮັບທຶນຈາກ **ມູນນິທິຟູນໄບຣ໌** (Fulbright) ໄປສອນພາສາ ແລະ ວັດທະນະທຳລາວ ທີ່ມະຫາວິທະຍາໄລ ວໍຊິງຕັນ 1992-93. ຮັບທຶນຄົ້ນຄວ້າສຶກສາ ຈາກ **ມູນນິທິຍີ່ປຸ່ນ** (JAPAN FOUNDATION) ໄປຄົ້ນຄວ້າ ວັນນະກຳ ປະຫວັດສາດ ທ້າວຮຸ່ງທ້າວເຈືອງ ທີ່ມະຫາວິທະຍາໄລໂຊເຟຍ ໂຕກຽວ 1994-95. **ຜົນງານການຂຽນ** ມີທັງເລື່ອງສັ້ນ ເລື່ອງຍາວ, ວັນນະຄະດີແປ, ນິທານສຳລັບເດັກ, ບົດຄົ້ນຄວ້າ ແລະ ຫລ້າສຸດ : **ແຜພັນລາຍ ໃບສີນສາຍໄໝ** ຈັດພິມໂດຍ ສູນກາງສະຫະພັນແມ່ຍິງລາວ; **ວັດຈະນານຸກົມປະກອບຮູບ** ຈັດພິມໂດຍ ສະມາຄົມສົ່ງປຶ້ມຮູບໃຫ້ເດັກນ້ອຍລາວແຫ່ງຍີ່ປຸ່ນ.

ຮຸ່ງອະລຸນ ແດນວິໄລ :

ເປັນເລື່ອງສັ້ນອ່າວຍາວ ທີ່ຫາອ່ານໄດ້ຍາກໃນອຸທະຍານອັກສອນ ຂອງລາວເຮົາ. ຄວາມຮັກ ແລະ ຄວາມຫວັງ ມີຢູ່ໃນຫົວໃຈຄົນໜຸ່ມສັນໃດ **ອາຖັນແຫ່ງພົງໄພ** ກໍມີສິ່ງນັ້ນແກ່ຜູ້ອ່ານ

ດວງຈຳປາ ຢາກບອກວ່າ :

ສຳນວນກິງໄປກົງມາ ເນື້ອເລື່ອງທັນສະໄໝຖືກກັບບັນຫາປັດຈຸບັນ ປ່າດົງພົງໄພ ແມ່ນຊັບພະຍາກອນລວມ ຂອງມວນມະນຸດ ຄວາມເຂົ້າໃຈທຳມະຊາດຂອງປ່າ ຄົງມີສ່ວນຊ່ວຍຍືດອາຍຸຂອງປ່າຕໍ່ໄປ **ອາຖັນແຫ່ງພົງໄພ** ຈະພາທ່ານໄປສຳຜັດກັບ ອາລົມຈິດ ແລະ ຈິນຕະນາການເລິກລັບຊວນຝັນ.

ອຸທິນ ບຸນຍາວົງ ຄິດວ່າ :

ສະທ້ອນສ້ຽວໜຶ່ງແຫ່ງຊີວິດໄວໜຸ່ມ ອຸດົມຄະຕິຂອງຜູ້ຂຽນຈະແຈ້ງ ເປີດເຜີຍ 1 ໃນຮ້ອຍ ຫລື 1 ໃນພັນ ອາດແຝງຕົວຢູ່ແຫ່ງໃດແຫ່ງໜຶ່ງ **ອາຖັນແຫ່ງພົງໄພ** ກະຕຸ້ນຄວາມຄິດສ້າງສັນ ຂອງຄົນໄວນີ້ ທີ່ຈະຮັບຜິດຊອບອະນາຄົດ ຂອງປະເທດ ໃນອະນາຄົດ.